# ເອກະສານຊ້ອນທ້າຍ ຄູ່ມືຝຶກອົບຮົມ ການໄກ່ເກ່ຍຂໍ້ຂັດແຍ່ງ

# ແລະ ການໃຫ້ຄໍາປຶກສາທາງດ້ານກົດໝາຍ ກ່ຽວກັບທີ່ດິນ ຢູ່ຂັ້ນບ້ານ

## ສາລະບານ


ເອກະສານຊ້ອນທ້າຍທີ 1 ຂະບວນການ ແລະ ວິທີການດໍາເນີນຝຶກອົບຮົມສໍາລັບຄູຝຶກ.................................... 4

ກິດຈະກໍາທີ 1: ສໍາຫຼວດກ່ຽວກັບປະສົບການຜ່ານມາກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ......................... 6

ກິດຈະກໍາທີ 2 ບັນຫາ ຫຼື ຂໍ້ຂັດແຍ່ງທີ່ດິນ ທີ່ມັກເກີດຂຶ້ນພາຍໃນບ້ານ.................................................... 8

ກິດຈະກໍາທີ 3: ສິດ ແລະ ພັນທະ ຕາມລັດຖະທໍາມະນູນ ແລະ ກົດໝາຍ ວ່າດ້ວຍທີ່ດິນ............................. 10

ກິດຈະກໍາທີ 04: ການເຂົ້າເຖິງລະບົບຍຸຕິທໍາຢູ່ ສປປ ລາວ ................................................................ 12

ກິດຈະກໍາທີ 5: ການໃຫ້ບໍລິການໃຫ້ຄໍາປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ ............................... 21

ກິດຈະກໍາທີ 6: ການສ້າງອາສາສະໝັກປະຈໍາບ້ານ, ທັກສະການສໍາພາດ ແລະ ເຮັດບົດສະຫຼຸບ ລາຍງານ........... 23

ເອກະສານຊ້ອນທ້າຍທີ 2: ບັນດານິຕິກໍາທີ່ນໍາໃຊ້ປະກອບເຂົ້າໃນຄູ່ມື..................................................... 37

1. ລັດຖະທໍາມະນູນ ແຫ່ງ ສ ປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015...................... 37

2. ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019.................................. 38

3. ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 .................................. 48

3.1 ດໍາລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023......................... 53

3.2 ດໍາລັດ ວ່າດ້ວຍປ່າຜະລິດ ສະບັບເລກທີ 02/ລບ, ລົງວັນທີ 04 ມັງກອນ 2024 ............................ 60

3.3 ດໍາລັດ ວ່າດ້ວຍປ່າປ້ອງກັນ ສະບັບເລກທີ 01/ລບ, ລົງວັນທີ 04 ມັງກອນ 2024 .......................... 65

4. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012 .... 70

5. ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບເລກທີ 23/ສພຊ, ລົງວັນ ທີ 11 ພຶດສະພາ 2017...... 73

6. ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 .................................. 76

7. ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ49/ສພຊ, ລົງວັນທີ 20 ມິຖຸນາ 2018..................... 79

8. ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບເລກທີ 08/ ສພ ຊ, ລົງວັນທີ 22 ຕຸລາ 2004 ........................................................................................................................ 82

9. ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012............. 84

10. ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພ ຊ, ລົງວັນທີ 23 ທັນວາ 2014 ........................................................................................ 86

11. ກົດໝາຍ ວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007 ........................... 88

12. ປະມວນ ກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017 ............................. 88

13. ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018 .................................... 94

14. ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022... 103

15. ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015......... 106

16. ກົດໝາຍ ວ່າດ້ວຍອົງການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017. ............... 109

17. ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015. ...............111

18. ລັດຖະບັນຍັດ ວ່າດ້ວຍການດຳເນີນຄະດີປົກຄອງ ສະບັບເລກທີ 001 ປປທ, ລົງວັນທີ 19 ມີນາ 2021......114

18.1. ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ ສະບັບເລກທີ 77/ລບ, ລົງວັນທີ 28 ກຸມພາ 2018.....116

ເອກະສານຊ້ອນທ້າຍທີ 3: ການສ້າງແຜນດຳເນີນຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ......119

I. ການສ້າງແຜນດຳເນີນຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ...........................119

II. ການເຮັດປະເມີນ ກ່ອນ ແລະ ຫຼັງຝຶກອົບຮົມ.................................................................... 124

III. ແບບຟອມຄຳຮ້ອງທຸກ (ຄຳຮ້ອງຟ້ອງ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ) ......................... 128

## ເອກະສານຊ້ອນທ້າຍທີ 1 ຂະບວນການ ແລະ ວິທີການດຳເນີນຝຶກອົບຮົມສຳລັບຄູຝຶກ ພາກແນະນຳ ແລະ ທັກທາຍໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

**ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ**

### ພາກແນະນຳ



ຂັ້ນຕອນທີ 01 - ກ່າວທັກທາຍ
ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ



ຂັ້ນຕອນທີ 02 - ແນະນາທີມງານ



ຂັ້ນຕອນທີ 03 - ແນະນຳຈຸດປະສົງ ແລະ
ຂະບວນການໂດຍລວມ



ຂັ້ນຕອນທີ 04 - ແຈ້ງເວລາທີ່ຈະດາເນີນ
ກິດຈະກຳ

**ຈຸດປະສົງ:** ເພື່ອທັກທາຍສະບາຍດີໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ແນະນຳທີມງານອຳນວຍຄວາມສະດວກ, ວິທີການ, ຂະບວນການ ແລະ ເວລາທັງໝົດທີ່ຈະເຮັດກິດຈະກຳກັບຊຸມຊົນ.

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກວ້າງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມ ບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ກະກຽມປຶ້ມໃຫ້ຜູ້ເຂົ້າຮ່ວມເພື່ອໃຊ້ໃນການຈົດບັນທຶກ, ເຈ້ຍຈຸດປະສົງລວມ, ເຈ້ຍຫົວຂໍ້ກິດຈະກຳຫຼັກ, ເຈ້ຍບັດຄຳ, ບິກ, ສໍ, ເຄື່ອງສາຍໂປຼເຈັກເຕີ ແລະ ເຈັ້ຍ Ao, ບິກເຟີດສີ.

**ເວລາ:** 10 – 15 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ກ່າວທັກທາຍໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**<br>ຜູ້ອຳນວຍຄວາມສະດວກຫຼັກ ກ່າວສະບາຍດີຜູ້ເຂົ້າຮ່ວມທັງໝົດ, ຮຽນຕໍ່ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ, ຕາງໜ້າຈາກຂັ້ນເມືອງ, ຂັ້ນແຂວງ ແລະ ກະຊວງ (ຖ້າມີ) ທີ່ເຂົ້າຮ່ວມ. |
| **ຂັ້ນຕອນທີ 2** | **ແນະນຳທີມງານ**<br>ຜູ້ອຳນວຍຄວາມສະດວກຫຼັກ ແນະນຳສະມາຊິກ ທີມງານ ຫຼື ໃຫ້ທີມງານ ແຕ່ລະຄົນ ແນະນຳຕົນເອງ ດ້ວຍການສະເໜີຊື່, ອົງການ ແລະ ໜ້າທີ່ຮັບຜິດຊອບໃນການດຳເນີນກິດຈະກຳແບບສັ້ນໆ. |
| **ຂັ້ນຕອນທີ 3** | **ແນະນຳ ຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳໂດຍລວມ**<br>ຜູ້ອຳນວຍຄວາມສະດວກຫຼັກ ແນະນຳຈຸດປະສົງ ແລະ ອະທິບາຍຕາຕະລາງການດຳເນີນກິດຈະກຳ ໃຫ້ກັບຜູ້ເຂົ້າຮ່ວມ. ອະທິບາຍຫຍໍ້ຂັ້ນຕອນດຳເນີນກິດຈະກຳ, ແຕ່ລະກິດຈະກຳຈະໃຊ້ເວລາເທົ່າໃດ, ທີ່ສຳຄັນຕ້ອງແຈ້ງຜູ້ເຂົ້າຮ່ວມວ່າ ວິທີການດຳເນີນກິດຈະກຳແມ່ນແບບມີສ່ວນຮ່ວມ, ແລກປ່ຽນ, ສົນທະນາໃນກຸ່ມໃຫຍ່ ຫຼື ກຸ່ມຍ່ອຍ. ຖ້າຜູ້ໃດ ມີຄຳຖາມສາມາດຍົກມືຂຶ້ນ ແລະ ຖາມເທື່ອລະຄົນ. |
| **ຂັ້ນຕອນທີ 4** | **ແຈ້ງເວລາທີ່ຈະດຳເນີນກິດຈະກຳລະອຽດ**<br>ແຈ້ງຜູ້ເຂົ້າຮ່ວມວ່າ ກິດຈະກຳນີ້ຈະດຳເນີນເປັນເວລາ 01 ມື້ ເຄິ່ງ (ສຳລັບບ້ານທີ່ບໍ່ໄດ້ໃຊ້ ພາສາແປ). ຖາມທຸກຄົນວ່າ ສາມາດຢູ່ຮ່ວມຈົນສຳເລັດໄດ້ບໍ່ ແຕ່ຖ້າຜູ້ໃດມີວຽກສຸກເສີນ ແລະ ຈຳເປັນບໍ່ເຂົ້າຮ່ວມກໍ່ໄດ້ ແລະ ບໍ່ຈຳເປັນຕ້ອງອະທິບາຍເຖິງເຫດຜົນ ເພາະວ່າ ການປະກອບສ່ວນຂອງທ່ານແມ່ນອີງໃສ່ ຄວາມສະໝັກໃຈ ແລະ ການເຫັນດີເຫັນພ້ອມ. |

**ກິດຈະກຳທີ 1: ສຳຫຼວດກ່ຽວກັບປະສົບການຜ່ານມາກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ**

| ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ |
| --- |

## ກິດຈະກຳທີ 01

**ຂັ້ນຕອນທີ 01**

ອະທິບາຍຈຸດປະສົງຂອງກິດຈະກຳ



**ຂັ້ນຕອນທີ 02**

ສົນທະນາ ແລະ ຄົ້ນຄວ້າຕອບຄຳຖາມ




**ຂັ້ນຕອນທີ 03**

ສະຫຼຸບ ແລະ ລາຍງານຜົນຂອງການ ຄົ້ນຄວ້າ



**ຈຸດປະສົງ:** ເພື່ອໃຫ້ຜູ້ເຂົ້າຮ່ວມ ແລກປ່ຽນທັດສະນະ ແລະ ປະສົບການຜ່ານມາໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມ ບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ໂປຼເຈັກເຕີ ເພື່ອສາຍຄຳຖາມ, ເຈັ້ຍ A0 ແລະ ບິກເຟີດສີ.
**ເວລາ:** 60 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງຂອງກິດຈະກຳ**<br>ຜູ້ອຳນວຍຄວາມສະດວກ ໃຊ້ຈຸດປະສົງຂ້າງເທິງອະທິບາຍ ແລະ ແຈ້ງຂະບວນການໃນການເຮັດກິດຈະກຳໃຫ້ຜູ້ເຂົ້າຮ່ວມສັ້ນໆເຊັ່ນ: ພວກເຮົາຈະໄດ້ ສົນທະນາ - ແລກປ່ຽນທັດສະນະ ແລະ ປະສົບການ ກ່ຽວກັບບັນຫາທາງດ້ານກົດໝາຍ ຫຼື ຂໍ້ຂັດແຍ່ງ. |
| **ຂັ້ນຕອນທີ 2** | **ຜູ້ເຂົ້າຮ່ວມສົນທະນາ ແລະ ຄົ້ນຄວ້າ ຕອບຄຳຖາມ**<br>ໃຊ້ຄຳຖາມແນະນຳລຸ່ມນີ້ສົນທະນາ - ແລກປ່ຽນທັດສະນະ ແລະ ປະສົບການ.<br>**ຄຳຖາມ:**<br>1. ໃນການແກ້ໄຂຂໍ້ຂັດແຍ່ງຜ່ານມາທ່ານຄິດວ່າບັນຫາ ຫຼື ຂໍ້ຂັດແຍ່ງໃດທີ່ເປັນສິ່ງທ້າທາຍ ຫຼື ມີຂໍ້ຫຍຸ້ງຍາກທີ່ສຸດໃນການແກ້ໄຂ? ແລະ ມີວິທີການແກ້ໄຂແນວໃດ? |
| **ຂັ້ນຕອນທີ 3** | **ສະຫຼຸບ ແລະ ລາຍງານຜົນການຄົ້ນຄວ້າ**<br>• ຫຼັງຈາກຄົ້ນຄວ້າຄຳຖາມສຳເລັດແລ້ວໃຫ້ຕາງໜ້າແຕ່ລະພາກສ່ວນນຳສະເໜີຜົນຂອງການຄົ້ນຄວ້າຄຳຖາມຂ້າງເທິງ<br>• ຫຼັງຈາກຜູ້ເຂົ້າຮ່ວມນຳສະເໜີຜົນຂອງການຕອບຄຳຖາມແລ້ວ ໃຫ້ສັງລວມໂດຍຫຍໍ້ກ່ຽວກັບຜົນໄດ້ຮັບຂອງການສົນທະນາຄົ້ນຄວ້າຄຳຖາມ ຫຼື ຜົນໄດ້ຮັບຂອງກິດຈະກຳນີ້.<br>• ພ້ອມທັງຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດຳເນີນກຳຈະກຳຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ ແລະ ເຂົ້າສູ່ກິດຈະກຳທີ 02. |

**ກິດຈະກຳທີ 2 ບັນຫາ ຫຼື ຂໍ້ຂັດແຍ່ງທີ່ດິນ ທີ່ມັກເກີດຂຶ້ນພາຍໃນບ້ານ**

**ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ**

## ກິດຈະກຳທີ 02

**ຂັ້ນຕອນທີ 01**
ອະທິບາຍຈຸດປະສົງ ແລະ ຂະບວນການ ດຳເນີນກິດຈະກຳ



**ຂັ້ນຕອນທີ 02**
ແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມເພື່ອ ສົນທະນາ



**ຂັ້ນຕອນທີ 04**
ລາຍງານຜົນຂອງການຄົ້ນຄວ້າ



**ຈຸດປະສົງ:** ເພື່ອໃຫ້ເຫັນກ່ຽວກັບບັນທີ່ມັກເກີດຂຶ້ນພາຍໃນບ້ານ ແລະ ວິທີການແກ້ໄຂ ໂດຍອີງໃສ່ບັນດາກົດໝາຍທີ່ກ່ຽວຂ້ອງ.

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມ ບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ກະກຽມ ໂປຼເຈັກເຕີ ເພື່ອສາຍຄຳຖາມ ແລະ ນຳສະເໜີຄຳຕອບໃນຕອນທ້າຍ ພ້ອມທັງກຽມເຈ້ຍ Ao, ບິກ ເຟີດ ເພື່ອຂຽນຕອບຄຳຖາມ.

**ເວລາ:** 60 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳ**<br>ຜູ້ອຳນວຍຄວາມສະດວກ ອະທິບາຍຈຸດປະສົງຂ້າງເທິງ ແລະ ສະເໜີຂະບວນການໃນການເຮັດກິດຈະກຳໂດຍຫຍໍ້ເຊັ່ນ: ຈະເຮັດວຽກເປັນຄູ່ ຫຼື ກຸ່ມ ແລະ ສົນທະນາຄົ້ນຄວ້າພາຍໃນກຸ່ມ. |
| **ຂັ້ນຕອນທີ 2** | **ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫຼື ກຸ່ມ ເຮັດກິດຈະກຳ(ອີງຕາມຈຳນວນຜູ້ເຂົ້າຮ່ວມ)**<br>ຫຼັງຈາກແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມແລ້ວ ໃຫ້ສາຍຄຳຖາມລຸ່ມນີ້:<br>1. ໃນຊຸມຊົນ ຫຼື ບ້ານ ຂອງທ່ານມີບັນຫາ ຫຼື ຂໍ້ຂັດແຍ່ງໃດທີ່ມັກເກີດຂຶ້ນຫຼາຍທີ່ສຸດ?<br>2. ໃນກໍລະນີ ປະຊາຊົນນຳເອົາບັນຫາທີ່ເກີດຂຶ້ນມາຂໍຄຳປຶກສານຳທ່ານ ແລ້ວທ່ານໄດ້ໃຫ້ຄຳປຶກສາຕໍ່ພວກກ່ຽວແນວໃດ? ເອົາໂຕໃດເປັນບ່ອນອີງໃນການໃຫ້ຄຳປຶກສາຕໍ່ປະຊາຊົນ? |
| **ຂັ້ນຕອນທີ 3** | **ລາຍງານຜົນຂອງການຄົ້ນຄວ້າ**<br>• ພາຍຫຼັງຜູ້ເຂົ້າຮ່ວມຄົ້ນຄວ້າແລ້ວ ໃຫ້ແຕ່ລະຄູ່ ຫຼື ກຸ່ມ (ຜູ້ຕາງໜ້າ) ຂຶ້ນນຳສະເໜີຜົນຂອງການຄົ້ນຄວ້າຕອບຄຳຖາມ.<br>• ຄູ່ຝຶກ ນຳສະເໜີ ພາເວົ້າພ້ອຍ ວ່າບັນຫາທີ່ແຕ່ລະກຸ່ມຍົກຂຶ້ນມາ ມີກົດໝາຍ, ມາດຕາໃດທີ່ກ່ຽວຂ້ອງກັບບັນຫາ ຫຼື ຂໍ້ຂັດແຍ່ງຂອງແຕ່ລະກຸ່ມ.<br>• ຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດຳເນີນກຳຈະກຳຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ ແລະ ເຂົ້າສູ່ກິດຈະກຳຕໍ່ໄປ. |

### ກິດຈະກຳທີ 3: ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ວ່າດ້ວຍທີ່ດິນ

**ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ**

## ກິດຈະກຳທີ 03

**ຂັ້ນຕອນທີ 01**
ອະທິບາຍຈຸດປະສົງ ແລະ ຂະບວນການ ດຳເນີນກິດຈະກຳ



**ຂັ້ນຕອນທີ 02**
ແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມເພື່ອ ສົນທະນາກ່ຽວກັບສິດ



**ຂັ້ນຕອນທີ 03**
ດຳເນີນກິດຈະກຳຈັດລຽງສິດ ແລະ ພັນທະ ຕາມກົດໝາຍ ແລະ ລາຍງານ



**ຂັ້ນຕອນທີ 04**
ສະຫຼຸບ



**ຈຸດປະສົງ:** ເພື່ອເພີ່ມຄວາມເຂົ້າໃຈ, ສາມາດປົກປ້ອງສິດ ແລະ ນຳໃຊ້ເຂົ້າຊີວິດຕົວຈິງ ກ່ອນການເຂົ້າເຖິງຄວາມຍຸຕິທຳ.

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມ ບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ກະກຽມເຈັ້ຍ ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ວ່າດ້ວຍທີ່ດິນ ທີ່ໄດ້ຕັດແຕ່ລະສິດ ແລະ ພັນທະ ສະຫຼັບເຂົ້າກັນເພື່ອໃຫ້ຜູ້ເຂົ້າຮ່ວມຈັດລຽງ. ພ້ອມທັງໂປຼເຈັກເຕີ ເພື່ອນຳສະເໜີຄຳຕອບໃນຕອນທ້າຍ.

**ເວລາ:** 90 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳ**<br>ອະທິບາຍຈຸດປະສົງຂ້າງເທິງ ແລະ ສະເໜີຂະບວນການໃນການເຮັດກິດຈະກຳໂດຍຫຍໍ້ ເຊັ່ນຈະເຮັດວຽກເປັນກຸ່ມຄົ້ນຄວ້າແລ້ວຈັດລຽງ ສິດ ແລະ ພັນທະ ຂອງແຕ່ລະກົດໝາຍໃຫ້ຖືກຕ້ອງ. |
| **ຂັ້ນຕອນທີ 2** | **ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫຼື ກຸ່ມ ເຮັດກິດຈະກຳ (ອີງຕາມຈຳນວນຜູ້ເຂົ້າຮ່ວມ)**<br>• ຫຼັງຈາກແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມແລ້ວ ໃຫ້ຢາຍເຈັ້ຍ ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນ ທີ່ໄດ້ຕັດແຕ່ລະ ສິດ ແລະ ພັນທະ ສະຫຼັບເຂົ້າກັນໃຫ້ຜູ້ເຂົ້າຮ່ວມຄົ້ນຄວ້າ ແລະ ຈັດລຽງໃຫ້ຖືກຕ້ອງ.<br>• ຜູ້ອຳນວຍຄວາມສະດວກ ນຳເອົາຫົວຂໍ້ຂອງ ລັດຖະທຳມະນູນ ແລະ ກົດໝາຍ ວ່າດ້ວຍທີ່ດິນໄປຕິດໄວ້ ເພື່ອໃຫ້ຜູ້ເຂົ້າຮ່ວມນຳເອົາ ສິດ ແລະ ພັນທະ ຂອງແຕ່ລະ ນິຕິກຳ ໄປຕິດໃສ່. |
| **ຂັ້ນຕອນທີ 3** | **ດຳເນີນການຈັດລຽງສິດ ແລະ ພັນທະ ຕາມກົດໝາຍ ແລະ ລາຍງານ**<br>• ພາຍຫຼັງແຕ່ລະຄູ່ ຫຼື ກຸ່ມຄົ້ນຄວ້າ ແລະ ນຳເລືອກເອົາ ສິດ ແລະ ພັນທະ ຂອງແຕ່ລະ ນິຕິກຳໄປຕິດໃສ່ແລ້ວ ໃຫ້ແຕ່ລະກຸ່ມນຳສະເໜີຜົນຂອງການຈັດລຽງ ພ້ອມທັງໃຫ້ເຫດຜົນ. |
| **ຂັ້ນຕອນທີ 4** | **ສະຫຼຸບ**<br>• ພາຍຫຼັງຜູ້ເຂົ້າຮ່ວມນຳສະເໜີຜົນຂອງການຈັດລຽງ ສິດ ແລະ ພັນທະ ຕາມລັດຖະທຳມະນູນແລະ ກົດໝາຍ ທີ່ດິນ ຄູ່ຝຶກ ນຳສະເໜີ ພາເອີພ້ອຍ ຂໍ້ມູນກ່ຽວກັບ ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນ.<br>• ຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດຳເນີນກຳຈະກຳຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ. |

❖ ແນະນຳສຳລັບວິທີການດຳເນີນກິດຈະກຳ ດັ່ງນີ້:

ໃຫ້ຜູ້ອຳນວຍຄວາມສະດວກ ຕັດເອົາ 1)ສິດ ແລະ ພັນທະ ພື້ນຖານຂອງພົນລະເມືອງລາວ ຕາມລັດຖະທຳມະນູນ( 12 ສິດ ແລະ 3 ພັນທະ) ແລະ ກົດໝາຍທີ່ດິນ ຄື: 2) ການໄດ້ຮັບສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ (5 ສິດ) ແລະ 3) ສິດ ແລະ ພັນທະຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ (5 ສິດ ແລະ 6 ພັນທະ) ຢູ່ເອກະສານຊ້ອນທ້າຍທີ 2 ແລ້ວສັບປົນເຂົ້າກັນເພື່ອໃຫ້ຜູ້ເຂົ້າຮ່ວມຈັດລ່ຽງເປັນ ສາມ ຫ້ອງ ໃຫ້ຖືກຕ້ອງຫລັງຈາກນັ້ນ ເລືອກກຸ່ມໃດໜຶ່ງ ກວດຄວາມຖືກຕ້ອງກຸ່ມໃຫ່ຍ.

## ກິດຈະກຳທີ 04: ການເຂົ້າເຖິງລະບົບຍຸຕິທຳຢູ່ ສປປ ລາວ

**ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ**

# ກິດຈະກຳທີ 04

**ຂັ້ນຕອນທີ 01**

ອະທິບາຍຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳ



**ຂັ້ນຕອນທີ 02**

ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມເພື່ອຄົ້ນຄວ້າກໍລະນີສຶກສາ




**ຂັ້ນຕອນທີ 03**

ນຳສະເໜີຜົນຂອງການຄົ້ນຄວ້າກໍລະນີສຶກສາ



**ຂັ້ນຕອນທີ 04**

ສະຫຼຸບ



**ຈຸດປະສົງ:** ເພື່ອເພີ່ມຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບ ລະບົບຍຸຕິທຳ ແລະ ການຮ້ອງທຸກ ທີ່ມີ 4 ຊ່ອງທາງ ຫຼື ກົນໄກ

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມ ປະມານບໍ່ເກີນ 20 ຫາ 30 ຄົນ

**ອຸປະກອນ:** ກະກຽມກໍລະນີສຶກສາແຈກຢາຍແຕ່ລະກຸ່ມຄົ້ນຄວ້າ ໂດຍເລືອກກົນໄກ ຫຼື ຊ່ອງທາງການແກ້ໄຂຄຳຮ້ອງທຸກ ຫຼື ລະບົບຍຸຕິທຳ.

**ເວລາ:** 75 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງຂອງກິດຈະກຳ**<br>ອະທິບາຍຈຸດປະສົງຂ້າງເທິງ ແລະ ສະເໜີຂະບວນການໃນການເຮັດກິດຈະກຳໂດຍຫຍໍ້ ວ່າຈະເຮັດວຽກເປັນຄູ່ ຫຼື ກຸ່ມ ເພື່ອຄົ້ນຄວ້າ ກໍລະນີສຶກສາ ທີ່ກຽມໄວ້ ແຕ່ລະ ຄູ່ ຫຼື ກຸ່ມຈະໄດ້ກໍລະນີສຶກສາໃນກົນໄກ ຫຼື ຊ່ອງທາງການແກ້ໄຂຄຳຮ້ອງທຸກ ຫຼື ລະບົບຍຸຕິທຳ ທີ່ແຕກຕ່າງກັນ. |
| **ຂັ້ນຕອນທີ 2** | **ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫລື ກຸ່ມ ເຮັດກິດຈະກຳ(ອີງຕາມຈຳນວນຜູ້ເຂົ້າຮ່ວມ)**<br>ຫຼັງຈາກແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມແລ້ວ ແຈກຢາຍກໍລະນີສຶກສາໃຫ້ແຕ່ລະຄູ່ ຫຼື ກຸ່ມຄົ້ນຄວ້າ. |
| **ຂັ້ນຕອນທີ 3** | **ນຳສະເໜີຜົນຂອງການຄົ້ນຄວ້າກໍລະນີສຶກສາ**<br>• ພາຍຫຼັງຄົ້ນຄວ້າແລ້ວແຕ່ລະຄູ່ ຫຼື ກຸ່ມ ລາຍງານຜົນຂອງການຄົ້ນຄວ້າ ກໍລະນີສຶກສາ ທີ່ຄູ່ ຫຼື ກຸ່ມ ຕົນເອງໄດ້ຮັບເປັນ ກົນໄກແກ້ໄຂຄຳຮ້ອງທຸກແບບໃດເຊັ່ນ: ກົນໄກ ກົດປະເພນີ ຫລື ແບບບໍ່ເປັນທາງການ, ການໄກ່ເກ່ຍຂັ້ນບ້ານ, ກົນໄກການແກ້ໄຂທາງອີງການບໍລິຫານ ແລະ ອົງການຕຸລາການ ແລະ ນິຕິບັນຍັດ ພ້ອມທັງໃຫ້ເຫດຜົນວ່າ ຍ້ອນຫຍັງ ຈຶ່ງຄິດວ່າເປັນກົນໄກແກ້ໄຂຄຳຮ້ອງທຸກນັ້ນໆ. |
| **ຂັ້ນຕອນທີ 4** | **ສະຫຼຸບ**<br>• ພາຍຫຼັງແຕ່ລະກຸ່ມນຳສະເໜີລາຍງານແລ້ວ ຄູຝຶກ ສະຫຼຸບສັງລວມ ດ້ວຍການນຳສະເໜີ ວິທີການດຳເນີນຂອງແຕ່ລະຮູບແບບການແກ້ໄຂຄຳຮ້ອງທຸກ ທີ່ໄດ້ກະກຽມໄວ້ ພ້ອມທັງ ນຳສະເໜີ ພາເວີພ້ອຍ ກ່ຽວກັບການເຂົ້າເຖິງລະບົບຍຸຕິທຳຢູ່ ສ ປປ ລາວ ໃນ 04 ຊ່ອງທາງ ຫຼື ກົນໄກ.<br>• ຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດຳເນີນກຳຈະກຳຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ ແລະ ເຂົ້າສູ່ກິດຈະກຳຕໍ່ໄປ. |

## ເອກະສານປະກອບ ກິດຈະກຳທີ 4: ການເຂົ້າເຖິງລະບົບຍຸຕິທຳຢູ່ ສປປລາວ

### 1. ກົນໄກການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງທີ່ເປັນທາງການ (ບໍລິຫານ, ຕຸລາການ ແລະ ນິຕິບັນຍັດ)

**ກໍລະນີທີ 01**

ໃນປີ 2003 ໄດ້ມີ ບໍລິສັດ A ເຂົ້າມາຈັບຈອງສຳປະທານທີ່ດິນໄວ້ ປະມານ 90 ເຮັກຕາ ໂດຍການເຊັນອານຸມັດຂອງເມືອງໃຫ້ລົງທຶນ ຊຶ່ງເນື້ອທີ່ດິນດັ່ງກ່າວນັ້ນ ກ່ອນໜ້າປີ 2003 ແມ່ນເປັນພື້ນທີ່ທຳມາຫາກິນ ແລະ ທຳການຜະລິດຂອງປະຊາຊົນ ບ້ານ B ເຊັ່ນ: ປູກຢາງທະລາ, ປູກໄມ້ ແລະ ປູກມັນຕົ້ນ, ເຮັດໄຮ່ປູກເຂົ້າ ແລະ ອື່ນໆ. ກ່ອນທີ່ ບໍລິສັດ A ຈະມາລົງທຶນທາງ ບໍລິສັດ ໄດ້ສັນຍາວ່າ: ຈະສ້າງຫົນທາງ, ສ້າງໂຮງຮຽນ ແລະ ສ້າງວັດທີ່ເປັນຜົນປະໂຫຍດສ່ວນລວມໃຫ້ແກ່ບ້ານ B ໂດຍມີພະນັກງານເມືອງ C ອຳນວຍຄວາມສະດວກ ມີສະພາບກົດດັນ ປະຊາຊົນ ບ້ານ B ເມື່ອເປັນຄືແນວນັ້ນແລ້ວທາງບ້ານ B ຈຶ່ງຈຳເປັນຕອ້ງໄດ້ຍິນຍອມໃຫ້ບໍລິສັດ A ເຂົ້າມາພັດທະນາຕາມແຜນຂອງໂຄງການທີ່ໄດ້ຕົກລົງກັນກັບບ້ານ B. ພາຍຫຼັງທີ່ໄດ້ດຳເນີນການໄປຊ່ວງໄລຍະໜຶ່ງ ບໍລິສັດ A ຈຶ່ງໄດ້ຢຸດເຊົາບໍ່ປະຕິບັດພັນທະຕາມທີ່ໄດ້ຕົກລົງກັນໄວ້ກັບບ້ານ ແລະ ໃນຂອບເຂດພື້ນທີ່ສຳປະທານ ບໍລິສັດ A ໄດ້ມີການປູກຕົ້ນຢາງທະລາໃນເນື້ອທີ່ ປະມານ 30 ເຮັກຕາ ສ່ວນທີ່ເຫຼືອນັ້ນບໍ່ໄດ້ມີການເຄື່ອນໄຫວໃດໆ ຈົນມາຮອດ 2020 ປະຊາຊົນ ເຫັນວ່າບໍລິສັດ A ປ່ອຍປະໃຫ້ເປັນດິນເປົ່າຫວ່າງບໍ່ມີການດຳເນີນກິດຈະການ ແລະ ປະຊາຊົນມີທີ່ດິນທຳມາຫາກິນບໍ່ພຽງພໍ ຈຶ່ງໄດ້ເຂົ້າໄປບຸກເບີກເອົາເນື້ອທີ່ດິນ ທີ່ໂຄງການໄດ້ສຳປະທານໄວ້ນັ້ນ ຈຶ່ງເກີດມີຂໍ້ຂັດແຍ່ງກັນເກີດຂຶ້ນ ລະຫວ່າງ ບໍລິສັດ A ກັບ ປະຊາຊົນບ້ານ B. ຕໍ່ມາປີ 2021 ທາງໂຄງການ ແລະ ອຳນາດການປົກຄອງທອ້ງຖິ່ນໄດ້ມີການປຶກສາຫາລືກັນ ແລະ ສະເໜີໃຫ້ການຊົດເຊີຍທີ່ດິນຄືນໃຫ້ແກ່ປະຊາຊົນຄອບຄົວລະ 20X40 ແມັດ ພ້ອມທັງໃຫ້ປະຊາຊົນຈ່າຍເງິນຕື່ມອີກຕອນລະ 12.000.000 ກີບ. ແລ້ວທາງ ບໍລິສັດ A ຈະມີໃບຕາດິນຂອບທອງໃຫ້ພ້ອມ ແຕ່ປະຊາຊົນບໍ່ເຫັນດີ. ການສຳປະທານທີ່ດິນລວມບ້ານ ແມ່ນບໍ່ໄດ້ມີການທົດແທນຄ່າຊົດເຊີຍໃດໆ ມີແຕ່ທາງໂຄງໄດ້ສ້າງບົດບັນທຶກກັບບ້ານວ່າ ຈະສ້າງຜົນປະໂຫຍດສ່ວນລວມໃຫ້ແກ່ບ້ານເທົ່ານັ້ນແລ້ວກໍ່ບໍ່ໄດ້ເຮັດຫຍັງເລີຍ.

## ຄຳຕອບ ກໍລະນີສຶກສາ 01

ອີງຕາມກໍລະນີສຶກສາ ເຫັນວ່າ ອົງການປົກຄອງເມືອງ ບໍ່ມີພາລະບົດບາດໃນການ ອະນຸມັດດິນຂອງລັດ ໃຫ້ນັກລົງທຶນ ສຳປະທານ ສະນັ້ນ ກົນໄກການແກ້ໄຂຄຳຮ້ອງທຸກ ຈຶ່ງອີງຕາມ ມາດຕາ **19** (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນເມືອງ (ກົດໝາຍ ແກ້ໄຂຄຳຮ້ອງທຸກ ປີ 2022).

ຄຳສະເໜີທີ່ ອົງການປົກຄອງຂັ້ນເມືອງ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄຳສະເໜີໃຫ້ກວດກາ ການຕົກລົງ ຂອງ ອົງການປົກຄອງບ້ານ;
2. ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນເມືອງ; ການກະທຳ, ຄວາມຮັບຜິດຊອບ ຂອງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງ ຕົນ;
3. ຄຳສະເໜີໃຫ້ກວດກາ ການກະທຳ ຂອງ ບຸກຄົນ ຫຼື ການຕົກລົງ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
4. ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ຂັ້ນເມືອງ ໃຫ້ນຳ ສົ່ງ ອົງການກວດກາລັດຂັ້ນເມືອງ ກວດກາ ຕາມກົດໝາຍ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງ ອົງການປົກຄອງຂັ້ນເມືອງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດສະເໜີ ຕໍ່ ອົງການ ປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ(ຄະນະສານປົກຄອງ) ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທໍາ ຕໍ່ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ ກວດກາ ແລະ ພິຈາລະນາ.

## ກໍລະນີສຶກສາທີ 02

ໃນປີ 2023 ບໍລິສັດ B ໄດ້ສໍາປະທານທີ່ດິນຈາກລັດ ເພື່ອຂຸດຄົ້ນແຮ່ທາດ ໂດຍຖືກຕ້ອງຕາມກົດໝາຍ ພາຍຫຼັງດໍາເນີນກິດຈະການ ການຂຸດຄົ້ນແລ້ວ ຕົກມາຮອດ ເດືອນ ກຸມພາ ປີ 2024 ໄດ້ເກີດເຫດມີປາຕາຍຕາມບໍລິເວນແມ່ນໍ້າ ແລະ ສັດລ້ຽງ ງົວ, ຄວາຍ ຂອງປະຊາຊົນທີ່ໄປກິນນໍ້າຫ້ວຍນັ້ນກໍ່ລົ້ມຕາຍເປັນຈໍານວນຫຼາຍ ສາເຫດແມ່ນເກີດມາຈາກ ອ່າງບໍາບັດນໍ້າເປື້ອນຂອງ ບໍລິສັດ B ທີ່ທໍາການຂຸດຄົ້ນແຫ່ທາດຮົ່ວຊຶມ ແຕກຫັກ ຈຶ່ງເຮັດໃຫ້ນໍ້າເປື້ອນໄຫຼລົງສູ່ຫ້ວຍຮ່ອງ ແລ້ວເກີດມີປາ ຫລື ສັດອື່ນໆຕາຍ ເມື່ອເກີດເຫດການແບບນັ້ນຂຶ້ນແລ້ວ ປະຊາຊົນໃນເຂດທ້ອງຖິ່ນດັ່ງກ່າວ ຈຶ່ງໄດ້ເຂົ້າໄປໂອ້ລົມປຶກສາຫາລືເພື່ອຂໍໃຫ້ ບໍລິສັດ B ແກ້ໄຂ ແລະ ຈ່າຍຄ່າເສຍຫາຍໃຫ້ແກ່ປະຊາຊົນເຈົ້າຂອງ ງົວ, ຄວາຍ ທີ່ຕາຍໄປນັ້ນ ແຕ່ທາງ ບໍລິສັດ B ຍັງມິດງຽບບໍ່ຍອມແກ້ໄຂບັນຫາທີ່ເກີດຂຶ້ນຕາມການສະເໜີຂອງປະຊາຊົນເທື່ອ.

## ຄໍາຕອບ ກໍລະນີສຶກສາ 02

ມາດຕາ **19** (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ອົງການປົກຄອງຂັ້ນເມືອງ

ຄໍາສະເໜີທີ່ ອົງການປົກຄອງຂັ້ນເມືອງ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

1. ຄໍາສະເໜີໃຫ້ກວດກາ ການຕົກລົງ ຂອງ ອົງການປົກຄອງບ້ານ;
2. ຄໍາສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນເມືອງ; ການກະທໍາ, ຄວາມຮັບຜິດ ຊອບ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງ ຕົນ;
3. ຄໍາສະເໜີໃຫ້ກວດກາ ການກະທໍາ ຂອງ ບຸກຄົນ ຫຼື ການຕົກລົງ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ອື່ນ ທີ່ດໍາລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
4. ສໍາລັບຄໍາສະເໜີໃຫ້ກວດກາການປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ຂັ້ນເມືອງ ໃຫ້ນໍາ ສົ່ງ ອົງການກວດກາລັດຂັ້ນເມືອງ ກວດກາ ຕາມກົດໝາຍ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງ ອົງການປົກຄອງຂັ້ນເມືອງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດສະເໜີ ຕໍ່ ອົງການ ປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທໍາ ຕໍ່ ຄະນະປະ ຈໍາສະພາປະຊາຊົນຂັ້ນແຂວງ ກວດກາ ແລະ ພິຈາລະນາ

**ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 389/ລບ, ລົງວັນທີ 20 ຕຸລາ 2022**

ມາດຕາ 59 ສິດຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ມີສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມ ຈາກ ໂຄງການລົງທຶນ ຫຼື ກິດຈະການຕ່າງໆ;

2. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ຕາມກົດໝາຍ, ລະບຽບ ການ ແລະ ມີຄວາມບຸຕິທຳ;
3. ໄດ້ຮັບການປົກປ້ອງດ້ານສຸຂະພາບ, ກວດສຸຂະພາບ, ໄດ້ຮັບການປິ່ນປົວ ແລະ ການຟື້ນຟູສຸຂະ ພາບ ຕາມແຕ່ລະກໍລະນີ;
4. ໄດ້ຮັບການສົ່ງເສີມ ແລະ ປົກປ້ອງທາງດ້ານວັດທະນະທຳ, ສາສະໜາ, ຮີດຄອງປະເພນີ ແລະ ຄວາມເຊື່ອຖື ລວມທັງການສົ່ງເສີມທາງດ້ານບົດບາດຍິງ-ຊາຍ;
5. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
6. ສະເໜີຕໍ່ເຈົ້າຂອງໂຄງການ ຫຼື ກິດຈະການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນ ການແກ້ໄຂກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ເຫັນວ່າ ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ,
7. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

## 2. ກໍລະນີສຶກສາ ກົນໄກການຮ້ອງທຸກທີ່ສ້າງຂຶ້ນໂດຍບໍລິສັດ.

ໝູ່ບ້ານໃນເຂດຊົນນະບົດແຫ່ງໜຶ່ງ ມີປະຊາຊົນ ອາໄສຢູ່ສືບທອດກັນມາຫລາຍເຊັ່ນ ຄົນ ບ້ານດັ່ງກ່າວມີ ແມ່ນເປັນດິນປ່າລວມບ້ານທີ່ອຸດົມສົມບູນ, ມີແຫຼ່ງນໍ້າທຳມະຊາດ. ໂຄງການ ໄດ້ພົບເຫັນດິນຂອງໝູ່ບ້ານທີ່ອຸດົມສົມບູນເໝາະແກ່ການປູກໄມ້ເສດຖະກິດ ຈຶ່ງໄດ້ຍື່ນຄຳຮ້ອງຂໍລົງທຶນ ຫາພາກສ່ວນທີ່ກ່ຽວຂ້ອງ ເພື່ອຂໍສຳປະທານ ຕາມກົດໝາຍ ແລະ ລະບຽບການ ໂດຍໄດ້ສ້າງກົນໄກການຮ້ອງທຸກຂອງບໍລິສັດຂຶ້ນຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ແລະ ລົງສົມທົບກັບຊຸມຊົນ ໂດຍຜ່ານຂະບວນການມີສ່ວນຮ່ວມ ອີງໃສ່ຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມ ຈາກຊຸມຊົນພ້ອມທັງບອກກັບຊຸມຊົນວ່າ ຖ້າຫາກມີບັນຫາຫຍັງ ກໍສາມາດສະເໜີຫາ ເພາະໂຄງການມີຫນ່ວຍງານຮັບຜິດຊອບພິຈາລະນາ ແລະ ແກ້ໄຂ ຄຳຕຳນິຕິຊົມຈາກຊຸມຊົນ ພາຍຫຼັງທີ່ໂຄງການ ດຳເນີນໄປໃນໄລຍະໜຶ່ງ ເກີດມີບັນຫາ ດິນເຊາະເຈື່ອນ, ຂີ້ຝຸ່ນ, ດິນທຳມາຫາກິນຂອງຊຸມຊົນບໍ່ພຽງພໍ ແລະ ມີດິນທີ່ໂຄງການບໍ່ໄດ້ນຳໃຊ້ ແຕ່ໄດ້ອ້ອມຮົ້ວ ບໍ່ໃຫ້ຊຸມຊົນເຂົ້າໄດ້ ຊຸມຊົນຈຶ່ງໄດ້ສະເໜີຫາໜ່ວຍງານແກ້ໄຂຄຳຮ້ອງທຸກຂອງໂຄງການ.

**ກົນໄກການເຂົ້າເຖິງລະບົບຍຸຕິທຳຢູ່ ສປປ ລາວ ມີ 4 ກົນໄກ ຄື:**

1) ກົດປະເພນີ ຫລື ແບບບໍ່ເປັນທາງການ.
2) ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.
3) ກົນໄກການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງທີ່ເປັນທາງການ (ບໍລິຫານ, ຕຸລາການ ແລະ ນິຕິບັນຍັດ).
4) ກົນໄກຮັບຄຳຕຳນິຕິຊົມ(ການຮ້ອງທຸກ)ທີ່ສ້າງຂຶ້ນໂດຍບໍລິສັດ.

| ກົດປະເພນີ ຫລື ແບບບໍ່ເປັນທາງການ | ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ | ກົນໄກການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງທີ່ເປັນທາງການ(ບໍລິຫານ, | ກົນໄກຮັບຄຳຕຳນິຕິຊົມ(ການຮ້ອງທຸກ)ທີ່ສ້າງຂຶ້ນໂດຍບໍລິສັດ |
|---|---|---|---|

| | | | |
|---|---|---|---|
| | | ຕຸລາການ ແລະ ນິຕິບັນ ຍັດ) | |
| • **ເປັນກົດທີ່ໃຊ້ໃນຊີວິດຕົວຈິງ**<br>• ບໍ່ໄດ້ຂຽນໄວ້ຢ່າງເປັນລາຍລັກອັກສອນ<br>• ເປັນເຄື່ອງມືພື້ນຖານໃຫ້ແກ່ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກ, ກຸ່ມຊົນເຜົ່າທີ່ບໍ່ຮູ້ພາສາລາວ, ບໍ່ຮູ້ບໍ່ກົດໝາຍ ສະເພາະໃນກຸ່ມຊົນເຜົ່າ<br>• ບົດບາດ ຂອງເຈົ້າກົກເຈົ້າເຫລົ່າ, ຜູ້ຊົງຄຸນວຸດທິຄວາມເຊື່ອຂອງຊົນເຜົ່າ, ສາສະໜາ, ການນັບຖືປ່າມະເຫສັກ, ຜີຈ້ຳ, ທີ່ດິນ-ປ່າ-ນ້ຳສັກສິດ, ຫຼັກບ້ານ<br>• ຂໍ້ຕົກລົງ ຈະເຮັດຂຶ້ນໂດຍເຈົ້າກົກເຈົ້າເຫຼົ່າຂອງພວກເຂົາເຈົ້າ | • ດຳເນີນໂດຍຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ<br>• ສຶກສາອົບຮົມ, ຊ່ວຍເຫຼືອ, ແນະນຳຄູ່ກໍລະນີ ໃຫ້ມີຄວາມຕື່ນຕົວປະນີປະນອມ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນ<br>• ຂໍ້ຂັດແຍ່ງກ່ຽວກັບຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ ແລະ ສິ່ງແວດລ້ອມ ລວມທັງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທາງດ້ານຈິດໃຈ, ຊັບສິນ ແລະ ເສດຖະກິດ.<br>• ການກະທຳຜິດທາງອາຍາທີ່ມີລັກສະນະເລັກນ້ອຍ, ເບົາບາງເປັນຕົ້ນ: ການທຳຮ້າຍຮ່າງກາຍລະ ຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫຼື ບໍ່ເສັຍອົງຄະ, ການນິນທາ, ການໃສ່ຮ້າຍ, ການປ້ອຍດ່າ, ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງຍາດໃກ້ຊິດ, ການລ່ວງລະເມີດເຄຫະສະຖານ ແລະ ການລ່ວງລະເມີດຄວາມລັບສ່ວນຕົວ;<br>• ຕາມດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 626/ລບ, ລົງວັນທີ 22 ຕຸລາ 2021 | • ຮ້ອງຟ້ອງ<br>• ຄຳສະເໜີ<br>• ຄຳຮ້ອງຂໍຄວາມເປັນທຳ<br>• ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປີ 2016 ວັກ 02 ກໍໄດ້ກຳນົດໃຫ້ ພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະລາຍງານ, ເຂົ້າຮ່ວມ ແລະ ປະກອບສ່ວນໃນການແກ້ໄຂຄຳຮ້ອງທຸກ ເມື່ອເຫັນວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ມີການລະເມີດກົດໝາຍ | • ຂໍ້ຮຽກຮ້ອງ, ຄຳຮ້ອງ ທຸກ, ຂໍ້ຄິດເຫັນທົ່ວໄປ, ຂໍ້ສະເຫນີຮ້ອງຂໍ ແລະ ຂໍ້ສະເຫນີແນະນຳຕ່າງໆ<br>• ຜູ້ມີສ່ວນຮ່ວມພາຍນອກກັບບໍລິສັດ(ຊຸມຊົນ, ຫືອໜ່ວຍທຸລະກິດອື່ນ,ໜ່ວຍງານບ້ານ, ພະນັກງານລັດຂັ້ນເມືອງ, ແຂວງ),<br>• 2) ຜູ້ມີສ່ວນຮ່ວມພາຍໃນ ແມ່ນພະນັກງານ ຂອງບໍລິສັດເອງ, ກຳມະກອນທີ່ເຮັດວຽກໃນຂອບເຂດບໍລິສັດ |

ລັກສະນະທີ່ເປັນບັນຫາທາງບໍລິຫານ(ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ), ການດໍາເນີນຄະດີທາງຕຸລາການ (ສານປະຊາຊົນ) ແລະ ການຮ້ອງຂໍຄວາມເປັນທໍາທາງນິຕິບັນຍັດ (ສະພາແຫ່ງຊາດ ແລະ ແຂວງ)

| ບໍລິຫານ | ຕຸລາການ | ນິຕິບັນຍັດ |
|---|---|---|
| • ຄໍາສະເໜີຂອງພົນລະເມືອງ, ການຈັດຕັ້ງ ທີ່ກ່ຽວກັບການປະຕິບັດໜ້າທີ່ຂອງພະນັກງານລັດຖະກອນ ທີ່ລະເມີດກົດໝາຍ, ລະບຽບການ ຫຼື ລະເມີດຕໍ່ການຈັດຕັ້ງ<br><br>• ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າກ່ຽວກັບການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ຕະຫຼອດໄລຍະຈັດຕັ້ງປະຕິບັດໂຄງການ;<br><br>• ສະເໜີເປັນລາຍລັກອັກສອນ ຕໍ່ຄະນະທົດແທນຄ່າເສຍຫາຍ, ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບການທົດແທນຄ່າເສຍຫາຍ<br><br>• ລົງຕິດຕາມໂຄງການປົກກະຕິປີລະເທື່ອ, ແຈ້ງຮູ້ລວງໜ້າ 24 ຊມ, ລົງກະທັນຫັນ ໃນກໍລະນີ ປ/ຊ ແຈ້ງມາຍ້ອນມີການຜິດພາດ ຂອງການລົງທຶນ<br><br>• ປະສານຫາພາກສ່ວນທີ່ກ່ຽວຂ້ອງກັບບັນຫາທີ່ເກີດຂຶ້ນເພື່ອລົງເກັບກໍາຂໍ້ມູນແລ້ວເຮັດບົດລາຍງານ ກອງປະຊຸມ ຄລທ ສໍາລັບທ້ອງ ຖິ່ນແມ່ນເອົາຂະແໜງທີ່ຈໍາເປັນ ມີພາລະບົດບາດກ່ຽວ | • ມີຄໍາຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງຕໍ່ສານ<br><br>• ກ່ຽວກັບສາຍພົວພັນທີ່ມີລັກສະນະຊັບສິນບັດ ຫລືບໍ່ມີ ລັກສະນະຊັບສິນບັດລະ ຫວ່າງ ບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງດ້ວຍກັນ ກ່ຽວກັບວັດຖຸປະສົງ ຫລື ເປົ້າໝາຍ ໃດໜຶ່ງ<br><br>• ປະຕິບັດຕາມກົດໝາຍດໍາເນີນຄະດີແພ່ງ, ດໍາເນີນອາຍາ, ດໍາເນີນຄະດີປົກຄອງ, ປະມວນກົດໝາຍແພ່ງ ແລະ ປະມວນກົດໝາຍອາຍາ<br><br>• ມີຄໍາສັ່ງຟ້ອງຂອງອົງການໄອຍະການປະຊາຊົນກ່ຽວກັບການກະທໍາຜິດທາງອາຍາຂອງບຸກຄົນ<br><br>• ການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະ ກອນ ໃນການອອກຄໍາສັ່ງ, ຂໍ້ຕົກລົງທາງປົກຄອງ ທີ່ຂັດກັບລັດຖະທໍາມະນູນ ແລະ ກົດໝາຍ<br><br>• ຕັດສິນຂັ້ນຕົ້ນ, ພິພາກສາຂັ້ນອຸທອນ ແລະ ພິພາກສາຂັ້ນລົບລ້າງ ຈົນຮອດຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຫລືຂະບວນການຍຸຕິທໍາ | ເອກະສານຂອງພົນລະເມືອງ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ຄະນະປະຈໍາສະພາປະຊາຊົນຂັ້ນ ແຂວງ ຫຼື ຄະນະປະຈໍາສະພາແຫ່ງຊາດກວດກາ ແລະ ພິຈາລະນາຜົນການແກ້ໄຂຄໍາສະເໜີຂອງ ອົງການປົກຄອງທ້ອງ ຖິ່ນ, ລັດຖະບານ ຫຼື ຜົນຂອງການແກ້ໄຂຄໍາຮ້ອງຟ້ອງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ<br><br>ແກ້ໄຂນັ້ນ ເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ. |

| | | |
|---|---|---|
| ກັບບັນຫາຢູ່ທ້ອງຖິ່ນນັ້ນ | | |

ບັນຫາທາງດ້ານກົດໝາຍ, ຄວາມແຕກຕ່າງ ແລະ ຜົນຂອງການຕັດສິນ

ປະເດັນທາງດ້ານກົດໝາຍແມ່ນສິ່ງທີ່ເກີດຂື້ນ ຊຶ່ງກົດໝາຍໄດ້ກໍານົດ (ຫ້າມ ຫຼື ໃຫ້ກະທໍາ, ອະນຸຍາດ ຫຼື ບໍ່ອະນຸຍາດ) ແລະ ຕ້ອງການຄວາມຊ່ວຍເຫຼືອຈາກນັກກົດໝາຍ. ມັນແມ່ນຄໍາຖາມ ຫຼື ບັນຫາທີ່ຕ້ອງໄດ້ຮັບຄໍາຕອບ ຫຼື ຖືກແກ້ໄຂດ້ວຍກົດໝາຍ.

| **ຄະດີແພ່ງ** | **ຄະດີອາຍາ** | **ຄະດີປົກຄອງ** |
|---|---|---|
| **ລັກສະນະລວມ**<br><br>ກ່ຽວກັບສາຍພົວພັນທີ່ມີລັກສະນະຊັບສິນບັດກ່ຽວກັບວັດຖຸສິ່ງຂອງ, ເງິນ, ຄໍາ, ຊັບສິນທາງປັນຍາ ແລະ ບາງສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສິນບັດ ເຊັ່ນ ຊື່, ນາມສະກຸນ, ກຽດສັກສີ.<br><br>**ລັກສະນະສະເພາະ**<br><br>- ແມ່ນການລະເມີດກ່ຽວກັບສິດ, ກໍາມະສິດ ກ່ຽວກັບບັນຫາທາງດ້ານສາຍພົວພັນຄອບຄົວ, ຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ, ກໍາມະສິດ, ການຄໍ້າປະກັນ, ການສືບທອດມູນມໍຣະດົກ. | **ລັກສະນະລວມ**<br><br>ການກະທໍາ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມຂອງ ສປປ ລາວ, ກໍາມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ, ເສລີພາບຂອງພົນລະ ເມືອງ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ ຊຶ່ງບົ່ງໄວ້ໃນປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນຂອງ ສປປ ລາວ ທີ່ໄດ້ກໍານົດໂທດທາງອາຍາ.<br><br>**ລັກສະນະສະເພາະ**<br><br>- ແມ່ນການກະທໍາຜິດຕໍ່ຊີວິດ, ສຸຂະ ພາບ, ຊັບສິນ... ທີ່ຄົບ 4 ອົງປະກອບຂອງການກະທໍາທາງອາຍາ ແລະ ປະມວນກົດໝາຍອາຍາກໍາ ນົດໂທດຕໍານິວິຈານ, ໂທດປັບໄໝ, ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ,ໂທດເນລະເທດ, ໂທດຕັດອິດສະລະພາບທີ່ມີກໍານົດ, ໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ໂທດປະຫານຊີວິດ ເຊັ່ນ: | **ສາເຫດທີ່ພາໃຫ້ດໍາເນີນຄະດີ**<br><br>- ການອອກ, ການໂຈະ ຫຼື ການຍົກເລີກຂໍ້ຕົກລົງ, ຄໍາສັ່ງ ຫຼື ໃບອະນຸຍາດ ກ່ຽວກັບການຜະລິດ,ທຸລະກິດ, ກິດຈະການອື່ນ ແລະ ການຄຸ້ມຄອງທີ່ດິນບໍ່ຖືກຕ້ອງ;<br>- ການເມີນເສີຍ ຫຼື ຊັກຊ້າ, ແກ່ຍາວ ໂດຍບໍ່ມີເຫດຜົນ ໃນການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ລັດ ແລະ ພົນລະເມືອງ;<br>- ຂໍ້ຕົກລົງ ກ່ຽວກັບການແລກປ່ຽນ ຫຼື ການຊົດເຊີຍ ທີ່ບໍ່ຖືກຕ້ອງ<br><br>**ມາດຕະການ ແລະ ຜົນຂອງຄໍາຕັດສິນ**<br><br>1. ການອອກ, ການໂຈະ ຫຼື ການຍົກເລີກຂໍ້ຕົກລົງ, ຄໍາສັ່ງ ຫຼື ໃບອະນຸຍາດ ກ່ຽວກັບການຜະລິດ, ທຸລະກິດ, ກິດຈະການອື່ນ ແລະ ການຄຸ້ມຄອງທີ່ດິນ ທີ່ບໍ່ຖືກຕ້ອງ;<br><br>2. ການລົງວິໄນ ຫຼື ໃຫ້ອອກຈາກລັດຖະການທີ່ບໍ່ຖືກຕ້ອງ;<br><br>3. ການຍົກຍ້າຍ ຫຼື ການສັບປ່ຽນໜ້າທີ່ ແລະ |

| | | |
|---|---|---|
| **ການດຳເນີນຄະດີ**<br>- ມີຄຳຮ້ອງຟ້ອງຂອງໂຈດ (ບຸກຄົນ, ນິຕິບຸກຄົນ,ການຈັດຕັ້ງ... ເປັນໂຈດ) ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ (ຄູ່ຄວາມ, ບຸກຄົນທີ່ສາມ, ພະຍານ, ຜູ້ຊ່ຽວ ຊານ, ຜູ້ແປພາສາ ແລະ ທະນາຍ ຄວາມ ຫຼື ຜູ້ປົກປ້ອງອື່ນ) ໂດຍມີການດຳເນີນການແກ້ໄຂຂໍ້ຂັດແຍ່ງຂອງອົງການທີ່ມີສິດອຳນາດ (ຄະນະສານແພ່ງ, ຄະນະສານຄອບຄົວ, ຄະນະສານການຄ້າ...) ຈະພິຈາລະນາຕັດສິນ ຄຳຮ້ອງຟ້ອງຂອງໂຈດມີເຫດຜົນ ຫຼື ບໍ່ມີເຫດຜົນ ຖ້າຫາກມີເຫດຜົນ ຈຳເລີຍຕ້ອງໄດ້ໃຊ້ແທນຄ່າເສຍຫາຍ, ຄ່າປັບ ໄໝ. ຖ້າຫາກຄຳຮ້ອງຟ້ອງຂອງໂຈດບໍ່ມີເຫດຜົນ ສານຕ້ອງຕັດສິນຍົກເລີກຄຳຮ້ອງຟ້ອງຂອງໂຈດ. | ການທຳຮ້າຍຮ່າງກາຍ,ການຂາຍຄົນ, ການຈຳແນກເພດຍິງ, ຈາແນກຄົນພິການ,ການບັງຄັບ, ການປ້ອຍດ່າ ແລະ ອື່ນໆ.<br>**ການດຳເນີນຄະດີ**<br>- ມີເຫດການທາງອາຍາ, ມີການແຈ້ງຄວາມ ຫຼື ຮ້ອງຟ້ອງຕໍ່ເຈົ້າໜ້າທີ່ຕຳຫຼວດ ມີການກັກຕົວ,ຈັບຕົວ,ກັກຂັງ ມີການເປີດການສືບສວນ-ສອບສວນ, (ມີແຕ່ໄອຍະການເທົ່ານັ້ນທີ່ເປັນໂຈດທາງອາຍາ) ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ (ຜູ້ຖືກສົງໃສ,ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະ ຍານ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ , ຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ) ອົງການໄອຍະການປະຊາຊົນສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ສານຕັດສິນ ມີຄວາມຜິດ ຫຼື ພົ້ນຂໍ້ກ່າວຫາ. | ປ່ອນປະຈຳການ ທີ່ບໍ່ຖືກຕ້ອງ;<br>4. ຄວາມຜິດພາດ ໃນການຂຶ້ນບັນຊີຜູ້ມີສິດປ່ອນ ບັດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງ ບໍ່ສາມາດແກ້ໄຂໄດ້;<br>5. ການເມີນເສີຍ ຫຼື ການຊັກຊ້າ, ແກ່ຍາວໂດຍບໍ່ມີເຫດຜົນ ໃນການປະຕິບັດໜ້າທີ່ຂອງພະນັກງານ-ລັດ ຖະກອນ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ລັດ ແລະ ພົນລະເມືອງ;<br>6. ການກະທຳ ຂອງພະນັກງານ-ລັດຖະກອນ ກ່ຽວກັບການປັບໄໝ, ການເກັບພາສີ, ການເກັບອາກອນ, ຄ່າທຳນຽມ, ຄ່າບໍລິການ, ພັນທະອື່ນ, ຮິບຊັບສິ່ງຂອງ ແລະ ການນຳໃຊ້ຊັບສິ່ງຂອງ ຂອງຜູ້ອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;<br>7. ຂໍ້ຕົກລົງ ກ່ຽວກັບການແລກປ່ຽນ ຫຼື ການຊົດເຊີຍ ທີ່ບໍ່ຖືກຕ້ອງ<br>8. ການກະທຳທີ່ບໍ່ຖືກຕ້ອງ ກ່ຽວກັບຄວາມຮັບ ຜິດຊອບ ລະຫວ່າງອົງການຈັດຕັ້ງລັດດ້ວຍກັນ;<br>9. ຄະດີອື່ນ ກ່ຽວກັບບັນຫາ ທາງປົກຄອງ ຫຼື ທາງບໍລິຫານ ຕາມການຕົກລົງຂອງສະພາຜູ້ພິພາກສາຂອງ ສານປະຊາຊົນສູງສຸດ. |

**ກິດຈະກຳທີ 5: ການໃຫ້ບໍລິການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ**

| ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ |
|---|

## ກິດຈະກຳທີ 5

**ຂັ້ນຕອນທີ 01**

ອະທິບາຍຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳ



**ຂັ້ນຕອນທີ 02**

ແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມເພື່ອຄົ້ນຄວ້າຕອບຄຳຖາມ




**ຂັ້ນຕອນທີ 03**

ແຕ່ລະກຸ່ມນຳສະເໜີລາຍງານຜົນຂອງການຄົ້ນຄວ້າ



**ຂັ້ນຕອນທີ 04**

ສະຫຼຸບ



**ຈຸດປະສົງ:** ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດຮັບຮູ້ວ່າການຊ່ວຍເຫຼືທາງດ້ານກົດໝາຍແມ່ນແນວໃດ? ແລະ ສາມາດໄຈ້ແຍກໄດ້ວ່າອັນໃດແມ່ນ pro bono ແລະ Legal aid ແລ້ວມີຄວາມແຕກຕ່າງກັນແນວໃດ? ແລະ ສາມາດເຂົ້າເຖິງໄດ້ແນວໃດ?

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສໍາລັບຜູ້ເຂົ້າຮ່ວມ ບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ໂປເຈັກເຕີ ເພື່ອສາຍຄໍາຕອບຂອງຄໍາຖາມ ແລະ ຄໍາຕອບ, ເຈັ້ຍ Ao ແລະ ບິກເຟີດສີ,

**ເວລາ:** 90 ນາທີ.

**ວິທີການດໍາເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງ ແລະ ຂະບວນການດໍາເນີນກິດຈະກໍາ**<br>ອະທິບາຍຈຸດປະສົງຂ້າງເທິງ ແລະ ອະທິບາຍຂະບວນການໃນການເຮັດກິດຈະກໍາໂດຍຫຍໍ້ ເຊັ່ນ ຈະເຮັດວຽກເປັນກຸ່ມຄົ້ນຄວ້າພາຍໃຕ້ຄໍາຖາມ. |
| **ຂັ້ນຕອນທີ 2** | **ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫລື ກຸ່ມ ເຮັດກິດຈະກໍາ(ອີງຕາມຈໍານວນຜູ້ເຂົ້າຮ່ວມ)**<br>**ສາຍຂໍ້ມູນໜ້າຈໍ ຂຽນຄໍາວ່າ:**<br>1. ການຊ່ວຍຊ່ວຍເຫຼືອທາງດ້ານກົດໝາຍແມ່ນການຊ່ວຍເຫຼືອແນວໃດ?<br>2. ການຊ່ວຍເຫຼືອແບບ (Pro bono) ແມ່ນຫຍັງ?<br>3. ການຊ່ວຍເຫຼືອແບບ Legal aid ແມ່ນຫຍັງ?<br>4. Pro bono ແລະ Legal aid ຄືກັນແນວໃດ? ແລະ ກຸ່ມຄົນໃດທີ່ສາມາດເຂົ້າເຖິງໄດ້? |
| **ຂັ້ນຕອນທີ 3** | **ແຕ່ລະກຸ່ມນໍາສະເໜີລາຍງານຜົນຂອງການຄົ້ນຄວ້າ**<br>• ພາຍຫຼັງສົນທະນາຄົ້ນຄວ້າພາຍໃນກຸ່ມແລ້ວ ໃຫ້ຕາງໜ້າກຸ່ມຂຶ້ນນໍາສະເໜີຜົນຂອງການຄົ້ນຄວ້າ. |
| **ຂັ້ນຕອນທີ 4** | **ສະຫຼຸບ**<br>• ພາຍຫຼັງຜູ້ເຂົ້າຮ່ວມນໍາສະເໜີຜົນຂອງການຄົ້ນຄວ້າແລ້ວ ຄູຝຶກ ສະຫຼຸບສັງລວມ ດ້ວຍການນໍາສະເໜີ ພາເວີພ້ອຍ ທີ່ເປັນນິຍາມຂອງ pro bono, Legal aid, ຄວາມແຕກຕ່າງ ແລະ ກຸ່ມຄົນທີ່ສາມາດເຂົ້າເຖິງ pro bono, Legal aid.<br>• ຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດໍາເນີນກໍາຈະກໍາຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ ແລະ ເຂົ້າສູ່ວາລະຕໍ່ໄປ. |

## ກິດຈະກຳທີ 6: ການສ້າງອາສາສະໝັກປະຈຳບ້ານ, ທັກສະການສຳພາດ ແລະ ເຮັດບົດສະຫຼຸບ ລາຍງານ

**ຂະບວນການ ແລະ ວິທີການດຳເນີນກິດຈະກຳໃນພາກສະໜາມ**

## ກິດຈະກຳທີ 6

## ມີ 2 ກິດຈະກຳຍ່ອຍ



**ຂັ້ນຕອນທີ 01**

ອະທິບາຍຈຸດປະສົງ ແລະ ຂະບວນການ ດຳເນີນກິດຈະກຳ



**ຂັ້ນຕອນທີ 02**

ແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມເພື່ອຄົ້ນຄວ້າຕອບຄຳຖາມ



**ຂັ້ນຕອນທີ 03**

ແຕ່ລະກຸ່ມນຳສະເໜີຜົນການຄົ້ນຄວ້າ



**ຂັ້ນຕອນທີ 04**

ສະຫຼູບຜົນການຄົ້ນຄວ້າຕອບຄຳຖາມ



**ຂັ້ນຕອນທີ 05**

ກິດຈະກຳທີ 02 ການສະແດງບົດບາດສົມມຸດ



**ຂັ້ນຕອນທີ 06**

ສະແດງບົດບາດສົມມຸດການໃຫ້ຄຳປຶກສາ



**ຂັ້ນຕອນທີ 07**

ນຳສະເໜີຜົນຂອງການສຳພາດ



**ຂັ້ນຕອນທີ 08**

ສະຫຼູບ

**ຈຸດປະສົງ:** ເພື່ອສ້າງຄວາມເຂົ້າໃຈໃຫ້ກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ກ່ຽວກັບອາສາສະໝັກດ້ານກົດໝາຍປະຈຳບ້ານແມ່ນໃຜ? ມີບົດບາດ ແລະ ການເຄື່ອນໄຫວແນວໃດ? ຄວນໄດ້ຮັບ ການຝຶກອົບຮົມ ແລະ ທັກສະພື້ນຖານມີຫຍັງແດ່?

**ການກະກຽມສະຖານທີ່:** ກະກຽມພື້ນທີ່ໃຫ້ກ້ວາງຂວາງໃຫ້ພຽງພໍສຳລັບຜູ້ເຂົ້າຮ່ວມປະມານບໍ່ເກີນ 10 ຫາ 20 ຄົນ

**ອຸປະກອນ:** ໂປເຈັກເຕີ ເພື່ອສາຍຄຳຖາມ ເຈັ້ຍ Ao, ບິກເຟີດສີ, ເຈັ້ຍກໍລະນີສຶກສາ, ເຈັ້ຍແບບຟອມສຳພາດ.

**ເວລາ:** 210 ນາທີ.

**ວິທີການດຳເນີນກິດຈະກິດແຕ່ລະຂັ້ນຕອນ**

| | |
|---|---|
| **ຂັ້ນຕອນທີ 1** | **ອະທິບາຍຈຸດປະສົງ ແລະ ຂະບວນການດຳເນີນກິດຈະກຳ**<br>• ອະທິບາຍຈຸດປະສົງຂ້າງເທິງ ແລະ ແຈ້ງຜູ້ເຂົ້າຮ່ວມວ່າຫົວຂໍ້ນີ້ຈະມີຢູ່ 02 ກິດຈະກຳຫຼັກ.<br>• ຫຼັງຈາກນັ້ນຜູ້ອຳນວຍຄວາມສະດວກ ອະທິບາຍຂະບວນການໃນການເຮັດກິດຈະກຳທີ 01 ໂດຍຫຍໍ້ ເຊັ່ນ ຈະເຮັດວຽກເປັນຄູ່ ຫຼື ກຸ່ມ ເພື່ອຄົ້ນຄວ້າຕອບຄຳຖາມ. |
| **ຂັ້ນຕອນທີ 2** | **ກິດຈະກຳທີ 01**<br>**ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫຼື ກຸ່ມ ເຮັດກິດຈະກຳ(ອີງຕາມຈຳນວນຜູ້ເຂົ້າຮ່ວມ)**<br>ຫຼັງຈາກແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມແລ້ວໃຫ້ສາຍຈໍຄຳຖາມທີ່ວ່າ:<br>1) ຍ້ອນຫຍັງຈຶ່ງມີອາສາສະໝັກກົດໝາຍປະຈຳບ້ານ?<br>2) ອາສາສະຫມັກດ້ານກົດຫມາຍປະຈຳບ້ານ ແມ່ນໃຜ?<br>3) ອາສາສະໝັກກົດໝາຍປະຈຳບ້ານມີພາລະບົດບາດຫຍັງແດ່?<br>4) ບາດກ້າວໃນການສ້າງອາສາສະໝັກປະຈຳບ້ານມີຈັກບາດກ້າວ? ແລະ ບາດກ້າວຫຍັງແດ່?<br>5) ກຸ່ມເປົ້າຫມາຍທີ່ຈະເລືອກເປັນອາສາສະຫມັກແມ່ນກຸ່ມໃດ?<br>6) ເງື່ອນໄຂຂອງຜູ້ທີ່ຈະເປັນອາສາສະໝັກມີຫຍັງແດ່? |
| **ຂັ້ນຕອນທີ 3** | **ແຕ່ລະຄູ່ ຫຼື ກຸ່ມນຳສະເໜີຜົນການຄົ້ນຄວ້າ**<br>• ພາຍຫຼັງແຕ່ລະກຸ່ມຄົ້ນຄວ້າຄຳຖາມແລ້ວ ໃຫ້ຕາງໜ້າແຕ່ລະກຸ່ມ ຂຶ້ນນຳສະເໜີຜົນຂອງການຄົ້ນຄວ້າຕອບຄຳຖາມ. |
| **ຂັ້ນຕອນທີ 4** | **ສະຫຼຸບຜົນຂອງການຄົ້ນຄວ້າຄຳຖາມ**<br>• ພາຍຫຼັງແຕ່ລະກຸ່ມຂຶ້ນນຳສະເໜີຜົນຂອງການຄົ້ນຄວ້າຕອບຄຳຖາມແລ້ວ ຄູຝຶກ ສະຫຼຸບສັງລວມ ດ້ວຍການນຳສະເໜີ ພາເວີພ້ອຍ ຄຳຕອບຂອງ 06 ຄຳຖາມນັ້ນ. |
| **ຂັ້ນຕອນທີ 5** | **ກິດຈະກຳທີ 02**<br>**ການສະແດງບົດບາດສົມມຸດ**<br>ໃຫ້ແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມເຮັດກິດຈະກຳສະແດງບົດບາດສົມມຸດ. |

| | |
|---|---|
| | • ພາຍຫຼັງແບ່ງເປັນຄູ່ ຫຼື ກຸ່ມແລ້ວ ຜູ້ອຳນວຍຄວາມສະດວກ ອະທິບາຍຂະບວນການໃນການເຮັດກິດຈະກຳທີ 02 ໂດຍຫຍໍ້ ເຊັ່ນ ພວກເຮົາຈະມີກໍລະນີສຶກສາໃຫ້ແລ້ວຄົ້ນຄວ້າ ຫຼັງຈາກນັ້ນໃຫ້ນຳເອົາບັນຫາໃນກໍລະນີສຶກສາ ມາຂໍຄຳປຶກສາທາງດ້ານກົດໝາຍກັບອາສາສະໝັກກົດໝາຍປະຈຳບ້ານ.<br>• ຫຼັງຈາກນັ້ນ ນຳສະເໜີກ່ຽວກັບ ທັກສະການສຳພາດ, ທັກສະການຟັງ, ທັກສະການຕັ້ງຄຳຖາມ ແລະ ແບບຟອມການເອົາຂໍ້ມູນສຳພາດໃຫ້ **(ຕາມເອກະສານຄັດຕິດ).** |
| **ຂັ້ນຕອນທີ 6** | **ສະແດງບົດບາດສົມມຸດການໃຫ້ຄຳປຶກສາ**<br>• ໃຫ້ແຕ່ລະກຸ່ມ ເລືອກເອົາ 2 ຫຼື 3 ຄົນ (ອີງຕາມຈຳນວນສະມາຊິກໃນກຸ່ມ) ມາສະແດງບົດບາດສົມມຸດ ເປັນອາສາສະໝັກກົດໝາຍປະຈຳບ້ານ.<br>• ສຳລັບສະມາຊິກໃນກຸ່ມແມ່ນໃຫ້ເລືອກເອົາຄົນໜຶ່ງ ຫຼື ສອງຄົນກໍ່ໄດ້ເຂົ້າໄປຂໍຄຳປຶກສາຈາກອາສາສະໝັກກົດໝາຍປະຈຳບ້ານ.<br>• ຫຼັງຈາກນັ້ນຜູ້ອຳນວຍຄວາມສະດວກ ນຳເອົາແບບຟອມສຳພາດໃຫ້ຜູ້ທີ່ສະແດງເປັນອາສາສະໝັກກົດໝາຍປະຈຳບ້ານ ເພື່ອບັນທຶກຂໍ້ມູນຈາກຜູ້ມາຂໍຄຳປຶກສາ.<br>• ຜູ້ມາຂໍຄຳປຶກສາແມ່ນໃຫ້ນຳເອົາກໍລະນີສຶກສາທີ່ໄດ້ຮັບ ມາຂໍຄຳປຶກສາທາງດ້ານກົດໝາຍກັບອາສາສະໝັກກົດໝາຍປະຈຳບ້ານ. |
| **ຂັ້ນຕອນທີ 7** | **ນຳສະເໜີຜົນຂອງການສຳພາດ**<br>• ພາຍຫຼັງອາສາສະໝັກກົດໝາຍປະຈຳບ້ານໄດ້ເກັບກຳຂໍ້ມູນຈາກຜູ້ມາຂໍຄຳປຶກສາແລ້ວ ໃຫ້ລາຍງານຜົນຂອງການສຳພາດເກັບກຳຂໍ້ມູນ. |
| **ຂັ້ນຕອນທີ 8** | **ສະຫຼຸບ**<br>• ພາຍຫຼັງອາສາສະໝັກລາຍງານຜົນຂອງການເກັບກຳຂໍ້ມູນແລ້ວ ຄູຝຶກ ສະຫຼຸບ ຜົນໄດ້ຮັບຂອງ ກິດຈະກຳ ພ້ອມທັງ ນຳສະເໜີ ແບບຢ່າງການວິເຄາະຂໍ້ມູນການສຳພາດ ກໍລະນີສຶກສານັ້ນ.<br>• ຫຼັງຈາກນຳສະເໜີແລ້ວໃຫ້ຖາມຜູ້ເຂົ້າຮ່ວມວ່າ ມີຫຍັງທີ່ຍັງບໍ່ເຂົ້າໃຈ ຫຼື ມີຫຍັງສົນທະນາແລກປ່ຽນອີກບໍ່ກ່ອນຈະດຳເນີນກຳຈະກຳຕໍ່ໄປ, ຖ້າມີ ໃຊ້ເວລາອະທິບາຍຕື່ມ ແລະ ເຂົ້າສູ່ກິດຈະກຳຕໍ່ໄປ. |

**ໝາຍເຫດ:** ກິດຈະກຳຍ່ອຍທີ 2 ກ່ຽວກັບການສະແດງບົດບາດສົມມຸດ ໃຊ້ສຳລັບບ້ານທີ່ມີ ອາສາສະໝັກດ້ານປະຈຳບ້ານຢູ່ແລ້ວ ເພື່ອເປັນການເສີມທັກສະຕ່າງໆໃຫ້ພວກເຂົາ.

**ເອກະສານຄັດຕິດສຳລັບກິດຈະກຳທີ 6**

**ການສ້າງອາສາສະໝັກປະຈຳບ້ານ, ທັກສະການສຳພາດ ແລະ ເຮັດບົດສະຫຼຸບ ລາຍງານ**

ອາສາສະໝັກດ້ານກົດໝາຍປະຈຳບ້ານ ແມ່ນບຸກຄົນທີ່ເຮັດວຽກເປັນອາສາສະໝັກ ໃນການສະໜັບ ສະໜູນ ກິດຈະກຳ ແກ່ຊຸມຊົນທ້ອງຖິ່ນທີ່ຕົນອາໄສຢູ່ ສາມາດເຂົ້າເຖິງການຊ່ວຍເຫລືອທາງດ້ານ ກົດໝາຍ ເປັນຕົ້ນການ ໃຫ້ໄດ້ຄຳປຶກສາ, ການຊ່ວຍຮ່າງເອກະສານ ແລະ ການເປັນຜູ້ຕາງໜ້າທາງດ້ານກົດໝາຍ ຫລື ວ່າຄວາມໃຫ້ ຈາກທະນາຍຄວາມ ໂດຍບໍ່ຄິດຄ່າ ຫລື ແບບສະໝັກໃຈ ຕະຫລອດຮອດການໄດ້ ຮັບຂໍ້ມູນຂ່າວສານທີ່ ຖືກຕ້ອງ ກ່ຽວກັບບັນດາກົດໝາຍທີ່ມີຜົນກະທົບ ຕໍ່ກັບການດຳລົງຊີວິດປະຈຳວັນ ຂອງເຂົາເຈົ້າ ເວົ້າອີກຢ່າງເຮັດ ບົດບາດເປັນຂົວຕໍ່ໃຫ້ລະຫວ່າງ ຜູ້ທີ່ຕ້ອງການຄວາມຊ່ວຍເຫລືອທາງດ້ານກົດໝາຍ ແລະ ຜູ້ທີ່ໃຫ້ບໍລິການທາງດ້ານກົດໝາຍ.

- **ອາສາສະໝັກດ້ານກົດໝາຍປະຈຳບ້ານ ແມ່ນບຸກຄົນທີ່:**
    - ບໍ່ແມ່ນທະນາຍຄວາມ ແຕ່ວ່າ ໄດ້ຮັບການຝຶກອົບຮົມຄວາມຮູ້ ແລະ ທັກສະທາງດ້ານກົດໝາຍຂັ້ນພື້ນຖານ ຫລືເປັນຜູ້ຊ່ວຍທະນາຍຄວາມ.
    - ເປັນສະມາຊິກຊຸມຊົນ ຫຼື ເປັນສະມາຊິກ ອຳນາດການປົກຄອງບ້ານ.
    - ມີຄວາມຮູ້ ແລະ ຄວາມສາມາດໃນການສື່ສານກັບຊຸມຊົນ ໂດຍຜ່ານການໃຫ້ຄວາມຮູ້ທາງດ້ານກົດໝາຍ ແບບມີສ່ວນຮ່ວມກັບຊຸມຊົນ.
    - ມີຄວາມສາມາດໃນການເຮັດວຽກຮ່ວມກັບພາກລັດໃນຂັ້ນທ້ອງຖິ່ນ ໂດຍສະເພາະຂອດການປະສານງານ ແລະ ການລາຍງານ.
- **ອາສາສະໝັກດ້ານກົດໝາຍປະຈຳບ້ານ ມີບົດບາດຄື:**

| | |
|---|---|
| ➢ ສຳພາດ ແລະ ບັນທຶກເກັບກຳຂໍ້ມູນຈາກຜູ້ທີ່ເຂົ້າມາຂໍຄຳປຶກສາ.<br>➢ ສະຫຼຸບລາຍງານ ແລະ ຂໍຄຳແນະນຳຈາກ ສູນໃຫ້ຄຳປຶກສາດ້ານກົດໝາຍ ເພື່ອດຳເນີນ ການຊ່ວຍເຫຼືອຕາມຂັ້ນຕອນ.<br>➢ ດຳເນີນການຕິດຕາມ ແລະ ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍຕາມການຊີ້ນຳຂອງສູນໃຫ້ຄຳປຶກສາ. | ➢ ຮັກສາຄວາມລັບຂອງຜູ້ທີ່ເຂົ້າມາຂໍຄຳປຶກສາ.<br>➢ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມຄຳແນະນຳຂອງສູນໃຫ້ຄຳປຶກສາດ້ານກົດໝາຍ.<br>➢ ເຜີຍແຜ່ກົດໝາຍ ແລະ ຂໍ້ມູນດ້ານກົດໝາຍ ໃຫ້ແກ່ຊຸມຊົນ. |

- **ຂໍ້ມູນທີ່ສຳຄັນສຳລັບອາສາສະໝັກດ້ານກົດໝາຍປະຈຳບ້ານ:**
    - ແມ່ນບຸກຄົນຫນຶ່ງ ມີທີ່ຢູ່ປະຈຳຢູ່ບ້ານທີ່ຕົນເປັນອາສາສະໝັກ;
    - ມີຄວາມສະຫມັກໃຈ ຮັບໃຊ້ ແລະ ຊ່ວຍເຫຼືອປະຊາຊົນພາຍໃນບ້ານ ດ້ວຍຈິດອາສາ;
    - ຜ່ານການຄັດເລືອກ ແລະ ໄດ້ເຂົ້າຮ່ວມຝຶກອົບຮົມທາງດ້ານກົດຫມາຍ ຂັ້ນພື້ນຖານ;
    - ເປັນຜູ້ຊ່ວຍ ພາຍໃຕ້ການຕິດຕາມ ແລະ ສະໜັບສະໜູນຈາກທະນາຍຄວາມ ຫລື ນັກກົດໝາຍ ໃນການໃຫ້ຄວາມຊ່ວຍເຫລືອທາງດ້ານກົດໝາຍ ເປັນຕົ້ນການໃຫ້ຄຳປຶກສາ ແລະ ກິດຈະກຳຕ່າງໆ;
    - ມີການຕິດຕໍ່ພົວພັນທີ່ດີ ກັບອຳນາດການປົກຄອງບ້ານ.

- **ທັກສະການສຳພາດ**

1. **ການຟັງ**

**ການຟັງທີ່ມີປະສິດທິພາບ ຄວນສະແດງອອກ ແລະ ປະພຶດ ດັ່ງນີ້:**

- ການສະແດງທ່າທີທີ່ສົນໃຈ ແລະ ໃຫ້ກຽດຕໍ່ຜູ້ເລົ່າໃຫ້ຟັງ ຫຼີກລ່ຽງການສະແດງອາການລຳຄານ, ເມື່ອຍ, ຖອນຫາຍໃຈ ຫຼື ຂັດຈັງຫວະ ຫຼື ຕັດບົດ, ຕັດຄວາມ ແຕ່ຄວນປ່ອຍໃຫ້ ເຂົາເລົ່າຕາມທຳມະຊາດ ເພື່ອສ້າງຄວາມສະບາຍໃຈ ແລະ ໝັ້ນໃຈໃນເບື້ອງຕົ້ນ ແລະ ຄ່ອຍຈັບຈັງຫວະໃນການຕັ້ງຄຳຖາມ.
- ອາດມີການຈົດບັນທຶກໃນປະເດັນທີ່ສຳຄັນຕາມສົມຄວນ.
- ຕັ້ງຄຳຖາມທີ່ເໝາະສົມ ຫຼື ຖາມຄືນເພື່ອຂໍຄວາມກະຈ່າງແຈ້ງ ຈະຊ່ວຍໃຫ້ຜູ້ເລົ່າຮູ້ສຶກວ່າຖືກຕິດຕາມໃນສິ່ງທີ່ເຂົາເລົ່າຢ່າງເອົາໃຈໃສ່ ພ້ອມກັນນັ້ນຍັງຮັບປະກັນຄວາມເຂົ້າໃຈໃນເນື້ອຫາທີ່ຖືກຕ້ອງ.
- ເພື່ອກວດເບິ່ງວ່າເຈົ້າເຂົ້າໃຈຖືກຕ້ອງແລ້ວ, ເຈົ້າສາມາດເວົ້າຄືນ ຫຼື ສະຫຼຸບຂໍ້ມູນຄືນໃຫ້ກັບຜູ້ຖືກສຳພາດ ແລະ ຖາມເຂົາເຈົ້າເພື່ອຢັ້ງຢືນວ່າມັນຖືກຕ້ອງແລ້ວ.
- ການຟັງດ້ວຍຄວາມເຄົາລົບ ຄວນຫຼີກລ່ຽງການລົມໂທລະສັບມືຖື ຫຼື ຫັນເຫຄວາມສົນໃຈໄປທາງອື່ນ ເພາະຈະເຮັດໃຫ້ຜູ້ເລົ່າ (ຖືກສຳພາດ) ຮູ້ສຶກວ່າເລື່ອງທີ່ຕົນກຳລັງເລົ່າບໍ່ສຳຄັນ.

| ສິ່ງທີ່ຄວນເຮັດ | ສິ່ງທີ່ບໍ່ຄວນເຮັດ |
|---|---|
| ✓ ສະແດງຄວາມສົນໃຈ<br>✓ ອົດທົນ<br>✓ ເຂົ້າໃຈ<br>✓ ມີເປົ້າໝາຍໃນການຟັງ<br>✓ ສະແດງການໂຕ້ຕອບ<br>✓ ຄົ້ນຫາຄວາມໝາຍ | × ເລັ່ງຜູ້ເວົ້າ<br>× ໂຕ້ຖຽງ<br>× ຂັດຈັງຫວະ<br>× ດ່ວນຕັດສິນ<br>× ໃຫ້ຄຳແນະນຳນອກເໜືອຈາກການທີ່ໄດ້ຮັບການຂໍຮ້ອງ<br>× ຟ້າວສະຫຼຸບ<br>× ປ່ອຍໃຫ້ອາລົມຜູ້ເວົ້າມີຜົນຕໍ່ອາລົມຂອງຕົນເອງ |

2. **ການຕັ້ງຄຳຖາມ**

ການຕັ້ງຄຳຖາມເປັນສິລະປະຢ່າງໜຶ່ງ. ສະນັ້ນ, ການຕັ້ງຄຳຖາມຄວນຖາມໃນເວລາທີ່ ເໝາະສົມ (ຖືກກາລະເທສະ) ໃຊ້ຄຳຖາມທີ່ເໝາະສົມ ແລະ ຖືກປະເດັນ, ໃຊ້ວິທີການ ແລະ ທ່າທາງທີ່ເໝາະສົມ.

| ສິ່ງທີ່ຄວນເຮັດ | ສິ່ງທີ່ບໍ່ຄວນເຮັດ |
|---|---|
| ✓ ໃຫ້ກຽດຜູ້ເວົ້າ,ຕັ້ງຄຳຖາມເທື່ອລະຄຳຖາມ ແລະ ໃຫ້ເວລາໃນການຕອບ<br>✓ ຖາມຢ່າງເປັນທຳມະຊາດ ແລະ ຕໍ່ເນື່ອງກັບຄຳຕອບຂອງຜູ້ເວົ້າ | × ຕັ້ງຄຳຖາມຕັດບົດໃນຂະນະທີ່ເວົ້າ ຫຼື ກຳລັງສະແດງຄຳຄິດຄຳເຫັນຢ່າງສ້າງສັນ<br>× ຄຳຖາມທີ່ເຮັດໃຫ້ຜູ້ເວົ້າເສຍໜ້າ ຫຼື ເຮັດໃຫ້ຜູ້ເວົ້າຫາທາງປ້ອງກັນຕົວເອງ |

**ປະເພດຄຳຖາມ**

| ປະເພດຄຳຖາມ | ໝາຍເຫດ | ຕົວຢ່າງຄຳຖາມ |
|---|---|---|
| **ຄຳຖາມເປີດ** | ⇨ ຜູ້ເລົ່າສາມາດຕອບຕາມໃຈ, ໂດຍຄຳເວົ້າ | ✎ ເລົ່າໃຫ້ຂ້ອຍຟັງແດ່ ກ່ຽວກັບເລື່ອງ... |

| | | |
|---|---|---|
| | ຂອງຕົນເອງ<br>⇨ ເລີ່ມຕົ້ນດ້ວຍຄຳຖາມທີ່ກວ້າງຂວາງ<br>⇨ ສາມາດນຳໃຊ້ເພື່ອ:<br>• ຄົ້ນຫາຂໍ້ມູນ<br>• ຖາມກ່ຽວກັບເຫດຜົນ<br>• ຄົ້ນຫາຄຳເຫັນຂອງຜູ້ເລົ່າ<br>• ໄດ້ຮັບຮູ້ກ່ຽວກັບຜົນສະທ້ອນທີ່ເປັນໄປໄດ້ | ↳ ທ່ານຈື່ຫຍັງໄດ້ແດ່ກ່ຽວກັບເຫດການນັ້ນ?<br>↳ ຄວາມເສຍຫາຍ ຫຼື ທ່ານໄດ້ຮັບບາດເຈັບແມ່ນມີ ຫຍັງແດ່?<br>↳ ຕາມຄວາມເຫັນຂອງທ່ານ ທ່ານຄິດວ່າມັນຄວນ ຈະເປັນເງິນເທົ່າໃດ? ຍ້ອນຫຍັງ?<br>↳ ທ່ານຄິດວ່າ ທ່ານຈະເຮັດແນວໃດຈຶ່ງຈະເປັນທຳ ແລະ ທ່ານເອົາແນວໃດຕໍ່?<br>↳ ແມ່ນຫຍັງຈະເກີດຂຶ້ນຖ້າທ່ານລໍຖ້າການແກ້ໄຂ ຫຼື ໄກ່ເກ່ຍຈົນກວ່າຄະດີຈະໄປເຖິງສານ? |
| **ຄຳຖາມປິດ** | ⇨ ທາງເລືອກຈຳກັດໃນການຕອບ<br>⇨ ເປັນປະໂຫຍດເພື່ອຢືນຢັນລາຍລະອຽດສະເພາະ | ↳ ທ່ານແຕ່ງງານແລ້ວບໍ?<br>↳ ເກີດຂຶ້ນເວລາໃດ?<br>↳ ທ່ານໄປວຽກມື້ໃດແນ່? |
| **ຄຳຖາມຊີ້ນຳ** | ⇨ ຊີ້ໃຫ້ເຫັນຄຳຕອບ ຫຼື ປະກອບດ້ວຍ ຂໍ້ມູນທີ່ຜູ້ສຳພາດຄາດຫວັງຈະໄດ້ຍິນ<br>⇨ ມີປະໂຫຍດ ເພື່ອນຳຜູ້ເລົ່າ ຖ້າຫາກວ່າ ຜູ້ເລົ່າເວົ້າຍາວ ຫຼື ເຮັດໃຫ້ສັບສົນ<br>⇨ ບໍ່ຄວນໃຊ້ຫຼາຍ ເພາະວ່າມັນອາດຈະມີອິດທິພົນຕໍ່ຜູ້ຖືກສຳພາດ ຫຼື ຈຳກັດຜູ້ ຖືກສຳພາດບໍ່ໃຫ້ຂໍ້ມູນດ້ວຍຄຳເວົ້າຂອງ ເຂົາເຈົ້າເອງ | ↳ ສະນັ້ນ, ທ່ານໄດ້ຮູ້ສຶກຢ້ານ ແລະ ກັງວົນໃຈບໍ?<br>↳ ທ່ານບໍ່ຄິດບໍວ່າ ການໃຊ້ຄວາມຮຸນແຮງເກີດຂຶ້ນ ຍ້ອນເຂົ້າໃຈກັນຜິດເລື່ອງໜີ້ສິນ?<br>↳ ເປັນຍ້ອນວ່າທ່ານ ເວົ້າຮ້າຍ ແລະ ໃຊ້ສຽງດັງ ແມ່ນບໍ່? |

**3. ການຈົດບັນທຶກເພື່ອລາຍງານ**

ສຳລັບແຕ່ລະຄົນທີ່ມາຂໍຄຳປຶກສາ ຫຼື ຂໍ້ມູນ, ອາສາສະໝັກກົດໝາຍປະຈຳບ້ານຕ້ອງຂຽນລົງໃນປຶ້ມບັນທຶກຂອງຕົນ ກ່ຽວກັບລາຍລະອຽດດັ່ງຕໍ່ໄປນີ້: ວັນທີທີ່ເຂົາເຈົ້າມາ, ອາຍຸ ແລະ ເພດ ຂອງເຂົາເຈົ້າ: ສັງລວມບັນຫາຂອງເຂົາເຈົ້າ.

ເພື່ອຮັກສາຄວາມລັບຂອງຜູ້ທີ່ເຂົ້າມາຂໍຄຳປຶກສາ, ຢ່າຂຽນຊື່ຂອງລູກຄວາມ ຫຼື ຄູ່ກໍລະນີ ລົງໃນປຶ້ມບັນທຶກຂອງ ອາສາສະໝັກ. ພະຍາຍາມສະຫຼຸບບັນຫາໂດຍທົ່ວໄປ, ໂດຍບໍ່ເປີດເຜີຍລາຍລະອຽດສະເພາະຂອງຄະດີ.

## ❖ ຮ່າງແບບຟອມການເອົາຂໍ້ມູນຈາກການສຳພາດ

**ເລື່ອງ:...................................................................................................................**

| ຫົວຂໍ້ທີ່ຕ້ອງການຂໍ້ມູນ | ຂໍ້ມູນທີ່ຕ້ອງບັນທຶກ | ຂໍ້ສັງເກດ ຫຼື ຄໍາເຫັນຕໍ່ຂໍ້ເທັດຈິງ |
|---|---|---|
| ຂໍ້ມູນຂອງຜູ້ມາຂໍຄວາມຊ່ວຍເຫລືອ (ຊື່, ນາມສະກຸນ, ອາຍຸ, ທີ່ຢູ່, ອາຊີບ, ເຜົ່າ ຫລື ສັນຊາດ, ເບີໂທຕິດຕໍ່.....) | | |
| ຂໍ້ມູນຂອງຄູ່ກໍລະນີຫລືຂັດແຍ່ງ, ຮູບຮ່າງລັກສະນະ (ຊື່, ນາມສະກຸນ, ອາຍຸ, ທີ່ຢູ່, ອາຊີບ, ເຜົ່າ ຫລື ສັນຊາດ, ເບີໂທຕິດຕໍ່....) | | |
| ສະຖານທີ່ເກີດຂຶ້ນຢູ່ໃສ, ເວລາ, ວັນທີ ເດືອນ,ປີ ໃຫ້ລໍາດັບເວລາທີ່ເກີດຂຶ້ນກ່ອນ. | | |
| ສະພາບຂອງຂໍ້ຂັດແຍ່ງ ຫລືຄວາມເສຍຫາຍມີຫຍັງແດ່? | | |
| ຜູ້ຢູ່ໃນເຫດການ ແລະ ສະພາບແວດລ້ອມກ່ອນ, ຕອນເກີດເຫດ ແລະ ຫຼັງເກີດເຫດ | | |
| ໄດ້ຮັບການປົກປ້ອງ ແລະ ການຊ່ວຍເຫຼືອ ຫຍັງແດ່? (ຜ່ານມາຈົນຮອດປັດຈຸບັນ) | | |
| ຄວາມຕ້ອງການຜູ້ມາຂໍຄໍາປຶກສາ | | |
| ຂໍ້ມູນທີ່ໄດ້ຮັບ (ເອກະສານ,ຮູບຖ່າຍ,ຄລິບສຽງ,ວັດຖຸ ແລະ ອື່ນໆ) | | |
| **ພາກຄໍາເຫັນຂອງຜູ້ສໍາພາດ ຫລືໃຫ້ຄໍາປຶກສາ** | | |
| ສິດຂອງຜູ້ມາຂໍຄໍາປຶກສາ ແລະ ບຸກຄົນທີ່ກ່ຽວຂ້ອງ ທີ່ຕ້ອງຄໍານຶງມີຫຍັງແດ່ | | |
| ບົດບາດ, ສິດ ແລະ ໜ້າທີ່ ຂອງຜູ້ໃຫ້ບໍລິການທາງດ້ານກົດໝາຍ ສາມາດເຮັດຫຍັງໄດ້ແດ່ ຕາມລະບຽບກົດໝາຍ | | |
| ກົດໝາຍທີ່ຕ້ອງປະກອບການພິຈາລະນາ | | |
| ກໍານົດການປົກປ້ອງ ແລະ ການຊ່ວຍເຫຼືອທີ່ຈໍາເປັນເບື້ອງຕົ້ນ | | |
| ພາກສ່ວນ ຫຼື ບຸກຄົນທີ່ຕ້ອງປະສານຫາ ຫຼື ລາຍງານ | | |

**ກໍລະນີສຶກສາທີ່ຈະໃຊ້ເຂົ້າໃນກິດຈະກໍາທີ 3**

## ກໍລະນີທີ 01

ໃນປີ 2003 ໄດ້ມີ ບໍລິສັດ A ເຂົ້າມາຈັບຈອງສຳປະທານທີ່ດິນໄວ້ ປະມານ 90 ເຮັກຕາ ໂດຍການເຊັນອານຸມັດຂອງເມືອງໃຫ້ລົງທຶນ ຊຶ່ງເນື້ອທີ່ດິນດັ່ງກ່າວນັ້ນ ກ່ອນໜ້າປີ 2003 ແມ່ນເປັນພື້ນທີ່ທຳມາຫາກິນ ແລະ ທຳການຜະລິດຂອງປະຊາຊົນ ບ້ານ B ເຊັ່ນ: ປູກຢາງທະລາ, ປູກໄມ້ ແລະ ປູກມັນຕົ້ນ, ເຮັດໄຮ່ປູກເຂົ້າ ແລະ ອື່ນໆ. ກ່ອນທີ່ ບໍລິສັດ A ຈະມາລົງທຶນທາງ ບໍລິສັດ ໄດ້ສັນຍາວ່າ: ຈະສ້າງຫົນທາງ, ສ້າງໂຮງຮຽນ ແລະ ສ້າງວັດທີ່ເປັນຜົນປະໂຫຍດສ່ວນລວມໃຫ້ແກ່ບ້ານ B ໂດຍມີພະນັກງານເມືອງ C ອຳນວຍຄວາມສະດວກ ມີສະພາບກົດດັນ ປະຊາຊົນ ບ້ານ B ເມື່ອເປັນຄືແນວນັ້ນແລ້ວທາງບ້ານ B ຈຶ່ງຈຳເປັນຕອ້ງໄດ້ຍິນຍອມໃຫ້ບໍລິສັດ A ເຂົ້າມາພັດທະນາຕາມແຜນຂອງໂຄງການທີ່ໄດ້ຕົກລົງກັນກັບບ້ານ B. ພາຍຫຼັງທີ່ໄດ້ດຳເນີນການໄປຊ່ວງໄລຍະໜຶ່ງ ບໍລິສັດ A ຈຶ່ງໄດ້ຍຸດເຊົາບໍ່ປະຕິບັດພັນທະຕາມທີ່ໄດ້ຕົກລົງກັນໄວ້ກັບບ້ານ ແລະ ໃນຂອບເຂດພື້ນທີ່ສຳປະທານ ບໍລິສັດ A ໄດ້ມີການປູກຕົ້ນຢາງພາລາໃນເນື້ອທີ່ ປະມານ 30 ເຮັກຕາ ສ່ວນທີ່ເຫຼືອນັ້ນບໍ່ໄດ້ມີການເຄື່ອນໄຫວໃດໆ ຈົນມາຮອດ 2020 ປະຊາຊົນ ເຫັນວ່າບໍລິສັດ A ປ່ອຍປະໃຫ້ເປັນດິນເປົ່າຫວ່າງບໍ່ມີການດຳເນີນກິດຈະການ ແລະ ປະຊາຊົນມີທີ່ດິນທຳມາຫາກິນບໍ່ພຽງພໍ ຈຶ່ງໄດ້ເຂົ້າໄປບຸກເບີກເອົາເນື້ອທີ່ດິນ ທີ່ໂຄງການໄດ້ສຳປະທານໄວ້ນັ້ນ ຈຶ່ງເກີດມີຂໍ້ຂັດແຍ່ງກັນເກີດຂຶ້ນ ລະຫວ່າງ ບໍລິສັດ A ກັບ ປະຊາຊົນບ້ານ B. ຕໍ່ມາປີ 2021 ທາງໂຄງການ ແລະ ອຳນາດການປົກຄອງທອ້ງຖິ່ນໄດ້ມີການປຶກສາຫາລືກັນ ແລະ ສະເໜີໃຫ້ການຊົດເຊີຍທີ່ດິນຄືນໃຫ້ແກ່ປະຊາຊົນຄອບຄົວລະ 20x40 ແມັດ ພ້ອມທັງໃຫ້ປະຊາຊົນຈ່າຍເງິນຕື່ມອີກຕອນລະ 12.000.000 ກີບ. ແລ້ວທາງ ບໍລິສັດ A ຈະມີໃບຕາດິນຂອບທອງໃຫ້ພ້ອມ ແຕ່ປະຊາຊົນບໍ່ເຫັນດີ. ການສຳປະທານທີ່ດິນລວມບ້ານ ແມ່ນບໍ່ໄດ້ມີການທົດແທນຄ່າຊົດເຊີຍໃດໆ ມີແຕ່ທາງໂຄງໄດ້ສ້າງບົດບັນທຶກກັບບ້ານວ່າ ຈະສ້າງຜົນປະໂຫຍດສ່ວນລວມໃຫ້ແກ່ບ້ານເທົ່ານັ້ນແລ້ວກໍ່ບໍ່ໄດ້ເຮັດຫຍັງເລີຍ.

## ຄຳຕອບ ກໍລະນີສຶກສາ 01

ອີງຕາມກໍລະນີສຶກສາ ເຫັນວ່າ ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນເມືອງ ແມ່ນບໍ່ມີສິດຕົກລົງອະນຸຍາດທີ່ດິນຂອງລັດໃຫ້ນັກລົງທຶນ ເຊົ່າ ຫຼື ສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 81, 119 ແລະ ຂໍ້ ຂ ຂອງມາດຕາ 179 ຂອງກົດໝາຍວ່າດ້ວຍ ທີ່ດິນ ປີ 2019.

**ມາດຕາ 81 (ໃໝ່) ການນຳໃຊ້ທີ່ດິນຂອງລັດ ເພື່ອເປົ້າໝາຍລວມໝູ່**

ການນຳໃຊ້ທີ່ດິນຂອງລັດເພື່ອເປົ້າໝາຍລວມໝູ່ ແມ່ນ ການມອບສິດນຳໃຊ້ທີ່ດິນຂອງລັດ ໃຫ້ປະຊາຊົນພາຍໃນບ້ານ ຫຼື ຫຼາຍບ້ານໃຊ້ຮ່ວມກັນ ຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ແລະ ກົດໝາຍ ເປັນຕົ້ນ ທີ່ດິນປ່າຊ້າ, ປ່າສັກສິດ, ໜອງລວມບ້ານ, ວັດ, ໂຮງຮຽນ, ສຸກສາລາ, ຫ້ອງການປົກຄອງບ້ານ, ຕະຫຼາດຂອງບ້ານ.

ສິດນຳໃຊ້ທີ່ດິນຂອງລັດເພື່ອເປົ້າໝາຍລວມໝູ່ ປະກອບມີ ສິດປົກປັກຮັກສາ, ຊົມໃຊ້ທີ່ດິນ ເພື່ອຜົນປະໂຫຍດລວມຂອງປະຊາຊົນພາຍໃນບ້ານ ຫຼື ຫຼາຍບ້ານ ແຕ່ບໍ່ມີສິດມອບ, ໂອນ, ຂາຍ, ແລກປ່ຽນ, ໃຫ້ ເຊົ່າ, ໃຫ້ສຳປະທານ, ເອົາໄປເປັນຮຸ້ນ, ນຳໄປຄ້ຳປະກັນ ແຕ່ຢ່າງໃດ.

**ມາດຕາ 119 (ໃໝ່) ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ**

ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຕ້ອງຜ່ານການປະມູນ ແລະ ດຳເນີນໃນເຂດທີ່ດິນ ຂອງລັດທີ່ລັດໄດ້ຈັດສັນໄວ້. ຜູ້ເຊົ່າ ຫຼື ຜູ້ສຳປະທານ ຕ້ອງດຳເນີນການສຶກສາຜົນກະທົບ ຫຼື ປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ລວມທັງສ້າງ

ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຫຼັງຈາກລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ເຊົ່າ ຫຼື ສຳປະທານທີ່ດິນຂອງລັດແລ້ວ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ບ່ອນທີ່ດິນຕັ້ງຢູ່ ອອກໃບຕາດິນລັດ ພາຍໃນເວລາ ຫ້າວັນ ລັດຖະການ ໃຫ້ຜູ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດນັ້ນ ຕາມກຳນົດເວລາການເຊົ່າ ຫຼື ສຳປະທານ.

ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ແຕ່ລະປະເພດນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 179 (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຄື:

**ກ. ອົງການປົກຄອງຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າສ້າງແຜນຈັດສັນທີ່ດິນທ້ອງຖິ່ນ ແລະ ວາງແຜນການນຳໃຊ້ທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບທ້ອງຖິ່ນຕົນ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະ ກິດ-ສັງຄົມແຕ່ລະໄລຍະ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ, ຈຸດພິເສດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານໃນທ້ອງຖິ່ນຕົນ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ ພ້ອມທັງລາຍງານໃຫ້ລັດຖະບານ;

2. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ ດິນທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງທ້ອງຖິ່ນຕົນ ເພື່ອເປັນບ່ອນອີງໃນການ ວາງຍຸດທະສາດ, ຈັດສັນ ແລະ ແຜນ ການນຳໃຊ້ທີ່ດິນ ໃຫ້ບັນລຸຕາມເປົ້າໝາຍ ແລະ ຕົວເລກຄາດໝາຍ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດສັນທີ່ດິນແຫ່ງຊາດ;

3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ທີ່ຢູ່ໃນການຄຸ້ມຄອງການນຳໃຊ້ຂອງພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການ ປົກຄອງບ້ານ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມລາຍງານລັດຖະບານ;

4. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ໃນທຸກ ຫ້າປີ ແລ້ວລາຍງານຕໍ່ສະພາປະຊາຊົນຂັ້ນແຂວງ ແລະ ລັດຖະບານ;

5. ສົມທົບກັບກະຊວງ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນແຕ່ລະປະເພດ ພ້ອມທັງເພີ່ມທະວີການຕິດຕາມ ກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

6. ການປະເມີນລາຄາທີ່ດິນ ໃນແຕ່ລະໄລຍະ ແລະ ການຫັນປ່ຽນປະເພດທີ່ດິນ, ຕົກລົງມອບສິດ ຫຼື ຖອນສິດນຳໃຊ້ທີ່ດິນ, ໃຫ້ເຊົ່າ ຫຼື ສຳປະທານທີ່ດິນ ຕາມພາລະບົດບາດຂອງຕົນ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

7. ຕົກລົງການຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ໃຫ້ສະເພາະພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຕາມທີ່ໄດ້ກຳນົດໃນມາດຕາ 125 ວັກທີ ສອງ ຂອງກົດໝາຍສະບັບນີ້;

8. ເປັນເຈົ້າການຕິດຕາມ ກວດກາ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ທີ່ຂະແໜງການ ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ;

9. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈັບຈອງທີ່ດິນ, ຄອບຄອງທີ່ດິນທີ່ຜິດກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບຂອງທ້ອງຖິ່ນຕົນຢ່າງເຂັ້ມງວດ;

10. ກວດກາຄືນ, ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ທີ່ປະຕິບັດບັນດາໜ້າວຽກ ແຕ່ຂໍ້ 1 ຫາ ຂໍ້ 9 ຂອງມາດຕານີ້ ແນໃສ່ຮັບປະກັນຄຸນນະພາບ ແລະ ມີມາດຕະຖານຄົບຖ້ວນ;

11. ກວດກາ ແລະ ປະເມີນກົນໄກການປະສານງານລະຫວ່າງພະແນກການພາຍໃນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ໂດຍຮັບປະກັນ ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນໃນແຕ່ລະທ້ອງຖິ່ນ ເຂົ້າໃນວຽກງານຄຸ້ມຄອງທີ່ດິນ;

12. ຈັດຕັ້ງໂຄສະນາ ແລະ ເຜີຍແຜ່ວຽກງານການຄຸ້ມຄອງທີ່ດິນ ໃຫ້ທຸກພາກສ່ວນໃນ ສັງຄົມ ແລະ ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ຕາມກົດໝາຍຢ່າງເຂັ້ມງວດ.

**ຂ. ອົງການປົກຄອງຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເຂົ້າຮ່ວມໃນການຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນທ້ອງຖິ່ນຕົນ;

2. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນ ໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງເມືອງ, ເທດສະບານ, ນະຄອນ ແລ້ວລາຍງານໃຫ້ອົງການປົກຄອງຂັ້ນແຂວງເພື່ອເປັນຂໍ້ມູນໃນການວາງແຜນຈັດສັນ ແລະ ແຜນການນຳໃຊ້ທີ່ດິນໃຫ້ບັນລຸຕາມເປົ້າໝາຍ ແລະ ຕົວເລກຄາດໝາຍ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດສັນທີ່ດິນແຫ່ງຊາດ;

3. ສ້າງຖານ ແລະ ສະໜອງຂໍ້ມູນທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງບັນດາຫ້ອງການຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ໃຫ້ອົງການປົກຄອງຂັ້ນແຂວງ ເພື່ອສັງລວມລາຍງານລັດຖະບານ;

4. ສົມທົບກັບພະແນກການຂອງແຂວງ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນແຕ່ລະປະເພດ ພ້ອມທັງເພີ່ມທະວີການຕິດຕາມ ກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ;

5. ເຂົ້າຮ່ວມໃນການປະເມີນລາຄາທີ່ດິນໃນແຕ່ລະໄລຍະ ແລະ ການຫັນປ່ຽນປະເພດທີ່ ດິນຕາມພາລະ ບົດບາດຂອງຕົນ;

6. ເຂົ້າຮ່ວມຕິດຕາມ ກວດກາ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ທີ່ຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ອະນຸຍາດໃຫ້ ເຊົ່າ ຫຼື ສຳປະທານ;

7. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ ຈັບຈອງທີ່ດິນ, ຄອບຄອງທີ່ດິນທີ່ຜິດກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ;

8. ຈັດຕັ້ງໂຄສະນາ ແລະ ເຜີຍແຜ່ວຽກງານການຄຸ້ມຄອງທີ່ດິນໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ຕາມກົດໝາຍຢ່າງເຂັ້ມງວດ.

**ຄ. ອົງການປົກຄອງບ້ານ ນອກຈາກປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 171 ຂອງກົດໝາຍສະບັບສະນີ້ແລ້ວ ຍັງມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເຂົ້າຮ່ວມ ແລະ ໃຫ້ການຮ່ວມມືກັບອົງການປົກຄອງຂັ້ນເມືອງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນໃຫ້ສຳເລັດຕາມແຜນການ ແລະ ຄາດໝາຍ;

2. ສະໜອງຂໍ້ມູນທີ່ດິນທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນບ້ານຂອງຕົນ ໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອສັງລວມລາຍງານໃຫ້ອົງການປົກຄອງຂັ້ນເມືອງ;

3. ປຸກລະດົມໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນໃນບ້ານຂອງຕົນເຂົ້າໃຈ ທັງປະກອບສ່ວນ ແລະ ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ ພ້ອມທັງປະຕິບັດ ຫຼື ເສຍພັນທະຂອງຕົນ ກ່ຽວກັບການນຳໃຊ້ທີ່ດິນ ຕາມກົດໝາຍ.

ສະນັ້ນ ກົນໄກການແກ້ໄຂຄຳຮ້ອງທຸກ ຈຶ່ງອີງຕາມ ມາດຕາ **19** (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄຳສະ ເ ໜີຂອງ ອົງການປົກຄອງຂັ້ນເມືອງ (ກົດໝາຍ ແກ້ໄຂຄຳຮ້ອງທຸກ ປີ 2022).

ຄຳສະເໜີທີ່ ອົງການປົກຄອງຂັ້ນເມືອງ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

**5.** ຄຳສະເໜີໃຫ້ກວດກາ ການຕົກລົງ ຂອງ ອົງການປົກຄອງບ້ານ;
**6.** ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນເມືອງ; ການກະທຳ, ຄວາມຮັບຜິດຊອບ ຂອງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງ ຕົນ;
**7.** ຄຳສະເໜີໃຫ້ກວດກາ ການກະທຳ ຂອງ ບຸກຄົນ ຫຼື ການຕົກລົງ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
**8.** ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ຂັ້ນເມືອງ ໃຫ້ນຳ ສົ່ງ ອົງການກວດກາລັດຂັ້ນເມືອງ ກວດກາ ຕາມກົດໝາຍ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ອົງການປົກຄອງຂັ້ນເມືອງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດສະເໜີ ຕໍ່ ອົງການ ປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ (ຄະນະສານປົກຄອງ) ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ກວດກາ ແລະ ພິຈາລະນາ.

## ກໍລະນີສຶກສາທີ 02

ໃນປີ 2023 ບໍລິສັດ B ໄດ້ສຳປະທານທີ່ດິນຈາກລັດ ເພື່ອຂຸດຄົ້ນແຮ່ທາດ ໂດຍຖືກຕ້ອງຕາມກົດໝາຍ ພາຍຫຼັງດຳເນີນກິດຈະການ ການຂຸດຄົ້ນແລ້ວ ຕົກມາຮອດ ເດືອນ ກຸມພາ ປີ 2024 ໄດ້ເກີດເຫດມີປາຕາຍຕາມບໍລິເວນແມ່ນໍ້າ ແລະ ສັດລ້ຽງ ງົວ, ຄວາຍ ຂອງປະຊາຊົນທີ່ໄປກິນນໍ້າຫ້ວຍນັ້ນກໍ່ລົ້ມຕາຍເປັນຈຳນວນຫຼາຍ ສາເຫດແມ່ນເກີດມາຈາກ ອ່າງບຳບັດນໍ້າເປື້ອນຂອງ ບໍລິສັດ B ທີ່ທຳການຂຸດຄົ້ນແຫ່ທາດຣົ່ວຊືມ ແຕກຫັກ ຈຶ່ງເຮັດໃຫ້ນໍ້າເປື້ອນໄຫຼລົງສູ່ຫ້ວຍຮ່ອງ ແລ້ວເກີດມີປາ ຫລື ສັດອື່ນໆຕາຍ ເມື່ອເກີດເຫດການແບບນັ້ນຂຶ້ນແລ້ວ ປະຊາຊົນໃນເຂດທ້ອງຖິ່ນດັ່ງກ່າວ ຈຶ່ງໄດ້ເຂົ້າໄປໂອ້ລົມປຶກສາຫາລືເພື່ອຂໍໃຫ້ ບໍລິສັດ B ແກ້ໄຂ ແລະ ຈ່າຍຄ່າເສຍຫາຍໃຫ້ແກ່ປະຊາຊົນເຈົ້າຂອງ ງົວ, ຄວາຍ ທີ່ຕາຍໄປນັ້ນ ແຕ່ທາງ ບໍລິສັດ B ຍັງມິດງຽບບໍ່ຍອມແກ້ໄຂບັນຫາທີ່ເກີດຂຶ້ນຕາມການສະເໜີຂອງປະຊາຊົນເທື່ອ.

## ຄຳຕອບ ກໍລະນີສຶກສາ 02

ມາດຕາ **19** (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ອົງການປົກຄອງຂັ້ນເມືອງ

ຄຳສະເໜີທີ່ ອົງການປົກຄອງຂັ້ນເມືອງ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:

5. ຄຳສະເໜີໃຫ້ກວດກາ ການຕົກລົງ ຂອງ ອົງການປົກຄອງບ້ານ;
6. ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນເມືອງ, ການກະທຳ, ຄວາມຮັບຜິດ ຊອບ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງ ຕົນ;
7. ຄຳສະເໜີໃຫ້ກວດກາ ການກະທຳ ຂອງ ບຸກຄົນ ຫຼື ການຕົກລົງ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
8. ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ຂັ້ນເມືອງ ໃຫ້ນຳ ສົ່ງ ອົງການກວດກາລັດຂັ້ນເມືອງ ກວດກາ ຕາມກົດໝາຍ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງ ອົງການປົກຄອງຂັ້ນເມືອງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດສະເໜີ ຕໍ່ ອົງການ ປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ ຄະນະປະ ຈຳສະພາປະຊາຊົນຂັ້ນແຂວງ ກວດກາ ແລະ ພິຈາລະນາ

**ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 389/ລບ, ລົງວັນທີ 20 ຕຸລາ 2022**

ມາດຕາ 59 ສິດຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ມີສິດ ດັ່ງນີ້:

8. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມ ຈາກ ໂຄງການລົງທຶນ ຫຼື ກິດຈະການຕ່າງໆ;
9. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນພູມລຳເນົາ ແລະ ອາຊີບ ຕາມກົດໝາຍ, ລະບຽບ ການ ແລະ ມີຄວາມບຸຕິທຳ;
10. ໄດ້ຮັບການປົກປ້ອງດ້ານສຸຂະພາບ, ກວດສຸຂະພາບ, ໄດ້ຮັບການປິ່ນປົວ ແລະ ການຟື້ນຟູສຸຂະ ພາບ ຕາມແຕ່ລະກໍລະນີ;

11. ໄດ້ຮັບການສົ່ງເສີມ ແລະ ປົກປ້ອງທາງດ້ານວັດທະນະທຳ, ສາສະໜາ, ຮີດຄອງປະເພນີ ແລະ ຄວາມເຊື່ອຖື ລວມທັງການສົ່ງເສີມທາງດ້ານບົດບາດຍິງ-ຊາຍ;
12. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືໃນຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
13. ສະເໜີຕໍ່ເຈົ້າຂອງໂຄງການ ຫຼື ກິດຈະການ ຫຼື ຮ້ອງທຸກຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນ ການແກ້ໄຂ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ເຫັນວ່າ ບໍ່ຖືກຕ້ອງ ແລະ ບໍ່ເປັນທຳ,
14. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການ.

## ເອກະສານຊ້ອນທ້າຍທີ 2: ບັນດານິຕິກຳທີ່ນຳໃຊ້ປະກອບເຂົ້າໃນຄູ່ມື

**1. ລັດຖະທຳມະນູນ ແຫ່ງ ສ ປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015.**

ລັດຖະທຳມະນູນ ແມ່ນກົດໝາຍພື້ນຖານຂອງລັດ ຫຼື ກົດໝາຍແມ່ ທີ່ກຳນົດລະບອບການເມືອງ, ເສດຖະກິດ ແລະ ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສິດ ແລະ ພັນທະພື້ນຖານ ຂອງ ພົນລະເມືອງ, ການຈັດຕັ້ງລະບົບອຳນາດແຫ່ງລັດ ແລະ ອື່ນໆ, ອີງໃສ່ ລັດຖະທຳມະນູນ ຈະຜັນຂະ ຫຍາຍເປັນ ກົດໝາຍ ໃນຂົງເຂດ ແລະ ຂະແໜງການຕ່າງໆ.

**ມາດຕາ 10 (ປັບປຸງ)**

ລັດ ປົກຄອງ ແລະ ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ.

ອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງ ສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 34 (ປັບປຸງ)**

ພົນລະເມືອງລາວ ແມ່ນ ຜູ້ມີສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ລັດຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນສິດທິມະນຸດ ແລະ ສິດທິພື້ນຖານຂອງພົນລະ ເມືອງ ຕາມກົດໝາຍ.

**ມາດຕາ 35**

ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມ ເຊື່ອ ຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 36 (ປັບປຸງ)**

ພົນລະເມືອງລາວ ຜູ້ມີອາຍຸແຕ່ສິບແປດປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ມີອາຍຸແຕ່ ຊາວ ເອັດ ປີຂຶ້ນໄປ ມີສິດສະໝັກຮັບເລືອກຕັ້ງ ເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະ ຜູ້ຖືກສານ ຕັດສິນ ລົງໂທດ ຕັດອິດ ສະລະພາບ, ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

**ມາດຕາ 37**

ພົນລະເມືອງລາວ ຍິງຊາຍມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.

**ມາດຕາ 38 (ປັບປຸງ)**

ພົນລະເມືອງລາວ ມີສິດໄດ້ຮັບການ ສຶກສາ ຄົ້ນຄວ້າ, ຮ່ຳຮຽນ ເພື່ອພັດທະນາຕົນເອງ ໃຫ້ມີ ຄວາມ ກ້າວໜ້າ.

**ມາດຕາ 39**

ພົນລະເມືອງລາວ ມີສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ.

ຜູ້ອອກແຮງງານ ມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບ ການ ຊ່ວຍເຫຼືອ ໃນກໍລະນີ ໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40**

ພົນລະເມືອງລາວ ມີສິດເສລີພາບໃນການຕັ້ງພູມລໍາເນົາ ແລະ ໃນການໄປມາຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ.

**ມາດຕາ 41 (ປັບປຸງ)**

ພົນລະເມືອງລາວ ມີສິດສະເໜີ, ຮ້ອງຟ້ອງ ແລະ ຮ້ອງຂໍຄວາມເປັນທໍາ ຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.

ຄໍາສະເໜີ, ຄໍາຮ້ອງຟ້ອງ ແລະ ຄໍາຮ້ອງຂໍຄວາມເປັນທໍາຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາ ລະນາ ແລະ ແກ້ໄຂ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 (ປັບປຸງ)**

ພົນລະເມືອງລາວ ມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຊີວິດ, ຮ່າງກາຍ, ກຽດສັກສີ ແລະ ເຄຫະສະຖານ,

ພົນລະເມືອງລາວ ຈະບໍ່ຖືກ ຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ຖ້າຫາກບໍ່ມີຄໍາສັ່ງ ຂອງອົງການໄອຍະການ ຫຼື ສານ ປະຊາຊົນ ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 43 (ປັບປຸງ)**

ພົນລະເມືອງລາວ ມີສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 44**

ພົນລະເມືອງລາວ ມີສິດເສລີພາບໃນການປາກເວົ້າ, ສິດຂຽນ, ໂຮມຊຸມນຸມ, ຈັດຕັ້ງສະມາຄົມ ແລະ ເດີນຂະບວນ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 45 (ປັບປຸງ)**

ພົນລະເມືອງລາວ ມີສິດເສລີພາບໃນການຄົ້ນຄວ້າ ແລະ ນໍາໃຊ້ຄວາມກ້າວໜ້າທາງດ້ານ ວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກໍາ, ປະດິດສ້າງສິນລະປະວັນນະຄະດີ ແລະ ເຄື່ອນໄຫວ ວັດທະນະທໍາ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 47 (ປັບປຸງ)**

ພົນລະເມືອງລາວ ມີພັນທະເຄົາລົບ ແລະ ປະຕິບັດລັດຖະທໍາມູນ, ກົດໝາຍ, ປະຕິບັດລະບຽບ ການອອກແຮງງານ, ລະບຽບການດໍາລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢ່າງ ເຂັ້ມງວດ.

**ມາດຕາ 48**

ພົນລະເມືອງລາວ ມີພັນທະເສຍພາສີ ແລະ ອາກອນ ຕາມກົດໝາຍ.

**ມາດຕາ 49**

ພົນລະເມືອງລາວ ມີພັນທະປົກປັກຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມກົດໝາຍ.

**2. ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019.**

**ມາດຕາ 2 (ປັບປຸງ) ທີ່ດິນ**

ທີ່ດິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເນື້ອທີ່ດິນ ຊຶ່ງນອນຢູ່ໃນເຂດແດນຂອງ ສປປ ລາວ ປະກອບດ້ວຍ ໜ້າດິນ, ພື້ນດິນ, ພູຜາ, ເກາະດອນ ແລະ ດິນພື້ນນ້ຳ.

ທີ່ດິນ ແມ່ນ ຊັບພະຍາກອນອັນລ້ຳຄ່າ ແລະ ທຶນຮອນອັນມະຫາສານຂອງຊາດ ທີ່ເປັນບ່ອນ ດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນ ແລະ ປັດໄຈຕົ້ນຕໍຂອງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 3 (ປັບປຸງ) ກຳມະສິດກ່ຽວກັບທີ່ດິນ**

ທີ່ດິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນກຳມະສິດຂອງວົງຄະນະຍາດ ແຫ່ງຊາດ ຊຶ່ງລັດເປັນຕົວແທນເຈົ້າກຳມະສິດດັ່ງກ່າວ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບ ໃນຂອບ ເຂດທົ່ວປະເທດ ໂດຍມີການຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາທີ່ດິນ.

ລັດ ມອບສິດນຳໃຊ້ທີ່ດິນໃຫ້ພົນລະເມືອງລາວ, ລວມທັງ ນິຕິບຸກຄົນ, ລວມໝູ່ ແລະ ການຈັດ ຕັ້ງທີ່ເປັນພົນລະເມືອງລາວ ນຳໃຊ້ຢ່າງຍາວນານ ແລະ ໝັ້ນຄົງ.

**ມາດຕາ 44 (ໃໝ່) ການນຳໃຊ້ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ສາມາດນຳໃຊ້ເພື່ອສາທາລະນະປະໂຫຍດ, ຄອບຄົວ ແລະ ທຸລະກິດ ໂດຍບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຄຸນນະພາບຂອງດິນ, ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ.

ລັດ ຮັບຮູ້ການນຳໃຊ້ທີ່ດິນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນຄືນໃໝ່ໃນເຂດທີ່ດິນປ່າໄມ້ ແລ້ວອອກໃບຢັ້ງຢືນການນຳໃຊ້ທີ່ດິນໃຫ້ຕາມກົດໝາຍ ພ້ອມທັງໃຫ້ປະຊາຊົນໃນເຂດດັ່ງກ່າວມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 81 (ໃໝ່) ການນຳໃຊ້ທີ່ດິນຂອງລັດ ເພື່ອເປົ້າໝາຍລວມໝູ່**

ການນຳໃຊ້ທີ່ດິນຂອງລັດເພື່ອເປົ້າໝາຍລວມໝູ່ ແມ່ນການມອບສິດນຳໃຊ້ທີ່ດິນຂອງລັດ ໃຫ້ປະຊາຊົນພາຍໃນບ້ານ ຫຼື ຫຼາຍບ້ານໃຊ້ຮ່ວມກັນຕາມແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ແລະ ກົດໝາຍ ເປັນຕົ້ນ ທີ່ດິນປ່າຊ້າ, ປ່າສັກສິດ, ໜອງລວມບ້ານ, ວັດ, ໂຮງຮຽນ, ສຸກສາລາ, ຫ້ອງການປົກຄອງບ້ານ, ຕະຫຼາດຂອງບ້ານ.

ສິດນຳໃຊ້ທີ່ດິນຂອງລັດເພື່ອເປົ້າໝາຍລວມໝູ່ ປະກອບມີ ສິດປົກປັກຮັກສາ, ຊົມໃຊ້ທີ່ດິນເພື່ອ ຜົນປະໂຫຍດລວມຂອງປະຊາຊົນພາຍໃນບ້ານ ຫຼື ຫຼາຍບ້ານ ແຕ່ບໍ່ມີສິດມອບ, ໂອນ, ຂາຍ, ແລກປ່ຽນ, ໃຫ້ເຊົ່າ, ໃຫ້ສຳປະທານ, ເອົາໄປເປັນຮຸ້ນ, ນຳໄປຄ້ຳປະກັນ ແຕ່ຢ່າງໃດ.

**ມາດຕາ 94 (ປັບປຸງ) ວັກໜຶ່ງ ການຂຶ້ນທະບຽນອອກໃບຕາດິນ**

ການຂຶ້ນທະບຽນອອກໃບຕາດິນ ແມ່ນ ການອອກໃບຕາດິນຄັ້ງທຳອິດເພື່ອຢັ້ງຢືນສິດນຳໃຊ້ທີ່ດິນປະເພດຕ່າງໆຢ່າງຖືກຕ້ອງຕາມກົດໝາຍໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອອຳນວຍຄວາມສະດວກແກ່ການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 100 (ປັບປຸງ) ເອກະສານປະກອບການຂຶ້ນທະບຽນອອກໃບຕາດິນ**

ການຂຶ້ນທະບຽນອອກໃບຕາດິນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຢັ້ງຢືນກ່ຽວກັບການໄດ້ມາຂອງສິດນຳໃຊ້ທີ່ດິນ ເປັນຕົ້ນ ການມອບຂອງລັດ, ສັນຍາມອບໂອນ ,ຍົກຊັບ , ຊື້ ຂາຍ, ການສືບທອດມູນມໍຣະດົກ ,ໃບແຜນທີ່ດິນ ,ໃບຢັ້ງຢືນການພັດທະນາທີ່ດິນ ,ໃບຮັບປະກັນທີ່ດິນ;
2. ສຳເນົາບັດປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ ,ຖ້າແມ່ນນິຕິບຸກຄົນ ຫຼື ການຈັດຕັ້ງສັງ ຄົມ ຕ້ອງມີສຳເນົາໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດສ້າງຕັ້ງອົງການຈັດ ຕັ້ງສັງຄົມ
3. ໃບແຈ້ງເສຍຄ່າທຳນຽມນຳໃຊ້ທີ່ດິນ;

**ມາດຕາ 101 (ປັບປຸງ) ຂັ້ນຕອນການຂຶ້ນທະບຽນອອກໃບຕາດິນ**

ການຂຶ້ນທະບຽນອອກໃບຕາດິນ ໃຫ້ດຳເນີນຜ່ານໜ່ວຍງານບໍລິການປະຕູດຽວ ຂອງຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານທີ່ ກ່ຽວຂ້ອງ ດຳເນີນການສອບຖາມ ແລະ ເກັບກຳຂໍ້ມູນການໄດ້ມາຂອງສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ , ສຳຫຼວດວັດແທກ ໂດຍມີການເຂົ້າຮ່ວມ ແລະ ຢັ້ງຢືນຂອງເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ພ້ອມທັງສ້າງ ແຜນທີ່ດິນສະເພາະຕອນ ແລະ ປະກອບສຳນວນເອກະສານການຂຶ້ນທະບຽນອອກໃບຕາດິນ ໃຫ້ສຳເລັດ ພາຍໃນເວລາ ສິບຫ້າວັນ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ອອກແຈ້ງການຜ່ານສື່ມວນຊົນ ແລະ ຕິດປະກາດຫາຜູ້ຄັດຄ້ານ ຢູ່ຫ້ອງການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່. ກຳນົດເວລາຂອງແຈ້ງການັ້ນ ແມ່ນ ສາມສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຕ້ອງຂຶ້ນທະບຽນອອກໃບຕາດິນ ພາຍ ໃນເວລາ ຫ້າວັນ ລັດຖະການ ຫຼັງຈາກສິ້ນສຸດກຳນົດເວລາດັ່ງກ່າວ ຫາກບໍ່ມີຜູ້ຄັດຄ້ານ ຫຼື ມີການຄັດຄ້ານ ແຕ່ໄດ້ຮັບການແກ້ໄຂແລ້ວ;
4. ໃນກໍລະນີທີ່ຕອນດິນໃດໜຶ່ງ ຫາກມີຜູ້ຄັດຄ້ານ, ມີຂໍ້ຂັດແຍ່ງ ຫຼື ຕົກຄ້າງດ້ວຍເຫດ ຜົນໃດໜຶ່ງ ຕ້ອງໄດ້ ຮັບການແກ້ໄຂໃຫ້ສຳເລັດ ຈາກນັ້ນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມຂັ້ນເມືອງ ຈຶ່ງຂຶ້ນທະບຽນອອກໃບຕາດິນຕອນດັ່ງກ່າວ.

ພາຍຫຼັງສຳເລັດການຂຶ້ນທະບຽນອອກໃບຕາດິນແຕ່ລະຕອນແລ້ວ ໃຫ້ລາຍງານຕໍ່ອົງການປົກຄອງ ຂັ້ນເມືອງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ບ່ອນທີ່ດິນຕັ້ງຢູ່. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ອອກລະບຽບການກ່ຽວກັບການຂຶ້ນ ທະບຽນອອກໃບຕາດິນ.

**ມາດຕາ 123 (ໃໝ່) ການຊື້ ຂາຍ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ (ວັກ 1)**

ການຊື້ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແມ່ນ ການຊື້ ຂາຍ ສິດນຳໃຊ້ທີ່ດິນດັ່ງກ່າວ ລະຫວ່າງລັດກັບພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ ເປັນເຊື້ອຊາດລາວ ເພື່ອພັດທະນາເປັນຕົວເມືອງໃໝ່, ສ້າງເປັນຄອນໂດມິນຽມ, ອາພາດເມັນ, ເຮືອນຈັດສັນ ໂດຍມີກຳນົດເວລາບໍ່ເກີນ ຫ້າສິບປີ ນັບແຕ່ວັນເຊັນສັນຍາຊື້ ຂາຍສິດນຳໃຊ້ທີ່ດິນນັ້ນ ເປັນຕົ້ນໄປ ແລະ ສາມາດ ຊື້ຕໍ່ສິດນຳໃຊ້ທີ່ດິນດັ່ງກ່າວ ຕາມການຕົກລົງຂອງອົງການລັດທີ່ກ່ຽວຂ້ອງ. ສຳລັບສິ່ງປຸກສ້າງທີ່ຕັ້ງຢູ່ທີ່ດິນດັ່ງກ່າວ ນັ້ນ ສາມາດໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ຊື້ ຫຼື ເຊົ່າ ໄດ້.

**ມາດຕາ 126 (ປັບປຸງ) ການໄດ້ຮັບສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ**

ພົນລະເມືອງລາວ ລວມທັງ ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນພົນລະເມືອງລາວ ຈະໄດ້ຮັບ ສິດນຳໃຊ້ທີ່ດິນບົນພື້ນຖານໃດໜຶ່ງ ດັ່ງນີ້:

1. ການມອບຂອງລັດ;
2. ການໂອນ;
3. ການສືບທອດມູນມໍຣະດົກ;
4. ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ;
5. ການຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 123 ຂອງ ກົດໝາຍສະບັບນີ້.

**ມາດຕາ 127 (ປັບປຸງ) ການມອບຂອງລັດ**

ການມອບຂອງລັດ ແມ່ນ ການທີ່ລັດໄດ້ເອົາທີ່ດິນຂອງລັດໃຫ້ເປັນສິດນຳໃຊ້ທີ່ດິນຂອງພົນລະ ເມືອງລາວ ລວມທັງນິຕິບຸກຄົນ ແລະ ການຈັດຕັ້ງທີ່ເປັນພົນລະເມືອງລາວ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມແຜນແມ່ບົດຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນຂອງລັດທີ່ໄດ້ກຳນົດໄວ້ໃນກົດໝາຍລວມທັງສິດນຳໃຊ້ທີ່ດິນຕາມປະເພນີ.

ການມອບຂອງລັດ ມີ ສອງລັກສະນະດັ່ງນີ້:

1. ການມອບຂາດຕົວ ແມ່ນການມອບສິດນຳໃຊ້ທີ່ດິນໃນກໍລະນີການທົດແທນຈາກການໂອນສິດນຳໃຊ້ທີ່ດິນຄືນ, ການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ, ການປະຕິບັດນະໂຍບາຍທັນສິດນຳໃຊ້ທີ່ດິນຂອງລັດ ແລະ ອື່ນໆ ຊຶ່ງຜູ້ໄດ້ຮັບສິດນັ້ນ ມີ ສິດປົກປັກຮັກສາ, ສິດຊົມໃຊ້, ສິດໄດ້ຮັບໝາກຜົນ, ສິດໂອນ ແລະ ສິດສືບທອດສິດນຳໃຊ້ທີ່ດິນ;
2. ການມອບແບບບໍ່ຂາດຕົວ ແມ່ນການມອບສິດນຳໃຊ້ທີ່ດິນ ໃນກໍລະນີການຈັດສັນທີ່ຢູ່ອາໄສ, ທຳມາຫາກິນ, ການປະຕິບັດນະໂຍບາຍໃຫ້ນຳໃຊ້ທີ່ດິນຂອງລັດ ແລະ ອື່ນໆ ຊຶ່ງຜູ້ໄດ້ຮັບສິດຈະມີສິດຄືກັນກັບຂໍ້ 1 ຂອງມາດຕານີ້, ຍົກເວັ້ນສິດໂອນສິດນຳໃຊ້ທີ່ດິນ ແລະ ສິດໄດ້ຮັບຜົນປະໂຫຍດບາງກໍລະນີ ເປັນຕົ້ນໃຫ້ເຊົ່າ, ຄ້ຳປະກັນ.

ລັດ ຮັບຮູ້ການມອບສິດນຳໃຊ້ທີ່ດິນລັດຂອງລັດ ໃຫ້ບຸກຄົນຜູ້ມີຜົນງານໃນພາລະກິດປະຕິວັດ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ ເພື່ອເປັນບ່ອນຢູ່ອາໄສ ແລະ ທັນສິດນຳໃຊ້ທີ່ດິນດັ່ງກ່າວເປັນສິດນຳໃຊ້ທີ່ດິນຂອງຜູ້ກ່ຽວ ຕາມກົດໝາຍ.

**ມາດຕາ 128 (ໃໝ່) ການໂອນ**

ການໂອນແມ່ນ ການປ່ຽນແປງສິດນຳໃຊ້ທີ່ດິນດ້ວຍການຊື້ ຂາຍ, ແລກປ່ຽນ, ມອບ ຫຼື ຍົກສິດ ນຳໃຊ້ທີ່ດິນ ຫຼື ເຂົ້າເປັນຮຸ້ນ.

**ມາດຕາ 129 (ໃໝ່) ການສືບທອດມູນມໍຣະດົກ**

ການສືບທອດມູນມໍຣະດົກ ແມ່ນການຕົກທອດສິດນຳໃຊ້ທີ່ດິນໃຫ້ຜູ້ທີ່ມີສິດສືບທອດ ຕາມກົດໝາຍ ແລະ ຕາມພິໄນກຳ

ຜູ້ມີສິດສືບທອດສິດນຳໃຊ້ທີ່ດິນ ມີແຕ່ພົນລະເມືອງລາວ ທີ່ມີທີ່ຢູ່ຖາວອນໃນ ສປປ ລາວເທົ່ານັ້ນ.

ໃນກໍລະນີຜູ້ມີສິດສືບທອດສິດນຳໃຊ້ທີ່ດິນ ຫາກອາຍຸບໍ່ທັນພົ້ນກະສຽນ ສິບແປດປີ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນໃຫ້ໃສ່ຊື່ຜູ້ກ່ຽວໄວ້ໃນໃບຕາດິນ ແຕ່ຕ້ອງໄດ້ແຕ່ງຕັ້ງຜູ້ຄຸ້ມຄອງສິດນຳໃຊ້ທີ່ດິນຕອນນັ້ນ ເພື່ອຮັບປະກັນຜົນປະໂຫຍດຂອງຜູ້ສືບທອດມູນມໍຣະດົກຕາມທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ.

**ມາດຕາ 130 (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ**

ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນ ການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນຢ່າງ ເປັນປົກກະຕິ ເປັນເວລາຫຼາຍກວ່າ ຊາວປີ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ໂດຍບໍ່ມີເອກະສານ ໃດຢັ້ງຢືນການໄດ້ມາທີ່ດິນນັ້ນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍໄດ້ຮັບການແກ້ໄຂແລ້ວ.

ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ ລັດ ຮັບຮູ້ ແລະ ປົກປ້ອງ ສິດນຳໃຊ້ທີ່ດິນຕາມປະເພນີຂອງຜູ້ກ່ຽວ ແລະ ດຳເນີນການຂຶ້ນທະບຽນອອກໃບຕາດິນໃຫ້ຕາມກົດໝາຍ.

ສຳລັບຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດນັ້ນ ຈະໄດ້ຮັບສິດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 131 ຂອງກົດໝາຍສະບັບນີ້.

**ມາດຕາ 134 (ປັບປຸງ) ສິດປົກປັກຮັກສາທີ່ດິນ**

ສິດປົກປັກຮັກສາທີ່ດິນ ແມ່ນ ສິດໃນການຄຸ້ມຄອງ, ຮັກສາທີ່ດິນ ເພື່ອໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງທີ່ແນ່ນອນ.

**ມາດຕາ 135 (ປັບປຸງ) ສິດຊົມໃຊ້ທີ່ດິນ**

ສິດຊົມໃຊ້ທີ່ດິນ ແມ່ນ ສິດໃນການນຳໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນຕາມການຈັດສັນທີ່ດິນຂອງລັດ ແລະ ກົດໝາຍໂດຍບໍ່ໃຫ້ມີຜົນ ກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

**ມາດຕາ 136 (ປັບປຸງ) ສິດໄດ້ຮັບໝາກຜົນຈາກທີ່ດິນ**

ສິດໄດ້ຮັບໝາກຜົນຈາກທີ່ດິນ ແມ່ນ ສິດເກັບກູ້ໝາກຜົນ ຫຼື ລາຍໄດ້ຈາກທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ນັ້ນ ເປັນຕົ້ນ ຜົນຜະລິດ, ຄ່າເຊົ່າ, ການຄ້ຳປະກັນ.

**ມາດຕາ 137 (ປັບປຸງ) ສິດໂອນສິດນຳໃຊ້ທີ່ດິນ**

ສິດໂອນສິດນຳໃຊ້ທີ່ດິນ ແມ່ນ ສິດໃນການເອົາສິດນຳໃຊ້ທີ່ດິນໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກ ຫຼື ແລກປ່ຽນສິດນຳໃຊ້ທີ່ດິນ, ການເອົາເຂົ້າໄປເປັນຮຸ້ນ.

**ມາດຕາ 138 (ປັບປຸງ) ສິດສືບທອດສິດນຳໃຊ້ທີ່ດິນ**

ສິດສືບທອດສິດນຳໃຊ້ທີ່ດິນ ແມ່ນ ສິດໄດ້ຮັບສິດນຳໃຊ້ທີ່ດິນຂອງເຈົ້າມູນມໍຣະດົກທີ່ໄດ້ເສຍຊີວິດຊຶ່ງຕົກທອດມາຍັງຜູ້ມີສິດສືບທອດ ຕາມກົດໝາຍ ຫຼື ພິໄນກຳ.

**ມາດຕາ 139 (ໃໝ່) ການເອົາສິດນຳໃຊ້ທີ່ດິນເຂົ້າເປັນຮຸ້ນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນພົນລະເມືອງລາວສາມາດເອົາສິດນຳໃຊ້ທີ່ດິນຂອງຕົນເຂົ້າເປັນຮຸ້ນຮ່ວມທຶນກັບວິສາຫະກິດຂອງຄົນລາວ ຫຼື ຄົນຕ່າງປະເທດ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ດ້ວຍການປະເມີນມູນຄ່າທີ່ດິນ ແລະ ຈົດທະບຽນປ່ຽນແປງສິດນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 105 ຂອງກົດໝາຍສະບັບນີ້. ສ່ວນສິດນາໃຊ້ທີ່ດິນທີ່ໄດ້ມາຈາກການຊື້ຂາຍສິດນາໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດນັ້ນ ສາມາດເອົາເຂົ້າເປັນຮຸ້ນຮ່ວມທຶນກັບວິສາຫະກິດຂອງຄົນລາວ ຫຼື ຄົນຕ່າງປະເທດໄດ້ເໝືອນກັນ.

ຂັ້ນຕອນ, ວິທີການ ແລະ ການແກ້ໄຂບັນຫາການເອົາສິດນຳໃຊ້ທີ່ດິນ ເຂົ້າເປັນຮຸ້ນຮ່ວມທຶນກັບວິສາຫະກິດຂອງຄົນລາວ ແລະ ຄົນຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ ໃນວັກໜຶ່ງຂອງມາດຕານີ້ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 142 (ໃໝ່) ທາດສະພາບ**

ທາດສະພາບ ແມ່ນ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ຊຶ່ງເກີດຂຶ້ນຈາກທຳມະຊາດ ແລະ ຖືກກຳນົດໃນກົດໝາຍ, ສັນຍາ ຫຼື ນິຕິກຳອື່ນ.

ທາດສະພາບ ຕາມທຳມະຊາດ ແລະ ກົດໝາຍ ແມ່ນການນຳໃຊ້ ຫຼື ການໃຊ້ທີ່ດິນຂອງບຸກ ຄົນອື່ນ ເພື່ອເພີ່ມປະໂຫຍດໃຫ້ແກ່ທີ່ດິນຂອງຕົນ ໃນການຂໍອະນຸຍາດໃຫ້ມີທາງຜ່ານ, ການເບິ່ງ ຫຼື ວາງທີ່ສາຍ ໄຟຟ້າຜ່ານ ແລະ ໃຫ້ນ້ຳຂອງໄຫຼຜ່ານ,

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ແມ່ນການນຳໃຊ້ ຫຼື ການໃຊ້ທີ່ດິນຂອງບຸກຄົນອື່ນ ເພື່ອເພີ່ມປະໂຫຍດໃຫ້ແກ່ທີ່ດິນຂອງຕົນ ຕາມຈຸດປະສົງ ທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ນິຕິກຳອື່ນ ທາດສະພາບດັ່ງກ່າວ ໄດ້ມານັບແຕ່ເວລາທີ່ໄດ້ຈົດທະບຽນທາດສະພາບຢ່າງຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນປະມວນ ກົດໝາຍແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ການຈົດທະບຽນທາດສະພາບ ແລະ ສິດເໜືອທີ່ດິນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປ່ງສິດນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 104 ແລະ 105 ຂອງກົດໝາຍສະບັບນີ້,

**ມາດຕາ 143 (ປັບປຸງ) ການອະນຸຍາດໃຫ້ມີທາງ, ເບັ່ງສາຍໄຟຟ້າຜ່ານ ແລະ ນ້ຳຮ່ອງໄຫຼຜ່ານ**

ບຸກຄົນໃດທີ່ມີເຮືອນ ຊຶ່ງຖືກປິດລ້ອມດ້ວຍເຮືອນ ຫຼື ທີ່ດິນ ຊຶ່ງຜູ້ອື່ນມີສິດນຳໃຊ້ ໂດຍບໍ່ມີທາງ ຜ່ານອອກໄປສູ່ຫົນທາງໄດ້ ບຸກຄົນນັ້ນກໍມີສິດຮ້ອງຂໍທາງຜ່ານຈາກຜູ້ທີ່ມີສິດນຳໃຊ້ທີ່ດິນ ທີ່ຢູ່ໃກ້ຫົນທາງ ກວ່າໝູ່, ຜູ້ມີສິດນຳໃຊ້ທີ່ດິນທີ່ຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານ ແຕ່ມີສິດຮ້ອງຂໍເອົາການໃຊ້ ແທນຄ່າເສຍຫາຍແກ່ຜົນລະປູກ ຫຼື ສິ່ງທີ່ກໍ່ສ້າງ ຈາກການນຳໃຊ້ທີ່ດິນເປັນທາງຜ່ານນັ້ນ ຕາມຄວາມ ເໝາະສົມ.

ໃນກໍລະນີທີ່ມີການເບັ່ງ ຫຼື ວາງທໍ່, ສາຍໄຟຟ້າ, ສາຍໂທລະສັບ, ຂຸດຮ່ອງ ຫຼື ວາງທໍ່ລະບາຍນ້ຳ, ທໍ່ນ້ຳປະປາຜ່ານທີ່ດິນຂອງຜູ້ມີສິດນຳໃຊ້ ຊຶ່ງພາໃຫ້ຕົ້ນໄມ້ ຫຼື ຜົນລະປູກຂອງຜູ້ກ່ຽວ ຖືກທຳລາຍ ຫຼື ພາໃຫ້ມີຄວາມເສຍຫາຍແລ້ວ ບຸກຄົນນັ້ນ ກໍອາດຂໍເອົາຄ່າເສຍຫາຍທີ່ເນື່ອງມາຈາກການກະທຳນັ້ນໄດ້. ຖ້າວ່າ ຜູ້ມີສິດນຳໃຊ້ທີ່ດິນຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍບໍ່ໃຫ້ຄິດໄລ່ຄ່າເສຍຫາຍນັ້ນອີກ.

ບຸກຄົນໃດທີ່ມີຄວາມຈຳເປັນ ໃນການເປັ່ງນ້ຳອອກຈາກທີ່ດິນບ່ອນຕົນຢູ່ ກໍມີສິດຮ້ອງຂໍຂຸດຮ່ອງເປັ່ງນ້ຳຜ່ານທີ່ດິນຂອງຜູ້ຢູ່ລຸ່ມຖັດຕົນ ຫຼື ຜູ້ຢູ່ໃກ້ຄອງນ້ຳ. ຜູ້ຖືກຮ້ອງຂໍ ກໍຕ້ອງອະນຸຍາດໃຫ້ຂຸດຮ່ອງ ເປັ່ງນ້ຳ

ແຕ່ມີສິດຮ້ອງຂໍເອົາຄ່າເສຍຫາຍແກ່ພືນລະປູກ ຫຼື ສິ່ງປຸກສ້າງຈາກການຂຸດຮອງເປັ່ງນໍ້ານັ້ນ. ຜູ້ຮ້ອງ ຂໍຂຸດຮ່ອງເປັ່ງນໍ້າຕ້ອງຮັກສາອະນາໄມ ແລະ ສະພາບຂອງຮ່ອງນໍ້າໃຫ້ເໝາະສົມ.

**ມາດຕາ 144 (ປັບປຸງ) ການເສຍສິດນຳໃຊ້ທີ່ດິນ**

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ຈະເສຍສິດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ເສຍຄ່າທຳນຽມການນຳໃຊ້ທີ່ດິນຕໍ່ເນື່ອງ ສາມປີ;
2. ບໍ່ມີການພັດທະນາ ຫຼື ບໍ່ທຳການຜະລິດ ໃນປີທີ ສອງ ເປັນຕົ້ນໄປ ນັບແຕ່ວັນໄດ້ຮັບ ສິດນຳ ໃຊ້ທີ່ດິນ ນອກຈາກເສຍຄ່າທຳນຽມການນຳໃຊ້ທີ່ດິນຄົບຖ້ວນແລ້ວ ຍັງຈະຖືກກ່າວເຕືອນ ໂດຍ ແຈ້ງໃຫ້ ຜູ້ກ່ຽວຊາບເປັນລາຍລັກອັກສອນ. ໃນປີທີ ສາມ ຈະຖືກປັບໃໝ ຫ້າສິບ ສ່ວນຮ້ອຍ ຂອງຈຳນວນເງິນທີ່ຕ້ອງເສຍ ຄ່າທຳນຽມການນຳໃຊ້ທີ່ດິນ. ໃນປີທີສີ່ ຈະຖືກປັບ ໃໝ ຮ້ອຍສ່ວນຮ້ອຍຂອງຈຳນວນເງິນທີ່ຕ້ອງເສຍຄ່າທຳນຽມ ການນຳໃຊ້ທີ່ດິນ. ໃນປີທີ ຫ້າ ຈະຖືກປັບໃໝ ຫ້າສ່ວນຮ້ອຍ ຂອງມູນຄ່າທີ່ດິນ ຕາມທີ່ໄດ້ປະເມີນໄວ້ຂອງມູນຄ່າ ທີ່ດິນ ໃນແຕ່ລະທ້ອງຖິ່ນ. ໃນປີທີຫົກ ຫາກຍັງບໍ່ປະຕິບັດ ແມ່ນຈະເສຍສິດນຳໃຊ້ທີ່ດິນ;
3. ບໍ່ເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດຕາມສັນຍາ ຕໍ່ເນື່ອງກັນເປັນເວລາ ສອງປີ;
4. ນຳໃຊ້ທີ່ດິນ ທີ່ລັດມອບໃຫ້ບໍ່ຖືກຕ້ອງຕາມເປົ້າໝາຍ ພາຍຫຼັງໄດ້ມີການແຈ້ງເຕືອນເປັນລາຍ ລັກອັກສອນ;
5. ບໍ່ທວງສິດນຳໃຊ້ທີ່ດິນຂອງຕົນຕາມກຳນົດເວລາຂອງອາຍຸຄວາມໃນການຮ້ອງຟ້ອງ.
6. ຖືກສານຕັດສິນ ໃຫ້ເສຍສິດນຳໃຊ້ທີ່ດິນ;
7. ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 147 ຂອງກົດໝາຍສະບັບນີ້ ແລະ ກໍລະນີອື່ນ.

**ມາດຕາ 145 (ໃໝ່) ການເສຍ ແລະ ຖອນສິດນຳໃຊ້ທີ່ດິນຂອງລັດ**

ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງ ມະຫາຊົນລວມທັງການຈັດຕັ້ງລວມໝູ່ ແລະ ລັດວິສາຫະກິດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຂອງລັດ ຫາກບໍ່ວາງ ແຜນການນຳໃຊ້ທີ່ດິນ, ນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ບໍ່ເສຍຄ່າທຳນຽມການນຳໃຊ້ທີ່ດິນ ພາຍ ໃນເວລາ ສາມປີ ຈະເສຍສິດນຳໃຊ້ທີ່ດິນດັ່ງກ່າວ.

ລັດຖະບານ ຕົກລົງຖອນສິດນຳໃຊ້ທີ່ດິນຂອງລັດຄືນຈາກອົງການຈັດຕັ້ງພັກ, ລັດ, ແນວ ລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ລວມທັງການຈັດຕັ້ງລວມໝູ່ ແລະ ລັດວິ ສາຫະກິດຂັ້ນສູນກາງ ຕາມການສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕົກລົງຖອນສິດນຳໃຊ້ທີ່ດິນຂອງລັດຄືນຈາກອົງການ ຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ລວມທັງການຈັດ ສິ່ງລວມໝູ່ ແລະ ລັດວິສາຫະກິດຂັ້ນທ້ອງຖິ່ນ ຕາມການສະເໜີຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ.

ສຳລັບການຖອນສິດນຳໃຊ້ທີ່ດິນຂອງລັດຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ ການນຳໃຊ້ຕົວຈິງ ຫຼື ນຳໃຊ້ບໍ່ຖືກຕ້ອງຕາມກົດໝາຍ ຫຼື ສັນຍາ, ບໍ່ເສຍຄ່າທຳນຽມການນຳໃຊ້ທີ່ດິນ ເປັນຕົ້ນ ການຂາຍສິດນຳໃຊ້ທີ່ດິນ, ໃຫ້ຜູ້ເຊົ່າ ຫຼື ສຳປະທານ ໂດຍບໍ່ໄດ້ຮັບອະນຸຍາດ, ໃຫ້ຂະແໜງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄວ້າພິຈາລະນາ ສະເໜີລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ພິ ຈາລະນາຖອນ ບົນພື້ນຖານການເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 146 (ໃໝ່) ການຖອນສິດນຳໃຊ້ທີ່ດິນ**

ມີແຕ່ສານເທົ່ານັ້ນ ເປັນຜູ້ພິຈາລະນາຕັດສີນ ໃນການຖອນສິດນຳໃຊ້ທີ່ດິນຕາມກົດໝາຍ, ຍົກ ເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນວັກທີ ສອງ, ວັກທີ ສາມ ແລະ ວັກທີ ສີ່ ຂອງມາດຕາ 145 ຂອງກົດ ໝາຍ ສະບັບນີ້.

**ມາດຕາ 147 (ປັບປຸງ) ການສິ້ນສຸດສິດນຳໃຊ້ທີ່ດິນ**

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ຈະສິ້ນສຸດສິດນຳໃຊ້ທີ່ດິນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະລະສິດນຳໃຊ້ທີ່ດິນ ດ້ວຍຄວາມສະໝັກໃຈ;
2. ໂອນສິດນຳໃຊ້ທີ່ດິນຄືນ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດ ຫຼື ໂຄງການພັດທະນາຂອງ ລັດ;
3. ຖືກຖອນສິດນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 145 ແລະ 146 ຂອງກົດໝາຍສະບັບ ນີ້;
4. ໂອນສິດນຳໃຊ້ທີ່ດິນໃຫ້ຜູ້ອື່ນ;
5. ເສຍສັນຊາດລາວ;
6. ເສຍຊີວິດໂດຍບໍ່ມີຜູ້ສືບທອດ;
7. ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນ ໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ປະຊາຊົນໃນສະໄໝຕໍ່ ສູ້ກູ້ຊາດ;
8. ຜູ້ທີ່ບໍ່ໄດ້ທວງສິດນຳໃຊ້ທີ່ດິນຂອງຕົນຄືນ ກ່ອນປີ 1994 ຕາມດຳລັດຂອງສະພາລັດຖະມົນຕີ ວ່າດ້ວຍທີ່ດິນ ແລະ ເຮືອນຂອງພວກປະຕິການທີ່ສານຕັດສິນພວກໂຕນໜີ ແລະ ສຳມະນາກອນ ສະບັບເລກທີ 129/ກປສລ, ລົງວັນທີ 18 ພະຈິກ 1989 ແລະ ກ່ອນປີ 1996 ຕາມດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍທີ່ດິນ ສະບັບເລກທີ 99/ນຍ, ລົງວັນທີ 19 ທັນວາ 1992;
9. ມອບໃຫ້ເປັນຊັບສິນບັດສ່ວນລວມ ໃນສະໄໝຕໍ່ສູ້ກູ້ຊາດກໍ່ຄືໃນສະໄໝປັດຈຸບັນ;
10. ບໍ່ໄດ້ທວງຄືນ ຈາກບຸກຄົນອື່ນທີ່ໄດ້ເຂົ້າໄປຄອບຄອງນຳໃຊ້ທີ່ດິນ ດ້ວຍຄວາມບໍລິສຸດໃຈ, ເປີດ ເຜີຍ, ສະຫງົບ ແລະ ຕໍ່ເນື່ອງ ເປັນເວລາ ຊາວປີ ຂຶ້ນໄປ ນັບແຕ່ວັນເຂົ້າຄອບຄອງ.

**ມາດຕາ 153 (ປັບປຸງ) ການທົດແທນຄ່າເສຍຫາຍຈາກກິດຈະການສາທາລະນະປະໂຫຍດ**

ເມື່ອມີຄວາມຈຳເປັນ ຕ້ອງໄດ້ນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເຂົ້າໃນກິດຈະການສາທາລະນະປະໂຫຍດ ລັດຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ໂດຍລັດຕ້ອງໃຊ້ແທນຄ່າ ເສຍຫາຍໃຫ້ຜູ້ກ່ຽວ ເປັນຕົ້ນ ການກໍ່ສ້າງ ຖະໜົນຫົນທາງ, ໂຮງຮຽນ, ໂຮງໝໍ, ສວນສາທາລະນະ, ສະໜາມ ບິນ, ແລວສາຍສົ່ງໄຟຟ້າ, ຮ່ອງລະບາຍນ້ຳ, ຊົນລະປະທານ, ນ້ຳປະປາ, ສະໜາມຂີ້ເຫຍື້ອ, ບ່ອນບຳບັດ ຂີ້ເຫຍື້ອ.

ໃນການທົດແທນຄ່າເສຍຫາຍດັ່ງກ່າວ ຕ້ອງແຕ່ງຕັ້ງຄະນະກຳມະການປະເມີນຄວາມເສຍ ຫາຍຊັບສິນເທິງໜ້າດິນ ແລະ ລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້ ໂດຍການມີສ່ວນຮ່ວມຂອງເຈົ້າຂອງສິດນຳໃຊ້ທີ່ດິນ.

**ມາດຕາ 154 (ໃໝ່) ການທົດແທນຄ່າເສຍຫາຍຈາກກິດຈະການ ການລົງທຶນ**

ເມື່ອມີຄວາມຈຳເປັນ ຕ້ອງໄດ້ນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເຂົ້າໃນກິດຈະການລົງທຶນ, ການເຊົ່າ ຫຼື ສຳປະທານທີ່ດິນ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລັດ ຈະໂອນເອົາສິດນຳໃຊ້ທີ່ດິນນັ້ນຄືນ ໂດຍລັດຕ້ອງໃຊ້ແທນຄ່າເສຍຫາຍໃຫ້ຜູ້ກ່ຽວ ເປັນຕົ້ນ ໂຄງການ ກະສິກຳ, ປູກໄມ້, ການຂຸດຄົ້ນບໍ່ແຮ່, ການພັດທະນາແຫຼ່ງພະລັງງານໄຟຟ້າ, ຖະໜົນຫົນທາງ, ເຂດອຸດສາຫະກຳ ຫຼື ນິຄົມ ອຸດສາຫະກຳ, ເຂດເສດຖະກິດພິເສດ.

ໃນການທົດແທນຄ່າເສຍຫາຍດັ່ງກ່າວ ຕ້ອງແຕ່ງຕັ້ງຄະນະກຳມະການປະເມີນຄວາມເສຍຫາຍ ຊັບສິນເທິງໜ້າດິນ ແລະ ລາຄາທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້ ຊຶ່ງປະກອບ ດ້ວຍ ຂະແໜງການທີ່ກ່ຽວຂ້ອງ, ຂະແໜງການທີ່ຮັບຜິດຊອບໂຄງການ, ເຈົ້າຂອງໂຄງການ, ເຈົ້າຂອງສິດ ນຳໃຊ້ ທີ່ດິນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 159 (ໃໝ່) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ ຫຼື ຕັ້ງຖິ່ນຖານຢູ່ເຂດບໍລິເວນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ທີ່ດິນບໍລິເວນແຫຼ່ງນ້ຳ ທີ່ສະຫງວນໄວ້ ແລະ ເຂດສະຫງວນຂອງລັດ;
2. ປອມແປງ ໃບຕາດິນ, ຕາປະທັບ, ລາຍເຊັນ ຫຼື ເອກະສານອື່ນ ກ່ຽວກັບທີ່ດິນ;
3. ນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ກົດໝາຍ;
4. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;
5. ຊື້ ຂາຍສິດນຳໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ເອົາທີ່ດິນຂອງລັດ ລວມທັງທີ່ດິນລວມໝູ່ຂອງບ້ານ ໃຫ້ເຊົ່າ, ແລກປ່ຽນ, ຂາຍ, ຄ້ຳປະກັນ ຫຼື ມອບ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ຫັນປ່ຽນປະເພດທີ່ດິນ ແລະ ເປົ້າໝາຍການນຳໃຊ້ທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ;
8. ລະເມີດສັນຍາ ຊື້ ຂາຍສິດນຳໃຊ້ທີ່ດິນ, ເຊົ່າ ຫຼື ສຳປະທານທີ່ດິນ, ຫຼີກລ່ຽງການເສຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນ, ຄ່າຊັບພະຍາກອນທຳມະຊາດ, ຄ່າທຳນຽມການນຳໃຊ້ທີ່ດິນ, ອາກອນ, ຄ່າທຳ ນຽມ ແລະ ຄ່າບໍລິການ;
9. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ເຈົ້າໜ້າທີ ຫຼື ພະນັກງານ;
10. ປະຕິເສດການໃຫ້ການຮ່ວມມື ຫຼື ຂັດຂວາງ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ,
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 160 (ໃໝ່) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດ, ຕຳແໜ່ງ, ໜ້າທີ່ຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ໝູ່ຄະນະ, ພັກພວກ, ຈຸ້ມເຈື້ອ ແລະ ຍາດພີ່ນ້ອງ
2. ທວງເອົາ, ຂໍເອົາ ຫຼື ຮັບເອົາ ສິນບົນ;
3. ໃຊ້ສິດໜ້າທີເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ ຫຼື ນັກລົງທຶນທັງພາຍໃນ ຫຼື ຕ່າງປະເທດ;
4. ເມີນເສີຍ, ເລີນເລີ້ຕໍ່ການປະຕິບັດໜ້າທີ່, ປົກເປືອນຂໍ້ມູນ, ກົດໜ່ວງຖ່ວງດຶງ ການພິຈາລະນາເອກະສານກ່ຽວກັບທີ່ດິນ;
5. ອະນຸຍາດໃຫ້ເຄື່ອນໄຫວ ຫຼື ປ່ຽນສິດນຳໃຊ້ທີ່ດິນ ບໍ່ວ່າໃນກໍລະນີໃດກໍຕາມທີ່ຍັງມີຂໍ້ຂັດແຍ່ງ;
6. ອອກໃບຕາດິນຊ້ຳຊ້ອນ, ອອກໜັງສືຢັ້ງຢືນກ່ຽວກັບການນຳໃຊ້ທີ່ດິນໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ ທີ່ດິນບໍລິເວນ, ດິນລັດນ້ຳ, ທີ່ດິນວັດທະນະທຳ, ທີ່ດິນປ່າປ້ອງກັນ, ທີ່ດິນປ່າສະຫງວນ, ທີ່ດິນປ່າຜະລິດ, ທີ່ດິນເຂດຫວງຫ້າມຂອງລັດ;

7. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ລັດ ຫຼື ລວມໝູ່;
8. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບວຽກງານທີ່ດິນ;
9. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;
10. ປອມແປງເອກະສານກ່ຽວກັບທີ່ດິນ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;
11. ທຳລາຍຫຼັກຖານ, ເອກະສານກ່ຽວກັບທີ່ດິນ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດແດນທີ່ດິນ;

ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ;

**ມາດຕາ 161 (ປັບປຸງ) ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ**

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ ແມ່ນ ການແກ້ໄຂບັນຫາກ່ຽວ ກັບການ ນຳໃຊ້ທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງ ທີ່ໄດ້ຮັບມອບ, ບໍ່ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ເຂດແດນ ແລະ ບັນຫາທີ່ດິນອື່ນທີ່ມີລັກ ສະນະບໍລິຫານຕາມກົດໝາຍ.

ບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ ເກີດຂຶ້ນຢູ່ທ້ອງຖິ່ນໃດ ຫຼື ຂະແໜງການໃດ ແມ່ນໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຮ່ວມກັບຂະແໜງການທີ່ ຄຸ້ມຄອງການນຳ ໃຊ້ທີ່ດິນນັ້ນ ເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກ່ອນ ໂດຍໃຫ້ເກັບຂໍ້ມູນຢ່າງລະອຽດ ແລະ ປະສານສົມ ທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານບ່ອນທີ່ດິນນັ້ນຕັ້ງຢູ່ ແລ້ວສະເໜີໃຫ້ອົງ ການປົກ ຄອງຂັ້ນເມືອງ ເປັນຜູ້ຕົກລົງຕາມກົດໝາຍ.

ໃນກໍລະນີຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈຕໍ່ການຕົກລົງແກ້ໄຂບັນຫາທີ່ມີລັກສະນະບໍລິຫານ ກ່ຽວ ກັບທີ່ດິນດັ່ງກ່າວ ກໍມີສິດສະເໜີໃຫ້ອົງການປົກຄອງຂັ້ນແຂວງ ເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂ ບັນຫາດັ່ງກ່າວຕາມກົດໝາຍ ໂດຍໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນໃຈກາງສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ. ຖ້າຝ່າຍ ໃດຝ່າຍໜຶ່ງ ຫາກຍັງບໍ່ພໍໃຈຕໍ່ການຕົກລົງແກ້ໄຂນັ້ນ ອົງການປົກຄອງຂັ້ນແຂວງ ຕ້ອງແຈ້ງໃຫ້ຄູ່ກໍລະ ນີເປັນລາຍລັກອັກສອນນຳບັນຫາດັ່ງກ່າວໄປຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດ ໝາຍ.

**ມາດຕາ 162 (ໃໝ່) ຮູບການການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ການຮ້ອງຟ້ອງຕໍ່ສານ;
4. ການແກ້ໄຂ້ທີ່ມີລັກສະນະສາກົນ.

**ມາດຕາ 163 (ໃໝ່) ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີ ສາມາດເຈລະຈາດ້ວຍການປະນີປະນອມ ຫຼື ໄກ່ເກ່ຍກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 164 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ພົວພັນກັບການດໍາເນີນທຸລະກິດ, ຄູ່ກໍລະນີສາ ມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ.

**ມາດຕາ 165 (ປັບປຸງ) ການຮ້ອງຟ້ອງຕໍ່ສານ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິ ຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 166 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນທີ ສປປ ລາວ ເປັນພາຄີ.

**ມາດຕາ 186 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

ບຸກຄົນໃດ ຫາກໄດ້ກະທໍາ ຫຼື ສົມຮູ້ຮ່ວມຄິດ ໃນການປອມແປງໃບຕາດິນ, ອອກໃບຕາດິນ ຊໍ້າຊ້ອນ ຫຼື ທັບຊ້ອນ ຈະຖືກປັບໃໝ ສອງ ເທົ່າຂອງມູນຄ່າເສຍຫາຍ ແລະ ຖືກລົງໂທດທາງອາຍາ ຕາມກົດໝາຍ.

ໃນກໍລະນີ ກວດກາເຫັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນພົນລະເມືອງລາວ ຂາຍສິດນໍາ ໃຊ້ທີ່ດິນໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດ ລາວ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ໂດຍໃສ່ຊື່ ຫຼື ບໍ່ໃສ່ຊື່ ພົນລະ ເມືອງລາວໄວ້ ນອກຈາກຖືກປະຕິບັດມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ແລ້ວ ແມ່ນໃຫ້ຮິບທີ່ດິນຕອນນັ້ນເປັນຂອງລັດ.

**3. ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019**

**ມາດຕາ 2 (ປັບປຸງ) ປ່າໄມ້**

ປ່າໄມ້ ແມ່ນ ຊັບພະຍາກອນ ອັນລໍ້າຄ່າຂອງຊາດ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍຊີ ວະນາໆພັນ, ແຫຼ່ງນໍ້າ ແລະ ທີ່ດິນ ໂດຍມີຕົ້ນໄມ້ນາໆຊະນິດທີ່ເກີດຂຶ້ນຕາມທໍາມະຊາດ ຫຼື ປູກຂຶ້ນໃນ ເນື້ອທີ່ແຕ່ສູນຈຸດຫ້າ (0,5) ເຮັກຕາ ແລະ ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ແຕ່ ຊາວສ່ວນ ຮ້ອຍ (20%) ຂຶ້ນໄປ.

**ມາດຕາ 4 (ປັບປຸງ) ກໍາມະສິດກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້**

ປ່າໄມ້ທໍາມະຊາດ ແລະ ທີ່ດິນປ່າໄມ້ ເປັນກໍາມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໃຫ້ອົງການຈັດຕັ້ງ ແລະ ປະຊາຊົນທຸກຄົນມີສ່ວນຮ່ວມໃນການ ບູລະນະ, ປົກປັກຮັກສາ ແລະ ນໍາໃຊ້ຕາມກົດໝາຍ.

ປ່າປູກ ແລະ ໄມ້ປູກ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ລົງທຶນປູກຕາມເຂດ ທີ່ໄດ້ຈັດສັນໃຫ້ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນກໍາມະສິດຂອງຜູ້ປູກ ຫຼື ຂອງຜູ້ລົງທຶນປູກ.

ຕົ້ນໄມ້ທໍາມະຊາດ ທີ່ມີໃນທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນຕາມກົດໝາຍ ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ. ສໍາລັບຕົ້ນໄມ້ ທີ່ເກີດຂຶ້ນຕາມທໍາມະຊາດ ຫຼື ປູກໃນທີ່ດິນສາທາລະນະ ເປັນກໍາມະສິດ ຂອງລັດ.

**ມາດຕາ 7 ພັນທະໃນການປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້**

ການປູກ, ປົກປັກຮັກສາ, ອະນຸລັກ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນພັນທະຂອງພົນລະເມືອງທຸກຄົນ, ຄອບຄົວ ແລະ ການຈັດຕັ້ງທຸກພາກສ່ວນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນໍ້າ, ຊີວະນາໆພັນ, ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມກົດໝາຍ, ບໍ່ເຮັດໃຫ້ປ່າໄມ້ ແລະ ທີ່ດິນປ່າໄມ້ເຊື່ອມໂຊມ, ບົກແຫ້ງ, ເຊາະເຈື່ອນ, ປ້ອງກັນບໍ່ໃຫ້ໄຟໄໝ້ປ່າ, ສະກັດກັ້ນ ແລະ ຕ້ານການທໍາລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ທຸກຮູບແບບ.

**ມາດຕາ 14 (ປັບປຸງ) ການແບ່ງປະເພດປ່າໄມ້**

ປ່າໄມ້ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ແບ່ງອອກເປັນ ສາມປະເພດ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ຄື:

1. ປ່າປ້ອງກັນ;
2. ປ່າສະຫງວນ;
3. ປ່າຜະລິດ.

ໃນແຕ່ລະປະເພດປ່າອາດປະກອບມີ ເຂດປ່າໄມ້ດົກໜາ, ເຂດປ່າໂຄກ, ເຂດປ່າຟື້ນຟູ ແລະ ເຂດປ່າຊຸດໂຊມ ຕາມແຜນທີ່ໄດ້ຈັດສັນໃຫ້.

**ມາດຕາ 15 (ປັບປຸງ) ປ່າປ້ອງກັນ**

ປ່າປ້ອງກັນ ແມ່ນ ປ່າໄມ້ທີ່ໄດ້ກໍານົດເພື່ອຈຸດປະສົງນໍາໃຊ້ໃນການຮັກສາ ແຫຼ່ງນໍ້າ, ແຄມນໍ້າ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທໍາມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

ປ່າປ້ອງກັນ ປະກອບດ້ວຍ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນ ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ ຊຶ່ງໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ປ່າສະຫງວນ**

ປ່າສະຫງວນ ແມ່ນ ປ່າໄມ້ທີ່ໄດ້ກໍານົດເພື່ອຈຸດປະສົງນໍາໃຊ້ໃນການອະນຸລັກທໍາມະຊາດ, ປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນສັດນໍ້າ ແລະ ສັດປ່ານາໆຊະນິດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານ ທໍາມະຊາດ, ປະຫວັດສາດ, ວັດທະນະທໍາ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.

ປ່າສະຫງວນ ປະກອບດ້ວຍ ປ່າສະຫງວນແຫ່ງຊາດ, ປ່າສະຫງວນ ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ ຊຶ່ງໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ປ່າສະຫງວນ ທີ່ມີຄວາມອຸດົມສົມບູນທາງດ້ານລະບົບນິເວດ ແລະ ມີເອກະລັກສະເພາະທາງດ້ານ ທິວທັດທໍາມະຊາດ ແລະ ມີຄວາມໂດດເດັ່ນໃນລະດັບຊາດ, ພາກພື້ນ ແລະ ລະດັບໂລກ ອາດຈະ ສະເໜີເປັນ ເຂດອະນຸລັກພັນສັດປ່າ, ເຂດອຸທິຍານແຫ່ງຊາດ, ມໍຣະດົກພາກພື້ນ ຫຼື ມໍຣະດົກໂລກ.

**ມາດຕາ 17 (ປັບປຸງ) ປ່າຜະລິດ**

ປ່າຜະລິດ ແມ່ນ ປ່າໄມ້ທຳມະຊາດ ແລະ ປ່າປູກ ທີ່ໄດ້ກຳນົດເປັນເຂດສະໜອງໄມ້ ແລະ ເຄື່ອງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງ ປ່າຂອງດົງເປັນ ສິນຄ້າຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

**ມາດຕາ 18 (ປັບປຸງ) ການຫັນປ່ຽນປະເພດປ່າໄມ້**

ການຫັນປ່ຽນປ່າປ້ອງກັນ ຫຼື ປ່າສະຫງວນ ເປັນ ປ່າຜະລິດ ແມ່ນ ສະພາແຫ່ງຊາດ ເປັນຜູ້ ຮັບຮອງຕາມການສະເໜີຂອງລັດຖະບານ.

ການຫັນປ່ຽນ ປ່າຜະລິດ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ, ປ່າປ້ອງກັນ ເປັນ ປ່າສະຫງວນ ຫຼື ປ່າສະຫງວນ ເປັນປ່າປ້ອງກັນ ແມ່ນ ລັດຖະບານເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະປ່າໄມ້.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບແຂວງ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ ແຫ່ງຊາດແມ່ນ ລັດຖະບານເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະ ພາບກັບອົງການປົກຄອງຂັ້ນແຂວງ ແລະ ການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບເມືອງ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບແຂວງ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸຍາດ ຕາມການສະເໜີຂອງອົງການປົກຄອງ ຂັ້ນແຂວງ ແລະ ການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບບ້ານ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບເມືອງ ແມ່ນ ອົງການປົກຄອງຂັ້ນແຂວງ ເປັນຜູ້ອະນຸຍາດ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າ ໄມ້ຂັ້ນແຂວງ ໂດຍເປັນເອກະພາບກັບອົງການປົກຄອງຂັ້ນເມືອງ.

**ມາດຕາ 30 (ປັບປຸງ) ການຕັດໄມ້ປູກ**

ການຕັດໄມ້ປູກ ທຸກຊະນິດ ເພື່ອເປັນສິນຄ້າ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຂຶ້ນບັນຊີຢັ້ງຢືນໄມ້ປູກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ ເຈົ້າຂອງປ່າປູກ ຫຼື ໄມ້ປູກ ສາມາດຕັດໄດ້ໂດຍ ບໍ່ຈຳ ເປັນສຳຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງນຳເອົາ ໃບທະ ບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກຳມະສິດ ພ້ອມທັງລາຍງານ ແລະ ແຈ້ງ ສະຖານທີ່, ຊະນິດພັນ ໄມ້, ຈຳນວນຕົ້ນ ທີ່ຈະຕັດໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ສຳລັບ ການຕັດໄມ້ປູກ ເພື່ອໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດນັ້ນ ຈະໄດ້ຮັບການ ຍົກເວັ້ນຄ່າຊັບພະຍາກອນ, ຄ່າບຸລະນະ ແລະ ຄ່າພັນທະຕ່າງໆ ແລະ ຕ້ອງໄດ້ລາຍງານຈຳນວນບໍລິມາດໄມ້ ຫຼື ນໍ້າ ໜັກຂອງໄມ້ ໃຫ້ອົງການປົກຄອງບ້ານ.

**ມາດຕາ 31 (ໃໝ່) ການຂຸດຄົ້ນເຄື່ອງປ່າຂອງດົງ**

ລັດ ອະນຸຍາດໃຫ້ຂຸດຄົ້ນເຄື່ອງປ່າຂອງດົງ ໃນເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດຄຸ້ມຄອງການນຳໃຊ້ໃນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ເຂດເນື້ອທີ່ດິນຂອງ ບຸກຄົນ, ຄອບຄົວ, ນິຕິບຸກ ຄົນ ຫຼືການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ໃນເຂດປ່າຊົມ ໃຊ້ຂອງບ້ານ ທີ່ລັດຈັດສັນໃຫ້.

ການຂຸດຄົ້ນເຄື່ອງປ່າຂອງດົງ ແຕ່ລະຊະນິດ ຕ້ອງປະຕິບັດຕາມແຜນການທີ່ໄດ້ອະນຸມັດ, ເຂດທີ່ໄດ້ອະນຸຍາດ, ຕາມມາດຕະຖານເຕັກນິກ ແລະ ຮັບປະກັນຄວາມຍືນຍົງ.

**ມາດຕາ 34 (ໃໝ່) ການຊື້ ຂາຍ ເຄື່ອງປ່າຂອງດົງ**

ເຄື່ອງປ່າຂອງດົງທຸກຊະນິດ ທີ່ສາມາດປຸງແຕ່ງໄດ້ ຢູ່ພາຍໃນປະເທດ ສາມາດຊື້ ຂາຍທົ່ວໄປ ຫຼື ຂາຍໃຫ້ໂຮງງານປຸງແຕ່ງ ທີ່ໄດ້ມາດຕະຖານ ແນໃສ່ສົ່ງເສີມອຸດສາຫະກຳປຸງແຕ່ງພາຍໃນ ແລະ ຮັບປະກັນ ຜົນປະໂຫຍດສູງສຸດຂອງ ລັດ ແລະ ປະຊາຊົນ.

ສຳລັບ ເຄື່ອງປ່າຂອງດົງ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງປູກນັ້ນ ເປັນຄວາມຮັບຜິດ ຊອບຂອງຜູ້ປູກ ຫຼື ຜູ້ລົງທຶນປູກ.

**ມາດຕາ 46 (ປັບປຸງ) ການປົກປັກຮັກສາປ່າໄມ້**

ການປົກປັກຮັກສາປ່າໄມ້ ມີ ດັ່ງນີ້:

1. ການປົກປັກຮັກສາປ່າປ້ອງກັນ;
2. ການປົກປັກຮັກສາປ່າສະຫງວນ;
3. ການປົກປັກຮັກສາປ່າຜະລິດ;
4. ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ;
5. ການກັນ, ການຕ້ານພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ;
6. ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ;
7. ການຈຳກັດການຖາງປ່າເຮັດໄຮ່ແບບເລື່ອນລອຍ.

**ມາດຕາ 47 (ປັບປຸງ) ການປົກປັກຮັກສາປ່າປ້ອງກັນ**

ການປົກປັກຮັກສາປ່າປ້ອງກັນ ແມ່ນ ການຮັກສາແຫຼ່ງນໍ້າ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

ໃນການປົກປັກຮັກສາປ່າປ້ອງກັນ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະ

2. ສຳຫຼວດ ເກັບກຳຂໍ້ມູນ ກ່ຽວກັບຄຸນລັກສະນະຂອງພື້ນທີ່, ຄວາມຄ້ອຍຊັນ, ແຫຼ່ງນໍ້າ, ພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ; ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອກຳນົດເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້;

3. ສ້າງແຜນທີ່ສະແດງຂອບເຂດ, ທີ່ຕັ້ງ ແລະ ສະພາບປ່າໄມ້;

4. ວາງແຜນການ ແລະ ກຳນົດມາດຕະການປົກປັກຮັກສາ ແລະ ຟື້ນຟູປ່າປ້ອງກັນ,

5. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າປ້ອງກັນ ຕາມແຜນການ ແລະ ມາດຕະການ ທີ່ ໄດ້ກຳນົດໄວ້ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນ;

6. ດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງ ເປັນລະບົບ.

**ມາດຕາ 48 (ປັບປຸງ) ການປົກປັກຮັກສາປ່າສະຫງວນ**

ການປົກປັກຮັກສາປ່າສະຫງວນ ແມ່ນ ການຮັກສາປ່າໄມ້ ໃຫ້ອຸດົມສົມບູນ ກໍຄືປົກປັກຮັກສາ ພັນພືດ , ພັນສັດ, ຊີວະນາໆພັນ, ລະບົບນິເວດທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ ໃຫ້ ດຳລົງຄົງຕົວ ແລະ ຂະຫຍາຍຕົວ ພ້ອມກັນນັ້ນ ກໍໃຫ້ມີປ່າໄມ້, ທິວທັດທຳມະຊາດທີ່ສວຍສົດງົດງາມ ເພື່ອການ

ພັດ ທະນາສວນອຸທິຍານແຫ່ງຊາດ ຊຶ່ງເໝາະສົມຕໍ່ການທ່ອງທ່ຽວ ແລະ ການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ.

ການປົກປັກຮັກສາປ່າສະຫງວນ ໃຫ້ປະຕິບັດ ດັ່ງນີ້:

1. ສໍາຫຼວດ, ກໍານົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະ ພາບກັບຂະ ແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ສໍາຫຼວດ ເກັບກໍາຂໍ້ມູນກ່ຽວກັບຄຸນລັກສະນະຂອງພື້ນທີ່, ຄວາມຫຼາກຫຼາຍທາງດ້ານ ຊີວະນາໆພັນ , ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອກໍານົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນໍາ ໃຊ້ ແລະ ເຂດກັນຊົນ ໃນກໍລະນີທີ່ມີທີ່ຕັ້ງໃກ້ຄຽງກັບປ່າປະເພດອື່ນ;

3. ສ້າງແຜນທີ່ສະແດງຂອບເຂດ, ທີ່ຕັ້ງ ແລະ ສະພາບປ່າໄມ້;

4. ວາງແຜນການ ແລະ ການົດ ມາດຕະການປົກປັກຮັກສາ ແລະ ຟື້ນຟູປ່າສະຫງວນ;

5. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າສະຫງວນ ຕາມແຜນການ ແລະ ມາດຕະການ ທີ່ ໄດ້ການົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນ;

6. ດໍາເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງ ເປັນລະບົບ.

**ມາດຕາ 49 ການປົກປັກຮັກສາປ່າຜະລິດ**

ການປົກປັກຮັກສາປ່າຜະລິດ ແມ່ນ ການຮັກສາປ່າໄມ້ໃຫ້ອຸດົມສົມບູນ ເພື່ອສະໜອງ ໄມ້ ແລະ ເຄື່ອງປ່າ ຂອງດົງເປັນສິນຄ້າແບບຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ລຶບລ້າງ ຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ. ການປົກປັກຮັກສາປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ສໍາຫຼວດ, ກໍານົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບກັບຂະ ແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ສໍາຫຼວດ ເກັບກໍາຂໍ້ມູນກ່ຽວກັບສະພາບການນໍາໃຊ້ທີ່ດິນ ແລະ ປ່າໄມ້, ບໍລິມາດໄມ້, ຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອກໍານົດແຜນຈັດສັນປ່າຜະລິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ວັກທີສີ່ ຂອງ ກົດໝາຍສະບັບນີ້;

3. ກໍານົດ ແຜນການ ແລະ ມາດຕະການປົກປັກຮັກສາ ແລະ ພັດທະນາ ຕາມແຜນຈັດສັນປ່າຜະລິດ ເປັນຕົ້ນ ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ, ເຂດປູກໄມ້ ແລະ ຟື້ນຟູປ່າ, ເຂດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ;

4. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າຜະລິດ ຕາມແຜນການ ແລະ ມາດຕະການ ທີ່ໄດ້ການົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນທ້ອງຖິ່ນ;

5. ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ຖືກຕ້ອງຕາມກົດໝາຍ;

6. ດໍາເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງເປັນລະບົບ;

7. ປະຕິບັດ ກົດໝາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການປົກປັກຮັກສາ.

**ມາດຕາ 77 ປະເພດການນໍາໃຊ້ທີ່ດິນປ່າໄມ້**

ການນໍາໃຊ້ທີ່ດິນປ່າໄມ້ໃນ ສປປ ລາວ ໄດ້ຈັດແບ່ງອອກເປັນ ສາມປະເພດ ຄື:

1. ການນໍາໃຊ້ເພື່ອສາທາລະນະປະໂຫຍດ;

2. ການນຳໃຊ້ເພື່ອຄອບຄົວ;

3. ການນຳໃຊ້ເພື່ອທຸລະກິດ.

ການນຳໃຊ້ທີ່ດິນປ່າໄມ້ທຸກປະເພດ ຕ້ອງບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຄຸນນະພາບຂອງດິນ, ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ.

**ມາດຕາ 78 ການນຳໃຊ້ທີ່ດິນປ່າໄມ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ທີ່ດິນປ່າໄມ້ ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ເຂົ້າໃນການປູກໄມ້ ເພື່ອຮັກສາສິ່ງແວດລ້ອມ ແລະ ຄວາມສວຍງາມ, ເປັນແຫຼ່ງທ່ອງທ່ຽວ ແລະ ສະຖານທີ່ພັກຜ່ອນ ໂດຍໄດ້ຮັບອະນຸຍາດຈາກອົງ ການທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ.

**ມາດຕາ 79 (ປັບປຸງ) ການນຳໃຊ້ທີ່ດິນປ່າໄມ້ເພື່ອຄອບຄົວ**

ການນຳໃຊ້ທີ່ດິນປ່າໄມ້ເພື່ອຄອບຄົວ ແມ່ນ ການນຳໃຊ້ທີ່ດິນປ່າໄມ້ຊຸດໂຊມ ຫຼື ທີ່ດິນປ່າປອກ ໂຫຼ້ນ ຕາມຄວາມສາມາດທາງດ້ານແຮງງານ ແລະ ທຶນຮອນຂອງຄອບຄົວ ເພື່ອຟື້ນຟູປ່າ, ປູກໄມ້ ຫຼື ເຄື່ອງປ່າຂອງ ດົງ ໃນເຂດທີ່ລັດຈັດສັນໃຫ້.

**ມາດຕາ 80 (ປັບປຸງ) ການນຳໃຊ້ທີ່ດິນປ່າໄມ້ເພື່ອທຸລະກິດ**

ການນຳໃຊ້ທີ່ດິນປ່າໄມ້ເພື່ອທຸລະກິດ ດຳເນີນໄດ້ໃນເຂດທີ່ດິນປ່າໄມ້ ທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງດຳເນີນໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**3.1 ດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023**

**ມາດຕາ 2 ປ່າສະຫງວນ**

ປ່າສະຫງວນ ແມ່ນ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ກຳນົດເພື່ອຈຸດປະສົງ ໃນການ ອະນຸລັກທຳມະຊາດ, ປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນສັດນ້ຳ ແລະ ສັດປ່າ ນາໆຊະນິດ, ບໍລິການລະບົບນິເວດປ່າໄມ້ ແລະ ຊັບສິນຕ່າງໆ ທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.

**ມາດຕາ 4 ຫຼັກການກ່ຽວກັບ ວຽກງານປ່າສະຫງວນ**

ວຽກງານປ່າສະຫງວນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຮັບປະກັນ ການຄຸ້ມຄອງປ່າສະຫງວນ ເປັນລະບົບ ແລະ ເອກະພາບໃນທົ່ວປະເທດ;

3. ຮັບປະກັນການມີສ່ວນຮ່ວມ ຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການປະສານ ສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

4. ຮັບປະກັນຜົນປະໂຫຍດ ຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຄຸ້ມຄອງ, ປົກປັກ ຮັກສາ ແລະ ພັດທະນາ ປ່າສະຫງວນ ຕາມກົດໝາຍ.

**ມາດຕາ 5 ລະດັບປ່າສະຫງວນ**

ປ່າສະຫງວນ ຈັດເປັນ ສີ່ ລະດັບ ດັ່ງນີ້:

1. ປ່າສະຫງວນ ລະດັບຊາດ;

2. ປ່າສະຫງວນ ລະດັບແຂວງ;

3. ປ່າສະຫງວນ ລະດັບເມືອງ;

4. ປ່າສະຫງວນ ລະດັບບ້ານ.

**ມາດຕາ 6 ປ່າສະຫງວນ ລະດັບຊາດ**

ປ່າສະຫງວນ ລະດັບຊາດ ແມ່ນ ປ່າສະຫງວນທີ່ມີເນື້ອທີ່ ຫຼາຍກວ່າ ສາມສິບພັນ ເຮັກຕາ, ມີຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ແລະ ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ທີ່ມີຄຸນຄ່າສູງ ຫຼື ເປັນເຂດຍຸດທະສາດໃນ ລະດັບຊາດ, ພາກພື້ນ ຫຼື ສາກົນ.

**ມາດຕາ 7 ປ່າສະຫງວນ ລະດັບແຂວງ**

ປ່າສະຫງວນ ລະດັບແຂວງ ແມ່ນ ປ່າສະຫງວນທີ່ມີເນື້ອທີ່ ແຕ່ ສອງພັນ ຫາ ສາມສິບພັນ ເຮັກຕາ, ມີຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ແລະ ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ທີ່ມີຄຸນຄ່າສູງ ຫຼື ເປັນເຂດຍຸດທະສາດໃນລະດັບແຂວງ.

**ມາດຕາ 8 ປ່າສະຫງວນ ລະດັບເມືອງ**

ປ່າສະຫງວນ ລະດັບເມືອງ ແມ່ນ ປ່າສະຫງວນທີ່ມີເນື້ອທີ່ແຕ່ ໜຶ່ງຮ້ອຍ ຫາ ຕໍ່າກວ່າ ສອງພັນ ເຮັກຕາ ລົງມາ, ມີຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ແລະ ມີຄຸນລັກສະນະດ້ານພູມີສາດ, ປະຫວັດສາດ , ວັດທະນະທຳ ແລະ ທຳມະຊາດ ທີ່ມີຄຸນຄ່າສູງ ຫຼື ເປັນເຂດຍຸດທະສາດໃນລະດັບເມືອງ.

**ມາດຕາ 9 ປ່າສະຫງວນ ລະດັບບ້ານ**

ປ່າສະຫງວນ ລະດັບບ້ານ ແມ່ນ ປ່າສະຫງວນທີ່ມີເນື້ອທີ່ ສູນຈຸດຫ້າ ຫາ ຕໍ່າກວ່າ ໜຶ່ງຮ້ອຍ ເຮັກຕາ, ມີຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ແລະ ມີຄຸນລັກສະນະດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ທີ່ມີຄຸນຄ່າສູງ ຫຼື ເປັນເຂດຍຸດທະສາດໃນລະດັບບ້ານ.

**ມາດຕາ 10 ປະເພດປ່າສະຫງວນ**

ປ່າສະຫງວນ ມີ ຫົກ ປະເພດ ດັ່ງນີ້:

1. ປ່າສະຫງວນ ແບບອະນຸລັກເຂັ້ມງວດ;

2. ປ່າສະຫງວນ ທີ່ເປັນອຸທິຍານແຫ່ງຊາດ;

3. ປ່າສະຫງວນ ທີ່ເປັນອະນຸສອນສະຖານທາງທຳມະຊາດ;

4. ປ່າສະຫງວນ ທີ່ເປັນເຂດອະນຸລັກພັນ ພືດ, ສັດນ້ຳ ແລະ ສັດປ່າ;

5. ປ່າສະຫງວນ ທາງປະຫວັດສາດ ແລະ ວັດທະນະທຳ;

6. ປ່າສະຫງວນ ຄຸ້ມຄອງການນຳໃຊ້ຊັບພະຍາກອນ ແບບຍືນຍົງ.

ການຈັດແບ່ງປະເພດປ່າສະຫງວນ ແລະ ການປ່ຽນແປງ ປ່າສະຫງວນ ປະເພດໃດໜຶ່ງ ໄປເປັນ ປ່າສະຫງວນປະເພດອື່ນ ໃຫ້ດຳເນີນຕາມຂັ້ນຕອນ ທີ່ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ປ່າສະຫງວນ ແບບອະນຸລັກເຂັ້ມງວດ**

ປ່າສະຫງວນ ແບບອະນຸລັກເຂັ້ມງວດ ແມ່ນ ປ່າສະຫງວນທີ່ມີ ຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ແລະ ລັກສະນະສະເພາະດ້ານທໍລະນີວິທະຍາ ທີ່ບໍ່ຖືກລົບກວນໂດຍມະນຸດ ແລະ ມີຄວາມໂດດເດັ່ນລະດັບຊາດ, ພາກພື້ນ ແລະ ສາກົນ ເພື່ອການອະນຸລັກ, ປົກປັກຮັກສາ ແລະ ຄົ້ນຄວ້າວິໄຈທາງວິທະຍາສາດ ໂດຍຈຳກັດ ແລະ ຄວບຄຸມການເຂົ້າຊົມ, ການນຳໃຊ້ ແລະ ຜົນກະທົບທີ່ອາດເກີດຈາກການກະທຳຂອງມະນຸດຢ່າງເຂັ້ມງວດ.

**ມາດຕາ 12 ປ່າສະຫງວນ ທີ່ເປັນອຸທິຍານແຫ່ງຊາດ**

ປ່າສະຫງວນ ທີ່ເປັນອຸທິຍານແຫ່ງຊາດ ແມ່ນ ປ່າສະຫງວນທີ່ມີ ຄຸນລັກສະນະສະເພາະ ແລະ ມີຄວາມ ຫຼາກຫຼາຍທາງດ້ານລະບົບນິເວດທຳມະຊາດ ທີ່ໂດດເດັ່ນ, ມີຄຸນຄ່າແກ່ການສຶກສາຄົ້ນຄວ້າທາງວິທະຍາສາດ, ທ່ອງທ່ຽວ, ປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳ.

**ມາດຕາ 13 ປ່າສະຫງວນ ທີ່ເປັນອະນຸສອນສະຖານທາງທຳມະຊາດ**

ປ່າສະຫງວນ ທີ່ເປັນອະນຸສອນສະຖານທາງທຳມະຊາດ ແມ່ນ ປ່າສະຫງວນທີ່ມີ ລັກສະນະພິເສດທາງ ດ້ານພູມສັນຖານ ແລະ ທໍລະນີສາດ ທີ່ໂດດເດັ່ນ ເປັນຕົ້ນ ເຂດພູຜາ, ຖ້ຳ ຫຼື ສະຖານທີ່ທຳມະຊາດ ທີ່ມີຄວາມ ເຄົາລົບ, ເຊື່ອຖື ຫຼື ເປັນທີ່ສັກກາລະບູຊາມາແຕ່ດັ້ງເດີມ ແນໃສ່ເພື່ອປົກປັກຮັກສາເອກະລັກດ້ານທຳມະຊາດ ແລະ ວັດທະນະທຳ ທີ່ມີຄຸນຄ່າແກ່ການສຶກສາຄົ້ນຄວ້າ ແລະ ທ່ອງທ່ຽວ.

**ມາດຕາ 14 ປ່າສະຫງວນ ທີ່ເປັນເຂດ ອະນຸລັກພັນ ພືດ, ສັດນ້ຳ ແລະ ສັດປ່າ**

ປ່າສະຫງວນ ທີ່ເປັນເຂດ ອະນຸລັກພັນ ພືດ, ສັດນ້ຳ ແລະ ສັດປ່າ ແມ່ນ ປ່າສະຫງວນທີ່ຍັງມີຊະນິດພັນພືດ, ສັດນ້ຳ ແລະ ສັດປ່າ ສະເພາະຖິ່ນທີ່ຫາຍາກ ແລະ ໃກ້ຈະສູນພັນ.

**ມາດຕາ 15 ປ່າສະຫງວນ ທາງປະຫວັດສາດ ແລະ ວັດທະນະທຳ**

ປ່າສະຫງວນ ທາງປະຫວັດສາດ ແລະ ວັດທະນະທຳ ແມ່ນ ປ່າສະຫງວນ ທີ່ມີປະຫວັດຄວາມເປັນມາຍາວນານ ທາງດ້ານປະຫວັດສາດ ແລະ ວັດທະນະທຳ ທີ່ໂດດເດັ່ນ.

**ມາດຕາ 16 ປ່າສະຫງວນ ຄຸ້ມຄອງການນຳໃຊ້ຊັບພະຍາກອນ ແບບຍືນຍົງ**

ປ່າສະຫງວນ ຄຸ້ມຄອງການນຳໃຊ້ຊັບພະຍາກອນ ແບບຍືນຍົງ ແມ່ນ ປ່າສະຫງວນທີ່ມີຄວາມອຸດົມສົມ ບູນທາງທຳມະຊາດ ຊຶ່ງເປັນເຂດທີ່ໄດ້ມີການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນ ທຳມະຊາດ ແບບຍືນຍົງ.

**ມາດຕາ 22 ການຄຸ້ມຄອງປ່າສະຫງວນ**

ໃນການຄຸ້ມຄອງປ່າສະຫງວນ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງກົດ ໝາຍວ່າດ້ວຍປ່າໄມ້ ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສຳຫຼວດພູມີທັດປ່າສະຫງວນ;

2. ການສ້າງ ແລະ ຮັບຮອງແຜນຈັດສັນປ່າສະຫງວນ;

3. ການຕິດປ້າຍ ແລະ ປັກຫຼັກໝາຍ ເຂດປ່າສະຫງວນ;

4. ການວາງແຜນຄຸ້ມຄອງ ປ່າໄມ້ ຂັ້ນບ້ານ

**ມາດຕາ 35 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າສະຫງວນ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດ ການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆ ກ່ຽວກັບການອະນຸລັກຊີວະນານາພັນ, ສັດນ້ຳ ແລະ ສັດປ່າ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ.

**ມາດຕາ 45 ການນຳໃຊ້ປ່າສະຫງວນ**

ການນຳໃຊ້ປ່າສະຫງວນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ນຳໃຊ້ສະເພາະແຕ່ເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ທີ່ກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດ ຕໍ່ຊີວະນານາພັນ, ຄຸນນະພາບຂອງດິນ ແລະ ສິ່ງແວດລ້ອມ. ສຳລັບການນຳໃຊ້ ສັດນ້ຳ ແລະ ສັດປ່າໃນປ່າສະຫງວນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

ການນຳໃຊ້ປ່າສະຫງວນ ແບ່ງອອກເປັນປະເພດ ດັ່ງນີ້:

1. ນຳໃຊ້ເພື່ອສາລະນະປະໂຫຍດ:

2. ນຳໃຊ້ເພື່ອຄອບຄົວ;

3. ນຳໃຊ້ຕາມປະເພນີ;

4. ນຳໃຊ້ເພື່ອທຸລະກິດ.

**ມາດຕາ 46 ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ປ່າສະຫງວນ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດປ່າໄມ້ ແລະ ຊີວະນານາພັນ, ການຄ້າຂາຍກາກບອນປ່າໄມ້, ການຈ່າຍຄ່າບໍລິການດ້ານສິ່ງແວດລ້ອມ, ການທ່ອງທ່ຽວແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາສະຖານທີ່ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງປະຫວັດສາດ, ວັດທະນະ ທຳ ຊຶ່ງການນຳໃຊ້ນັ້ນ ຕ້ອງສອດຄ່ອງກັບແຜນຈັດສັນປ່າສະຫງວນ ແລະ ກົດໝາຍ.

ສຳລັບການນຳໃຊ້ໄມ້ ເພື່ອສາທາລະນະປະໂຫຍດ ແມ່ນ ໃຊ້ເພື່ອການປຸກສ້າງຫ້ອງການ, ສະໂມສອນ , ໂຮງຮຽນ, ສຸກສາລາ, ວັດ, ຂົວ ໂດຍໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມແຜນການຂຸດຄົ້ນໄມ້ປະຈຳປີຂອງ ແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 47 ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງໃນປ່າສະຫງວນ ເພື່ອຜົນປະໂຫຍດ ຂອງປະຊາຊົນໃນບ້ານ.

ສຳລັບການນຳໃຊ້ໄມ້ ເພື່ອຜົນປະໂຫຍດຂອງຄອບຄົວ ແມ່ນ ນຳໃຊ້ ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈຳເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກໄພພິບັດ ໂດຍໃຫ້ນຳໃຊ້ໄມ້ ຈາກປ່າຊົມໃຊ້ຂອງບ້ານທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ ຕາມລະບຽບການ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ສາມາດເກັບກູ້ ແລະ ນຳໃຊ້ໄດ້.

**ມາດຕາ 48 ການນຳໃຊ້ຕາມປະເພນີ**

ການນຳໃຊ້ປ່າສະຫງວນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ໃນປ່າສະຫງວນ ຕາມປະເພນີ ແມ່ນ ການຊົມໃຊ້ ທີ່ເຄີຍປະຕິບັດກັນມາ ແລະ ໃຫ້ໃຊ້ສະເພາະໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນປ່າສະຫງວນ ແລະ ກົດໝາຍ.

**ມາດຕາ 49 ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ປ່າສະຫງວນ ເພື່ອທຸລະກິດ ແມ່ນ ການນຳໃຊ້ປ່າສະຫງວນ ເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຄ້າຂາຍກາກບອນປ່າໄມ້, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານ ການນຳໃຊ້ແບບຍືນຍົງ ແລະ ປະຕິບັດລຳດັບມາດຕະການ ຫຼຸດຜ່ອນຜົນກະທົບ ແລະ ຕ້ອງປະຕິບັດຕາມແຜນຈັດສັນປ່າສະຫງວນ.

ການນຳໃຊ້ເຄື່ອງປ່າຂອງດົງໃນປ່າສະຫງວນ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າສະຫງວນ ໂດຍສອດຄ່ອງກັບແຜນຈັດສັນປ່າສະຫງວນ ແລະ ກົດໝາຍ.

**ມາດຕາ 50 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າສະຫງວນ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າສະຫງວນ ມີສິດ ດັ່ງນີ້:

1. ນຳໃຊ້ປ່າສະຫງວນ ຕາມການອະນຸຍາດ;

2. ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ ແລະ ດຳເນີນກິດຈະການໃນປ່າສະຫງວນຕາມແຜນຈັດ ສັນປ່າສະຫງວນ, ກົດໝາຍ ແລະ ລະບຽບການ;

3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າສະຫງວນ ມີພັນທະ ດັ່ງນີ້:

1. ນຳໃຊ້ປ່າສະຫງວນໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນຈັດສັນປ່າສະຫງວນ, ກົດໝາຍ ແລະ ລະບຽບການ;

2. ຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ປ່າສະຫງວນໃຫ້ອຸດົມສົມບູນ ແລະ ຍືນຍົງ;

3. ປົກປັກຮັກສາສິ່ງແວດລ້ອມ, ຍອດນ້ຳ, ແຫຼ່ງນ້ຳ, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າສະຫງວນ;

4. ເປັນເຈົ້າການ, ເຂົ້າຮ່ວມ ຫຼື ປະກອບສ່ວນ ໃນການປ້ອງກັນ ແລະ ສະກັດກັ້ນ ການທຳລາຍປ່າ, ໄຟໄໝ້ລາມປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າ ສະຫງວນ;

5. ຈ່າຍຄ່າ ສຳລັບການຈັດຕັ້ງປະຕິບັດ ລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 62 ການຄຸ້ມຄອງປ່າສະຫງວນ**

ປ່າສະຫງວນ ແຕ່ລະແຫ່ງ ມີກອງຄຸ້ມຄອງປ່າສະຫງວນ ກອງໜຶ່ງ ຄຸ້ມຄອງ ແລະ ບໍລິຫານ.

ປ່າສະຫງວນລະດັບຊາດ ທີ່ກວມເອົາຫຼາຍແຂວງ ແລະ ປ່າສະຫງວນ ທີ່ຂຶ້ນທະບຽນ ເປັນປ່າສະຫງວນລະດັບພາກພື້ນ ແລະ ສາກົນ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າສະຫງວນລະດັບຊາດ ທີ່ບໍ່ກວມເອົາຫຼາຍແຂວງ ແມ່ນອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເປັນຜູ້ຄຸ້ມຄອງ ໂດຍແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເສນາທິການ ໂດຍກົງ.

ປ່າສະຫງວນລະດັບແຂວງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ສົມທົບກັບອົງການປົກຄອງເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າສະຫງວນລະດັບເມືອງ ແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ສົມທົບກັບອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ.

ປ່າສະຫງວນລະດັບບ້ານ ແມ່ນ ອົງການປົກຄອງບ້ານ ເປັນຜູ້ຄຸ້ມຄອງ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າສະຫງວນ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ກ່ຽວກັບວຽກງານປ່າສະຫງວນ;

3. ເຂົ້າຮ່ວມຕິດຕາມກວດກາ ແລະ ປະເມີນຜົນ ກ່ຽວກັບການດຳເນີນວຽກງານໃນເຂດປ່າສະຫງວນ;

4. ເຂົ້າຮ່ວມຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງປ່າສະຫງວນແບບຍືນຍົງ; 5. ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້ ແລະ ຟື້ນຟູປ່າສະຫງວນລະດັບບ້ານ ຕາມແຜນຈັດສັນປ່າໄມ້ ຂັ້ນບ້ານ ແນໃສ່ສ້າງບ້ານໃຫ້ກາຍເປັນບ້ານພັດທະນາປ່າໄມ້;

6. ຕິດຕາມ, ຕ້ານ ແລະ ສະກັດກັ້ນການເຄື່ອນໄຫວທີ່ຜິດກົດໝາຍໃນປ່າສະຫງວນ ເປັນຕົ້ນ ການລັກລອບຕັດໄມ້, ການຈູດປ່າ, ໄຟໄໝ້ລາມປ່າ, ການລັກລອບລ່າສັດ, ການເກັບກູ້ເຄື່ອງປ່າຂອງດົງ ທີ່ບໍ່

ຖືກຕ້ອງຕາມກົດໝາຍ ແລະ ທຸກການກະທຳທີ່ເປັນການທຳລາຍປ່າໄມ້ ແລ້ວລາຍງານໃຫ້ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຢ່າງທັນການ;

7. ສະເໜີ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ກ່ຽວກັບການສ້າງຕັ້ງກອງຄຸ້ມຄອງປ່າສະຫງວນລະດັບບ້ານ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປ່າສະຫງວນ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**3.2 ດຳລັດ ວ່າດ້ວຍປ່າະລິດ ສະບັບເລກທີ 02/ລບ, ລົງວັນທີ 04 ມັງກອນ 2024**

**ມາດຕາ 2 ປ່າຜະລິດ**

ປ່າຜະລິດ ແມ່ນ ປ່າໄມ້ທຳມະຊາດ ແລະ ປ່າປູກ ລວມທັງທີ່ດິນປ່າໄມ້ ທີ່ໄດ້ກຳນົດເປັນເຂດສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ- ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານປ່າຜະລິດ**

ວຽກງານປ່າຜະລິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງ ຊາດ, ແຜນຍຸດທະສາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຮັບປະກັນ ການຄຸ້ມຄອງປ່າຜະລິດ ເປັນລະບົບ ແລະ ເປັນເອກະພາບໃນທົ່ວປະເທດ;

3. ຮັບປະກັນສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງ ການ ຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ;

4. ຮັບປະກັນການມີສ່ວນຮ່ວມ ຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການປະສານສົມທົບ ກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ຮັບປະກັນຜົນປະໂຫຍດ ຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຜະລິດ ຕາມກົດໝາຍ.

**ມາດຕາ 5 ເງື່ອນໄຂການກຳນົດປ່າຜະລິດ**

ການກຳນົດປ່າຜະລິດ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ບໍ່ແມ່ນປ່າປ້ອງກັນ ແລະ ປ່າສະຫງວນ, ບໍ່ກວມເອົາເຂດຍຸດທະສາດປ້ອງກັນຊາດ ແລະ ເຂດກໍ່ສ້າງ ພື້ນຖານໂຄງລ່າງ ເພື່ອການພັດທະນາ ເຊັ່ນ ເຂດອຸດສາຫະກຳ, ເຂດກະສິກຳຖາວອນ, ເຂດວັດທະ ນະທຳ ແລະ ທ່ອງທ່ຽວ ແລະ ອື່ນໆ;
2. ບໍ່ລວມເອົາເນື້ອທີ່ປ່າໄມ້, ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ທີ່ໄດ້ຈັດສັນໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້;

3. ຫ່າງຈາກຊາຍແດນລະຫວ່າງຊາດ ຢ່າງໜ້ອຍ ຫ້າ ກິໂລແມັດ;

4. ມີເນື້ອທີ່ ຢ່າງໜ້ອຍ ຫ້າພັນ ເຮັກຕາ

**ມາດຕາ 6 ການກຳນົດປ່າຜະລິດ**

ການກຳນົດປ່າຜະລິດ ແມ່ນ ການກຳນົດເອົາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນປ່າຜະລິດ ລວມທັງການຂຶ້ນທະບຽນ ແລະ ການປ່ຽນແປງເນື້ອທີ່ ປ່າຜະລິດ. ການກຳນົດປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ດຳເນີນການ ສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ສະພາບປ່າໄມ້, ການນຳໃຊ້ ທີ່ດິນ ແລະ ຊັບພະຍາກອນປ່າໄມ້ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ເຂດທີ່ ຈະກຳນົດເປັນປ່າຜະລິດ;

2. ສ້າງແຜນທີ່ສະແດງ ຂອບເຂດທີ່ຕັ້ງ ແລະ ຂໍ້ມູນຈາກການສຳຫຼວດ ເປັນຕົ້ນ ສະພາບພື້ນທີ່, ປ່າໄມ້, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້;

3. ເປີດກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ເພື່ອຄວາມເປັນເອກະພາບ;

4. ສະເໜີອົງການທີ່ມີສິດອຳນາດ ພິຈາລະນາຮັບຮອງ;

5. ສະເໜີຂຶ້ນທະບຽນທີ່ດິນປ່າຜະລິດ.

**ມາດຕາ 7 ການຮັບຮອງປ່າຜະລິດ**

ລັດຖະບານ ເປັນຜູ້ຮັບຮອງປ່າຜະລິດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະພາບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງ ຂັ້ນແຂວງທີ່ກ່ຽວ ຂ້ອງ.

**ມາດຕາ 8 ການຂຶ້ນທະບຽນທີ່ດິນປ່າຜະລິດ**

ການຂຶ້ນທະບຽນທີ່ດິນປ່າຜະລິດ ແມ່ນ ການຂຶ້ນທະບຽນອອກໃບຕາດິນລັດ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອສະດວກໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າຜະລິດ.

ປ່າຜະລິດ ທີ່ຖືກຮັບຮອງ ຕາມມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ອົງການຄຸ້ມຄອງ ແລະ ກວດກາວຽກງານປ່າຜະລິດ ສະເໜີຂຶ້ນທະບຽນອອກໃບຕາດິນປ່າຜະລິດ ນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 16 ການປະມູນຊື້ ຂາຍ ໄມ້, ເຄື່ອງປ່າຂອງດົງ ແລະ ການແບ່ງປັນລາຍຮັບຈາກການຂາຍໄມ້ ແລະ ເຄື່ອງ ປ່າຂອງດົງ**

ການຊື້ ຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກປ່າຜະລິດ ຕ້ອງດຳເນີນການປະມູນແບບເປີດກວ້າງ ແນໃສ່ຮັບປະກັນຜົນປະໂຫຍດສູງສຸດຂອງລັດ. ການແບ່ງປັນລາຍຮັບຈາກການຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນໃນປ່າຜະລິດ ໃຫ້ປະຕິບັດຕາມ ລັດຖະບັນຍັດວ່າດ້ວຍການແບ່ງປັນລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນຈາກປ່າຜະລິດທີ່ປະກາດໃຊ້ແຕ່ລະໄລຍະ.

**ມາດຕາ 18 ການປົກປັກຮັກສາປ່າຜະລິດ**

ການປົກປັກຮັກສາປ່າຜະລິດ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 49 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສະກັດກັ້ນ ແລະ ຕ້ານ ການບຸກລຸກ, ທຳລາຍ ແລະ ຈັບຈອງ ທີ່ດິນປ່າຜະລິດ;
2. ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ປ່າ;
3. ການກັນ ແລະ ຕ້ານ ພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດ ສັດປ່າ;
4. ການປົກປັກຮັກສາຊີວະນານາພັນ;
5. ການປູກຈິດສຳນຶກ;
6. ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບ ຂອງໂຄງການລົງທຶນ.

**ມາດຕາ 19 ການສະກັດກັ້ນ ແລະ ຕ້ານການບຸກລຸກ, ທຳລາຍ ແລະ ຈັບຈອງທີ່ດິນປ່າ ຜະລິດ**

ການສະກັດກັ້ນ ແລະ ຕ້ານການບຸກລຸກ, ທຳລາຍ ແລະ ຈັບຈອງທີ່ດິນປ່າຜະລິດ ແມ່ນ ການເຄື່ອນໄຫວກວດກາລາດຕະເວນ, ສະກັດກັ້ນ ແລະ ຕ້ານການເຊື່ອມໂຊມຂອງປ່າໄມ້, ການບຸກລຸກ ແລະ ທຳລາຍປ່າໄມ້, ສັດນ້ຳ, ສັດປ່າ ແລະ ການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ ໂດຍການຕັ້ງຈຸດກວດກາຕາມຈຸດຫຼໍ່ແຫຼມ ຫຼື ເສັ້ນທາງ ເຂົ້າ-ອອກ, ຕັ້ງປ້ອມຍາມປ່າ, ສ້າງແຜນທີ່ລາດຕະເວນ ໃນປ່າຜະລິດຕາມເຕັກນິກວິຊາການ ທີ່ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ການປົກປັກຮັກສາຊີວະນານາພັນ**

ການປົກປັກຮັກສາຊີວະນານາພັນ ແມ່ນ ການປົກປັກຮັກສາຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນປ່າຜະລິດ ບໍ່ໃຫ້ຖືກທຳລາຍ ແລະ ໃຫ້ມີຄວາມອຸດົມສົມບູນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ ເພື່ອປົກປັກຮັກສາຊີວະນານາພັນ ເປັນຕົ້ນ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນ ສັດປ່າ ແລະ ເຄື່ອງປ່າຂອງດົງ ປະເພດ ຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ດ້ວຍການສຳຫຼວດ, ກຳນົດ ເຂດແຫຼ່ງພັນ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ, ກຳນົດແຜນການ ອະນຸລັກ, ປົກປັກຮັກສາ ແລະ ພື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 23 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າຜະລິດ ໃຫ້ສັງຄົມຮັບຮູ້ຢ່າງທົ່ວ ເຖິງ ໂດຍຜ່ານ ສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະ ກຳຕ່າງໆ ກ່ຽວກັບການປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ສິ່ງແວດລ້ອມ, ຊີວະນານາພັນ, ສັດນ້ຳ ແລະ ສັດປ່າ.

ອີງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດໍາເນີນວຽກງານປູກຈິດສໍານຶກ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າຜະລິດ ແບບຍືນຍົງ.

**ມາດຕາ 25 ການພັດທະນາປ່າຜະລິດ**

ການພັດທະນາປ່າຜະລິດ ນອກຈາກດໍາເນີນຕາມກິດຈະການ ທີ່ໄດ້ກໍານົດໄວ້ໃນ ໝວດທີ 3 ຂອງພາກທີ IV ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການຟື້ນຟູລະບົບນິເວດປ່າໄມ້;
2. ການຟື້ນຟູປ່າໄມ້ແບບທໍາມະຊາດ ແລະ ການປູກເສີມ;
3. ການພັດທະນາຊີວິດການເປັນຢູ່;
4. ການສ້າງບ້ານພັດທະນາປ່າໄມ້;
5. ການທ່ອງທ່ຽວແບບອະນຸລັກ;
6. ການສຶກສາຄົ້ນຄວ້າ;
7. ລະບົບຂໍ້ມູນ ຂ່າວສານປ່າຜະລິດ,

**ມາດຕາ 33 ການນໍາໃຊ້ປ່າຜະລິດ**

ການນໍາໃຊ້ປ່າຜະລິດ ລວມທັງ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ນໍາໃຊ້ສະເພາະແຕ່ ໃນເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນໍາໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ ປ່າໄມ້, ທີ່ດິນປ່າໄມ້ ແລະ ເຄື່ອງປ່າຂອງດົງ, ຄຸນນະພາບຂອງດິນ ແລະ ສິ່ງແວດລ້ອມ.

ການນໍາໃຊ້ປ່າຜະລິດ ແບ່ງອອກເປັນ ສີ່ ປະເພດ ດັ່ງນີ້:

1. ນໍາໃຊ້ເພື່ອສາທາລະນະປະໂຫຍດ;
2. ນໍາໃຊ້ເພື່ອຄອບຄົວ;
3. ນໍາໃຊ້ຕາມປະເພນີ;
4. ນໍາໃຊ້ເພື່ອທຸລະກິດ.

**ມາດຕາ 34 ການນໍາໃຊ້ເພື່ອສາທາລະນະປະໂຫຍດ**

ການນໍາໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນໍາໃຊ້ປ່າຜະລິດ ເພື່ອຜົນປະໂຫຍດຂອງປະຊາຊົນ , ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດປ່າໄມ້ ແລະ ຊີວະນານາພັນ, ການຊື້ ຂາຍກາກບອນປ່າໄມ້, ການທ່ອງທ່ຽວ ແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາສະຖານທີ່ ທີ່ມີຄວາມສໍາຄັນ, ມີຄຸນຄ່າທາງ ປະຫວັດສາດ ແລະ ວັດທະນະທໍາ ຊຶ່ງການນໍາໃຊ້ນັ້ນຕ້ອງສອດຄ່ອງ ກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

ສໍາລັບການນໍາໃຊ້ໄມ້ເພື່ອສາທາລະນະປະໂຫຍດ ແມ່ນ ໃຊ້ເຂົ້າໃນການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ໂດຍໃຫ້ນໍາໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ

ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມແຜນການຂຸດຄົ້ນໄມ້ປະຈຳ ປີ ຂອງແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດທີ່ໄດ້ຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 35 ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳໃຊ້ ໄມ້ ແລະ ເຄື່ອງປ່າຂອງດົງ ໃນປ່າຜະລິດ ເພື່ອຜົນປະໂຫຍດຂອງປະຊາຊົນໃນບ້ານ.

ສຳລັບການນຳໃຊ້ໄມ້ ເພື່ອຜົນປະໂຫຍດຂອງຄອບຄົວ ແມ່ນ ນຳໃຊ້ ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈຳເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍ ຈາກໄພພິບັດ ໂດຍໃຫ້ນຳໃຊ້ໄມ້ ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ສາມາດເກັບກູ້ ແລະ ນຳໃຊ້ໄດ້.

**ມາດຕາ 36 ການນຳໃຊ້ຕາມປະເພນີ**

ການນຳໃຊ້ຕາມປະເພນີ ແມ່ນ ການຊົມໃຊ້ປ່າຜະລິດ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເຄີຍປະຕິ ບັດກັນມາ ແລະ ໃຫ້ໃຊ້ສະເພາະໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

**ມາດຕາ 37 ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ເພື່ອທຸລະກິດ ແມ່ນ ການນຳໃຊ້ປ່າຜະລິດເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຊື້ ຂາຍສິນເຊື້ອກາກບອນປ່າໄມ້, ບັນດາໂຄງການພັດທະນາພື້ນຖານ ໂຄງລ່າງ, ຂຸດຄົ້ນແຮ່ທາດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານການນຳໃຊ້ ແບບຍືນຍົງ ແລະ ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ຕ້ອງປະຕິບັດຕາມແຜນຈັດສັນປ່າ ຜະລິດ.

ການນຳໃຊ້ເຄື່ອງປ່າຂອງດົງໃນປ່າຜະລິດ ເພື່ອເປັນສິນຄ້າໃຫ້ດຳເນີນໃນເຂດປ່າຜະລິດ ໂດຍສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

**ມາດຕາ 38 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າຜະລິດ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າຜະລິດ ມີສິດ ດັ່ງນີ້:

1. ນຳໃຊ້ປ່າຜະລິດ ຕາມການອະນຸຍາດ;

2. ໄດ້ຮັບຜົນປະໂຫຍດ ຈາກການນຳໃຊ້ ແລະ ດຳເນີນກິດຈະການໃນປ່າຜະລິດ ຕາມແຜນຈັດສັນປ່າຜະລິດ, ກົດໝາຍ ແລະ ລະບຽບການ;

3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າຜະລິດ ມີພັນທະ ດັ່ງນີ້:

1. ນຳໃຊ້ປ່າຜະລິດ ໃຫ້ຖືກຕ້ອງ ຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບ ແຜນຈັດສັນປ່າຜະລິດ, ກົດ ໝາຍ ແລະ ລະບຽບການ;

2. ປູກ ແລະ ຟື້ນຟູ, ປົກປັກຮັກສາ ແລະ ພັດທະນາປ່າຜະລິດໃຫ້ອຸດົມສົມບູນ ແລະ ຍືນຍົງ,

3. ປົກປັກຮັກສາສິ່ງແວດລ້ອມ, ຍອດນໍ້າ, ແຫຼ່ງນໍ້າ, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ໃນປ່າຜະລິດ;

4. ເປັນເຈົ້າການ, ເຂົ້າຮ່ວມ ຫຼື ປະກອບສ່ວນໃນການປ້ອງກັນ, ສະກັດກັ້ນ ແລະ ຕ້ານການທຳລາຍປ່າ, ໄຟ ໄໝ້ປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ໃນປ່າຜະລິດ;

5. ຈ່າຍຄ່າສຳລັບການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### 3.3 ດຳລັດ ວ່າດ້ວຍປ່າປ້ອງກັນ ສະບັບເລກທີ 01/ລບ, ລົງວັນທີ 04 ມັງກອນ 2024

**ມາດຕາ 2 ປ່າປ້ອງກັນ**

ປ່າປ້ອງກັນ ແມ່ນ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການຮັກສາ ແຫຼ່ງນໍ້າ, ແຄມນໍ້າ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ- ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານປ່າປ້ອງກັນ**

ວຽກງານປ່າປ້ອງກັນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ ບົດຈັດສັນທີ່ດິນແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຮັບປະກັນ ການຄຸ້ມຄອງປ່າປ້ອງກັນ ເປັນລະບົບ ແລະ ເປັນເອກະພາບ ໃນທົ່ວປະເທດ;

3. ຮັບປະກັນຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;

4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ:

5. ຮັບປະກັນຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນ ຕາມກົດໝາຍ.

**ມາດຕາ 5 ລະດັບປ່າປ້ອງກັນ**

ປ່າປ້ອງກັນ ຈັດເປັນ ສີ່ ລະດັບ ດັ່ງນີ້:

1. ປ່າປ້ອງກັນແຫ່ງຊາດ;

2. ປ່າປ້ອງກັນ ລະດັບແຂວງ;

3. ປ່າປ້ອງກັນ ລະດັບເມືອງ;

4. ປ່າປ້ອງກັນ ລະດັບບ້ານ.

**ມາດຕາ 6 ປ່າປ້ອງກັນແຫ່ງຊາດ**

ປ່າປ້ອງກັນແຫ່ງຊາດ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ຫຼາຍກວ່າ ສາມສິບພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະສາດ ໃນລະດັບຊາດ, ພາກພື້ນ ຫຼື ສາກົນ.

**ມາດຕາ 7 ປ່າປ້ອງກັນ ລະດັບແຂວງ**

ປ່າປ້ອງກັນ ລະດັບແຂວງ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ສອງພັນ ຫາ ສາມສິບພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະ ສາດໃນລະດັບແຂວງ.

**ມາດຕາ 8 ປ່າປ້ອງກັນ ລະດັບເມືອງ**

ປ່າປ້ອງກັນ ລະດັບເມືອງ ແມ່ນປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ໜຶ່ງຮ້ອຍ ຫາ ຕໍ່າກວ່າ ສອງພັນ ເຮັກຕາ, ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະ ສາດໃນລະດັບເມືອງ.

**ມາດຕາ 9 ປ່າປ້ອງກັນ ລະດັບບ້ານ**

ປ່າປ້ອງກັນ ລະດັບບ້ານ ແມ່ນ ປ່າປ້ອງກັນ ທີ່ມີເນື້ອທີ່ ແຕ່ ສູນຈຸດຫ້າ ຫາ ຕໍ່າກວ່າ ໜຶ່ງຮ້ອຍ ເຮັກຕາ , ມີຄຸນລັກສະນະທາງດ້ານພູມີສາດ, ປະຫວັດສາດ, ວັດທະນະທຳ, ທຳມະຊາດ, ຊີວະນານາພັນ ຫຼື ເປັນເຂດຍຸດທະ ສາດໃນລະດັບບ້ານ.

**ມາດຕາ 14 ການຄຸ້ມຄອງປ່າປ້ອງກັນ**

ໃນການຄຸ້ມຄອງປ່າປ້ອງກັນ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສຳຫຼວດພູມີທັດປ່າປ້ອງກັນ,

2. ການສ້າງ ແລະ ຮັບຮອງ ແຜນຈັດສັນປ່າປ້ອງກັນ;

3. ການຕິດປ້າຍ ແລະ ປັກຫຼັກໝາຍ ເຂດປ່າປ້ອງກັນ;

4. ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ.

**ມາດຕາ 22 ການສະກັດກັ້ນ ແລະ ຕ້ານການບຸກລຸກ ແລະ ທຳລາຍປ່າປ້ອງກັນ**

ການສະກັດກັ້ນ ແລະ ຕ້ານການບຸກລຸກ ແລະ ທຳລາຍປ່າປ້ອງກັນ ແມ່ນ ການເຄື່ອນໄຫວ ກວດກາ ລາດຕະເວນ, ສະກັດກັ້ນ ແລະ ຕ້ານ ການເຊື່ອມໂຊມຂອງປ່າໄມ້, ການບຸກລຸກ ແລະ ທຳລາຍ ປ່າໄມ້, ສັດ ນ້ຳ, ສັດປ່າ ແລະ ການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບ ກັບ ຂະ ແ ໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າປ້ອງກັນ ໂດຍ ການຕັ້ງ ຈຸດກວດກາ ຕາມຈຸດຫຼໍ່ແຫຼມ ຫຼື ເສັ້ນທາງ ເຂົ້າ ອອກ, ຕັ້ງປ້ອມຍາມປ່າ, ສ້າງແຜນທີ່ລາດຕະເວນ ໃນ ເຂດປ່າ ປ້ອງກັນ ຕາມເຕັກນິກວິຊາການ.

**ມາດຕາ 25 ການປົກປັກຮັກສາຊີວະນານາພັນ**

ການປົກປັກຮັກສາຊີວະນານາພັນ ແມ່ນ ການປົກປັກຮັກສາຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນປ່າປ້ອງກັນ ບໍ່ໃຫ້ຖືກທຳ ລາຍ ແລະ ໃຫ້ມີຄວາມອຸດົມສົມບູນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າປ້ອງກັນ ເປັນເຈົ້າການປະສານສົມທົບກັບອົງການ ປົກຄອງ ທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າປ້ອງກັນ ເພື່ອປົກປັກຮັກສາຊີວະນານາພັນ ເປັນຕົ້ນ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນ ສັດປ່າ ແລະ ເຄື່ອງປ່າຂອງດົງ ປະເພດຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ດ້ວຍການສຳຫຼວດ, ກຳນົດ ເຂດແຫຼ່ງ ພັນ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ ພ້ອມທັງກຳນົດ ແຜນການ ອະນຸລັກ, ປົກປັກຮັກສາ ແລະ ຟື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 26 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳ ຄັນ ຂອງວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນ ໃຫ້ສັງຄົມຮັບຮູ້ ຢ່າງທົ່ວເຖິງ ໂດຍຜ່ານ ສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງ ກົດ ຈະກຳຕ່າງໆ ກ່ຽວກັບການປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ສິ່ງແວດລ້ອມ, ຊີວະ ນານາ ພັນ, ສັດນ້ຳ ແລະ ສັດປ່າ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກ ປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າປ້ອງກັນ ແບບຍືນຍົງ.

**ມາດຕາ 28 ການພັດທະນາປ່າປ້ອງກັນ**

ການພັດທະນາປ່າປ້ອງກັນ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ພາກທີ IV ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການຟື້ນຟູລະບົບນິເວດປ່າໄມ້;

2. ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ;

3. ການພັດທະນາຊີວິດການເປັນຢູ່;

4. ການສ້າງບ້ານພັດທະນາປ່າໄມ້,

5. ການທ່ອງທ່ຽວແບບອະນຸລັກ;

6. ການສຶກສາຄົ້ນຄວ້າ,

7. ລະບົບຂໍ້ມູນ ຂ່າວສານປ່າປ້ອງກັນ.

**ມາດຕາ 36 ການນຳໃຊ້ປ່າປ້ອງກັນ**

ການນຳໃຊ້ປ່າປ້ອງກັນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ນຳໃຊ້ສະເພາະແຕ່ເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ລະບົບນິເວດປ່າໄມ້, ຊີວະນານາພັນ, ຄຸນນະພາບຂອງດິນ ແລະ ສິ່ງແວດລ້ອມ.

ການນຳໃຊ້ປ່າປ້ອງກັນ ແບ່ງອອກເປັນປະເພດ ດັ່ງນີ້:

1. ນຳໃຊ້ເພື່ອສາທາລະນະປະໂຫຍດ;

2. ນຳໃຊ້ເພື່ອຄອບຄົວ;

3. ນຳໃຊ້ຕາມປະເພນີ,

4. ນຳໃຊ້ເພື່ອທຸລະກິດ.

**ມາດຕາ 37 ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ປ່າປ້ອງກັນ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດປ່າໄມ້ ແລະ ຊີວະນານາພັນ, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້, ການທ່ອງທ່ຽວແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາ ສະຖານທີ່ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ ຊຶ່ງການນຳໃຊ້ນັ້ນຕ້ອງສອດ ຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

ສຳລັບການນຳໃຊ້ໄມ້ ເພື່ອເກຫາລະນະປະໂຫຍດ ແມ່ນ ໃຊ້ເພື່ອການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ຂອງບ້ານ ໂດຍໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມກົດໝາຍ ໂດຍສອດຄ່ອງກັບແຜນການຂຸດຄົ້ນໄມ້ປະຈຳປີຂອງ ແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດ ທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 38 ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງໃນປ່າປ້ອງກັນ ເພື່ອຜົນປະໂຫຍດ ຂອງປະຊາຊົນໃນບ້ານ.

ສຳລັບການນຳໃຊ້ໄມ້ ເພື່ອຜົນປະໂຫຍດຂອງຄອບຄົວ ແມ່ນ ນຳໃຊ້ເພື່ອປຸກສ້າງ ແລະ ສ້ອມແປງເຮືອນ ສະເພາະຄອບຄົວທີ່ຈຳເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກ ໄພພິບັດ ໂດຍໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ.

ສ່ວນການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ສາມາດເກັບກູ້ ແລະ ນຳໃຊ້ໄດ້ ຍົກເວັ້ນເຂດຫວງຫ້າມເດັດຂາດ.

**ມາດຕາ 39 ການນຳໃຊ້ຕາມປະເພນີ**

ການນຳໃຊ້ ຕາມປະເພນີ ແມ່ນ ການຊົມໃຊ້ປ່າປ້ອງກັນ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ຕາມທີ່ເຄີຍປະຕິບັດກັນມາ ແລະ ໃຫ້ໃຊ້ສະເພາະໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

**ມາດຕາ 40 ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ ເພື່ອທຸລະກິດ ແມ່ນ ການນຳໃຊ້ປ່າປ້ອງກັນ ເຂົ້າໃນການທ່ອງທ່ຽວທຳມະຊາດ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຊື້ ຂາຍສິນເຊື້ອກາກບອນປ່າໄມ້, ບັນດາໂຄງການພັດທະນາພື້ນຖານໂຄງລ່າງ, ຂຸດຄົ້ນແຮ່ທາດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານ ການນຳໃຊ້ແບບຍືນຍົງ, ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ປະຕິບັດຕາມແຜນ ຈັດສັນປ່າປ້ອງກັນ ແລະ ກົດໝາຍ.

ການນຳໃຊ້ເຄື່ອງປ່າຂອງດົງໃນປ່າປ້ອງກັນ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າປ້ອງກັນ ໂດຍສອດຄ່ອງກັບແຜນຈັດສັນປ່າປ້ອງກັນ ແລະ ກົດໝາຍ.

**ມາດຕາ 41 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າປ້ອງກັນ**

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າປ້ອງກັນ ມີສິດ ດັ່ງນີ້:

1. ນຳໃຊ້ປ່າປ້ອງກັນ ຕາມການອະນຸຍາດ;

2. ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ ແລະ ດຳເນີນກິດຈະການໃນປ່າປ້ອງກັນຕາມແຜນຈັດສັນປ່າປ້ອງກັນ, ກົດໝາຍ ແລະ ລະບຽບການ;

3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ປ່າປ້ອງກັນ ມີພັນທະ ດັ່ງນີ້:

1. ນຳໃຊ້ປ່າປ້ອງກັນໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນຈັດສັນປ່າປ້ອງກັນ , ກົດໝາຍ ແລະ ລະບຽບການ;

2. ຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ປ່າປ້ອງກັນໃຫ້ອຸດົມສົມບູນ ແລະ ຍືນຍົງ;

3. ປົກປັກຮັກສາສິ່ງແວດລ້ອມ, ຍອດນ້ຳ, ແຫຼ່ງນ້ຳ, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າປ້ອງກັນ;

4. ເປັນເຈົ້າການ, ເຂົ້າຮ່ວມ ຫຼື ປະກອບສ່ວນ ໃນການປ້ອງກັນ ແລະ ສະກັດກັ້ນ ການທຳລາຍປ່າ, ໄຟໄໝ້ລາມປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າປ້ອງກັນ;

5. ຮັບຜິດຊອບຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**4. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012**

**ມາດຕາ 2 (ປັບປຸງ) ສິ່ງແວດລ້ອມ**

ສິ່ງແວດລ້ອມ ແມ່ນ ທຸກສິ່ງທຸກຢ່າງ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ຍ້ອນມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ: ຄົນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. ສິ່ງແວດລ້ອມ ປະກອບດ້ວຍ ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ.

**ມາດຕາ 3 (ປັບປຸງ) ການປົກປັກຮັກສາສິ່ງແວດລ້ອມ**

ການປົກປັກຮັກສາສິ່ງແວດລ້ອມ ແມ່ນ ການນຳໃຊ້ວິທີການ ແລະ ມາດຕະການ ເພື່ອປ້ອງ ກັນ, ອະນຸລັກ ແລະ ບູລະນະ ຟື້ນຟູ ສິ່ງແວດລ້ອມ, ຄວບຄຸມມົນລະພິດ, ເຫດການສຸກເສີນທາງດ້ານ ສິ່ງແວດລ້ອມ ແລະ

ໄພພິບັດທໍາມະຊາດ ເຮັດໃຫ້ສິ່ງແວດລ້ອມ ຂຽວສະອາດງາມຕາ, ປາສະຈາກມົນ ລະພິດ, ບໍ່ສົ່ງຜົນສະທ້ອນ ອັນບໍ່ດີ ຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ ແລະ ລະບົບນິເວດ.

**ມາດຕາ 7 (ປັບປຸງ) ພັນທະປົກປັກຮັກສາສິ່ງແວດລ້ອມ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະປົກປັກຮັກສາສິ່ງແວດລ້ອມ ດ້ວຍການປ້ອງກັນ, ປັບປຸງ, ບູລະນະ ຟື້ນຟູ, ຄວບຄຸມ, ຕິດຕາມ ແລະ ກວດກາສິ່ງແວດລ້ອມ ຕາມ ລະບຽບ ກົດໝາຍ, ບໍ່ສ້າງຜົນກະທົບ, ບໍ່ເຮັດໃຫ້ສິ່ງແວດລ້ອມ ເສື່ອມໂຊມ, ບໍ່ສ້າງ ແລະ ປ່ອຍ ມົນລະພິດ ເກີນມາດຕະຖານ ຄວບຄຸມມົນລະພິດ ແລະ ມາດຕະຖານຄຸນນະພາບ ສິ່ງແວດລ້ອມແຫ່ງຊາດ ແນໃສ່ຮັບປະກັນໃຫ້ສິ່ງແວດລ້ອມ ມີຄຸນນະພາບດີ ແລະ ຮັບປະກັນ ການພັດທະນາແບບຍືນຍົງ.

**ມາດຕາ 10 (ໃໝ່) ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ**

ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແມ່ນ ຜົນສະທ້ອນທາງລົບ ຕໍ່ຊີວິດ, ສຸຂະພາບ, ຊັບສິນ ແລະ ການດໍາລົງຊີວິດປະຈໍາວັນ ຂອງຄົນ ລວມທັງທີ່ຢູ່ອາໄສຂອງປະຊາຊົນ ແລະ ຕໍ່ມໍຣະດົກທາງດ້ານ ວັດທະ ນະທໍາ ແລະ ປະຫວັດສາດ.

**ມາດຕາ 11 (ໃໝ່) ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ**

ຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແມ່ນ ຜົນສະທ້ອນທາງລົບ ຕໍ່ພື້ນຖານ ລະບົບນິເວດ ທໍາມະຊາດ , ຊັບພະຍາກອນທໍາມະຊາດ, ຊີວະນາໆພັນ, ດິນປູກຝັງ, ແຫຼ່ງນໍ້າ ແລະ ການປ່ຽນແປງດິນ ຟ້າອາກາດ ລວມທັງມໍຣະດົກທາງດ້ານທໍາມະຊາດ,

**ມາດຕາ 12 (ໃໝ່) ຄວາມສໍາຄັນຂອງການປົກປັກຮັກສາສິ່ງແວດລ້ອມ**

ການປົກປັກຮັກສາສິ່ງແວດລ້ອມ ມີຄວາມສໍາຄັນ ຕໍ່ການຄົງຕົວ ແລະ ການຂະຫຍາຍຕົວຂອງສັງຄົມ ແລະ ທໍາມະຊາດ ໃນປັດຈຸບັນ ເພື່ອເຮັດໃຫ້ສິ່ງແວດລ້ອມ ຂຽວ, ສະອາດ, ງາມຕາ, ບໍ່ໃຫ້ ຖືກກະທົບ, ທໍາລາຍ, ປາສະຈາກມົນລະພິດ, ບໍ່ສົ່ງຜົນສະທ້ອນອັນບໍ່ດີ ຕໍ່ສຸຂະພາບຂອງຄົນ, ສັດ, ພືດ ຫຼື ຄວາມດຸນດ່ຽງ ຂອງລະບົບນິເວດ.

**ມາດຕາ 51 (ໃໝ່) ສິດຂອງຜູ້ນໍາໃຊ້ຊັບພະຍາກອນທໍາມະຊາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນໍາໃຊ້ຊັບພະຍາກອນທໍາມະຊາດ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 52 (ໃໝ່) ພັນທະຂອງຜູ້ນໍາໃຊ້ຊັບພະຍາກອນທໍາມະຊາດ**

**ຜູ້ນໍາໃຊ້ຊັບພະຍາກອນທໍາມະຊາດ ມີ ພັນທະ ດັ່ງນີ້:**

1. ນໍາໃຊ້ຊັບພະຍາກອນທໍາມະຊາດ ຢ່າງປະຢັດ, ສົມເຫດສົມຜົນ, ມີປະສິດທິຜົນ ແລະ ຍືນຍົງ;
2. ປະເມີນຜົນກະທົບ ທີ່ອາດເກີດຂຶ້ນ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດຈາກການນໍາໃຊ້ຊັບພະຍາກອນ ທໍາມະຊາດ ແລະ ດໍາເນີນການປ້ອງກັນ ຫຼື ຫຼຸດຜ່ອນຜົນກະທົບດັ່ງກ່າວ ຕາມທີ່ ໄດ້ກໍານົດໄວ້ໃນລະບຽບກົດ ໝາຍທີ່ກ່ຽວຂ້ອງ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ອື່ນ ໃນການນໍາໃຊ້ຊັບ ພະຍາກອນທໍາມະ ຊາດ;
4. ແກ້ໄຂຜົນກະທົບ ແລະ ບູລະນະ ຟື້ນຟູ ເຂດທີ່ໄດ້ຮັບຜົນກະທົບຈາກການນໍາໃຊ້ຊັບ ພະຍາກອນ ທໍາມະຊາດ;

5. ປະກອບສ່ວນ ແລະ ເຂົ້າຮ່ວມຢ່າງເປັນເຈົ້າການ ໃນຂະບວນການປົກປັກຮັກສາຊັບພະຍາກອນ ທຳມະຊາດ;
6. ຈ່າຍຄ່າຊັບພະຍາກອນທຳມະຊາດ, ຄ່າບໍລິການລະບົບນິເວດ ແລະ ຄ່າປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ;
7. ໃຊ້ແທນຄ່າເສັຍຫາຍ ທີ່ເກີດຈາກຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນການນຳ ໃຊ້ຊັບພະຍາກອນທຳມະຊາດ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 71 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບສິ່ງແວດລ້ອມ ດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນິປະນອມ ໂດຍຄູ່ກໍລະນີ;
2. ການໄກ່ເກັ່ຍ;
3. ການແກ້ໄຂທາງດ້ານບໍລິຫານ;
4. ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ການຮ້ອງຟ້ອງຕໍ່ສານປະຊາຊົນ;
6. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

**ມາດຕາ 72 (ໃໝ່) ການປະນິປະນອມ ໂດຍຄູ່ກໍລະນີ**

ໃນກໍລະນີ ມີຂໍ້ຂັດແຍ່ງ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດປຶກສາຫາລື ແລະ ປະນິປະນອມ ນຳກັນ ເພື່ອແກ້ໄຂຂໍ້ ຂັດແຍ່ງນັ້ນ.

**ມາດຕາ 73 (ໃໝ່) ການໄກ່ເກັ່ຍ**

ໃນກໍລະນີ ມີຂໍ້ຂັດແຍ່ງ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກັ່ຍ.

**ມາດຕາ 74 (ໃໝ່) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ມີຂໍ້ຂັດແຍ່ງ ທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຊຶ່ງບໍ່ ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ມີສິດສະເໜີໃຫ້ອົງການຄຸ້ມຄອງວຽກງານສິ່ງ ແວດລ້ອມ ພິຈາລະນາແກ້ໄຂ.

**ມາດຕາ 75 (ໃໝ່) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນກິດຈະການສິ່ງແວດລ້ອມ ຄູ່ກໍລະນີ ມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມລະບຽບກົດ ໝາຍ.

**ມາດຕາ 76 (ໃໝ່) ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງ ເນື່ອງຈາກການດຳເນີນກິດຈະການສິ່ງແວດລ້ອມ ຄູ່ກໍລະນີ ມີສິດຮ້ອງ ຟ້ອງຕໍ່ສານປະຊາຊົນ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

**ມາດຕາ 77 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບສິ່ງແວດລ້ອມ ທີ່ມີລັກສະນະສາກົນ ເປັນຕົ້ນ ມົນລະພິດຂ້າມຊາຍແດນ, ການຂົນສົ່ງສານເຄມີເປັນພິດ, ສິ່ງເສດເຫຼືອອັນຕະລາຍ, ອາຍພິດເໜືອນແກ້ວ ແມ່ນ ໃຫ້ປະຕິບັດຕາມລະບຽບ ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 78 (ປັບປຸງ) ອົງການຄຸ້ມຄອງວຽກງານສິ່ງແວດລ້ອມ**

ລັດຖະບານ ຄຸ້ມຄອງວຽກງານສິ່ງແວດລ້ອມ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບ ຜິດຊອບໂດຍກົງ ທັງເປັນເຈົ້າ ການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄົ້ນຄວ້າ, ກຳນົດນະໂຍບາຍ, ວາງແຜນຍຸດທະສາດ, ລະບຽບການ, ວິທີການ ແລະ ມາດຕະການໃນ ການປົກປັກຮັກສາສິ່ງແວດລ້ອມ.

**ອົງການຄຸ້ມຄອງວຽກງານສິ່ງແວດລ້ອມ ປະກອບດ້ວຍ:**

1. ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ;
3. ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ;
4. ໜ່ວຍງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງບ້ານ.

ໃນກໍລະນີທີ່ຈຳເປັນ ອາດສ້າງຕັ້ງຄະນະກຳມະການສິ່ງແວດລ້ອມ ແຫ່ງຊາດ, ແຂວງ, ນະຄອນຂຶ້ນ ກໍໄດ້.

**5. ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນ ທີ 11 ພຶດສະພາ 2017**

**ມາດຕາ 2 (ປັບປຸງ) ນ້ຳ ແລະ ຊັບພະຍາກອນນ້ຳ**

ນ້ຳ ແມ່ນ ຊັບພະຍາກອນທຳມະຊາດ ຊະນິດໜຶ່ງທີ່ເປັນທາດແຫຼວ ຊຶ່ງແມ່ນຊັບພະຍາກອນຕົ້ນຕໍ ແລະເປັນພື້ນຖານກວ່າໝູ່ໃນຊັບພະຍາກອນນ້ຳ.

ຊັບພະຍາກອນນ້ຳ ແມ່ນ ຊັບພະຍາກອນທຳມະຊາດ ຊຶ່ງປະກອບດ້ວຍ ນ້ຳ, ແຫຼ່ງນ້ຳ ແລະ ສິ່ງທີ່ມີຊີວິດ ຫຼື ບໍ່ມີຊີວິດ ຢູ່ໃນແຫຼ່ງນ້ຳ ເຊັ່ນ ພືດ, ສັດນ້ຳ, ຫີນ, ຫີນແຮ່, ຊາຍ, ຕົມ, ແຮ່ທາດ.

**ມາດຕາ 4 ກຳມະສິດກ່ຽວກັບ ນ້ຳ ແລະ ຊັບພະຍາກອນນ້ຳ**

ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຢູ່ໃນຜືນແຜ່ນດິນຂອງ ສປປ ລາວ ແມ່ນ ກຳມະສິດຂອງ ວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນໃນການຄຸ້ມຄອງ ແລະ ກຳນົດການແບ່ງ ປັນໃຫ້ພາກສ່ວນຕ່າງໆ ຊົມໃຊ້ ຢ່າງທົ່ວເຖິງ ແລະ ສົມເຫດສົມຜົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະມີສິດຄອບຄອງ ຫຼື ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ເຂົ້າໃນກິດຈະການໃດໜຶ່ງໄດ້ ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງຍົກເວັ້ນການນຳໃຊ້ ຂະໜາດນ້ອຍ.

**ມາດຕາ 6 (ປັບປຸງ) ຫຼັກການຄຸ້ມຄອງ ນ້ຳ ແລະ ຊັບພະຍາກອນນ້ຳ**

**ການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:**

1. ຮັບປະກັນການຄຸ້ມຄອງ, ການນຳໃຊ້, ການອະນຸລັກ ແລະ ປົກປັກຮັກສານ, ຊັບພະຍາກອນນ້ຳ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ;
2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິການ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ, ແຜນການຄຸ້ມຄອງ ນ້ຳ ແລະ ຊັບພະຍາກອນ ນ້ຳ,

ການປະເມີນສິ່ງແວດລ້ອມແບບຍຸດທະສາດ, ການຄຸ້ມຄອງຊັບພະຍາກອນ ນ້ຳແບບເຊື່ອມສານ ແລະ ວຽກງານປ້ອງກັນຊາດ;

3. ເອົາການປ້ອງກັນນ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນຕໍ ແລະ ເອົາການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ເປັນສຳຄັນ;
4. ຮັບປະກັນການມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງໃນການວາງແຜນການ, ການພັດທະນາ, ການນຳໃຊ້ ແລະ ການປົກປັກຮັກສານ ແລະ ຊັບພະຍາກອນນ້ຳ ໃຫ້ຍືນຍົງ
5. ຮັບຜິດຊອບຕໍ່ຄວາມເສຍຫາຍ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 7 (ປັບປຸງ) ພັນທະໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ນ້ຳ ແລະ ຊັບພະຍາ ກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້, ບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອຮັບປະກັນຄວາມຍືນຍົງທາງດ້ານປະລິມານ ແລະ ຄຸນນະພາບຂອງນ້ຳ ແລະ ຊັບພະຍາກອນນ້ຳ.

**ມາດຕາ 26 (ປັບປຸງ) ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພັນທະປົກປັກຮັກສານ ແລະ ຊັບພະຍາກອນນ້ຳ ໃຫ້ມີຄວາມອຸດົມສົມບູນ, ບໍ່ໃຫ້ກໍ່ຜົນເສຍຫາຍແກ່ນ້ຳ ແລະ ຊັບພະຍາກອນນ້ຳ ພ້ອມທັງປົກປັກຮັກສາ, ຟື້ນຟູ ແລະ ບູລະນະຊັບພະຍາກອນປ່າໄມ້ ແລະ ດິນ ໃນເຂດອ່າງຮັບນ້ຳ ຕາມແຜນຄຸ້ມຄອງຈັດສັນແຫຼ່ງນ້ຳ, ປ່າໄມ້, ທີ່ດິນ ແລະ ຕາມລະດູການຢ່າງເຂັ້ມງວດ ໂດຍສະເພາະໃນເຂດບໍລິເວນຕົ້ນກຳເນີດຂອງນ້ຳ ຫຼື ຢູ່ອ້ອມແອ້ມແຫຼ່ງນ້ຳ.

**ມາດຕາ 27 (ໃໝ່) ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ**

ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ ແມ່ນ ພື້ນທີ່ສະຫງວນໄວ້ ເພື່ອປົກປັກຮັກສາຄຸນນະພາບ ແລະ ປະລິມານຂອງນ້ຳ ເພື່ອບໍລິໂພກ ແລະ ອຸປະໂພກ, ປ້ອງກັນໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ອະນຸລັກ ພັນພືດ ແລະ ສັດນ້ຳ, ລະບົບນິເວດ, ຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງ ທ່ຽວ, ການສຶກສາ, ການຄົ້ນຄວ້າ ແລະ ທົດລອງວິທະຍາສາດ.

**ເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳມີ ດັ່ງນີ້:**

1. ເຂດສະຫງວນ ເພື່ອບໍລິໂພກ ແລະ ອຸປະໂພກ;
2. ເຂດບໍລິເວນຍອດນ້ຳ;
3. ເຂດທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ;
4. ເຂດທີ່ດິນບໍລິເວນນ້ຳ;
5. ເຂດທີ່ມີຄວາມສ່ຽງຕໍ່ຄຸນນະພາບ ແລະ ປະລິມານນ້ຳໃຕ້ດິນ;
6. ເຂດທີ່ມີຄຸນຄ່າທາງທຳມະຊາດ, ປະຫວັດສາດ, ວັດທະນະທຳ;
7. ເຂດພື້ນທີ່ອະນຸລັກຊີວະນາໆພັນທາງນ້ຳ ແລະ ເຂດບໍລິເວນແຄມນ້ຳ;
8. ເຂດພື້ນທີ່ ທີ່ມີຄວາມສ່ຽງຕໍ່ລະບົບນິເວດໃນຊຸມຊົນ ຫຼື ຕົວເມືອງ.

**ມາດຕາ 33 (ໃໝ່) ມົນລະພິດທາງນ້ຳ**

ມົນລະພິດທາງນ ແມ່ນ ມົນລະພິດ ທີ່ເກີດຈາກການປົນເປື້ອນຂອງສິ່ງເປັນພິດ ໃນນ້ຳເກີນມາດ ຕະຖານສິ່ງແວດລ້ອມແຫ່ງຊາດ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ຈາກການກະທຳຂອງມະນຸດ ແລະ ສິ່ງຜົນກະທົບຕໍ່

ແມ່ນ້ຳ, ລຳເຊ, ຫ້ວຍ, ຮ່ອງ, ໜອງ, ບຶງ, ນ້ຳໃຕ້ດິນ, ສຸຂະພາບຂອງຄົນ, ສັດ, ພືດ, ສິ່ງມີຊີ ວິດອື່ນ ແລະ ລະບົບນິເວດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ສ້າງມົນລະພິດທາງນ້ຳ ຕ້ອງຮັບຜິດຊອບຕໍ່ຄວາມ ເສຍຫາຍ ທີ່ເກີດຂຶ້ນ ແລະ ຟື້ນຟູແຫຼ່ງນ້ຳ ທີ່ໄດ້ຮັບຜົນກະທົບ ໃຫ້ຄືນສູ່ສະພາບເດີມ ຫຼື ດີກວ່າເກົ່າ. ນອກຈາກນີ້ ຜູ້ກໍ່ ຄວາມເສຍຫາຍ ຍັງຈະຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 34 (ໃໝ່) ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນ ທີ່ດິນທີ່ຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ເປັນຕົ້ນ ເຂດພື້ນ ທີ່ດິນ ທາມ, ໜອງ, ບຶງ, ທົ່ງຫຍ້ານ້ຳຖ້ວມ, ທີ່ດິນນ້ຳອອກບໍ່, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປັ່ງໃໝ່, ທີ່ດິນນ້ຳ ບົກປະ ຫຼື ກຸດ, ທີ່ດິນ ທີ່ເກີດຈາກການດັດແປງ ຫຼື ອວ່າຍແລວນ້ຳ, ນ້ຳຂັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນ ໂດຍທຳມະ ຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ.

ໃນການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ ລວມທັງການວາງແຜນ ການ ນຳໃຊ້ທີ່ດິນ ຕ້ອງໃຫ້ຄວາມສຳຄັນແກ່ທີ່ດິນບໍລິເວນນ້ຳ ເພື່ອຮັກສາລະບົບນິເວດ, ການບຳບັດນ້ຳ ເປື້ອນ ແບບທຳມະຊາດ ແລະ ປ້ອງກັນໄພນ້ຳຖ້ວມ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສຳຫຼວດ, ຈັດສັນທີ່ດິນບໍລິເວນ ນ້ຳ ແລະ ວາງແຜນການປົກປັກຮັກສາ, ພັດທະນາ ແລະ ຟື້ນຟູທີ່ດິນດັ່ງກ່າວ ໂດຍປະສານສົມທົບກັບຂະແໜງ ການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການເຂົ້າຮ່ວມຂອງປະຊາຊົນໃນເຂດພື້ນ ທີ່ດັ່ງກ່າວ.

**ມາດຕາ 35 (ໃໝ່) ການນຳໃຊ້, ການປົກປັກຮັກສາ ແລະ ການພັດທະນາ ທີ່ດິນບໍລິເວນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດພັດທະນາ ແລະ ນຳໃຊ້ທີ່ດິນບໍລິເວນນ້ຳໄດ້ ແຕ່ຕ້ອງໄດ້ຂໍ ອະນຸຍາດນຳ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຕ້ອງຮັບປະກັນ ບໍ່ສ້າງຜົນ ເສຍຫາຍຕໍ່ປະລິມານ ແລະ ຄຸນນະພາບຂອງນ້ຳ, ບໍ່ໃຫ້ປ່ຽນແລວນ້ຳ ແລະ ການໄຫຼຂອງ ນ້ຳໂດຍບໍ່ໄດ້ຮັບອະ ນຸ ຍາດ, ຫຼີກລ່ຽງບໍ່ໃຫ້ມີການເຊາະເຈື່ອນ ແລະ ໄພນ້ຳຖ້ວມ ຮັບປະກັນຄວາມຍືນຍົງຂອງລະບົບ ນິເວດໂດຍ ສອດຄ່ອງກັບກົດໝາຍ.

ການປົກປັກຮັກສາ ແລະ ການພັດທະນາ ທີ່ດິນບໍລິເວນນ້ຳ ຕ້ອງສອດຄ່ອງກັບແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ, ແຜນແມ່ບົດການຈັດສັນການນຳໃຊ້ທີ່ດິນແຫ່ງຊາດ ແລະ ລະບຽບການກ່ຽວກັບການຄຸ້ມຄອງທີ່ດິນບໍລິເວນນ້ຳ ໂດຍບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດ ແລະ ສິ່ງແວດ ລ້ອມສັງຄົມ ແລະ ທຳມະຊາດ.

ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຖົມທີ່ດິນບໍລິເວນນ້ຳ ຕາມທຳມະຊາດທີ່ກຳ ນົດ ເປັນເຂດສະຫງວນ ເປັນຕົ້ນ ໜອງ, ຄອງ, ບຶງ, ລຳເຊ.

**ມາດຕາ 70 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂ ດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;

5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 71 (ໃໝ່) ການໄກ່ເກ່ຍ ຫຼື ການປະນີປະນອມ**

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນໍາໃຊ້, ການຄຸ້ມຄອງ, ການດໍາເນີນກິດຈະ ການ ແລະ ທຸລະກິດ ກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າບໍ່ຫຼວງຫຼາຍ ຄູ່ກໍລະນີສາມາດປຶກສາຫາລື, ໄກ່ເກ່ຍ ຫຼື ປະນີປະນອມກັນ.

**ມາດຕາ 72 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບ ຕໍ່ການນໍາໃຊ້, ການຄຸ້ມຄອງ, ການດໍາເນີນກິດ ຈະການ ແລະ ທຸລະກິດ ກ່ຽວກັບນໍ້າ ແລະ ຊັບພະຍາກອນນໍ້າ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າບໍ່ຫຼວງຫຼາຍ ຄູ່ກໍລະນີມີສິດສະເໜີໃຫ້ອົງການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ພິຈາລະນາແກ້ໄຂ. ຖ້າຄູ່ກໍລະນີ ຫາກບໍ່ພໍໃຈໃນການແກ້ໄຂນັ້ນ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດໄປເປັນຜູ້ແກ້ໄຂ.

ຂໍ້ຂັດແຍ່ງທີ່ເນື່ອງຈາກ ທາດສະພາບ ແມ່ນ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ເກີດຂໍ້ຂັດແຍ່ງ ນັ້ນເປັນຜູ້ແກ້ໄຂ.

**ມາດຕາ 73 (ໃໝ່) ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດໍາເນີນກິດຈະການນໍ້າ ແລະ ຊັບພະຍາກອນນໍ້າ ຄູ່ກໍລະນີມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ ໄຂຕາມກົດໝາຍ.

**ມາດຕາ 74 (ໃໝ່) ການຮ້ອງຟ້ອງ ຕໍ່ ສານປະຊາຊົນ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງ ເນື່ອງຈາກການດໍາເນີນກິດຈະການກ່ຽວກັບການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 75 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງ ສປປ ລາວ ກັບປະເທດອື່ນ ກ່ຽວກັບການຂຸດຄົ້ນ, ນໍາໃຊ້, ຄຸ້ມຄອງ, ປົກປັກຮັກສາ ແລະ ການປ້ອງກັນຜົນເສຍຫາຍຈາກນໍ້າ ແລະ ຊັບພະຍາກອນນໍ້າ ໃຫ້ປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**6. ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017**

**ມາດຕາ 2 (ປັບປຸງ) ແຮ່ທາດ**

ແຮ່ທາດ ແມ່ນ ທາດທີ່ເກີດຂຶ້ນໂດຍທໍາມະຊາດ, ມີຄຸນລັກສະນະທາງດ້ານເຄມີ ແລະ ວັດຖຸອິທະຍາ ຫຼື ກາຍຍະພາບ ຢູ່ໃນພາວະແຂງ, ພາວະແຫຼວ ແລະ ພາວະອາຍ ເຊັ່ນ ຄໍາ, ເງິນ, ທອງ, ເຫຼັກ, ກົ່ວ, ແກ້ວປະເສີດ, ຫີນ, ດິນໜຽວ, ຫີນຊາຍ, ຊາຍ, ເກືອໂປຕາສ, ຖ່ານຫີນ, ນໍ້າມັນ, ອາຍແກັດ ທໍາມະຊາດ, ນໍ້າແຮ່ທາດ, ນໍ້າອຸ່ນ, ນໍ້າຮ້ອນທໍາມະຊາດ.

**ມາດຕາ 4 (ປັບປຸງ) ກໍາມະສິດກ່ຽວກັບແຮ່ທາດ**

ແຮ່ທາດທີ່ເກີດຂຶ້ນຢູ່ເທິງໜ້າດິນ, ພື້ນດິນ ແລະ ພື້ນນໍ້າຢູ່ໃນດິນແດນຂອງ ສປປ ລາວ ແມ່ນກໍາມະສິດ ຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບ ເຂດທົ່ວປະເທດ.

**ມາດຕາ 7 ການປົກປ້ອງສິດ ແລະ ຜົນປະໂຫຍດກ່ຽວກັບແຮ່ທາດ**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດສູງສຸດຂອງຊາດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ດຳເນີນທຸລະກິດກ່ຽວກັບແຮ່ທາດ ແລະ ປະຊາຊົນລາວບັນດາເຜົ່າ ຕາມກົດໝາຍ.

**ມາດຕາ 8 ພັນທະໃນການປົກປັກຮັກສາແຮ່ທາດ**

ລັດ ວາງມາດຕະການກ່ຽວກັບການປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດໃນ ຂອບເຂດທົ່ວປະເທດ. ການປົກປັກຮັກສາແຮ່ທາດ ແລະ ຊັບພະຍາກອນແຮ່ທາດ ແມ່ນ ພັນທະຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການ ຈັດຕັ້ງຢູ່ ສປປ ລາວ.

**ມາດຕາ 23 (ປັບປຸງ) ເຂດຫວງຫ້າມ**

ເຂດຫວງຫ້າມ ແມ່ນ ເຂດທີ່ບໍ່ອະນຸຍາດໃຫ້ດຳເນີນກິດຈະການ ກ່ຽວກັບແຮ່ທາດ ມີ ດັ່ງນີ້:

1. ເຂດທີ່ມີຄວາມເປັນອັນຕະລາຍ ເຊັ່ນ ເຂດທີ່ມີທາດເບື່ອ, ເຂດລະເບີດທີ່ບໍ່ທັນແຕກ, ເຂດທີ່ມີມົນລະພິດຢ່າງຮ້າຍແຮງ;
2. ເຂດທີ່ຢູ່ໃກ້ກັບເຂດຕົວເມືອງ , ເຂດຊຸມຊົນ, ເນື້ອທີ່ ທີ່ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ຫຼື ຢູ່ ກ້ອງພື້ນສິ່ງປຸກສ້າງ ຫຼື ເຂດສາທາລະນະ ຊຶ່ງເຫັນວ່າມີຄວາມສຳຄັນ ຕໍ່ຜົນປະໂຫຍດຂອງຊາດ ເປັນຕົ້ນ ແຫຼ່ງທ່ອງ ທ່ຽວທາງດ້ານປະ ຫວັດສາດ, ວັດທະ ນະທຳ, ທຳມະຊາດ, ເຂດວັດຖຸບູຮານ, ເຂດປະຫວັດສາດ, ເຂດໂຄງລ່າງພື້ນ ຖານ, ເຂດຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ເຂດທີ່ບໍ່ເໝາະສົມສຳລັບການ ດຳເນີນກິດຈະການ ກ່ຽວກັບ ແຮ່ທາດ;
3. ເຂດປ່າສະຫງວນ, ເຂດປ່າປ້ອງກັນ, ເຂດເພື່ອອະນຸລັກຊີວະນາໆພັນ, ເຂດແພ່ພັນຂອງສັດ ນ້ຳ, ສັດປ່າ ແລະ ເຂດປ່າຍອດນ້ຳ.

ກະຊວງພະລັງງານ ແລະ ບໍ່ແຮ່ ປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ສະເໜີ ລັດຖະບານພິຈາລະນາ ກຳນົດເຂດຫວງຫ້າມໃນ ແຕ່ລະໄລຍະ.

**ມາດຕາ 24 (ປັບປຸງ) ເຂດສະຫງວນ**

ເຂດສະຫງວນ ແມ່ນ ເຂດຊັບພະຍາກອນແຮ່ທາດ ທີ່ຮັກສາໄວ້ເພື່ອດຳເນີນການຂຸດຄົ້ນແຮ່ທາດສະເພາະ ໃດໜຶ່ງ ຫຼື ຮັກສາໄວ້ເພື່ອການພັດທະນາ ແລະ ຄວາມອຸດົມສົມບູນຂອງຊັບພະຍາ ກອນທຳມະຊາດ ໂດຍຕິດພັນ ກັບການທ່ອງທ່ຽວ.

ກະຊວງພະລັງງານ ແລະ ບໍ່ແຮ່ ປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວ ຂ້ອງ ຄົ້ນຄວ້າ ແລະ ສະເໜີລັດຖະບານພິຈາລະນາ ກຳນົດເຂດສະຫງວນໃນແຕ່ລະໄລຍະ.

**ມາດຕາ 108 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍແຫຼ່ງແຮ່ດ້ວຍການບຸກລຸກ, ຂຸດຄົ້ນ, ຮ່ອນເອົາແຮ່ທາດ ຫຼື ດ້ວຍການກະທຳອື່ນ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
2. ຂຸດຄົ້ນ, ຊື້ຂາຍ, ເຄື່ອນຍ້າຍ ແລະ ເກັບກູ້ແຮ່ທາດໂດຍບໍ່ໄດ້ຮັບອະນຸຍາດ;

3. ຮ່ວມມື ກັບຜູ້ລົງທຶນ, ພະນັກງານ ແລະ ເຈົ້າໜ້າທີ່ກວດກາບໍ່ແຮ່ ໃນການລັກລອບ ຂຸດຄົ້ນ ເອົາແຮ່ທາດ, ບຸກລຸກທຳລາຍແຮ່ທາດ ຫຼື ບໍ່ແຮ່;
4. ປອມແປງເອກະສານ ແລະ ຕາປະທັບກ່ຽວກັບແຮ່ທາດ;
5. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່ ແລະ ຜູ້ລົງທຶນ;
6. ຊຸກເຊື່ອງ, ທຳລາຍແຮ່ທາດ ຫຼື ຂາຍຕົວຢ່າງແຮ່ທາດຢ່າງຜິດກົດໝາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 111 ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂ ດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 112 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງໃນການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບແຮ່ທາດ ຄູ່ກໍລະນີສາມາດ ແກ້ໄຂດ້ວຍການປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 113 ການແກ້ໄຂທາງດ້ານບໍລິຫານ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮ່ທາດທາງດ້ານບໍລິຫານ ເປັນຕົ້ນ ການດຳເນີນທຸລະກິດກ່ຽວ ກັບແຮ່ທາດ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ, ການບໍ່ເສຍພັນທະ ແລະ ຄ່າທຳນຽມຕາມກົດໝາຍ ແມ່ນອົງການ ຄຸ້ມຄອງ ແລະ ກວດ ກາວຽກງານແຮ່ທາດທີ່ກ່ຽວຂ້ອງເປັນຜູ້ແກ້ໄຂ ໂດຍປະສານສົມທົບກັບ ຂະແໜງການ ອື່ນທີ່ກ່ຽວຂ້ອງ ແລະ ອົງການ ປົກຄອງທ້ອງຖິ່ນຂັ້ນດຽວກັນ, ຖ້າຄູ່ກໍລະນີ ຫາກບໍ່ພໍ ໃຈຕໍ່ຄຳຕົກລົງແກ້ ໄຂນັ້ນແລ້ວ ຜູ້ກ່ຽວກໍມີສິດສະເໜີຕໍ່ອົງການ ຂັ້ນເທິງຖັດ ນັ້ນເປັນຜູ້ແກ້ໄຂ.

**ມາດຕາ 114 ການແກ້ໄຂດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງທາງເສດຖະກິດ ເນື່ອງຈາກການດຳເນີນທຸລະກິດກ່ຽວກັບແຮ່ທາດ ຄູ່ກໍລະນີມີ ສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ ຕາມກົດໝາຍ.

**ມາດຕາ 115 ການຕັດສິນຂອງສານປະຊາຊົນ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບແຮ່ທາດ ຄູ່ກໍລະນີມີສິດ ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 116 ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການດຳເນີນກິດຈະການ ແລະ ທຸລະກິດກ່ຽວກັບແຮ່ທາດ ລະຫວ່າງຜູ້ລົງທຶນ ພາຍໃນກັບຜູ້ລົງທຶນຕ່າງປະເທດ ຫຼື ຜູ້ລົງທຶນຕ່າງປະເທດດ້ວຍກັນຢູ່ ສປປ ລາວ ຫຼື ລະຫວ່າງຜູ້ລົງທຶນຕ່າງປະເທດ ກັບລັດຖະບານ ໃຫ້ນຳໃຊ້ອົງການແກ້ໄຂຂໍ້ຂັດແຍ່ງ ພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງຂອງຄູ່ກໍລະນີ.

**7. ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ສະບັບເລກທີ49/ສພຊ, ລົງວັນທີ 20 ມິຖຸນາ 2018**

**ມາດຕາ 2 (ປັບປຸງ) ແນວລາວສ້າງຊາດ**

ແນວລາວສ້າງຊາດ ແມ່ນ ອົງການຈັດຕັ້ງສຳພັນທາງການເມືອງ ຂອງທົ່ວສັງຄົມ, ເປັນສະຫະພັນ ຂອງ ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວ ແລະ ສະໝັກໃຈ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບແນວລາວສ້າງຊາດ**

ລັດ ຊຸກຍູ້, ສົ່ງເສີມ ແລະ ເປີດກວ້າງໃນການປະກອບສ່ວນ ທາງດ້ານສະຕິປັນຍາ, ເຫື່ອແຮງ, ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ເຂົ້າໃນການເຄື່ອນ ໄຫວວຽກງານແນວໂຮມ, ປົກປ້ອງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ ລວມ ທັງພາຄີ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍຂອງແນວລາວສ້າງຊາດ ເພື່ອປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ວຍການປະກອບ ບຸກຄະລາກອນ, ພາຫະນະ, ອຸປະກອນ, ງົບປະມານ ໃຫ້ແກ່ແນວລາວສ້າງຊາດ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ຕົນໄດ້ເປັນຢ່າງດີ.

**ມາດຕາ 5 (ປັບປຸງ) ຫຼັກການ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ຈັດຕັ້ງ ແລະ ເຄື່ອນໄຫວ ບົນພື້ນຖານຫຼັກການ ຕົ້ນຕໍ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງແນວລາວ ສ້າງຊາດ
2. ລວມສູນປະຊາທິປະໄຕ, ປຶກສາຫາລື, ປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອ ໄຫວ;
3. ຕື່ນຕົວ, ສະໝັກໃຈ ແລະ ເປັນແບບຢ່າງ ໃນການເຄື່ອນໄຫວວຽກງານ.

**ມາດຕາ 7 ທີ່ຕັ້ງ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ເປັນ ພາກສ່ວນໜຶ່ງ ໃນລະບົບການເມືອງ ແຫ່ງ ສປປ ລາວ ໂດຍແມ່ນພັກປະຊາຊົນ ປະຕິວັດລາວ ເປັນແກນນຳ ແລະ ເປັນພື້ນຖານການເມືອງໜຶ່ງ ຂອງລະບອບປະຊາທິປະໄຕ ປະຊາຊົນ.

ແນວລາວສ້າງຊາດ ສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ອັນສະຫງ່າລາສີ ຂອງແນວລາວ ອິດສະລະ ແລະ ແນວລາວຮັກຊາດ ຊຶ່ງໄດ້ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ເຂົ້າໃນການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ແລະ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນ ປັດຈຸບັນ.

**ມາດຕາ 8 (ປັບປຸງ) ພາລະບົດບາດ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີພາລະບົດບາດ ຕົ້ນຕໍ ດັ່ງນີ້:

1. ເປັນຄັນທຸງ ເຕົ້າໂຮມຄວາມສາມັກຄີປອງດອງ ປະຊາຊົນລາວບັນດາເຜົ່າ, ສ້າງຄວາມເຂັ້ມແຂງ ແລະ ປັບປຸງກຳລັງແຮງທົ່ວປວງຊົນ;
2. ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

3. ເສີມຂະຫຍາຍ ສິດເປັນເຈົ້າ ໃນການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ;
4. ໃກ້ຊິດຕິດແທດ, ເກັບກຳຄຳຄິດຄຳເຫັນ, ສ່ອງແສງມານະຈິດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ;
5. ຕິດຕາມ ກວດກາ ການເຄື່ອນໄຫວ ຂອງອົງການອຳນາດລັດ ແລະ ພາຄີຂອງແນວລາວສ້າງ ຊາດ ໂດຍຜ່ານຄຳເຫັນຂອງປະຊາຊົນລາວບັນດາເຜົ່າ;
6. ເປັນໃຈກາງປະສານສົມທົບ ກັບພາຄີຂອງຕົນ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
2. ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ສະເໜີ ສ້າງກົດໝາຍ ແລະ ນິຕິກຳອື່ນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ;
4. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວ ບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
5. ຕິດຕາມ ກວດກາ ການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການ ປະຊາຊົນ ແລະ ພະນັກງານ-ລັດຖະກອນ ຕາມຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ , ເພດ, ໄວ ເພື່ອສະເໜີ ຕໍ່ອົງການຈັດຕັ້ງທີ່ ກ່ຽວຂ້ອງ ພິຈາລະນາແກ້ໄຂ;
6. ເຂົ້າຮ່ວມການປັບປຸງ, ບູລະນະອຳນາດລັດປະຊາທິປະໄຕປະຊາຊົນ;
7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ພາຄີ, ປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ;
8. ປະກອບສ່ວນ ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ເຜົ່າ;
9. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວອິດ ສະລະ, ແນວລາວຮັກຊາດ ໃຫ້ແກ່ຄົນຮຸ່ນຫຼັງ;
10. ສະເໜີບຸກຄະລາກອນຂອງຕົນ, ປະກອບຄຳເຫັນຕໍ່ບຸກຄະລາກອນ ຂອງພາກສ່ວນອື່ນ ທີ່ເປັນຕົວແທນ ຂອງປະຊາຊົນລາວບັນດາເຜົ່າ ອອກສະໝັກຮັບເລືອກຕັ້ງ ເຂົ້າໃນອົງການຈັດຕັ້ງການເມືອງ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ຕາມລະບຽບການ;
11. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານແນວໂຮມ
12. ເສີມຂະຫຍາຍ ການທູດປະຊາຊົນ, ສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ປະຊາຊົນລາວບັນດາເຜົ່າ ກັບປະຊາຊົນບັນດາປະເທດໃນພາກພື້ນ ແລະ ສາກົນ;

13. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບແນວລາວສ້າງຊາດ ຕໍ່ຂັ້ນເທິງຢ່າງ ເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 (ໃໝ່) ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ**

ຄະນະກຳມະການແນວລາວສ້າງຊາດທຸກຂັ້ນ ມີໜ້າທີ່ ຊຸກຍູ້, ປຸກລະດົມ ການຈັດຕັ້ງ, ບຸກຄົນ, ຜູ້ຊົງຄຸນວຸດທິ ທີ່ມີບົດບາດ ແລະ ໄດ້ຮັບຄວາມເຊື່ອຖື ໃຫ້ມີການເຄື່ອນໄຫວ ຫຼາຍຮູບ ຫຼາຍສີ ໃນການເຕົ້າ ໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ໂດຍບໍ່ຈຳແນກ ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດເປັນກຳລັງແຮງເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ.

**ມາດຕາ 25 (ໃໝ່) ວິທີການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ**

ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ໃຫ້ປະຕິບັດດ້ວຍວິທີການ ດັ່ງນີ້:

1. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ເສີມຂະຫຍາຍມູນເຊື້ອ ຮັກຊາດ, ສາມັກຄີປອງດອງທົ່ວປວງຊົນ ປະກອບສ່ວນເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ;
2. ເປັນແບບຢ່າງທີ່ດີ, ເປັນຜູ້ນຳໜ້າ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົດລະບຽບຂອງແນວລາວສ້າງຊາດ;
3. ເຄື່ອນໄຫວ ຫຼາຍຮູບ ຫຼາຍສີ ພ້ອມທັງຊຸກຍູ້ຂະບວນການ ສ້າງບ້ານສາມັກຄີ ໂດຍສອດ ຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ໃນແຕ່ລະ ໄລຍະ;
4. ພົວພັນຮ່ວມມື ກັບການຈັດຕັ້ງຂອງພັກ ແລະ ລັດ ເພື່ອສ້າງກ້ອນກຳລັງສາມັກຄີປອງດອງ ທົ່ວປວງຊົນ ເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດ ທະນາເສດ ຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
5. ຊຸກຍູ້ ຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໃຫ້ສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ເຄົາລົບ ແລະ ປະຕິບັດກົດໝາຍ ຂອງປະເທດທີ່ຕົນອາໄສຢູ່, ປະກອບສ່ວນສະຕິປັນຍາ ແລະ ທຶນຮອນ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕົນ.

**ມາດຕາ 40 (ປັບປຸງ) ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງ, ຍົກຍ້າຍ ປະທານ, ຮອງປະທານ ຫຼື ກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໂດຍບໍ່ໄດ້ປະສານສົມທົບກັບ ແນວລາວສ້າງຊາດຂັ້ນຂອງຕົນ ແລະ ຂັ້ນເທິງ;
2. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຄະນະກຳມະການ ຫຼື ພະນັກງານ-ລັດຖະກອນແນວລາວສ້າງຊາດ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;
3. ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງເອົາຊັບສິນ ຂອງແນວລາວສ້າງຊາດ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດບ້ານ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ, ແນວລາວສ້າງຊາດບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ, ກົດລະບຽບ, ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງຂັ້ນເທິງ ແລະ ຂັ້ນຂອງ ຕົນ;
2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງແນວລາວສ້າງຊາດ;
3. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະ ຫຍາຍມູນເຊື້ອຮັກຊາດ, ເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເຂົ້າຮ່ວມໃນ ການ ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ, ສິ່ງແວດລ້ອມ, ການສ້າງສາພັດທະນາປະເທດຊາດ ແລະ ບ້ານຂອງຕົນ;
4. ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ພາຍໃນປະຊາຊົນ;
5. ຕິດຕາມ, ຊຸກຍູ້ ການເຄື່ອນໄຫວວຽກງານແນວໂຮມ ຂອງແນວລາວສ້າງຊາດ ແລະ ການສ້າງບ້ານ ສາມັກຄີປອງດອງ, ບ້ານພັດທະນາ;
6. ລະດົມແຫຼ່ງລາຍຮັບ ດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການ ເຄື່ອນໄຫວວຽກງານຂອງຕົນ ແລະ ອົງການພາຄີ;
7. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານແນວໂຮມ ຕໍ່ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງບ້ານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**8. ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບເລກທີ 08/ ສພ ຊ, ລົງວັນທີ 22 ຕຸລາ 2004**

**ມາດຕາ 2. ບົດບາດແມ່ຍິງ**

ແມ່ຍິງໄດ້ຮ່ວມກັບເພດຊາຍໃນການຕໍ່ສູ້ ແລະ ເສຍສະຫລະໃນພາລະກິດຕໍ່ສູ້ເພື່ອຄວາມເປັນ ເອກະລາດແຫ່ງຊາດ.

ແມ່ຍິງມີບົດບາດໃນທຸກຂົງເຂດວຽກງານທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ການປົກປັກ ຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ການອະນຸລັກຮັກສາ ແລະເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະສິ່ງທີ່ເປັນເອກກະລັກຂອງແມ່ຍິງລາວ.

ແມ່ຍິງມີບົດບາດຮ່ວມກັບຄອບຄົວໃນການພັດທະນາ, ເບິ່ງແຍງ, ລ້ຽງດູ ແລະສຶກສາອົບຮົມສະມາຊິກຄອບຄົວໃຫ້ເປັນພົນລະເມືອງດີຂອງຊາດ.

**ມາດຕາ 3. ນະໂຍບາຍຕໍ່ແມ່ຍິງ**

ລັດມີນະໂຍບາຍພັດທະນາ, ສົ່ງເສີມຄວາມກ້າວໜ້າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ດ້ວຍການສ້າງທຸກເງື່ອນໄຂໃຫ້ແມ່ຍິງມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ, ມີວຽກເຮັດງານທຳ ແລະ ມີສິດເທົ່າທຽມກັບເພດຊາຍ ໂດຍບໍ່ຈຳແນກຖາ ນະທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຄອບຄົວ.

ສັງຄົມຕ້ອງເຂົ້າຮ່ວມໃນການປະຕິບັດນະໂຍບາຍຂອງລັດຕໍ່ແມ່ຍິງຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 4. ອົງການຈັດຕັ້ງສະຫະພັນແມ່ຍິງລາວ**

ສະຫະພັນແມ່ຍິງລາວແມ່ນອົງການຈັດຕັ້ງມະຫາຊົນໜຶ່ງ ຊຶ່ງເປັນຕົວແທນແຫ່ງສິດ, ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະເດັກນ້ອຍ, ເປັນບ່ອນເຕົ້າໂຮມຄວາມສາມັກຄີ ແລະປຸກລະ ດົມແມ່ຍິງໃຫ້ເຂົ້າຮ່ວມ ໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນ ເຈົ້າຂອງແມ່ຍິງລາວບັນດາເຜົ່າ, ປົກປັກຮັກສາສິດ ແລະຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ ໂດຍສະເພາະແມ່ນສະມາຊິກ ໃນອົງການຈັດຕັ້ງຂອງຕົນ.

**ມາດຕາ 6. ຄວາມໝາຍຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນພາກສ່ວນໜຶ່ງຂອງການພັດທະນາຊັບພະຍະຍາກອນມະນຸດ ເພື່ອເຮັດໃຫ້ແມ່ຍິງມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ ແລະ ມີຄຸນສົມບັດສົນທຳປະຕິວັດ.

**ມາດຕາ 7. ຄວາມສຳຄັນຂອງການພັດທະນາແມ່ຍິງ**

ການພັດທະນາແມ່ຍິງ ແມ່ນຄວາມຈຳເປັນເພື່ອໃຫ້ແມ່ຍິງສາມາດເຂົ້າຮ່ວມຢ່າງມີປະສິດທິພາບໃນທຸກຂົງເຂດວຽກງານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປົກ ປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະການຕ່າງປະເທດ ເພື່ອເຮັດໃຫ້ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດໄດ້ຮັບຜົນດີຂຶ້ນ.

**ມາດຕາ 13. ສິດສະເໝີພາບຍິງ-ຊາຍ**

ສິດສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽມກັນໃນການພັດທະນາຕົນເອງ; ຍິງ ແລະ ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

**ມາດຕາ 29. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ ແມ່ນການກະທຳ ຫຼືການ ເມີນເສີຍ ຂອງບຸກຄົນໃດບຸກຄົນໜຶ່ງໃນຄອບຄົວ ຊຶ່ງສ້າງຜົນກະທົບຕໍ່ຮ່າງກາຍ, ຈິດໃຈ ຫຼືຊັບສົນ ຂອງແມ່ຍິງ ຫຼື ເດັກນ້ອຍໃນຄອບຄົວ.

**ມາດຕາ 33. ສິດຂອງຜູ້ຖືກເຄາະຮ້າຍ**

ແມ່ຍິງ ແລະ ເດັກນ້ອຍທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ມີສິດຮ້ອງຂໍຄວາມຊ່ວຍເຫຼືອຈາກສະມາຊິກຂອງຄອບຄົວ, ຜູ້ຢູ່ໃກ້ຄຽງ, ຍາດພີ່ນ້ອງ ຫຼື ແຈ້ງຄວາມຕໍ່ອົງການ ປົກຄອງບ້ານເພື່ອສຶກສາອົບຮົມຜູ້ໃຊ້ຄວາມຮຸນແຮງໃຫ້ຢຸດເຊົາ ແລະປ່ຽນແປງພຶດຕິກຳທີ່ບໍ່ດີ ເພື່ອໃຫ້ມີຄວາມຖືກຕ້ອງປອງດອງ ແລະມີຄວາມຜາສຸກພາຍໃນຄອບຄົວ.

ໃນກໍລະນີທີ່ການໃຊ້ຄວາມຮຸນແຮງຫາກເປັນອັນຕະລາຍຮ້າຍແຮງ ຊຶ່ງເປັນການກະທຳຜິດ ທາງອາຍານັ້ນ ຜູ້ຖືກເຄາະຮ້າຍມີສິດແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ ເພື່ອແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 35. ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ**

ເມື່ອມີການໃຊ້ຄວາມຮຸນແຮງທີ່ບໍ່ເປັນອັນຕະລາຍຮ້າຍແຮງເກີດຂຶ້ນ ໃນຄອບຄົວການແກ້ ໄຂຕ້ອງເລີ່ມຈາກສະມາຊິກຄອບຄົວ, ຍາດພີ່ນ້ອງໃກ້ຊິດ, ບຸກຄົນໃກ້ຄຽງ, ໜ່ວຍງານໃຫ້ຄຳປຶກສາ, ໜ່ວຍໄກ່ເກ່ຍຂັ້ນບ້ານເປັນຜູ້ໄກ່ເກ່ຍສຶກສາອົບຮົມ ບົນພື້ນຖານຄວາມສາມັກຄີປອງດອງ ແລະ ຄວາມຜາສຸກຂອງຄອບຄົວ.

ໃນກໍລະນີທີ່ໜ່ວຍໄກ່ເກ່ຍຂັ້ນບ້ານຫາກບໍ່ສາມາດແກ້ໄຂໄດ້ ຫຼື ມີການໃຊ້ຄວາມຮຸນແຮງທີ່ ເປັນອັນຕະລາຍຮ້າຍແຮງແລ້ວ ໜ່ວຍໄກ່ເກ່ຍຂັ້ນບ້ານ, ໜ່ວຍງານໃຫ້ຄຳປຶກສາ, ຜູ້ຖືກເຄາະຮ້າຍ ຫຼື ຜູ້ຕາງໜ້າຂອງຜູ້ກ່ຽວ ມີສິດໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ.

**ມາດຕາ 37. ການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ ຊຶ່ງເປັນບັນຫາໜຶ່ງທີ່ເປັນ ໄພອັນຕະລາຍຕໍ່ສັງຄົມ, ມີຜົນກະທົບຕໍ່ຄອບຄົວ, ພາໃຫ້ຄອບຄົວຂາດຄວາມອົບອຸ່ນ, ແຕກແຍກ, ເຮັດໃຫ້ແມ່ຍິງ ແລະ ເດັກນ້ອຍບໍ່ສາມາດຢູ່ນຳຄອບຄົວໄດ້ ແລະຕົກເປັນເຫຍື່ອຂອງການຄ້າແມ່ຍິງ ແລະເດັກນ້ອຍ, ຢາເສບຕິດ, ໂສເພນີ.

ເພື່ອສະກັດກັ້ນການໃຊ້ຄວາມຮຸນແຮງໃນຄອບຄົວນັ້ນ ອີງການປົກຄອງ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນທຸກຂັ້ນ ລວມທັງອົງການຈັດຕັ້ງສັງຄົມ ຕ້ອງເອົາໃຈໃສ່ໂຄສະ ນາສຶກສາອົບຮົມ ເພື່ອໃຫ້ຄອບຄົວມີຄວາມຖືກຕ້ອງປອງດອງ, ປະຕິບັດສິດສະເໝີພາບຍິງ-ຊາຍ ແນໃສ່ເຮັດໃຫ້ສະຖາບັນ ຄອບຄົວມີຄວາມໝັ້ນທ່ຽງ, ມີຄວາມຜາສຸກ ແລະກ້າວໜ້າ.

**9. ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012**

**ມາດຕາ 2 (ໃໝ່) ການຈະລາຈອນທາງບົກ**

ການຈະລາຈອນທາງບົກ ແມ່ນ ການສັນຈອນໄປ ມາຂອງຄົນ ແລະ ສັດ ດ້ວຍການນຳໃຊ້ ຫຼື ບໍ່ນຳໃຊ້ພາຫະນະ ແລະ ຍານພາຫະນະຊະນິດຕ່າງໆ ຕາມເສັ້ນທາງບົກ ໂດຍປະຕິບັດກົດຈະລາຈອນ ຢ່າງຖືກຕ້ອງ.

**ມາດຕາ 6 (ປັບປຸງ) ພັນທະຂອງຜູ້ນຳໃຊ້ເສັ້ນທາງ**

ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ສັນຈອນຕາມເສັ້ນ ທາງຢູ່ໃນດິນແດນ ຂອງ ສປປ ລາວ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ພ້ອມກັນນັ້ນ ກໍຕ້ອງປະກອບສ່ວນໃນການປົກປັກຮັກສາ, ບູລະນະພື້ນຖານ ໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກດ້ານການຈະລາຈອນທາງບົກ.

**ມາດຕາ 9 (ປັບປຸງ) ລະບຽບການທົ່ວໄປ**

ໃນການຈະລາຈອນທາງບົກ ຢູ່ ສປປ ລາວ ໃຫ້ໃຊ້ກ້ຳຂວາ, ຜູ້ນຳໃຊ້ເສັ້ນທາງຕ້ອງໄປຕາມຊ່ອງຈະລາຈອນ ຕາມທິດທາງທີ່ກຳນົດ ແລະ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດຈະລາຈອນຢ່າງ ເຂັ້ມງວດ.

ກົດຈະລາຈອນທາງບົກ ຕ້ອງໄດ້ຈັດເຂົ້າໃນຫຼັກສູດການຮຽນ-ການສອນ ໃນແຕ່ລະຊັ້ນຮຽນລວມ ທັງລະບົບອະນຸບານ, ສາມັນ ແລະ ວິຊາຊີບ ແລະ ຈັດຕັ້ງເຜີຍແຜ່ໃຫ້ທົ່ວສັງຄົມໄດ້ຮັບຮູ້ດ້ວຍຫຼາຍຮູບການ.

**ມາດຕາ 10 (ໃໝ່) ລະບຽບການສຳລັບຄົນຍ່າງ**

ການຍ່າງຕາມທາງ ແລະ ຍ່າງຂ້າມທາງ ໃນຕົວເມືອງ, ເທດສະບານ ໃຫ້ປະຕິບັດ ດັ່ງນີ້:

- ຍ່າງໄປຕາມທາງ ທີ່ໄດ້ກຳນົດໄວ້ສຳລັບໃຫ້ຄົນຍ່າງ, ຖ້າຫາກບໍ່ມີທາງສຳລັບຄົນຍ່າງ ກໍໃຫ້ຍ່າງລຽບຕາມແຄມທາງເບື້ອງຊ້າຍ ເພື່ອໃຫ້ສາມາດແນມເຫັນລົດ ທີ່ແລ່ນເຂົ້າມາຫາຕົນ, ຖ້າຫາກມີຫຼາຍຄົນຍ່າງນຳກັນ ໃຫ້ຍ່າງຕາມຫຼັງກັນເປັນແຖວດຽວ ແລະ ແນບເຂົ້າແຄມທາງ ຍົກເວັ້ນການສວນສະໜາມ, ຂະບວນທາງການ, ຂະບວນແຫ່ພິທີທາງສາສະໜາ, ສິ່ງສະການ ຫຼື ຂະບວນຍ່າງອື່ນ ທີ່ໄດ້ຮັບອະນຸຍາດ;

- ຍ່າງຂ້າມຕາມທາງມ້າລາຍ, ບ່ອນມີໄຟສັນຍານ, ຂົວຂ້າມທາງ, ອຸໂມງ ຫຼື ບ່ອນທີ່ກຳນົດໄວ້, ຖ້າຫາກບໍ່ມີບ່ອນຂ້າມຕາມທີ່ໄດ້ກຳນົດໄວ້ນີ້ ໃຫ້ຍ່າງຂ້າມທາງຢູ່ບ່ອນທີ່ເຫັນວ່າມີຄວາມປອດໄພ.

ທຸກຄົນ ມີໜ້າທີ່ຊ່ວຍເຫຼືອ ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ ແລະ ຜູ້ບໍ່ສາມາດ ຊ່ວຍຕົນເອງ ໄດ້ໃນເວລາຍ່າງຂ້າມທາງ.

**ມາດຕາ 11 (ປັບປຸງ) ລະບຽບການຄຸ້ມຄອງສັດລ້ຽງ**

ບໍ່ອະນຸຍາດໃຫ້ລ້ຽງ ແລະ ປ່ອຍສັດທຸກຊະນິດ ຕາມເສັ້ນທາງຫຼວງ.

ການເຄື່ອນຍ້າຍສັດຕາມເສັ້ນທາງ ຕ້ອງມີຜູ້ຄວບຄຸມ ແລະ ຕ້ອງປະຕິບັດຕາມກົດຈະລາຈອນ.

ໃນກໍລະນີ ເກີດອຸບປະຕິເຫດຍ້ອນສັດລ້ຽງ ເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຕ້ອງຮັບຜິດ ຊອບຕໍ່ ຄວາມເສັຍຫາຍ ທີ່ສັດລ້ຽງນັ້ນໄດ້ກໍ່ຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

ຢູ່ບ່ອນທີ່ມີການລ້ຽງ ຫຼື ຍ້າຍສັດຕາມເສັ້ນທາງຢ່າງເປັນປະຈຳ ຕ້ອງມີປ້າຍເຕືອນ ໃຫ້ລະວັງສັດ ເພື່ອໃຫ້ຜູ້ຂັບຂີ່ມີຄວາມລະມັດລະວັງ. ໃນກໍລະນີເກີດອຸບປະຕິເຫດໃນເຂດທີ່ມີປ້າຍເຕືອນນັ້ນ ຜູ້ຂັບຂີ່ ຕ້ອງ ຮັບຜິດ ຊອບຕໍ່ຄວາມເສັຍຫາຍ ທີ່ເກີດຂຶ້ນ.

**ມາດຕາ 12 (ໃໝ່) ລະບຽບການສຳລັບຜູ້ຂັບຂີ່**

ຜູ້ຂັບຂີ່ຍານພາຫະນະທຸກຊະນິດ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

- ຕ້ອງມີເອກະສານທີ່ຈຳເປັນ ເປັນຕົ້ນ ໃບຂັບຂີ່, ໃບທະບຽນ, ໃບກວດກາເຕັກນິກ, ໃບເສັຍຄ່າທາງ, ໃບປະກັນໄພ; ສຳລັບລົດຂົນສົ່ງສິນຄ້າ ແລະ ໂດຍສານ ຍັງຕ້ອງມີເອກະ ສານອື່ນທີ່ກ່ຽວຂ້ອງ;
- ກວດກາສະພາບເຕັກນິກລົດ ເປັນປະຈຳ ເພື່ອຮັບປະກັນຄວາມປອດໄພ ແລະ ບໍ່ໃຫ້ລົດເກີດຂັດຂ້ອງໃນເວລາເດີນທາງ;
- ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການກວດກາຂອງເຈົ້າໜ້າທີ່ ຄວບຄຸມ ການຈະລາຈອນທາງບົກ;
- ແຈ້ງເຈົ້າໜ້າທີ່ຕຳຫຼວດຈະລາຈອນ, ໃຫ້ຄວາມຊ່ວຍເຫລືອແກ່ຜູ້ໄດ້ຮັບບາດເຈັບ ເມື່ອພົບ ເຫັນອຸບປະຕິເຫດ;
- ຢຸດ ແລະ ປ່ອຍທາງໃຫ້ແກ່ການສັນຈອນພິເສດ;
- ໃຫ້ບູລິມະສິດແກ່ຄົນຍ່າງຂ້າມທາງ;
- ຍົກຍ້າຍຍານພາຫະນະ ອອກຈາກຊ່ອງທາງການຈະລາຈອນໂດຍດ່ວນ ໃນກໍລະນີ ຍານພາ ຫະນະຕິດຂັດ, ເປ່ເພ ຢູ່ຕາມເສັ້ນທາງ.

**ມາດຕາ 73 (ໃໝ່) ສິດ ແລະ ໜ້າທີ່ ຂອງ ອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຜີຍແຜ່ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບການຈະລາຈອນທາງບົກໃຫ້ແກ່ປະຊາຊົນ ພາຍໃນຂອບເຂດ ບ້ານຂອງຕົນ;
2. ປຸກລະດົມປະຊາຊົນ ໃນການປະກອບສ່ວນປົກປັກຮັກສາປ້າຍສັນຍານ, ໄຟສັນຍານ, ເຄື່ອງໝາຍຈະລາຈອນຕາມເສັ້ນທາງໃນຂອບເຂດບ້ານຂອງຕົນ ພ້ອມທັງລາຍງານການເປ່ເພ ເສັຍ

ຫາຍ ຂອງປ້າຍ, ໄຟສັນຍານ, ເຄື່ອງໝາຍຈະລາຈອນ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ ຢ່າງທັນການ;

3. ເຂົ້າຮ່ວມ, ຊ່ວຍຄວບຄຸມສະຖານທີ່ອຸບປະຕິເຫດ ທີ່ເກີດຂຶ້ນຕາມເສັ້ນທາງໃນຂອບເຂດ ບ້ານ ຂອງຕົນ ພ້ອມທັງລາຍງານໃຫ້ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງຂອງ ເມືອງ, ເທດະບານ ທີ່ຕົນຂຶ້ນກັບຢ່າງທັນການ;
4. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງ ບົກ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບ ໝາຍ.

**10. ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ສະບັບເລກທີ 56/ສພຊ, ລົງວັນທີ 23 ທັນວາ 2014**

**ມາດຕາ 10 ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວ**

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໂດຍສະມາຊິກໃນຄອບຄົວແມ່ນ ການກະທຳ, ການ ເມີນເສີຍ ຫຼື ລະເລີຍ ຂອງສະມາຊິກຜູ້ໃດໜຶ່ງໃນຄອບຄົວ ທີ່ກໍ່ໃຫ້ເກີດຄວາມອັນຕະລາຍ, ຄວາມ ເສັຍຫາຍ ຕໍ່ແມ່ຍິງ ແລະ ເດັກທີ່ເປັນສະມາຊິກໃນຄອບຄົວ ທາງດ້ານຮ່າງກາຍ, ຈິດໃຈ, ທາງເພດ, ຊັບສິນ ຫຼື ເສດຖະກິດ ສະຖານທີ່ໃດກໍຕາມ. ໂດຍບໍ່ຂຶ້ນກັບວ່າການໃຊ້ຄວາມຮຸນແຮງດັ່ງກ່າວ ຈະເກີດຂຶ້ນຢູ່ສະຖານທີ່ ໃດກໍຕາມ.

**ມາດຕາ 28 ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເບື້ອງຕົ້ນ**

ສະມາຊິກຄອບຄົວ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ພົບເຫັນ ຫຼື ຮູ້ເຫດການ ກ່ຽວກັບການ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຕາມລັກ ສະນະຂອງຄວາມຮຸນ ແຮງ ແລະ ຄວາມຈຳເປັນຮີບດ່ວນດ້ວຍວິທີການເຂົ້າໄປຫ້າມ, ກີດກັ້ນການໃຊ້ ຄວາມຮຸນແຮງ, ສຶກສາອົບຮົມ ຄູ່ກໍລະນີດ້ວຍຕົນເອງ ຫຼື ຮ້ອງຂໍໃຫ້ບຸກຄົນ, ການຈັດຕັ້ງອື່ນເຂົ້າມາ ຊ່ວຍເຫຼືອຢ່າງທັນການ. ໃນກໍລະນີການ ໃຊ້ຄວາມຮຸນແຮງ ເຮັດໃຫ້ມີການບາດເຈັບ ຕ້ອງນຳສົ່ງຄົນເຈັບ ໄປໂຮງໝໍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຮ້ອງຂໍໃຫ້ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ກໍຕ້ອງ ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອບົນພື້ນຖານຄວາມສາມາດຂອງຕົນ ຕາມວິທີການທີ່ໄດ້ກ່າວມາ ໃນວັກເທິງ ນີ້. ຜູ້ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍດ້ວຍຄວາມບໍລິສຸດໃຈຈະໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ການແຈ້ງ ຫຼື ລາຍງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮູ້ ຫຼື ໄດ້ເຫັນກ່ຽວກັບການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ເດັກ ຕ້ອງແຈ້ງ ຫຼື ລາຍງານເຫດການໃຫ້ອົງການປົກຄອງບ້ານ, ການຈັດຕັ້ງບ່ອນເກີດເຫດ, ສະຫະ ພັນ ແມ່ຍິງ, ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຫຼື ເຈົ້າໜ້າທີ່ຕຳຫຼວດໃນທັນທີ.

ຖ້າແພດ, ຜູ່ເຮັດວຽກກ່ຽວກັບສຸຂະພາບ, ຄູ, ອາຈານ, ຜູ່ເບິ່ງແຍງດູແລເດັກ ຫຼື ພະນັກງານ ວິຊາການອື່ນທີ່ປະຕິບັດໜ້າທີ່ ຫາກພົບເຫັນ ຫຼື ຮູ້ເຫດການກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ ແມ່ຍິງ ແລະ ເດັກ ຕ້ອງແຈ້ງ ຫຼື ລາຍງານຕໍ່ ການຈັດຕັ້ງຂອງຕົນ ຫຼື ເຈົ້າໜ້າທີ່ຕຳຫຼວດ ບ່ອນເກີດເຫດ.

ໃນກໍລະນີ ຜູ່ຖືກເຄາະຮ້າຍ ຫາກເປັນເດັກນັ້ນ ການຈັດຕັ້ງທີ່ໄດ້ຮັບການລາຍງານ ຕ້ອງປະສານສົມທົບກັບຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອເຂົ້າຮ່ວມ ໃນການປົກປ້ອງ ແລະ ຊ່ວຍເຫຼືອເດັກຢ່າງທັນການ.

**ມາດຕາ 30 ການຕອບສະໜອງ ແລະ ການສົ່ງຕໍ່**

ການຈັດຕັ້ງ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ໄດ້ຮັບການລາຍງານ ຫຼື ແຈ້ງຄວາມກ່ຽວກັບການ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຕ້ອງຮີບຮ້ອນເຂົ້າໄປສະຖານທີ່ເກີດເຫດ ເພື່ອຍຸດຕິການໃຊ້ຄວາມຮຸນແຮງ ແລະ ໃຫ້ການຊ່ວຍເຫຼືອຜູ່ຖືກເຄາະຮ້າຍ, ສອບຖາມ, ສຳພາດ, ເກັບກຳຂໍ້ມູນ ແລະ ປະເມີນສະພາບ ຂອງຜູ່ຖືກເຄາະຮ້າຍ, ຖ້າຈຳເປັນ ກໍໃຫ້ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສົ່ງຕໍ່ຜູ່ຖືກເຄາະຮ້າຍ ແລະ ເດັກ ທີ່ຕິດຕາມ ຖ້າຫາກມີ ແນ່ໃສ່ໃຫ້ພວກກ່ຽວໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອທີ່ຈຳເປັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍ ສະບັບນີ້.

**ມາດຕາ 31 ສິດຂອງຜູ້ຖືກເຄາະຮ້າຍ**

ຜູ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ມີ ສິດ ດັ່ງນີ້:

1. ຮ້ອງຂໍ ຫຼື ໄດ້ຮັບການຊ່ວຍເຫຼືອຈາກສະມາຊິກໃນຄອບຄົວ, ບຸກຄົນທີ່ຢູ່ໃກ້ຄຽງ, ອົງການປົກຄອງບ້ານ, ການຈັດຕັ້ງບ່ອນຕົນ ຫຼື ຜູ່ໃຊ້ຄວາມຮຸນແຮງສັງກັດຢູ່, ສະຫະພັນແມ່ຍິງ, ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ, ເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການອື່ນທີ່ມີສິດອຳນາດ;
2. ໄດ້ຮັບການເຄົາລົບສິດ, ຖືກປະຕິບັດດ້ວຍຄວາມເອົາໃຈໃສ່ ແລະ ວິທີການທີ່ເປັນມິດ;
3. ແຈ້ງກ່ຽວກັບການໃຊ້ຄວາມຮຸນແຮງ ໃຫ້ອົງການປົກຄອງບ້ານ, ເຈົ້າໜ້າທີ່ຕຳຫຼວດ, ສະຫະພັນແມ່ຍິງ ຫຼື ຕາໜ່າງ ຫຼື ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ ຫຼື ດຳເນີນຄະດີຕໍ່ຜູ່ໃຊ້ຄວາມຮຸນແຮງ;
4. ເລືອກຮູບການແກ້ໄຂການໃຊ້ຄວາມຮຸນແຮງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງ ກົດໝາຍສະບັບນີ້;
5. ຮ້ອງຂໍ ແລະ ໄດ້ຮັບການປົກປ້ອງ ເນື່ອງຈາກຕົນ ໄດ້ຖືກບັງຄັບ, ຂົ່ມຂູ່ ຫຼື ໄດ້ຮັບຄວາມອັນຕະລາຍ ທຸກຮູບແບບ ລວມທັງສະມາຊິກຄອບຄົວ ຫຼື ເດັກທີ່ຕິດຕາມ;
6. ໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນ ເປັນຕົ້ນ ການໃຫ້ຄຳປຶກສາ, ທີ່ພັກເຊົາທີ່ປອດໄພຊົ່ວຄາວ, ດ້ານການແພດ, ດ້ານກົດໝາຍ, ການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການກັບຄືນສູ່ ຄອບຄົວ ແລະ ສັງຄົມ;
7. ໄດ້ຮັບການທົດແທນຄ່າເສັຍຫາຍ ແລະ ຄ່າປົວແປງຈິດໃຈ;
8. ໄດ້ຮັບການຮັກສາຄວາມລັບ;
9. ໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອຈາກລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມຕາມກົດໝາຍ ແລະ ລະບຽບການ;
10. ມີສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**11. ກົດໝາຍ ວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007**

**ມາດຕາ 2. ຢາເສບຕິດ**

ຢາເສບຕິດ ແມ່ນ ສານກະຕຸ້ນ ຫຼື ລະງັບລະບົບປະສາດ ທີ່ໄດ້ມາຈາກພືດທີ່ໃຫ້ສານເສບ ຕິດ ຫຼື ຈາກການສັງເຄາະສານເຄມີ, ເມື່ອເສບແລ້ວ ຈະມີຜົນກະທົບ ຢ່າງຮຸນແຮງຕໍ່ຮ່າງກາຍ, ຈິດປະສາດ ແລະ ຈະມີຄວາມຕ້ອງການເສບເພີ່ມຂຶ້ນເລື້ອຍໆ.

**ມາດຕາ 11. ຜົນຮ້າຍຕໍ່ຜູ້ເສບ**

ຢາເສບຕິດເກືອດຫ້າມ ມີຜົນຮ້າຍ ທີ່ເປັນອັນຕະລາຍຕໍ່ຮ່າງກາຍ ແລະ ຊີວິດຂອງຜູ້ເສບ, ເຮັດໃຫ້ບົດບາດ, ກຽດສັກສີ ແລະ ອະນາຄົດຂອງຕົນຕົກຕໍ່າ, ສະໝອງຖືກທຳລາຍກາຍເປັນບ້າ, ເສຍຈິດ, ໃຊ້ຄວາມຮຸນແຮງ, ທຳລາຍຊີວິດຂອງຕົນເອງ ແລະ ຜູ້ອື່ນ.

**ມາດຕາ 12. ຜົນຮ້າຍຕໍ່ຜູ້ຜະລິດ ແລະຜູ້ກະທຳອື່ນ**

ຜູ້ຜະລິດ, ປຸງແຕ່ງ, ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ເກັບຮັກສາ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ນຳຜ່ານ ສປປ ລາວ ຢາເສບຕິດເກືອດຫ້າມ ຈະເສຍບົດບາດ, ກຽດສັກສີ, ອະນາຄົດ, ຈະຖືກດຳເນີນຄະດີ ແລະ ລົງໂທດຕາມກົດໝາຍ.

**ມາດຕາ 13. ຜົນຮ້າຍຕໍ່ຄອບຄົວ**

ຜູ້ຕິດຢາເສບຕິດ ຈະເຮັດໃຫ້ຄອບຄົວເກີດມີຄວາມວຸ້ນວາຍ, ແຕກແຍກ, ເສຍຊື່ສຽງຄອບຄົວ ແລະ ວົງຕະກຸນ, ທຳລາຍສຸຂະພາບ, ຊີວິດ ແລະ ຊັບສິນ ໃນຄອບຄົວ.

**ມາດຕາ 14. ຜົນຮ້າຍຕໍ່ສັງຄົມ**

ຜູ້ຕິດຢາເສບຕິດ ກໍ່ໃຫ້ເກີດມີສິ່ງຫຍໍ້ທໍ້ ແລະ ອາດຊະຍາກຳ, ທຳລາຍ ແລະ ຂົ່ມຂູ່ ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 15. ຜົນຮ້າຍຕໍ່ປະເທດຊາດ**

ຢາເສບຕິດເກືອດຫ້າມ ເປັນອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຕໍ່ປະຊາຊົນ ເປັນຕົ້ນ: ຊາວໜຸ່ມ, ເຍົາວະຊົນ ທີ່ເປັນອະນາຄົດຂອງຊາດ, ຜູ້ຕິດຢາເສບຕິດ ບໍ່ສາມາດປະຕິບັດໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ບໍ່ສາມາດເປັນກຳລັງແຮງ ໃນການສ້າງສາພັດທະນາປະເທດຊາດ.

**12. ປະມວນ ກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017**

**ມາດຕາ 11 ການກະທຳຜິດ**

ການກະທຳຜິດທາງອາຍາ ແມ່ນ ການກະທຳ ຫຼື ການເມີນເສີຍ ທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ການຈັດຕັ້ງ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ຫຼື ຄວາມເປັນລະບຽບຮຽບ ຮ້ອຍຂອງສັງຄົມ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາສະບັບນີ້ ແລະ ກົດໝາຍສະບັບອື່ນ ທີ່ກຳນົດການກະທຳຜິດທາງອາຍາ ແລະ ໂທດ.

ການກະທຳ ຫຼື ການເມີນເສີຍ ທີ່ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ແຕ່ໄດ້ກໍ່ຄວາມເສຍຫາຍທາງດ້ານຊັບສິນ ຕໍ່າກວ່າ ໜຶ່ງລ້ານກີບ ສາມາດນຳມາແກ້ໄຂດ້ວຍການໄກ່ເກ່ຍ ຫຼື ດ້ວຍຮູບການອື່ນ ຍົກເວັ້ນການຍາດຊິງຊັບ, ການປຸ້ນຊັບ, ການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ.

**ມາດຕາ 144 ການກີດຂວາງການຈະລາຈອນທາງບົກ**

ບຸກຄົນໃດ ຫາກໄດ້ກີດຂວາງການຈະລາຈອນທາງບົກ ດ້ວຍການ ຂຸດ, ເຈາະ ຫຼື ຕັດ, ວາງສິ່ງກີດຂວາງ, ມ້າງ, ຮື້ຖອນ, ຍົກຍ້າຍ, ເຮັດໃຫ້ຫຍຸ້ງຍາກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີເປັນການກະທຳຜິດ ທີ່ພາໃຫ້ເກີດອຸບປະຕິເຫດໃນການຈະລາຈອນ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກໄດ້ພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ແປດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 145 ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ**

ບຸກຄົນໃດ ຫາກໄດ້ລະເມີດກົດຈະລາຈອນ ແລ້ວພາໃຫ້ເກີດອຸບປະຕິເຫດ ແລະ ເຮັດໃຫ້ຜູ້ ອື່ນຖືກບາດເຈັບ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 4.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງຄົນ ຂຶ້ນໄປ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 146 ການຫຼົບໜີຈາກອຸບປະຕິເຫດ**

ບຸກຄົນໃດ ຫາກໄດ້ເຮັດໃຫ້ອຸບປະຕິເຫດເກີດຂຶ້ນ ຫຼື ມີສ່ວນພົວພັນໂດຍກົງກັບອຸບປະຕິເຫດ ແລ້ວຫຼົບໜີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 194 ການທຳຮ້າຍຮ່າງກາຍ**

ບຸກຄົນໃດ ຫາກເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ມີການຫຸ້ມຕີ ຫຼື ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການບາດເຈັບ ສາຫັດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກໄດ້ເຮັດໃຫ້ເສຍອົງຄະ, ພິການ ຫຼື ເສຍຊີວິດ ຈະຖືກລົງໂທດຕັດ ອິດ ສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 207 ການປ້ອຍດ່າ**

ບຸກຄົນໃດ ຫາກໄດ້ໃຊ້ວາຈາ, ຂຽນ ຫຼື ກະທຳແນວຫຍາບຊ້າໃສ່ຜູ້ອື່ນ ເພື່ອໃຫ້ເສື່ອມເສຍກຽດ ສັກສີຢ່າງ ຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດ ອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 218 ການບັງຄັບ**

ບຸກຄົນໃດ ຫາກໄດ້ບັງຄັບຜູ້ອື່ນ ດ້ວຍການໃຊ້ກຳລັງ ຫຼື ອາວຸດ ຫຼື ການນາບຂູ່ ເພື່ອໃຫ້ກະທຳ ຫຼື ບໍ່ ໃຫ້ ກະທຳສິ່ງໃດສິ່ງໜຶ່ງ ທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະ ກໍ່ຄວາມເສຍ ຫາຍແກ່ຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 231 ການລັກຊັບ**

ບຸກຄົນໃດ ຫາກໄດ້ເອົາຊັບຂອງຜູ້ອື່ນມາເປັນຂອງຕົນໂດຍບໍ່ຖືກຕ້ອງ ຈະຖືກລົງໂທດຕັດອິດ ສະລະ ພາບ ແຕ່ ສາມເດືອນ ຫາ ສາມປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ລັກດ້ວຍການງັດແງະ, ມ້າງເພຊື່ອຮາວ, ປະຕູ, ຫີບ, ຕູ້ ແລະ ອື່ນໆ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການລັກເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ໃນກໍລະນີກໍ່ ຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ແປດປີ ແລະ ຈະຖືກປັບ ໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 314 ການຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣ ອິນ, ມອກຟີນ ຫຼື ໂຄເຄນ ຜ່ານ ສປປ ລາວ**

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳ ເຮໂຣອິນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ່ຳກວ່າ ໜຶ່ງຮ້ອຍ

(100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອິນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈີນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີເຮໂຣອິນ, ມອກຟີນ ຫຼື ໂຄເຄນ ແຕ່ ໜຶ່ງຮ້ອຍ (100) ກຣາມ ຫາ ສາມຮ້ອຍ (300) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອິນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ສາມຮ້ອຍ (300) ກຣາມ ຫາ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳເຮໂຣອິນ, ມອກຟີນ ຫຼື ໂຄເຄນ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ຫ້າຮ້ອຍ (500) ກຣາມ ຂຶ້ນໄປ ຈະຖືກລົງໂທດປະຫານຊີວິດ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 315 ການຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອອ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສປປ ລາວ**

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕໍ່າກວ່າ ໜຶ່ງຮ້ອຍ (100) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນອາຈີນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ມີຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ມີວັດຖຸອອກລິດຕໍ່ຈິດປະສາດ ແຕ່ ໜຶ່ງຮ້ອຍ (100) ກຣາມ ຫາ ຫ້າຮ້ອຍ (500) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ ມີໄວ້ໃນຄອບຄອງ ຫຼື ນຳເຂົ້າ, ສົ່ງອອກ ຫຼື ນຳຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວ ເກີນກວ່າ ຫ້າຮ້ອຍ (500) ກຣາມ ຫາ ສາມ (3) ກິໂລກຣາມ ຈະຖືກລົງໂທດຕັດ ອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະ ຖືກຮິບຊັບ.

ບຸກຄົນໃດ ຫາກຜະລິດ, ປຸງແຕ່ງ, ຄ້າຂາຍ, ຈໍາໜ່າຍ, ຂົນສົ່ງ, ມີໄວ້ໃນຄອບຄອງ ຫຼື ນໍາເຂົ້າ, ສົ່ງອອກ ຫຼື ນໍາຢາອີ, ຢາບ້າ, ຢາໄອສ໌ (Ice) ຫຼື ວັດຖຸອອກລິດຕໍ່ຈິດປະສາດ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເກີນກວ່າ ສາມ (3) ກິໂລກຣາມ ຂຶ້ນໄປ ຈະຖືກລົງໂທດປະຫານຊີວິດ.

ການກະກຽມໃຫ້ແກ່ການກະທໍາຜິດ, ຄວາມພະຍາຍາມກໍ່ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 320 ການເສບ ຫຼື ການມີໄວ້ໃນຄອບຄອງເພື່ອເສບ**

ບຸກຄົນໃດ ຫາກເສບ ຫຼື ມີໄວ້ໃນຄອບຄອງເພື່ອເສບ ເຮໂຣອີນ, ມອກຟີນ ຫຼື ໂຄເຄນ ທີ່ມີນໍ້າໜັກ ແຕ່ ສູນຈຸດສອງ (0,2) ກຣາມລົງມາ ຫຼື ຢາອີ, ຢາບ້າ, ຢາໄອສ໌ (Ice) ທີ່ມີນໍ້າໜັກ ແຕ່ ສູນຈຸດສາມ (0,3) ກຣາມ ລົງມາ ຫຼື ຝິ່ນ ທີ່ມີນໍ້າໜັກ ແຕ່ ສູນຈຸດຫ້າ (0,5) ກຣາມ ລົງມາ ຫຼື ຄັນຊາແຫ້ງ ທີ່ມີນໍ້າໜັກ ແຕ່ ຫ້າ (5) ກຣາມ ລົງມາ ຫຼື ສານລະເຫີຍອື່ນ ທີ່ມີສານເສບຕິດ ທີ່ມີນໍ້າໜັກ ແຕ່ ສູນຈຸດຫ້າ (0,5) ກຣາມ ລົງມາ ຫຼື ພືດທີ່ໃຫ້ສານເສບຕິດ ທີ່ມີນໍ້າໜັກ ແຕ່ ຫ້າ (5) ກຣາມ ລົງມາ ຖືວ່າເປັນຜູ້ຖືກເຄາະຮ້າຍ ຊຶ່ງຕ້ອງໄດ້ຮັບ ການປິ່ນປົວ ຫຼື ນໍາໄປປິ່ນປົວຕາມແຕ່ລະກໍລະນີ.

ບຸກຄົນໃດ ມີໄວ້ໃນຄອບຄອງ ເພື່ອເສບ ເຮໂຣອີນ, ມອກຟີນ ຫຼື ໂຄເຄນ ທີ່ມີນໍ້າໜັກເກີນກວ່າ ສູນຈຸດສອງ (0,2) ກຣາມ ຫາ ສອງ (2) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດ ປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ຢາອີ, ຢາບ້າ ແລະ ຢາໄອສ໌ (Ice) ທີ່ມີນໍ້າໜັກເກີນກວ່າ ສູນຈຸດສາມ (0.3) ກຣາມ ຫາ ສາມ (3) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອສູບ ຝິ່ນ ທີ່ມີນໍ້າໜັກເກີນກວ່າ ສູນຈຸດຫ້າ (0.5) ກຣາມ ຫາ ຫ້າ (5) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ຄອບຄອງເພື່ອສູບ ຄັນຊາແຫ້ງ ທີ່ມີນໍ້າໜັກເກີນກວ່າ ຫ້າ (5) ກຣາມ ຫາ ສິບ (10) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ສານລະເຫີຍອື່ນທີ່ມີສານເສບຕິດ ທີ່ມີນໍ້າໜັກເກີນກວ່າ ສູນຈຸດຫ້າ (0,5) ກຣາມ ຫາ ຫ້າ (5) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ມີໄວ້ໃນຄອບຄອງເພື່ອເສບ ພືດທີ່ໃຫ້ສານເສບຕິດ ທີ່ມີນໍ້າໜັກເກີນກວ່າ ຫ້າ (5) ກຣາມ ຫາ ສິບ (10) ກຣາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງເດືອນ ຫາ ຫົກເດືອນ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກດໍາເນີນການບໍລິການສູບຝິ່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກດໍາເນີນການບໍລິການສູບຄັນຊາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 324 ການບັງຄັບ ຫຼື ການຊັກຊວນບຸກຄົນອື່ນໃຫ້ນໍາໃຊ້ຢາເສບຕິດ**

ບຸກຄົນໃດ ຫາກໃຊ້ກຳລັງ, ອາວຸດ, ນາບຂູ່, ຍົວະຍອຍ, ເລ່ລ່ຽມ ຫຼື ສະເໜີຜົນປະໂຫຍດ ໃດໜຶ່ງແກ່ ບຸກຄົນອື່ນ ຫຼື ນຳໃຊ້ວິທີການອື່ນ ເພື່ອໃຫ້ນຳໃຊ້ຢາເສບຕິດ ຊຶ່ງຂັດກັບຈຸດປະສົງ ແລະ ກໍ່ຄວາມເສຍຫາຍ ແກ່ ຜູ້ຖືກບັງຄັບ ຫຼື ຜູ້ຖືກຊັກຊວນ ຈະຖືກລົງໂທດຕັດອິດ ສະລະພາບ ແຕ່ ສອງປີ ຫາ ເຈັດປີ ແລະ ຈະຖືກ ປັບ ໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເອົາການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ, ກະທຳຜິດ ຕໍ່ເດັກ, ກະທຳຜິດຕໍ່ຜູ້ຍິງທີ່ພວມຖືພາ, ກະທຳຜິດຕໍ່ຫຼາຍຄົນ, ກໍ່ໃຫ້ເກີດເຊື້ອພະຍາດຕ່າງໆ ທີ່ເປັນອັນຕະລາຍ ຮ້າຍແຮງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການເສຍອົງຄະ ຫຼື ເສຍຊີວິດ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 36:000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີການເສຍອົງຄະ, ພິການ ຫຼື ເສຍຊີວິດ ແຕ່ສອງ ຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 326 ການຕັດໄມ້ຄຸ້ມຄອງ, ຖາງປ່າ, ຈູດປ່າ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງ ຕາມ ກົດໝາຍ**

ບຸກຄົນໃດ ຫາກໄດ້ຕັດໄມ້, ຖາງປ່າ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວ ກັບປ່າ ໄມ້, ຈູດປ່າ ຫຼື ທຳລາຍປ່າໄມ້ດ້ວຍວິທີການອື່ນ ຫຼື ການຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງ ຕາມ ກົດໝ າຍ ແລະ ລະບຽບການ ຊຶ່ງສ້າງຜົນເສຍຫາຍ ທີ່ມີມູນຄ່າ ແຕ່ 5.000.000 ກີບ ຂຶ້ນໄປ ຈະຖືກລົງໂທດ ຕັດ ອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນ ຄ່າຄວາມເສຍຫາຍ ແລະ ໃຫ້ຟື້ນຟູຄືນ.

ໃນກໍລະນີ ການກະທຳຜິດ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ມີຄວາມເສຍຫາຍຢ່າງຫຼວງ ຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສາມເທົ່າຂອງມູນຄ່າ ຄວາມ ເສຍຫາຍ ແລະ ໃຫ້ຟື້ນຟູຄືນ.

**ມາດຕາ 327 ການຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້ ແລະ ຕໍໄມ້ທຳມະຊາດປະເພດ ຫວງ ຫ້າມ ແລະ ໄມ້ພິເສດ ທີ່ໃກ້ຈະສູນພັນໂດຍບໍ່ຖືກຕ້ອງ ຕາມກົດໝາຍ**

ບຸກຄົນໃດ ຫາກໄດ້ຕັດ, ຊື້-ຂາຍ ຫຼື ເຄື່ອນຍ້າຍໄມ້ ແລະ ຕໍໄມ້ທຳມະຊາດປະເພດຫວງຫ້າມ ແລະ ໄມ້ພິເສດທີ່ໃກ້ຈະສູນພັນ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນເສຍຫາຍທີ່ມີມູນຄ່າ ແຕ່ 5.000.000 ກີບ ຂຶ້ນ ໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 1.000.000.000 ກີບ ຫາ 2.500.000.000 ກີບ ແລະ ໃຫ້ຟື້ນຟູຄືນ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ກະທຳຜິດອີກ ເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກລົງໂທດ ຕັດ ອິດສະລະພາບ ແຕ່ ສອງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າ ຄວາມເສຍຫາຍ ແລະ ໃຫ້ ຟື້ນຟູຄືນ.

**13. ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018**

**ມາດຕາ 2 ປະມວນກົດໝາຍແພ່ງ**

ປະມວນກົດໝາຍແພ່ງ ແມ່ນ ການລວບລວມເອົາ ບັນດາບົດບັນຍັດຂອງກົດໝາຍ ເຂົ້າເປັນສະບັບດຽວ ຢ່າງເປັນລະບົບກ່ຽວກັບ ການເກີດ, ການປ່ຽນແປງ ແລະ ການສິ້ນສຸດ ສິດ ແລະ ພັນທະ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນສາຍພົວພັນທາງແພ່ງກ່ຽວກັບ ຊັບ, ກຳມະສິດ, ຄອບຄົວ, ຂໍ້ຜູກພັນໃນສັນຍາ, ຂໍ້ຜູກພັນນອກສັນຍາ, ມູນມໍຣະດົກ ແລະ ສາຍພົວພັນອື່ນ.

**ມາດຕາ 152 ການຈົດທະບຽນການແຕ່ງດອງ**

ຍິງ ແລະ ຊາຍ ທີ່ມີຈຸດປະສົງແຕ່ງດອງນຳກັນ ຕ້ອງເຮັດຄຳຮ້ອງເປັນລາຍລັກອັກສອນ ແລ້ວຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວຂອງຫ້ອງການພາຍໃນຂັ້ນເມືອງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ຂອງຝ່າຍໃດໜຶ່ງ.

ຖ້າເຫັນວ່າ ຍິງ ແລະ ຊາຍນັ້ນ ຫາກມີເງື່ອນໄຂຄົບຖ້ວນແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ກໍຈະໃຫ້ພວກກ່ຽວເຂົ້າມາຈົດທະບຽນການແຕ່ງດອງ ໂດຍຊ້ອງໜ້າພະຍານສາມຄົນ.

ຍິງ ແລະ ຊາຍ ຈະມີຖານະເປັນ ຜົວ ເມຍ ກັນ ນັບແຕ່ວັນຈົດທະບຽນການແຕ່ງດອງ ເປັນຕົ້ນໄປ.

**ມາດຕາ 167 ຊັບເດີມ**

ຊັບເດີມ ແມ່ນ ຊັບສົມບັດ ທີ່ ຜົວ ຫຼື ເມຍ ໄດ້ມາກ່ອນການແຕ່ງດອງ ຫຼື ແມ່ນຊັບສົມບັດທີ່ໄດ້ມາຈາກການສືບທອດມູນມໍຣະດົກ ຫຼື ຈາກການມອບ ຫຼື ການຍົກຊັບໃຫ້ ຜົວ ຫຼື ເມຍ ສະເພາະ ພາຍຫຼັງການແຕ່ງ ດອງທີ່ຍັງຄົງຢູ່ ຫຼື ປ່ຽນສະພາບໄປເປັນຊັບສິ່ງຂອງໃໝ່ແລ້ວ.

ນອກຈາກນີ້ ດອກເບ້ຍ, ລາຍໄດ້ ແລະ ໝາກຜົນ ທີ່ເກີດຈາກ ຊັບເດີມຂອງ ຜົວ ຫຼື ເມຍ ກໍໃຫ້ຖືເປັນຊັບເດີມຂອງຜູ້ນັ້ນ, ເວັ້ນເສຍແຕ່ ຜົວ ຫຼື ເມຍ ຫາກໄດ້ປະກອບສ່ວນເຂົ້າໃນການຜະລິດ ຫຼື ການສ້າງສາຮ່ວມກັນ, ໃນກໍລະນີນີ້ ລາຍໄດ້ ແລະ ໝາກຜົນນັ້ນ ໃຫ້ຖືເປັນສິນສົມສ້າງ.

**ມາດຕາ 168 ສິນສົມສ້າງ**

ສິນສົມສ້າງ ແມ່ນ ຊັບສົມບັດທີ່ ຜົວ ເມຍ ສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ, ເວັ້ນເສຍແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ.

ລາຍໄດ້ທັງໝົດທີ່ ຜົວ ຫຼື ເມຍ ໄດ້ຮັບໃນເວລາຢູ່ຮ່ວມກັນ ຫຼື ແຍກກັນຢູ່ນັ້ນ ກໍໃຫ້ຖືເປັນສິນສົມສ້າງ.

ໃນກໍລະນີທີ່ມີການສ້ອມແປງຊັບເດີມຂອງຝ່າຍໃດຝ່າຍໜຶ່ງ ໂດຍນຳໃຊ້ສິນສົມສ້າງ ຫຼື ຊັບເດີມຂອງອີກຝ່າຍໜຶ່ງ ໃນມູນຄ່າເກີນກວ່າສອງສ່ວນສາມ ຂອງມູນຄ່າຊັບເດີມທີ່ສ້ອມແປງ ກໍໃຫ້ຖືວ່າຊັບນັ້ນເປັນສິນສົມສ້າງ.

**ມາດຕາ 169 ການນຳໃຊ້ສິນສົມສ້າງ**

ຜົວ ເມຍ ມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງ ໂດຍບໍ່ຂຶ້ນກັບວ່າຈະແມ່ນ ຜົວ ຫຼື ເມຍ ເປັນຜູ້ຫາຊັບສິ່ງຂອງນັ້ນມາໄດ້. ຜົວ ເມຍ ມີສິດນຳໃຊ້ສິນສົມສ້າງຢ່າງສົມເຫດສົມຜົນ ຕາມຄວາມຮຽກຮ້ອງຕ້ອງການຂອງຄອບຄົວ. ສຳລັບ ສິດໄດ້ຮັບໝາກຜົນ ແລະ ຊີ້ຂາດ ກ່ຽວກັບສິນສົມສ້າງ ຊຶ່ງມີມູນຄ່າສູງນັ້ນ ຕ້ອງມີຄວາມເປັນເອກະພາບນຳກັນເສຍກ່ອນ ເຊັ່ນ ການຊື້ຂາຍສິດນຳໃຊ້ ທີ່ດິນ ຫຼື ເຮືອນ, ການນຳເອົາສິນສົມສ້າງໄປຄ້ຳປະກັນ.

**ມາດຕາ 170 ການສິ້ນສຸດການເປັນຜົວເມຍ**

ການສິ້ນສຸດການເປັນ ຜົວ ເມຍ ແມ່ນການຂາດຈາກສາຍພົວພັນ ຜົວ ເມຍ ຕາມສາເຫດໃດໜຶ່ງ ດັ່ງນີ້:

1. ການຢ່າຮ້າງ;
2. ຄຳຕັດສິນຂອງສານ ທີ່ຮັບຮູ້ການແຕ່ງດອງເປັນໂມຄະ;
3. ການເສຍຊີວິດຂອງຜົວ ຫຼື ເມຍ.

**ມາດຕາ 171 ການຢ່າຮ້າງ**

ການຢ່າຮ້າງ ແມ່ນ ການສິ້ນສຸດການເປັນ ຜົວ ເມຍ ຍ້ອນສາເຫດໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 176 ຂອງປະມວນກົດໝາຍສະບັບນີ້.

ບໍ່ວ່າໃນກໍລະນີໃດກໍຕາມ ບໍ່ອະນຸຍາດໃຫ້ມີການຊື້ຮ້າງ ຫຼື ບັງຄັບໃຫ້ຢ່າຮ້າງ.

**ມາດຕາ 172 ປະເພດການຢ່າຮ້າງ**

ການຢ່າຮ້າງ ມີ ສອງ ປະເພດ ດັ່ງນີ້:

1. ການຢ່າຮ້າງດ້ວຍຄວາມສະໝັກໃຈ;
2. ການຢ່າຮ້າງຕາມຄຳຕັດສິນຂອງສານ.

**ມາດຕາ 176 ສາເຫດຂອງການຢ່າຮ້າງ**

ຜົວ ຫຼື ເມຍ ຈະຂໍຢ່າຮ້າງກັນໄດ້ ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

1. ທຳມິດສະຈານ;
2. ໃຊ້ຄວາມຮຸນແຮງ ຫຼື ປ້ອຍດ່າດ້ວຍຄວາມຫຍາບຊ້າຕໍ່ກັນ ຫຼື ຕໍ່ ພໍ່ ແມ່ ແລະ ຍາດພີ່ ນ້ອງ ຫຼື ມີການປະພຶດທີ່ບໍ່ເໝາະສົມຢ່າງຮ້າຍແຮງ ເຊັ່ນ ຕິດເຄື່ອງດື່ມທີ່ມີທາດເຫຼົ້າ, ຕິດຢາເສບຕິດຢ່າງ ໜັກໜ່ວງ ຫຼື ຫຼິ້ນການພະນັນເປັນອາຈິນ, ຫຼິ້ນກິນຟຸມເຟືອຍ;
3. ໜີໄປ ແລະ ບໍ່ໄດ້ສົ່ງ ຂ່າວຄາວ ຫຼື ຊັບມາລ້ຽງຄອບຄົວ ເປັນເວລາ ສາມປີ ຂຶ້ນໄປ;
4. ໄປບວດເປັນ ພິກຂຸ, ສາມະເນນ ຫຼື ພໍ່ຂາວ ຫຼື ແມ່ຂາວ ເກີນກວ່າ ສາມປີ ໂດຍບໍ່ມີ ຄວາມເຫັນດີນຳກັນ;
5. ເປັນຜູ້ຫາຍສາບສູນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 95 ຂອງປະມວນກົດໝາຍສະບັບນີ້;
6. ຖືກສານຕັດສິນລົງໂທດ ຕັດອິດສະລະພາບ ແຕ່ ຫ້າປີຂຶ້ນໄປ;
7. ເປັນພະຍາດ ຊຶ່ງເປັນອັນຕະລາຍຮ້າຍແຮງຈົນບໍ່ສາມາດຈະຢູ່ນຳກັນໄດ້;
8. ເປັນບ້າເສຍຈິດ ຈົນບໍ່ສາມາດຈະຢູ່ນຳກັນໄດ້;
9. ບໍ່ສາມາດຮ່ວມປະເວນີກັນໄດ້;
10. ບໍ່ສາມາດດຳລົງຊີວິດເປັນ ຜົວ ເມຍ ກັນຕໍ່ໄປໄດ້ ຍ້ອນສາເຫດຕ່າງໆ ເຊັ່ນ ຄວາມບໍ່ ສັດຊື່ຕໍ່ກັນ, ການທໍລະມານຈິດໃຈກັນ.

**ມາດຕາ 181 ການແບ່ງປັນຊັບເດີມ ແລະ ສິນສົມສ້າງ**

ການແບ່ງປັນ ຊັບເດີມ ແລະ ສິນສົມສ້າງຂອງ ຜົວ ເມຍ ໃຫ້ປະຕິບັດ ດັ່ງນີ້:

1. ຊັບເດີມຂອງຝ່າຍໃດ ກໍໃຫ້ເປັນກຳມະສິດຂອງຝ່າຍນັ້ນ;

2. ສິນສົມສ້າງຂອງ ຜົວ ເມຍ ໃຫ້ແບ່ງປັນກັນຄົນລະເຄິ່ງ, ເວັ້ນເສຍແຕ່ ຜົວ ຫຼື ເມຍ ຫາກເປັນຜູ້ ກະທຳຜິດໃນສະຖານທຳມິດສະຈານ, ສໍ້ໂກງ ຫຼື ຍົກຍອກສິນສົມສ້າງ ໂດຍມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ, ຝ່າຍທີ່ຜິດນັ້ນ ກໍຈະໄດ້ຮັບພຽງແຕ່ ໜຶ່ງສ່ວນສາມ ຂອງສິນສົມສ້າງເທົ່ານັ້ນ.

ໃນກໍລະນີ ທີ່ລູກຍັງບໍ່ທັນພົ້ນກະສຽນອາຍຸ ຫາກໄດ້ຢູ່ນໍາຜູ້ໃດ ຜູ້ນັ້ນ ກໍຈະໄດ້ຮັບສ່ວນແບ່ງ ໜຶ່ງສ່ວນສາມ ຂອງສິນສົມສ້າງນັ້ນ ເພື່ອເປັນການລ້ຽງດູລູກ. ໃນກໍລະນີທີ່ບໍ່ພຽງພໍກັບຄ່າລ້ຽງດູລູກ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 217 ຂອງປະມວນກົດໝາຍສະບັບນີ້ ໃຫ້ ພໍ່ ຫຼື ແມ່ ທີ່ລູກບໍ່ຢູ່ນໍານັ້ນ ສືບຕໍ່ປະຕິບັດພັນທະຈົນກວ່າເດັກຈະພົ້ນກະສຽນອາຍຸ, ສ່ວນສິນສົມສ້າງທີ່ເຫຼືອນັ້ນ ໃຫ້ ຜົວ ເມຍ ແບ່ງປັນກັນຄົນລະເຄິ່ງ.

ສິນສົມສ້າງ ຈະໄດ້ແບ່ງປັນກັນ ພາຍຫຼັງທີ່ ຜົວ ເມຍ ນັ້ນ ໄດ້ຢ່າຮ້າງກັນ.

ສິນສົມສ້າງ ອາດຈະຖືກແບ່ງປັນກ່ອນການຢ່າຮ້າງກໍໄດ້ ຕາມການຮ້ອງຟ້ອງ ຫຼື ຮ້ອງຂໍ ຂອງຝ່າຍໃດໜຶ່ງ ຕາມທີ່ໄດ້ກໍານົດໃນວັກເທິງນີ້ ໃນກໍລະນີ ດັ່ງນີ້:

1. ຜົວ ເມຍ ຫາກໄດ້ແຍກກັນຢູ່;

2. ຜົວ ຫຼື ເມຍ ຫາກໄດ້ລັກເອົາສິນສົມສ້າງ ໄປນໍາໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫຼື ຫາກບໍ່ມີຄວາມບໍລິສຸດໃຈຕໍ່ສິນສົມສ້າງ;

3. ຜົວ ຫຼື ເມຍ ຫາກໄດ້ຫາຍສາບສູນ ຕາມຄໍາຕັດສິນຂອງສານ.

**ມາດຕາ 320 ຂອບເຂດການນໍາໃຊ້ກໍາມະສິດ**

ການນໍາໃຊ້ກໍາມະສິດ ແມ່ນ ໃຫ້ນໍາໃຊ້ຊັບສິ່ງຂອງທີ່ເປັນຂອງຕົນ ເພື່ອຕອບສະໜອງຄວາມຕ້ອງ ການທາງດ້ານຊີວິດການເປັນຢູ່ ຫຼື ຜົນປະໂຫຍດອັນແນ່ນອນທີ່ຕົນຕ້ອງການ ແຕ່ບໍ່ໃຫ້ກໍ່ຄວາມເສຍຫາຍ ຫຼື ຂັດກັບສິດ ແລະ ຜົນປະໂຫຍດຂອງລັດ, ຂອງສັງຄົມ ຫຼື ຂອງບຸກຄົນອື່ນ.

ສໍາລັບການນໍາໃຊ້ທີ່ດິນນັ້ນ ແມ່ນ ລວມທັງການນໍາໃຊ້ພື້ນທີ່ທາງອາກາດ, ເທິງໜ້າດິນ ແລະ ພື້ນທີ່ໃຕ້ດິນ ໃນຂອບເຂດທີ່ສາມາດນໍາໃຊ້ ແລະ ມີຜົນປະໂຫຍດເທົ່ານັ້ນ, ເວັ້ນເສຍແຕ່ກົດໝາຍຫາກໄດ້ກໍານົດໄວ້ເປັນຢ່າງອື່ນ.

**ມາດຕາ 321 ພັນທະຂອງເຈົ້າກໍາມະສິດໃນສະພາວະທີ່ຈໍາເປັນ**

ໃນສະພາວະທີ່ຈໍາເປັນ ເຈົ້າກໍາມະສິດຕໍ່ຊັບສິ່ງຂອງ ບໍ່ມີສິດຂັດຂວາງບຸກຄົນອື່ນ ໃນການນໍາໃຊ້ຊັບສິ່ງຂອງ ຫຼື ບໍ່ມີສິດຂັດຂວາງບຸກຄົນອື່ນໃນການກໍ່ຄວາມເສຍຫາຍຕໍ່ຊັບສິ່ງຂອງຂອງຕົນ ເພື່ອສະກັດກັ້ນ ຫຼື ຫຼຸດຜ່ອນໄພອັນຕະລາຍ ທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ.

ການໃຊ້ແທນຄ່າເສຍຫາຍ ຕາມທີ່ໄດ້ກ່າວໄວ້ໃນວັກເທິງນີ້ ໃຫ້ປະຕິບັດຕາມມາດຕາ 483 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 322 ການປົກປັກຮັກສາສິ່ງແວດລ້ອມ**

ໃນການນໍາໃຊ້ກໍາມະສິດຂອງຕົນນັ້ນ ເຈົ້າກໍາມະສິດ ຕ້ອງຮັບປະກັນ ແລະ ຄວບຄຸມບໍ່ໃຫ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ເຊັ່ນ ພາໃຫ້ເກີດມົນລະພິດ, ສານເຄມີທີ່ເປັນພິດ, ທາດກໍາມັນຕະພາບລັງສີ, ຄວາມສັ່ນສະເທືອນ, ແສງ, ສີ, ສຽງ ແລະ ກິ່ນ ຊຶ່ງຈະພາໃຫ້ເປັນອັນຕະລາຍຕໍ່ ສຸຂະພາບ, ຊີວິດ ແລະ ຊັບສິ່ງຂອງຂອງບຸກຄົນອື່ນ ຫຼື ເປັນຜົນກະທົບຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ໃນກໍລະນີທີ່ສ້າງຄວາມເສຍຫາຍໃຫ້ແກ່ສິ່ງແວດລ້ອມ, ຜູ້ກໍ່ຄວາມເສຍຫາຍ ຕ້ອງຢຸດເຊົາການກະ ທໍາຂອງຕົນໂດຍທັນທີ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 323 ການກໍານົດເຂດແດນ**

ເຂດແດນລະຫວ່າງຕອນດິນທີ່ຕິດຈອດກັນ ໃຫ້ກໍານົດດ້ວຍການຕົກລົງລະຫວ່າງເຈົ້າຂອງທີ່ດິນທີ່ຕິດຈອດກັນ ໂດຍມີການຢັ້ງຢືນຂອງຂະແໜງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທີ່ ກ່ຽວຂ້ອງ.

ຄ່າໃຊ້ຈ່າຍໃນການປັກຫຼັກໝາຍເຂດແດນ ຮ່ວມກັນ ໃຫ້ຮັບຜິດຊອບຄົນລະເຄິ່ງ ຫຼື ໃຫ້ປະຕິບັດຕາມ ທີ່ໄດ້ຕົກລົງກັນ.

**ມາດຕາ 324 ການລ້ອມຮົ້ວ**

ເຈົ້າຂອງທີ່ດິນ ສາມາດລ້ອມຮົ້ວໃນຂອບເຂດທີ່ດິນຂອງຕົນ ແຕ່ບໍ່ໃຫ້ເປັນອຸປະສັກຕໍ່ການສັນ ຈອນ ຫຼື ລ່ວງເຂດແດນຂອງຕອນດິນທີ່ຢູ່ໃກ້ຄຽງ ແລະ ເຂດສະຫງວນຂອງທາງຕາມ ທີ່ໄດ້ກຳນົດໄວ້ ໃນກົດໝາຍ.

ໃນກໍລະນີທີ່ຕອນດິນນັ້ນມີທາງເຄີຍທຽວໄປມາກ່ອນ ເຈົ້າຂອງທີ່ດິນໄດ້ສິດນຳໃຊ້ທີ່ດິນຕ້ອງຈັ່ງ ທາງທຽວທີ່ເໝາະສົມ ຫຼື ປ່ຽນແລວທາງທີ່ເຄີຍທຽວໄປທາງອື່ນ ແລ້ວຈຶ່ງລ້ອມຮົ້ວໄດ້ ແຕ່ຕ້ອງໃນ ຕອນດິນດັ່ງກ່າວ.

**ມາດຕາ 325 ກຳມະສິດຮ່ວມຂອງສິ່ງທີ່ຕັ້ງຢູ່ເຂດແດນ**

ຮົ້ວ, ກຳແພງ, ຮ່ອງນໍ້າ ຫຼື ຕົ້ນໄມ້ ທີ່ຢູ່ຕາມເຂດແດນ ໃຫ້ສັນນິຖານວ່າເປັນກຳມະສິດຮ່ວມ ລະຫວ່າງເຈົ້າຂອງທີ່ດິນທີ່ຕິດຈອດກັນນັ້ນ ແລະ ໃຫ້ປະຕິບັດຕາມຫຼັກການກ່ຽວກັບກຳມະສິດຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້, ເວັ້ນເສຍແຕ່ຫາກໄດ້ມີການພິສູດເປັນຢ່າງອື່ນ.

**ມາດຕາ 326 ຂອບເຂດການປຸກສ້າງເຮືອນ ຫຼື ການປູກຕົ້ນໄມ້**

ບຸກຄົນໃດ ທີ່ໄດ້ຮັບສິດປຸກສ້າງເຮືອນ ຫຼື ກໍ່ສ້າງອື່ນໆແລ້ວນັ້ນ ບໍ່ມີສິດເຮັດໃຫ້ນໍ້າຝົນ ຫຼື ນໍ້າເປື້ອນໄຫຼ ຫຼື ຊຶມເຂົ້າ ທີ່ດິນທີ່ຕິດຈອດກັບຕົນ ລວມທັງບໍ່ໃຫ້ສາຍຄາເຮືອນຂອງຕົນລື່ນກາຍໄປ ຫຼື ກວມເອົາທີ່ດິນ ຫຼື ເຮືອນຂອງບຸກຄົນອື່ນ ທີ່ຢູ່ໃກ້ຄຽງນັ້ນ.

ສຳລັບການປູກຕົ້ນໄມ້, ຕົ້ນໄມ້ກິນໝາກ, ຕົ້ນໄມ້ເປັນເຄືອ ຫຼື ຕົ້ນໄມ້ປະເພດອື່ນໆນັ້ນ ກໍບໍ່ໃຫ້ກໍ່ຄວາມເສຍຫາຍ ຫຼື ສ້າງຜົນກະທົບຕໍ່ເຈົ້າຂອງເຮືອນທີ່ຢູ່ໃກ້ຄຽງ ຫຼື ກີດຂວາງການສັນຈອນໄປມາ.

**ມາດຕາ 327 ສິດຂອງຜູ້ຖືກເສຍຫາຍຍ້ອນການນຳໃຊ້ກຳມະສິດໂດຍບໍ່ຖືກຕ້ອງ**

ຜູ້ຖືກເສຍຫາຍເນື່ອງຈາກສາເຫດທີ່ໄດ້ກ່າວໄວ້ໃນມາດຕາ 326 ຂອງປະມວນກົດໝາຍສະບັບນີ້ ອາດຈະຮານງ່າໄມ້, ເຄືອໄມ້ ຫຼື ຕັດຮາກໄມ້ທີ່ລ່ວງກາຍເຂົ້າມາໃນທີ່ດິນຕົນກໍໄດ້ ພາຍຫຼັງທີ່ໄດ້ແຈ້ງໃຫ້ເຈົ້າກຳມະສິດນັ້ນຊາບ ເຈັດວັນແລ້ວ ແຕ່ຜູ້ກ່ຽວກໍຍັງເມີນເສີຍຢູ່ ຫຼື ຜູ້ຖືກເສຍຫາຍຈະດຳເນີນການປົກປ້ອງສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 336 ຂອງປະມວນກົດໝາຍສະບັບນີ້ກໍໄດ້.

ນອກຈາກນີ້ແລ້ວ ຜູ້ຖືກເສຍຫາຍ ຍັງມີສິດຮ້ອງຂໍເອົາການໃຊ້ແທນຄ່າເສຍຫາຍນັ້ນອີກດ້ວຍ.

**ມາດຕາ 328 ການອະນຸຍາດໃຫ້ມີທາງ, ການເນັ່ງສາຍໄຟຟ້າຜ່ານ**

ບຸກຄົນໃດ ທີ່ມີເຮືອນ ຊຶ່ງຖືກປິດລ້ອມດ້ວຍເຮືອນ ຫຼື ທີ່ດິນ ຊຶ່ງຜູ້ອື່ນມີສິດນຳໃຊ້ ໂດຍບໍ່ມີທາງ ຜ່ານອອກໄປສູ່ຫົນທາງໄດ້ ບຸກຄົນນັ້ນ ກໍມີສິດຮ້ອງຂໍທາງຜ່ານຈາກຜູ້ທີ່ມີສິດນຳໃຊ້ທີ່ດິນທີ່ຢູ່ໃກ້ຫົນທາງກວ່າ ໝູ່. ຜູ້ທີ່ມີສິດນຳໃຊ້ທີ່ດິນ ຊຶ່ງຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານ ແຕ່ມີສິດຮ້ອງຂໍເອົາການໃຊ້ແທນຄ່າ ເສຍຫາຍແກ່ຜົນລະປູກ ຫຼື ສິ່ງທີ່ກໍ່ສ້າງ ຈາກການນຳໃຊ້ທີ່ດິນເປັນທາງຜ່ານນັ້ນ ຕາມຄວາມເໝາະສົມ.

ໃນກໍລະນີທີ່ມີການເນັ່ງສາຍໄຟຟ້າ, ສາຍໂທລະສັບ ຫຼື ຂຸດຮ່ອງນໍ້າ, ວາງທໍ່ນໍ້າ, ທໍ່ນໍ້າປະປາຜ່ານທີ່ ດິນຂອງຜູ້ທີ່ມີສິດນຳໃຊ້ບຸກຄົນໃດໜຶ່ງ ຊຶ່ງພາໃຫ້ຕົ້ນໄມ້ ຫຼື ຜົນລະປູກຕ່າງໆ ຂອງຜູ້ກ່ຽວຖືກທຳລາຍ ຫຼື ພາໃຫ້ມີຄວາມເສຍຫາຍແລ້ວ ບຸກຄົນນັ້ນ ກໍອາດຂໍເອົາຄ່າເສຍຫາຍທີ່ເນື່ອງຈາກການກະທຳນັ້ນກໍໄດ້. ຖ້າຜູ້ທີ່ ມີສິດນຳໃຊ້ທີ່ດິນຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍຈະບໍ່ໃຫ້ຄິດໄລ່ຄ່າເສຍຫາຍນັ້ນອີກ.

**ມາດຕາ 329 ການອະນຸຍາດໃຫ້ນໍ້າຮ່ອງໄຫຼຜ່ານ**

ບຸກຄົນໃດທີ່ມີຄວາມຈໍາເປັນ ໃນການເປັ່ງນໍ້າອອກຈາກທີ່ດິນທີ່ຕົນຢູ່ ກໍມີສິດຮ້ອງຂໍຂຸດຮ່ອງເປັ່ງນໍ້າ ຜ່ານທີ່ດິນຂອງຜູ້ທີ່ຢູ່ລຸ່ມຖັດຕົນ ຫຼື ຜູ້ທີ່ຢູ່ໃກ້ຄອງນໍ້າ, ຜູ້ທີ່ຖືກຮ້ອງຂໍກໍຕ້ອງອະນຸຍາດໃຫ້ຂຸດຮ່ອງເປັ່ງນໍ້າ ແຕ່ ມີສິດຮ້ອງຂໍເອົາຄ່າເສຍຫາຍແກ່ພືນລະປູກ ຫຼື ສິ່ງທີ່ປຸກສ້າງຈາກການຂຸດຮ່ອງເບັ່ງນໍ້ານັ້ນ. ຜູ້ຮ້ອງຂໍຂຸດຮ່ອງ ເບັ່ງນໍ້າຕ້ອງຮັກສາອະນາໄມ ແລະ ສະພາບຂອງຮ່ອງນໍ້າໃຫ້ເໝາະສົມ.

**ມາດຕາ 331 ການຂໍອະນຸຍາດນໍາໃຊ້ຕອນດິນທີ່ຕິດຈອດກັນ**

ເຈົ້າຂອງທີ່ດິນ ສາມາດຂໍອະນຸຍາດນໍາໃຊ້ຕອນດິນທີ່ຕິດຈອດກັນນັ້ນ ເພື່ອທໍາການກໍ່ສ້າງ, ສ້ອມແປງ, ບຸລະນະເຮືອນ, ອາຄານ, ຮົ້ວ, ກໍາແພງ ຫຼື ສິ່ງກໍ່ສ້າງອື່ນຂອງຕົນ ເມື່ອເຫັນວ່າມີຄວາມຈໍາເປັນ.

ໃນກໍລະນີການນໍາໃຊ້ນັ້ນ ຫາກກໍ່ໃຫ້ເກີດຄວາມເສຍຫາຍ ຕ້ອງໄດ້ສ້ອມແປງຄືນ ຫຼື ໃຊ້ແທນຄ່າເສຍຫາຍ.

**ມາດຕາ 339 ທາດສະພາບ**

ທາດສະພາບ ແມ່ນ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ຊຶ່ງເກີດຂຶ້ນຈາກທໍາມະຊາດ ແລະ ຖືກກໍານົດໃນກົດໝາຍ ຫຼື ສັນຍາ ຫຼື ນິຕິກໍາອື່ນ. ທາດສະພາບ ຕາມທໍາມະຊາດ, ຕາມກົດໝາຍ ໄດ້ກໍານົດໄວ້ໃນ ມາດຕາ 328 ແລະ 329 ຂອງປະ ມວນກົດໝາຍສະບັບນີ້ ແລະ ກົດໝາຍອື່ນ.

**ມາດຕາ 565 ມູນມໍຣະດົກ**

ມູນມໍຣະດົກ ແມ່ນ ຊັບທີ່ເປັນກໍາມະສິດຂອງຜູ້ເສຍຊີວິດ ລວມທັງ ສິດ ແລະ ພັນທະຂອງຜູ້ ກ່ຽວ, ເວັ້ນເສຍແຕ່ ສິດ ແລະ ພັນທະ ຊຶ່ງກົດໝາຍ ຫຼື ສັນຍາໄດ້ກໍານົດໄວ້ໃຫ້ຜູ້ເສຍຊີວິດ ຕ້ອງປະຕິບັດ ດ້ວຍຕົນເອງ ໃນເວລາທີ່ຜູ້ກ່ຽວມີຊີວິດຢູ່ນັ້ນ.

**ມາດຕາ 566 ການສືບທອດມູນມໍຣະດົກ**

ການສືບທອດມູນມໍຣະດົກ ແມ່ນ ການຕົກທອດມູນມໍຣະດົກຂອງຜູ້ເສຍຊີວິດ ໃຫ້ແກ່ຜູ້ສືບ ທອດມູນມໍຣະດົກ ຕາມກົດໝາຍ ຫຼື ຕາມພິໄນກໍາ.

**ມາດຕາ 571 ປະເພດການສືບທອດ**

**ການສືບທອດມູນມໍຣະດົກ ມີ ສອງປະເພດ ຄື:**

1. ການສືບທອດຕາມກົດໝາຍ;
2. ການສືບທອດຕາມພິໄນກໍາ.

**ມາດຕາ 572 ການສືບທອດມູນມໍຣະດົກຕາມກົດໝາຍ**

ການສືບທອດມູນມໍຣະດົກຕາມກົດໝາຍ ແມ່ນ ການຮັບເອົາມູນມໍຣະດົກ ໂດຍຜູ້ສືບທອດຕາມ ທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍສະບັບນີ້.

**ມາດຕາ 573 ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ**

ການສືບທອດມູນມໍຣະດົກຕາມກົດໝາຍ ຈະມີຂຶ້ນໄດ້ໃນກໍລະນີ ດັ່ງນີ້:

1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກໍາ;
2. ພິໄນກໍາເປັນໂມຄະ;
3. ຜູ້ສືບທອດມູນມໍຣະດົກຕາມພິໄນກໍານັ້ນ ໄດ້ເສຍຊີວິດກ່ອນ ການເປີດການ ສືບທອດ;
4. ຜູ້ສືບທອດມູນມໍຣະດົກຕາມພິໄນກໍາ ຫາກບໍ່ຮັບເອົາການສືບທອດ;
5. ມູນມໍຣະດົກທີ່ຍັງເຫຼືອຈາກການສືບທອດຕາມພິໄນກໍາ.

**ມາດຕາ 574 ຜູ້ສືບທອດມູນມໍຣະດົກຕາມກົດໝາຍ**

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ມີ ດັ່ງນີ້:

1. ລູກຄີງ, ລູກລ້ຽງ, ລູກນ້ຳ ຂອງເຈົ້າມູນມໍຣະດົກ ລວມທັງເດັກຢູ່ໃນທ້ອງຂອງຜູ້ເປັນແມ່ກໍມີສິດສືບທອດມູນມໍຣະດົກເຊັ່ນດຽວກັນ ແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້;
2. ຜົວ ຫຼື ເມຍ ຂອງເຈົ້າມູນມໍຣະດົກທີ່ຍັງມີຊີວິດຢູ່;
3. ພໍ່, ແມ່, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ ຂອງເຈົ້າມູນມໍຣະດົກ;
4. ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ, ເຫຼນ ຂອງເຈົ້າມູນມໍຣະດົກ;
5. ລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

**ມາດຕາ 575 ລຳດັບໃນການຮັບມູນມໍຣະດົກ**

ໃນການແບ່ງປັນມູນມໍຣະດົກໃຫ້ຜູ້ສືບທອດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 574 ຂອງປະ ມວນກົດໝາຍສະບັບນີ້ ຖ້າຜູ້ໃດຫາກເປັນຍາດຊັ້ນຈຳກັບເຈົ້າມູນມໍຣະດົກ ກໍຈະແມ່ນຜູ້ນັ້ນເປັນຜູ້ ໄດ້ຮັບ ກ່ອນ. ສ່ວນຜູ້ທີ່ຢູ່ລຳດັບໃກ້ຊິດຖັດໄປນັ້ນ ຈະໄດ້ຮັບກໍຕໍ່ເມື່ອຫາກບໍ່ມີຍາດຊັ້ນຈຳຂອງເຈົ້າມູນມໍຣະ ດົກເທົ່ານັ້ນ.

**ມາດຕາ 578 ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ**

ໃນກໍລະນີທີ່ຜົວ ຫຼື ເມຍ ຊຶ່ງບໍ່ມີລູກ ຫາກໄດ້ເສຍຊີວິດໄປຍັງເຫຼືອແຕ່ເມຍ ຫຼື ຜົວ ແລະ ຍາດສາຍຕັ້ງ ການແບ່ງປັນມູນມໍຣະດົກໃຫ້ປະຕິບັດ ດັ່ງນີ້:

1. ເມຍ ຫຼື ຜົວທີ່ຍັງມີຊີວິດ ຈະໄດ້ຮັບສ່ວນແບ່ງປັນ ໜຶ່ງສ່ວນສາມຂອງຊັບເດີມ ຂອງເຈົ້າມູນມໍຣະ ດົກ ແລະ ອີກສອງສ່ວນສາມນັ້ນ ໃຫ້ຍາດສາຍຕັ້ງ ເບື້ອງເທິງ ຊັ້ນຈຳຂອງເຈົ້າມູນມໍຣະດົກເປັນ ຜູ້ສືບທອດເປັນພູດສະເໝີກັນ;
2. ເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ນັ້ນ ຈະໄດ້ຮັບສິນສົມສ້າງ ທີ່ເປັນພູດຂອງຜູ້ເສຍຊີວິດທັງໝົດ.

**ມາດຕາ 590 ພິໄນກຳ**

ພິໄນກຳ ແມ່ນ ການສະແດງເຈດຈຳນົງຂອງເຈົ້າຂອງຊັບ ໃນການເອົາຊັບຂອງຕົນໃຫ້ ບຸກຄົນ ຫຼື ບຸກຄົນ ຫຼື ການຈັດຕັ້ງ ດ້ວຍການເຮັດເປັນລາຍລັກອັກສອນ ຫຼື ທາງປາກເປົ່າ.

ພິໄນກຳ ມີຜົນບັງຄັບທາງດ້ານກົດໝາຍ ນັບແຕ່ເຈົ້າຂອງຊັບ ເສຍຊີວິດເປັນຕົ້ນໄປ.

**ມາດຕາ 591 ສິດໃນການເຮັດພິໄນກຳ**

ພົນລະເມືອງທຸກຄົນ ມີສິດເຮັດພິໄນກຳ ມອບຊັບສົມບັດທີ່ເປັນກຳມະສິດຂອງຕົນ ໃຫ້ບຸກຄົນ ໃດໜຶ່ງ ຫຼື ໃຫ້ຫຼາຍຄົນ, ໃຫ້ອົງການຈັດຕັ້ງຂອງລັດ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມ, ກອງທຶນ, ມູນນິທິຕ່າງໆ ຫຼື ສະຫງວນໄວ້ສ່ວນໃດໜຶ່ງ ເພື່ອເປັນບ່ອນສັກກາລະບູຊາ ຫຼື ຮັກສາ ໃຫ້ຍາດພີ່ນ້ອງທີ່ ຂາດເຂີນສາມາດສ້າງຢູ່ທຳກິນ ຕາມເຈດຈຳນົງຂອງຕົນກ່ອນເສຍຊີວິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 593 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 592 ຂອບເຂດສິດໃນການເຮັດພິໄນກຳ**

ເຈົ້າຂອງຊັບ ທີ່ຍັງມີຊີວິດຢູ່ ຈະເຮັດພິໄນກຳ ໃຫ້ປະຕິບັດຕາມຂອບເຂດ ດັ່ງນີ້:

1. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ໜຶ່ງຄົນ ສາມາດເຮັດພິໄນກຳ ໃຫ້ຜູ້ອື່ນ ບໍ່ໃຫ້ເກີນເຄິ່ງໜຶ່ງ ຂອງຊັບທັງໝົດ;

2. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ສອງຄົນ ສາມາດເຮັດພິໄນກຳ ໃຫ້ລູກຜູ້ໃດໜຶ່ງ ຫຼື ຜູ້ອື່ນບໍ່ ໃຫ້ເກີນໜຶ່ງສ່ວນສາມຂອງຊັບທັງໝົດ;
3. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ສາມຄົນຂຶ້ນໄປ ສາມາດເຮັດພິໄນກຳ ໃຫ້ລູກຜູ້ໃດໜຶ່ງ ຫຼື ຜູ້ອື່ນ ບໍ່ໃຫ້ເກີນໜຶ່ງສ່ວນສີ່ຂອງຊັບທັງໝົດ.

ເມື່ອການເຮັດພິໄນກຳ ຫາກເກີນກວ່າຈຳນວນທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕາ ນີ້ ສ່ວນທີ່ ເກີນນັ້ນ ຖືເປັນໂມຄະແລ້ວໃຫ້ນຳມາແບ່ງປັນການ ສືບທອດຕາມ ກົດໝາຍ.

**ມາດຕາ 593 ຮູບການການເຮັດພິໄນກຳ**

ພິໄນກຳ ສາມາດເຮັດຂຶ້ນໃນສອງຮູບການ ດັ່ງນີ້:

1. ພິໄນກຳເປັນລາຍລັກອັກສອນ;
2. ພິໄນກຳທາງປາກເປົ່າ.

**ມາດຕາ 594 ພິໄນກຳເປັນລາຍລັກອັກສອນ**

ການເຮັດພິໄນກຳເປັນລາຍລັກອັກສອນ ອາດເຮັດດ້ວຍ:

1. ການຂຽນພິໄນກຳໂດຍເຈົ້າມູນມໍຣະດົກເອງ;
2. ການຂຽນພິໄນກຳໂດຍຜູ້ອື່ນຂຽນໃຫ້ ຕ້ອງມີພະຍານຢ່າງໜ້ອຍ ສາມຄົນເຂົ້າຮ່ວມນຳ ແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດພິໄນກຳ ຫຼື ການເປີດການສືບທອດມູນມໍ ຣະດົກ.

ໃນພິໄນກຳນັ້ນ ຕ້ອງບອກສະຖານທີ່, ວັນ, ເດືອນ, ປີ ເຮັດພິໄນກຳ, ປະເພດ ແລະ ຈຳນວນຊັບທີ່ ຈະມອບ, ຊື່ ແລະ ນາມສະກຸນຂອງ ຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານ ຕ້ອງລົງລາຍເຊັນ ແລະ ແປະໂປ້ມືໃສ່ພິໄນກຳ.

ພິໄນກຳນັ້ນ ຫຼັງຈາກເຮັດແລ້ວ ຕ້ອງໃສ່ຊອງຕິດໃຫ້ແໜ້ນ ຫຼື ຕິດດ້ວຍຄັ່ງ ແລ້ວໄປຂຶ້ນທະບຽນ ນຳນາຍທະບຽນສານ ບ່ອນເຈົ້າມູນມໍຣະດົກຢູ່ ຫຼື ບ່ອນທີ່ໃກ້ຄຽງ ຫຼື ນຳໄປໄວ້ຢູ່ອົງການປົກຄອງບ້ານ ສຳລັບ ບ່ອນທີ່ບໍ່ມີຫ້ອງການທະບຽນສານ.

**ມາດຕາ 595 ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ**

ຜູ້ບໍ່ ມີສິດຮັບຊັບຕາມພິໄນກຳ ເປັນລາຍລັກອັກສອນ ມີ ດັ່ງນີ້:

1. ຜູ້ຂຽນພິໄນກຳ;
2. ພະຍານໃນການເຮັດ ພິໄນກຳ;

ຜົວ ຫຼື ເມຍ ຫຼື ລູກ ຂອງຜູ້ຂຽນພິໄນກຳ ທີ່ບໍ່ແມ່ນເຈົ້າມູນມໍຣະດົກ ຫຼື ຂອງພະຍານໃນ ການເຮັດພິໄນກຳ.

**ມາດຕາ 596 ພິໄນກຳທາງປາກເປົ່າ**

ເຈົ້າຂອງຊັບ ທີ່ບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ ຍ້ອນຕົກຢູ່ໃນສະ ພາບອັນຕະລາຍທີ່ໃກ້ຈະເສຍຊີວິດ, ຍ້ອນສຸຂະພາບອ່ອນເພຍ ຫຼື ຍ້ອນສາເຫດອື່ນ ຈະເຮັດພິໄນກຳທາງ ປາກເປົ່າ ກໍໄດ້ ໂດຍໃຫ້ມີ ພະຍານຮັບຮູ້ນຳ.

ພະຍານດັ່ງກ່າວ ຕ້ອງແຈ້ງຂໍ້ຄວາມທັງໝົດ ທີ່ເຈົ້າມູນມໍຣະດົກສັ່ງໄວ້ນັ້ນ ຕໍ່ຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານໃນທັນທີ ແລະ ຊີ້ແຈງສາເຫດທີ່ພາໃຫ້ເຈົ້າຂອງຊັບນັ້ນ ບໍ່ສາມາດເຮັດພິໄນກຳເປັນ ລາຍລັກອັກສອນໄດ້ ຊຶ່ງຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານ ຕ້ອງເຮັດບົດບັນທຶກຂໍ້ຄວາມ ດັ່ງກ່າວໄວ້.

ພິໄນກຳທາງປາກເປົ່ານັ້ນ ຈະບໍ່ມີຜົນໃຊ້ໄດ້ ຖ້າຫາກກາຍກຳນົດເວລາ ໜຶ່ງເດືອນ ນັບແຕ່ວັນເຈົ້າ ຂອງຊັບ ໄດ້ກັບຄືນສູ່ສະພາບປົກກະຕິ.

**ມາດຕາ 598 ສິດຂອງຜູ້ສືບທອດມູນມໍຣະດົກຕາມພິໄນກຳ**

ຜູ້ສືບທອດມູນມໍຣະດົກທີ່ໄດ້ຮັບຕາມພິໄນກຳແລ້ວ ກໍຍັງມີສິດໄດ້ຮັບພູດສ່ວນມູນມໍຣະດົກ ທີ່ຕົກທອດໃຫ້ຕົນຕາມກົດໝາຍອີກດ້ວຍ.

**ມາດຕາ 599 ຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳ**

ເຈົ້າຂອງຊັບ ມີສິດກຳນົດຜູ້ຄຸ້ມຄອງມູນມໍຣະດົກໄວ້ໃນພິໄນກຳ ໃນກໍລະນີທີ່ຜູ້ກ່ຽວຫາກ ມີຈຸດປະສົງເຮັດພິໄນກຳ ມອບມູນມໍຣະດົກໃຫ້ບຸກ ຄົນທີ່ຍັງບໍ່ທັນເຖິງກະສຽນ ອາຍຸ ຫຼື ເປັນບ້າເສຍຈິດ.

ຜູ້ຄຸ້ມຄອງມູນມໍຣະດົກນັ້ນ ອາດຈະກຳນົດບຸກຄົນອື່ນເປັນຜູ້ຄຸ້ມຄອງມູນມໍຣະດົກແທນຕົນກໍໄດ້, ເວັ້ນ ເສຍແຕ່ເຈົ້າຂອງຊັບ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນໃນພິໄນກຳ.

**ມາດຕາ 600 ການປ່ຽນແປງ ຫຼື ລຶບລ້າງພິໄນກຳ**

ເຈົ້າຂອງຊັບ ມີສິດປ່ຽນແປງ ຫຼືລຶບລ້າງພິໄນກຳທີ່ຕົນເຮັດຂຶ້ນໄດ້ທຸກເວລາດ້ວຍການເຮັດພິໄນກຳໃໝ່.

ພິໄນກຳທີ່ເຮັດຂຶ້ນໃໝ່ນີ້ ຈະລຶບລ້າງພິໄນກຳເກົ່າ ສ່ວນໃດໜຶ່ງ ຫຼື ທັງໝົດ ທີ່ມີຂໍ້ຄວາມຂັດກັບພິໄນກຳໃໝ່,

**ມາດຕາ 601 ສາເຫດທີ່ພາໃຫ້ພິໄນກຳຕົກໄປ**

ພິໄນກຳ ທີ່ເຮັດຂຶ້ນ ຈະຕົກໄປດ້ວຍສາເຫດ ຕັ້ງນີ້:

1. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ເສຍຊີວິດກ່ອນເຈົ້າມູນມໍຣະດົກ;

2. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ສະລະມູນມໍຣະດົກພຸດທີ່ຕົນມີສິດໄດ້ຮັບຕາມພິໄນກຳ;

3. ເມື່ອຊັບສົມບັດທີ່ຕົກທອດຕາມພິໄນກຳນັ້ນ ຫາກໄດ້ຖືກສູນຫາຍ ຫຼື ຖືກທຳລາຍດ້ວຍເຈົ້າ ມູນມໍຣະດົກ ກ່ອນການເປີດການສືບທອດມູນມໍຣະດົກ;

4. ເມື່ອພິໄນກຳນັ້ນ ຫາກໄດ້ຖືກຮັບຮູ້ວ່າເປັນໂມຄະ ຕາມທີ່ໄດ້ການົດໄວ້ໃນມາດຕາ 602 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 602 ພິໄນກຳເປັນໂມຄະ**

ພິໄນກຳເປັນໂມຄະ ມີ ກໍລະນີ ດັ່ງນີ້:

1. ພິໄນກຳ ທີ່ເຮັດຂຶ້ນໂດຍບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;

2. ພິໄນກຳ ທີ່ມີເປົ້າໝາຍບໍ່ຈະແຈ້ງ;

3. ພິໄນກຳ ທີ່ເຮັດຂຶ້ນດ້ວຍການຖືກບັງຄັບ, ຫຼອກລວງ ຫຼື ປອມແປງ;

4. ພິໄນກຳ ທີ່ໄດ້ມອບຊັບໃຫ້ແກ່ບຸກຄົນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 595 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 615 ການເສຍສິດສືບທອດມູນມໍຣະດົກ**

ຜູ້ມີສິດສືບທອດມູນມໍລະດົກ ຈະເສຍສິດສືບທອດມູນມໍລະດົກ ໃນກໍລະນີ ດັ່ງນີ້:

1. ການສໍ້ໂກງ ຫຼື ຍັກຍອກມູນມໍລະດົກ;

2. ການເສຍສິດສືບທອດມູນມໍລະດົກຂອງ ພໍ່, ແມ່ ແລະ ລູກ ຕາມຄຳຕັດສິນຂອງສານ;

3. ການເສຍສິດສືບທອດມູນມໍລະດົກຕາມກົດໝາຍ ແລະ ຕາມພິໄນກຳ,

**ມາດຕາ 616 ການສໍ້ໂກງ, ການຍັກຍອກມູນມໍລະດົກ**

ຜູ້ສືບທອດມູນມໍລະດົກທີ່ໄດ້ ສໍ້ໂກງ, ປິດບັງ, ຍັກຍອກມູນມໍລະດົກຫຼາຍກວ່າພຸດທີ່ຕົນຄວນຈະໄດ້ຮັບກໍຈະບໍ່ໄດ້ຮັບມູນມໍລະດົກນັ້ນແຕ່ຢ່າງໃດ ແລະ ຍັງຕ້ອງສົ່ງມູນມໍລະດົກທີ່ໄດ້ເອົາໄປນັ້ນຄືນທັງໝົດ.

ຖ້າການສໍ້ໂກງ, ການປິດບັງ, ການຍັກຍອກມູມໍລະດົກນັ້ນ ຫາກໜ້ອຍກວ່າ ຫຼື ເທົ່າກັບພຸດທີ່ຕົນຄວນຈະໄດ້ຮັບ ກໍຈະບໍ່ໄດ້ຮັບພຸດທີ່ຕົນຄວນໄດ້ຮັບນັ້ນອີກ.

ມາດຕານີ້ຈະບໍ່ມີຜົນບັງຄັບໃຊ້ຕໍ່ຜູ້ມີສິດສືບທອດມູນມໍລະດົກຕາມພິໄນກຳ ຊຶ່ງເຈົ້າມູນມໍລະດົກໄດ້ເຮັດພິໄນກຳໃຫ້ຜູ້ກ່ຽວແລ້ວ.

**ມາດຕາ 617 ການເສຍສິດສືບທອດມູນມໍລະດົກຂອງ ພໍ່, ແມ່ ແລະ ລູກ ຕາມຄຳຕັດສິນຂອງສານ**

ພໍ່ແມ່ທີ່ຖືກຕັດສິດຈາກຄວາມເປັນພໍ່ແມ່ ຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍລະດົກຂອງລູກ, ສ່ວນລູກນັ້ນ ກໍຈະບໍ່ມີສິດສືບທອດມູນມໍລະດົກຂອງພໍ່ແມ່ເຊັ່ນດຽວກັນ, ເວັ້ນເສຍແຕ່ລູກຫາກຍັງບໍ່ທັນພົ້ນກະສຽນອາຍຸ,

ໃນກໍລະນີທີ່ພໍ່ແມ່ ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກ ກໍຈະບໍ່ມີສິດສືບທອດມູນມໍລະດົກຂອງລູກ. ສ່ວນລູກທີ່ພົ້ນກະສຽນອາຍຸ ຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍຈະບໍ່ມີ ສິດສືບທອດມູນມໍລະດົກຂອງພໍ່ແມ່ເຊັ່ນດຽວກັນ.

**ມາດຕາ 618 ການເສຍສິດສືບທອດມູນມໍລະດົກຕາມກົດໝາຍ ແລະ ຕາມພິໄນກຳ**

ຜູ້ເສຍສິດສືບທອດມູນມໍລະດົກຕາມກົດໝາຍ ຫຼື ຕາມພິໄນກຳ ມີ ດັ່ງນີ້:

1. ຜູ້ທີ່ຖືກສານຕັດສິນວ່າ ໄດ້ມີເຈດຕະນາ ຫຼື ພະຍາຍາມເຮັດໃຫ້ເຈົ້າມູນມໍລະດົກ ຫຼື ຜູ້ມີສິດສືບທອດມູນມໍລະດົກຜູ້ໃດໜຶ່ງ ເສຍຊີວິດ ຫຼື ບາດເຈັບສາຫັດ ເພື່ອຍາດຊິງເອົາມູນມໍລະດົກ;

2. ຜູ້ທີ່ໄດ້ທຳລາຍ, ປິດບັງ ຫຼື ປອມແປງພິໄນກຳທັງໝົດ ຫຼື ບາງສ່ວນ;

3. ຜູ້ທີ່ຢູ່ແຂວງ ຫຼື ເມືອງດຽວກັນກັບຜູ້ເສຍຊີວິດ ເມື່ອຮູ້ ຫຼື ຄວນຮູ້ຂ່າວການເສຍຊີວິດແລ້ວຫາກ ບໍ່ມາມ້ຽນຄາຍສິ່ງສະການ ຫຼື ບໍ່ໄດ້ມອບໝາຍໃຫ້ຄົນອື່ນມາຮ່ວມແທນຕົນໂດຍບໍ່ມີເຫດຜົນ;

4. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າຂອງຊັບໃຫ້ ເຮັດ, ຖອນ ຫຼື ປ່ຽນແປງພິໄນກຳ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ;

5. ຜູ້ທີ່ໄດ້ປິດບັງ ຫຼື ຊຸກເຊື່ອງຜູ້ກະທຳຜິດ ຕໍ່ຊີວິດ ຫຼື ສຸຂະພາບຂອງເຈົ້າມູນມໍລະດົກ ຊຶ່ງເຮັດໃຫ້ໄດ້ຮັບບາດເຈັບສາຫັດ, ເສຍອົງຄະ ຫຼື ເສຍຊີວິດ;

6. ຜູ້ທີ່ຖືກສານຕັດສິນວ່າ ໄດ້ຫາຄວາມບໍ່ຈິງໃສ່ເຈົ້າຂອງຊັບ ຫຼື ໃສ່ຜູ້ມີສິດສືບທອດມູນມໍລະດົກດ້ວຍກັນ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

ບຸກຄົນທີ່ໄດ້ກ່າວມາເທິງນີ້ ຈະເສຍສິດສືບທອດມູນມໍລະດົກໄດ້ກໍຕໍ່ເມື່ອ ເຈົ້າຂອງຊັບຫາກໄດ້ສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເທົ່ານັ້ນ, ເວັ້ນເສຍແຕ່ເຈົ້າມູນມໍລະດົກ ຫາກໄດ້ເສຍຊີວິດຕາມ ຂໍ້ 1, 3 ແລະ 5 ຂອງມາດຕານີ້.

ຖ້າບຸກຄົນທີ່ໄດ້ກ່າວມາເທິງນີ້ ຫາກໄດ້ປະພຶດຕົນບໍ່ຊອບທຳ, ບໍ່ຍອມຢູ່ໃຕ້ການຄຸ້ມຄອງຂອງ ພໍ່ແມ່, ບໍ່ໄດ້ເບິ່ງແຍງພໍ່ແມ່ໃນເວລາເຖົ້າແກ່ ຫຼື ເຈັບເປັນ ທັງທີ່ຕົນມີຄວາມອາດສາມາດຢູ່ແລ້ວ ກໍຈະຖືວ່າ ເປັນຜູ້ເສຍສິດສືບທອດມູນມໍຣະດົກ ແລະ ຈະໄດ້ປະຕິບັດດັ່ງດຽວກັນກັບມາດຕາ 617 ວັກທີສອງ ຂອງປະມວນກົດ ໝາຍສະບັບນີ້.

**ມາດຕາ 619 ການລຶບລ້າງການເສຍສິດສືບທອດ**

ເຈົ້າມູນມໍຣະດົກ ອາດລຶບລ້າງການເສຍສິດສືບທອດມູນມໍຣະດົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 618 ຂອງປະມວນກົດໝາຍສະບັບນີ້ ດ້ວຍການສະແດງເຈດຈານົງຂອງຕົນ ໂດຍມີຫຼັກຖານ ຫຼື ພະຍານຢັ້ງຢືນ.

**14. ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງ ເລກທີ 17/ສພຊ, ລົງວັນທີ 7 ກໍລະກົດ 2022**

**ມາດຕາ 2 (ປັບປຸງ) ຄຳຮ້ອງທຸກ**

ຄຳຮ້ອງທຸກ ແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງເພື່ອໃຫ້ກວດກາ, ພິຈາລະນາ ແລະ ແກ້ໄຂ ກ່ຽວກັບການກະທຳຂອງບຸກຄົນ ຫຼື ການຕົກລົງຂອງນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ຕົນເຫັນວ່າ ເປັນການລະເມີດກົດໝາຍ, ບໍ່ໄດ້ຮັບຄວາມຍຸຕິທຳ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**ຄຳຮ້ອງທຸກປະກອບດ້ວຍ, ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ:**

1. ຄຳສະເໜີ ແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເພື່ອໃຫ້ກວດກາ, ພິຈາລະນາ ແລະ ແກ້ໄຂ ກ່ຽວກັບການກະທຳຂອງບຸກຄົນ, ນິຕິບຸກຄົນ ຫຼື ການຕົກລົງຂອງນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ເຫັນວ່າເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
2. ຄຳຮ້ອງຟ້ອງ ແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ເພື່ອໃຫ້ກວດກາ, ພິຈາລະນາ ແລະ ແກ້ໄຂການກະທຳຂອງບຸກຄົນ ຫຼື ການຕົກລົງຂອງນິຕິບຸກຄົນ ຫຼື ການຈັດຕັ້ງອື່ນທີ່ເຫັນວ່າເປັນການລະເມີດກົດໝາຍ, ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
3. ຄຳຮ້ອງຂໍຄວາມເປັນທຳ ແມ່ນເອກະສານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາແຫ່ງຊາດ ເພື່ອໃຫ້ກວດກາ ແລະ ພິຈາລະນາກ່ຽວກັບການຕົກລົງຂອງອົງການປົກຄອງທ້ອງຖິ່ນ, ລັດຖະບານ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ທີ່ເຫັນວ່າການແກ້ໄຂນັ້ນ ເປັນການລະເມີດກົດໝາຍ, ກໍ່ຄວາມເສຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**ມາດຕາ 7 (ປັບປຸງ) ສິດ ແລະ ພັນທະ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງຜົນປະໂຫຍດ ຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພັນທະລາຍງານ, ເຂົ້າຮ່ວມ ແລະ ປະກອບສ່ວນໃນການແກ້ໄຂ ຄໍາຮ້ອງທຸກ ເມື່ອເຫັນວ່າ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ມີການລະເມີດກົດໝາຍ.

**ມາດຕາ 16 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄໍາສະເໜີ**

ການພິຈາລະນາ ແລະ ແກ້ໄຂຄໍາສະເໜີ ແມ່ນການນໍາເອົາຄໍາສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມາກວດກາ, ພິຈາລະນາ ແລະ ແກ້ໄຂໃຫ້ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ເປັນທໍາ.

**ມາດຕາ 17 (ປັບປຸງ) ອົງການພິຈາລະນາ ແລະ ແກ້ໄຂຄໍາສະເໜີ**

**ອົງການພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ມີດັ່ງນີ້:**

1. ອົງການປົກຄອງບ້ານ;
2. ອົງການປົກຄອງຂັ້ນເມືອງ:
3. ອົງການປົກຄອງຂັ້ນແຂວງ,
4. ລັດຖະບານ.

**ມາດຕາ 18 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງອົງການປົກຄອງບ້ານ**

**ຄໍາສະເໜີທີ່ ອົງການປົກຄອງບ້ານ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:**

1. ຄໍາສະເໜີໃຫ້ ກວດກາ ການເຄື່ອນໄຫວຂອງອົງການປົກຄອງບ້ານ ແລະ ການກະທໍາຂອງບຸກຄົນທີ່ຢູ່ ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;

2. ຄໍາສະເໜີ ໃຫ້ກວດກາ ການກະທໍາຂອງ ບຸກຄົນ ຫຼື ການເຄື່ອນໄຫວຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດໍາລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ບ້ານຂອງຕົນ.

**ການພິຈາລະນາ ແລະ ແກ້ໄຂໃຫ້ປະຕິບັດ ດັ່ງນີ້:**

1. ອົງການປົກຄອງບ້ານ ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ພາຍໃນເວລາ ຊາວວັນ ລັດຖະການ ນັບ ແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ;

2. ອົງການປົກຄອງບ້ານ ແຈ້ງການເຄື່ອນໄຫວກ່ຽວກັບການພິຈາລະນາ ແລະ ແກ້ໄຂຄໍາສະເໜີ ພາຍໃນ ເວລາ ຫ້າວັນ ລັດຖະການນັບແຕ່ວັນລົງລາຍເຊັນເປັນຕົ້ນໄປໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ. ໃນກໍລະນີ ອົງການປົກຄອງບ້ານພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຫາກບໍ່ຖືກຕ້ອງ ຕາມກົດໝາຍ ແລະ ຄວາມເປັນຈິງນັ້ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍມີສິດສະເໜີຕໍ່ອົງການປົກຄອງຂັ້ນເມືອງ ພິຈາລະນາ ແລະ ແກ້ໄຂ.

**ມາດຕາ 19 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງອົງການປົກຄອງຂັ້ນເມືອງ**

**ຄໍາສະເໜີທີ່ ອົງການປົກຄອງຂັ້ນເມືອງ ຮັບມາ ພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:**

1. ຄໍາສະເໜີໃຫ້ກວດກາ ການເຄື່ອນໄຫວ ຂອງ ອົງການປົກຄອງບ້ານ;
2. ຄໍາສະເໜີໃຫ້ກວດກາ ການເຄື່ອນໄຫວຂອງອົງການປົກຄອງຂັ້ນເມືອງ; ການກະທໍາ, ຄວາມຮັບຜິດຊອບ ຂອງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;

3. ຄຳສະເໜີໃຫ້ກວດກາ ການກະທຳຂອງ ບຸກຄົນ ຫຼື ການຕົກລົງ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນ;
4. ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ຂັ້ນເມືອງ ໃຫ້ນຳສົ່ງອົງການກວດກາລັດຂັ້ນເມືອງ ກວດກາຕາມກົດໝາຍ.

**ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:**

1. ອົງການປົກຄອງຂັ້ນເມືອງ ກວດກາ ຂໍ້ມູນຫຼັກຖານຕົວຈິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແລ້ວພິຈາລະນາ ແລະ ແກ້ໄຂພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ;
2. ອົງການປົກຄອງຂັ້ນເມືອງ ແຈ້ງການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ ກ່ຽວຂ້ອງ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງອົງການປົກຄອງຂັ້ນເມືອງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດສະເໜີ ຕໍ່ອົງການປົກຄອງຂັ້ນແຂວງ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳຕໍ່ຄະນະປະຈຳສະພາຂັ້ນແຂວງ ກວດກາ ແລະ ພິຈາລະນາ.

**ມາດຕາ 20 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງອົງການປົກຄອງຂັ້ນແຂວງ**

**ຄຳສະເໜີທີ່ອົງການປົກຄອງຂັ້ນແຂວງ ຮັບມາພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:**

1. ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນເມືອງ,
2. ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນແຂວງ, ການກະທຳ, ຄວາມຮັບຜິດຊອບ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ;
3. ຄຳສະເໜີ ໃຫ້ກວດກາ ການກະທຳຂອງ ບຸກຄົນ ຫຼື ການຕົກລົງ ຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ດຳລົງຊີວິດ, ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຢູ່ ແຂວງ, ນະຄອນຫຼວງ ຂອງຕົນ.
4. ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າ ຂອງ ພະນັກງານ-ລັດຖະກອນ ຂັ້ນແຂວງ ໃຫ້ນຳ ສົ່ງອົງການກວດກາລັດຂັ້ນແຂວງ ກວດກາ ຕາມກົດໝາຍ.

**ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້:**

1. ອົງການປົກຄອງຂັ້ນແຂວງ ກວດກາ ຂໍ້ມູນຫຼັກຖານຕົວຈິງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແລ້ວ ພິຈາລະນາ ແລະ ແກ້ໄຂພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ;
2. ອົງການປົກຄອງຂັ້ນແຂວງ ແຈ້ງການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີພາຍ ໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ.

ໃນກໍລະນີ ຜູ້ສະເໜີຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງອົງການປົກຄອງຂັ້ນແຂວງ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງ ຜູ້ກ່ຽວກໍມີສິດສະເໜີ ຕໍ່ ລັດຖະບານ ຫຼື

ຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ກວດກາ ແລະ ພິຈາລະນາ.

**ມາດຕາ 21 (ປັບປຸງ) ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງລັດຖະບານ**

**ຄຳສະເໜີທີ່ ລັດຖະບານ ຮັບມາພິຈາລະນາ ແລະ ແກ້ໄຂ ມີ ດັ່ງນີ້:**

1. ຄຳສະເໜີໃຫ້ກວດກາ ການຕົກລົງຂອງອົງການປົກຄອງຂັ້ນແຂວງ;
2. ຄຳສະເໜີໃຫ້ກວດກາ ການຕົກລົງ ຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ການກະທຳ, ຄວາມຮັບຜິດຊອບ ຂອງ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ບຸກຄົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນ.
3. ສຳລັບຄຳສະເໜີໃຫ້ກວດກາການປະຕິບັດໜ້າ ຂອງພະນັກງານ-ລັດຖະກອນ ຂັ້ນກະຊວງ, ອົງການລັດທຽບເທົ່າກະຊວງ ໃຫ້ນຳສົ່ງ ອົງການກວດກາລັດ ຂັ້ນກະຊວງ ກວດກາຕາມກົດໝາຍ.

**ການພິຈາລະນາ ແລະ ແກ້ໄຂ ໃຫ້ປະຕິບັດ ດັ່ງນີ້**:

1. ລັດຖະບານ ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ກວດກາຂໍ້ມູນຫຼັກຖານຕົວຈິງ ແລ້ວສະ ເໜີໃຫ້ ລັດຖະບານ ພິຈາລະນາຕົກລົງ ພາຍໃນເວລາ ສີ່ສິບຫ້າວັນ ລັດຖະການ, ໃນກໍລະນີຄຳສະເໜີທີ່ມີຄວາມຫຍຸ້ງຍາກ ຊຶ່ງພົວພັນກັບຫຼາຍພາກສ່ວນ ກຳນົດເວລາຂອງການຕົກລົງນັ້ນ ບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.
2. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແຈ້ງການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງລັດຖະບານ ພາຍໃນເວລາຫ້າວັນ ລັດຖະການ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີຜູ້ສະເໜີ ຫາກເຫັນວ່າ ການຕົກລົງກ່ຽວກັບການພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງລັດຖະບານ ບໍ່ຖືກຕ້ອງຕາມ ກົດໝາຍ ແລະ ຄວາມເປັນຈິງນັ້ນ ຜູ້ກ່ຽວກໍມີສິດຮ້ອງຟ້ອງ ຕໍ່ ສານປະຊາຊົນ ເພື່ອພິຈາລະນາ ແລະ ແກ້ໄຂ ຫຼື ຮ້ອງຂໍຄວາມເປັນທຳ ຕໍ່ ຄະນະປະຈຳສະພາແຫ່ງຊາດ ກວດກາ ແລະ ພິຈາລະນາ.

**15. ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015**

**ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ລວມສູນປະຊາທິປະໄຕ;
2. ນິຕິທຳ;
3. ຍຸຕິທຳ;
4. ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ;
5. ຕົກລົງບັນຫາ ຕາມສຽງສ່ວນຫຼາຍ,

6. ຕິດແທດຕົວຈິງກັບປະຊາຊົນ ແລະ ຮາກຖານ;

7. ປະສານສົມທົບຢ່າງກົມກຽວກັບອົງການອຳນາດລັດ ທີ່ກ່ຽວຂ້ອງ ແລະ ອົງການອື່ນ.

**ມາດຕາ 8 ທີ່ຕັ້ງຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນ ລາວບັນດາເຜົ່າ ແລະ ເປັນອົງການອ ໍານາດລັດຂັ້ນທ້ອງຖິ່ນ

**ມາດຕາ 9 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົານິຕິກຳ ທີ່ສຳຄັນ ຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາ ການເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດຂັ້ນທ້ອງຖິ່ນ.

**ມາດຕາ 10 ສິດ ແລະ ໜ້າທີ່ ລວມຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ລວມ ດັ່ງນີ້:

1. ສິດ ແລະ ໜ້າທີ່ ດ້ານນິຕິກຳ;

2. ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ;

3. ສິດ ແລະ ໜ້າທີ່ ດ້ານການຕິດຕາມກວດກາ.

**ມາດຕາ 11 ສິດ ແລະ ໜ້າທີ່ ດ້ານນິຕິກຳ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານນິຕິກຳ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາ ນິຕິກຳທີ່ສຳຄັນຂອງທ້ອງຖິ່ນ,

2. ຄົ້ນຄວ້າ ປະກອບຄຳເຫັນເຂົ້າໃສ່ ຮ່າງລັດຖະທຳມະນູນ, ກົດໝາຍ ທີ່ສະພາແຫ່ງຊາດສົ່ງໃຫ້;

3. ພິຈາລະນາ, ຮັບຮອງເອົາ ທິດທາງວຽກງານ ຫ້າປີ ຂອງສະພາປະຊາຊົນຂັ້ນແຂວງ,

4. ພິຈາລະນາ, ຮັບຮອງເອົາທິດທາງວຽກງານ ຫ້າປີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນຂັ້ນແຂວງ.

5. ລົບລ້າງ ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ນິຕິກຳອື່ນ ຂອງທຸກຂະແໜງການ ທີ່ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບ ລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນ ຄຳຕົກລົງ ກ່ຽວກັບ ການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;

6. ມອບສິດ ໃຫ້ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຕົກລົງວຽກງານທີ່ຈຳເປັນ ແລະ ຮີບດ່ວນ ແລ້ວລາຍງານ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 12 ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດ້ານການຕົກລົງບັນຫາສຳຄັນພື້ນຖານ ຂອງທ້ອງຖິ່ນ ດັ່ງນີ້:

**1. ດ້ານການເມືອງ ແລະ ການປົກຄອງ:**

1.1. ຮັບຟັງການລາຍງານ ແລະ ປະກອບຄຳເຫັນໃສ່ ວຽກງານປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບຂອງທ້ອງຖິ່ນ;

1.2. ພິຈາລະນາ, ຮັບຮອງເອົາການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ, ນະຄອນ ແລະ ການກຳນົດເຂດແດນຂອງເມືອງ, ເທດສະບານ, ນະຄອນ ຕາມການສະເໜີຂອງເຈົ້າແຂວງ. ເຈົ້າຄອງນະຄອນຫຼວງ;

1.3. ລົງມະຕິບໍ່ໄວ້ວາງໃຈບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫຼື ຢ່າງໜ້ອຍ ໜຶ່ງສ່ວນທີ່ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ ເປັນຜູ້ສະເໜີ.

**2. ດ້ານເສດຖະກິດ-ສັງຄົມ:**

2.1. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ- ສັງຄົມ, ແຜນງົບປະມານແຫ່ງລັດຂອງທ້ອງຖິ່ນ ແລະ ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນ ດັ່ງກ່າວ;

2.2. ພິຈາລະນາ, ຮັບຮອງເອົາແຜນການແບ່ງປັນງົບປະມານປະຈຳປີ ຕາມການແບ່ງປັນຂອງລັດຖະບານ;

2.3. ພິຈາລະນາ, ຮັບຮອງເອົາແຜນພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກຂອງປະຊາຊົນໃນທ້ອງຖິ່ນ, ພິຈາລະນາ, ຮັບຮອງເອົາແຜນພັດທະນາ ຕົວເມືອງ, ເທດສະບານ, ນະຄອນ;

2.4. ພິຈາລະນາ, ຮັບຮອງເອົາແຜນການກໍ່ສ້າງພື້ນຖານໂຄງລ່າງ ປະຈຳປີ ຂອງທ້ອງຖິ່ນ ແລະ ໂຄງການລະດັບທ້ອງຖິ່ນຮັບຜິດຊອບ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2.5. ຮັບຟັງການລາຍງານ ຜົນຂອງການກວດສອບ ແລະ ການສະຫຼຸບງົບປະມານຂາດຕົວຂອງອົງການກວດສອບປະຈຳພາກ ທີ່ກ່ຽວຂ້ອງກັບແຂວງນັ້ນ.

**3. ດ້ານການຈັດຕັ້ງ ແລະ ບຸກຄະລາກອນ:**

3.1. ດ້ານການຈັດຕັ້ງ;

3.1.1. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງສະພາປະຊາຊົນ ຂັ້ນແຂວງ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ຄະນະກຳມະການ ແລະ ຄະນະເລຂາທິ ການຂອງສະພາປະຊາຊົນຂັ້ນແຂວງ;

3.1.2 ພິຈາລະນາ, ຮັບຮອງເອົາການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ

3.2. ດ້ານບຸກຄະລາກອນ

3.2.1. ເລືອກຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ, ກຳມະການ ຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

3.2.2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການ ສະເໜີຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;

3.2.3. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າອົງການ ໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ຕາມການສະເໜີຂອງຄະນະປະຈຳສະພາ ປະຊາຊົນຂັ້ນແຂວງ,

3.2.4. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ເລຂາທິການ ຂອງສະພາປະຊາຊົນຂັ້ນແຂວງ ການສະເໜີຂອງຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ,

3.2.5. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ການຍົກຍ້າຍ ຫຼື ການປົດຕຳແໜ່ງ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າ ພະແນກ ຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງ ເຈົ້າແຂວງ, ເຈົ້າຄອງ ນະຄອນຫຼວງ.

**16. ກົດໝາຍ ວ່າດ້ວຍອົງການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017.**

**ມາດຕາ 5 (ປັບປຸງ) ຫຼັກການ ຂອງການກວດກາລັດ**

ການກວດກາລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍ ຕາມລະບຽບການ;
4. ມີສ່ວນຮ່ວມຂອງການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ ແລະ ພົນລະເມືອງ;
5. ບໍ່ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກ ກວດກາ.

**ມາດຕາ 7 ສິດ ແລະ ພັນທະ ປະກອບສ່ວນໃນການກວດກາລັດ**

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ, ພົນລະເມືອງ ມີສິດ ແລະ ພັນທະປະກອບສ່ວນເຂົ້າໃນວຽກງານກວດກາລັດ ດ້ວຍການເຂົ້າຮ່ວມ, ອຳນວຍຄວາມສະດວກ, ລາຍງານ, ສະໜອງຂໍ້ມູນ, ຫຼັກຖານຢ່າງທັນການ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດການຕົກລົງ ກ່ຽວກັບການແກ້ໄຂຜົນຂອງການກວດກາ ໃຫ້ສຳເລັດ.

**ມາດຕາ 30 ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການກວດກາລັດຖະບານ**

ອົງການກວດກາລັດຖະບານ ແມ່ນ ອົງການກວດກາລັດຂັ້ນສູນກາງ, ເປັນອົງການລັດທຽບເທົ່າ ກະຊວງ ແລະ ຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການ ໃຫ້ລັດຖະບານ ກ່ຽວກັບ ການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ໃນຂອບເຂດສິດ, ໜ້າທີ່ ຂອງລັດຖະບານ ແລະ ຊີ້ນຳວຽກງານດັ່ງກ່າວ ໃນຂອບເຂດທົ່ວ ປະເທດ.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຖະບານ**

ອົງການກວດກາລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດຳລັດ ກ່ຽວກັບວຽກງານກວດກາ ລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດຳລັດ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງອົງການຕົນ ແລ້ວຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ;

4. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ກ່ຽວກັບວຽກ

5. ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂອບເຂດທົ່ວປະເທດ;

6. ສ້າງ ບຳລຸງ, ຍົກລະດັບວິຊາສະເພາະວຽກງານກວດກາ ໃຫ້ຖັນແຖວພະນັກງານ-ລັດຖະກອນ ທີ່ເຮັດວຽກງານກວດກາລັດ;

7. ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຂັ້ນກະຊວງ, ຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ,

8. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງລັດຖະມົນຕີ, ປະທານ ຫຼື ຫົວໜ້າອົງການ, ຫົວ ໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງລັດຖະມົນຕີ, ຮອງປະທານ ຫຼື ຮອງຫົວໜ້າອົງການ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຂອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ທີ່ຂຶ້ນກັບຂັ້ນສູນກາງຄຸ້ມຄອງ ແລະ ຜູ້ໄດ້ຮັບມອບສິດຈາກທາງການ.

9. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດ ຕາມກົດໝາຍ;

10. ຕິດຕາມ, ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ;

11. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ;

12. ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ດຳເນີນການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດ ໄວ້ໃນກົດໝາຍ;

13. ກວດກາຜົນຂອງການກວດສອບຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ;

14. ພົວພັນ ແລະ ປະສານສົມທົບກັບ ບັນດາອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການທີ່ຮັບຜິດຊອບ ກ່ຽວກັບການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;

15. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ລັດຖະບານ;

16. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ຂອງຂັ້ນແຂວງ, ຂັ້ນກະຊວງ;

17. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາລັດ ຕາມການຕົກລົງຂອງລັດຖະບານ;

18. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບ ເຂດການຄຸ້ມຄອງຂອງລັດຖະບານ ໃຫ້ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 (ປັບປຸງ) ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດຖະບານ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຖະບານ ມີ ຫ້ອງການ, ກົມ ແລະ ພະແນກ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຖະບານ ມີ ປະທານ, ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າຂັ້ນກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ລັດຖະກອນວິຊາການ.

**17. ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.**

**ມາດຕາ 2 (ປັບປຸງ) ການປົກຄອງທ້ອງຖິ່ນ**

ການປົກຄອງທ້ອງຖິ່ນ ແມ່ນ ການຄຸ້ມຄອງບໍລິຫານລັດຂັ້ນທ້ອງຖິ່ນ.

ການປົກຄອງທ້ອງຖິ່ນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງອອກເປັນ ສາມຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນແຂວງ ມີ ແຂວງ, ນະຄອນຫຼວງ;

ຂັ້ນເມືອງ ມີ ເມືອງ, ເທດສະບານ, ນະຄອນ;

ຂັ້ນບ້ານ ມີ ບ້ານ.

**ມາດຕາ 4 (ປັບປຸງ) ທີ່ຕັ້ງ**

ອົງການປົກຄອງທ້ອງຖິ່ນ ແມ່ນ ອົງການບໍລິຫານລັດຂັ້ນທ້ອງຖິ່ນ, ເປັນຕົວແທນຂອງລັດຖະບານ, ມີຄວາມຮັບຜິດຊອບຕໍ່ລັດຖະບານ ແລະ ສະພາປະຊາຊົນທ້ອງຖິ່ນ.

**ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍ:**

1. ອົງການປົກຄອງ ແຂວງ, ນະຄອນຫຼວງ;
2. ອົງການປົກຄອງເມືອງ, ເທດສະບານ, ນະຄອນ;
3. ອົງການປົກຄອງບ້ານ.

ໃນກໍລະນີຈຳເປັນ ອາດຈະສ້າງເຂດ ພິເສດຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ.

ຫົວໜ້າອົງການປົກຄອງແຂວງ ແມ່ນ ເຈົ້າແຂວງ, ຫົວໜ້າອົງການປົກຄອງນະຄອນຫຼວງ ແມ່ນ ເຈົ້າຄອງນະຄອນຫຼວງ, ຫົວໜ້າອົງການປົກຄອງເມືອງ ແມ່ນ ເຈົ້າເມືອງ, ຫົວໜ້າອົງການປົກຄອງເທດສະບານ ແມ່ນ ຫົວໜ້າເທດສະບານ, ຫົວໜ້າອົງການປົກຄອງນະຄອນ ແມ່ນ ເຈົ້ານະຄອນ, ຫົວໜ້າອົງການປົກຄອງບ້ານ ແມ່ນ ນາຍບ້ານ.

**ມາດຕາ 5 (ປັບປຸງ) ພາລະບົດບາດ**

ອົງການປົກຄອງທ້ອງຖິ່ນ ມີ ພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທ້ອງຖິ່ນ ແລະ ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 6 (ປັບປຸງ) ສິດ ແລະ ໜ້າທີ່**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ດຳລັດ, ມະຕິ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ ຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;

2. ຄົ້ນຄວ້າ ແລະ ສະເໜີ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນຕໍ່ສະພາປະຊາຊົນທ້ອງຖິ່ນ ເພື່ອພິຈາລະນາ:

3. ຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ, ຊັບພະຍາກອນທຳມະຊາດ, ສິ່ງເວດລ້ອມ ແລະ ອື່ນໆ;

4. ອອກມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ,

5. ຕິດຕາມ ກວດກາການປະຕິບັດໜ້າທີ່ວຽກງານຂອງອົງການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ;

6. ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ທ້ອງຖິ່ນຂອງຕົນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຂອງລັດຖະບານ;

8. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານ ຂອງທ້ອງຖິ່ນໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການປົກຄອງແຂວງ, ນະຄອນຫຼວງ ແມ່ນ ອົງການບໍລິຫານລັດຂັ້ນແຂວງ ຊຶ່ງມີພາລະບົດບາດ ຄຸ້ມຄອງບໍລິຫານລັດທາງດ້ານການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ- ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ; ສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໃນທ້ອງຖິ່ນ; ຊີ້ນຳ, ກວດກາການຈັດຕັ້ງ ປະຕິບັດແຜນຍຸດທະສາດການພັດທະນາເມືອງ, ເທດສະບານ, ນະຄອນ ໃນຂອບເຂດການຄຸ້ມຄອງຂອງຕົນ, ປະຕິບັດມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 11 (ໃໝ່) ສິດ ແລະ ໜ້າທີ່**

ອົງການປົກຄອງແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ດຳລັດ, ລະບຽບການ, ຄຳສັ່ງ, ຄຳແນະນຳ, ມະຕິກອງປະຊຸມຂອງອົງການປົກຄອງແຂວງ, ນະຄອນຫຼວງ ແລະ ສະພາປະຊາຊົນຂັ້ນແຂວງ;

2. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຕ້ານ ແລະ ສະກັດກັ້ນການສໍ້ ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ອື່ນ ໃນສັງຄົມ;

3. ຊີ້ນຳ, ຊຸກຍູ້, ປູກລະດົມ ກ່ຽວກັບວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາ ຊິກສະພາປະຊາຊົນຂັ້ນແຂວງ,

4. ຊຸກຍູ້, ລະດົມແຫຼ່ງທຶນເຂົ້າໃສ່ການປະຕິບັດຍຸດທະສາດ ປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ສາທາລະນະສຸກ ຢູ່ທ້ອງຖິ່ນ;

5. ປົກປັກຮັກສາ, ສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ຂອງເຜົ່າ, ຄຸ້ມຄອງ ແລະ ພັດທະນາສະຖານທີ່ກ່ອງທ່ຽວທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ພາຍ ໃນແຂວງ, ນະຄອນຫຼວງ;

6. ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຄຸ້ມຄອງບໍລິຫານລັດ, ປັບປຸງລະ ບຽບການ , ກົນໄກການບໍລິຫານລັດ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ;

7. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳອື່ນ ຂອງທຸກຂະ ແໜງການ ຢູ່ ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ອົງການໄອ ຍະການປະຊາຊົນ ແລະ ສານປະຊາຊົນທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແ ໜງການ ທີ່ຂັດກັບກົດໝາຍ;

8. ແບ່ງໜ້າທີ່ຮັບຜິດຊອບ, ສິດຕັດສິນບັນຫາ ແລະ ຜົນປະໂຫຍດໃຫ້ເມືອງ, ເທດສະບານ, ນະຄອນ ໃຫ້ ຈະແຈ້ງ ແລະ ຂາດຕົວ;

9. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງພະແນກ, ອົງການ ລັດທຽບເທົ່າພະແນກຂັ້ນແຂວງ, ການເຄື່ອນໄຫວປະຕິບັດໜ້າທີ່ຂອງ ເມືອງ, ເທດສະບານ, ນະຄອນ ແລະ ຫົວໜ່ວຍການຈັດຕັ້ງອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

10. ອຳນວຍຄວາມສະດວກ ແລະ ຕິດຕາມ, ກວດກາການປະຕິບັດທຶນຊ່ວຍເຫຼືອ ແລະ ໂຄງການ ລົງທຶນ ທີ່ ສູນກາງຄຸ້ມຄອງ, ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນ ຂອບເຂດຄວາມຮັບຜິດຊອບຂອງຕົນ;

11. ຊີ້ນຳ ກວດກາການຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ; ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

12. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງການຈັດຕັ້ງ ແລະ ບຸກຄົນ ກ່ຽວກັບການ ກະທຳ ຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານລັດໃນທ້ອງຖິ່ນຂອງຕົນ;

13. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງ ແຂວງ, ນະຄອນຫຼວງ; ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ແລະ ກຳນົດເຂດແດນຂອງ ເມືອງ, ເທດສະບານ, ນະຄອນ;

14. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດ ຕັ້ງ ສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ ຢູ່ໃນທ້ອງຖິ່ນຕົນ;

15. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ພະແນກສາຍຕັ້ງທີ່ປະຈຳຢູ່ທ້ອງຖິ່ນຂອງຕົນໃຫ້ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ ກ່ຽວຂ້ອງ,

16. ສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດດ້ານການເມືອງ, ການປົກຄອງ, ວິຊາສະເພາະ ແລະ ພາສາຕ່າງປະເທດ ໃຫ້ພະນັກງານ-ລັດຖະກອນຂອງຕົນ;

17. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ ແລະ ຈັດເກັບລາຍຮັບໃຫ້ຖືກຕ້ອງ;

18. ອຳນວຍ, ຄວບຄຸມ ໃຫ້ອົງການລັດທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ; ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ-ລາຍຈ່າຍ ຂອງທ້ອງຖິ່ນ;

19. ພົວພັນ ແລະ ຮ່ວມມືກັບຕ່າງປະເທດຕາມການມອບໝາຍຂອງຂັ້ນເທິງ;

20. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ລວມທັງສະພາບການຮອບດ້ານຂອງ ທ້ອງຖິ່ນ ໃຫ້ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 12 (ປັບປຸງ) ໂຄງປະກອບກົງຈັກ**

ອົງການປົກຄອງແຂວງ, ນະຄອນຫຼວງ ມີ ໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການແຂວງ, ນະຄອນຫຼວງ;
2. ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

**18. ລັດຖະບັນຍັດ ວ່າດ້ວຍການດຳເນີນຄະດີປົກຄອງ ສະບັບເລກທີ 001 ປປທ, ລົງວັນທີ 19 ມີນາ 2021**

ມາດຕາ 02 ຂໍ້ 01 ກຳນົດວ່າ: **"ຄະນະສານປົກຄອງມີສິດອຳນາດພິຈາລະນາຕັດສິນຄະດີກ່ຽວກັບບັນຫາ ທາງປົກຄອງ ຫຼື ທາງບໍລິຫານ ລະຫວ່າງ ອົງການຈັດຕັ້ງລັດ ກັບ ພົນລະເມືອງ"**

**ມາດຕາ 15 ຄະນະສານປົກຄອງ**

**ວັກ1** ຄະນະສານປົກຄອງ ສ້າງຕັ້ງຂຶ້ນຢູ່ສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນຫຼວງ ຕາມການພິຈາລະນາຂອງສາພາແຫ່ງຊາດ.

**ວັກ2** ຄະນະສານປົກຄອງ ຂອງສານປະຊາຊົນແຂວງ, ນະຄອນຫຼວງ ມີສິດພິຈາລະນາຄະດີເປັນຂັ້ນຕົ້ນ.

**ວັກ3** ຄະນະສານປົກຄອງ ຂອງສານປະຊາຊົນພາກ ມີສິດພິຈາລະນາຄະດີເປັນຂັ້ນອຸທອນ;

**ວັກ4** ຄະນະສານປົກຄອງ ຂອງສານປະຊາຊົນສູງສຸດ ມີສິດພິຈາລະນາຄະດີເປັນຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ;

**ມາດຕາ 16 ສິດອຳນາດຂອງສານປົກຄອງ (ສາເຫດທີ່ພາໃຫ້ມີການຮ້ອງຟ້ອງທາງປົກ ຄອງ)**

**ຄະນະສານປົກຄອງ ມີສິດອຳນາດພິຈາລະນາຕັດສິນຄະດີຕາມ ແຕ່ລະປະເພດ ດັ່ງນີ້:**

1. ການອອກ, ການໂຈະ ຫຼື ການຍົກເລີກ ຂໍ້ ຕົກລົງ, ຄຳສັ່ງ ຫຼື ໃບອະນຸຍາດ ກ່ຽວກັບການ ຜະລິດ, ທຸລະກິດ, ກິດຈະການອື່ນ ແລະ ການ ຄຸ້ມຄອງທີ່ດິນບໍ່ຖືກຕ້ອງ;
2. ການລົງວິໄນ ຫຼື ໃຫ້ອອກຈາກລັດຖະການ ທີ່ບໍ່ຖືກຕ້ອງ;
3. ການຍົກຍ້າຍ ຫຼື ການສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການ ທີ່ບໍ່ຖືກຕ້ອງ;
4. ຄວາມຜິດພາດ ໃນການຂຶ້ນບັນຊີຜູ້ມີສິດປ່ອນບັດເລືອກຕັ້ງ ຊຶ່ງຄະນະກຳມະການເລືອກຕັ້ງບໍ່ສາມາດແກ້ໄຂໄດ້;

5. ການເມີນເສີຍ ຫຼື ຊັກຊ້າ, ແກ່ຍາວ ໂດຍບໍ່ມີ ເຫດຜົນ ໃນການປະຕິບັດໜ້າທີ່ຂອງພະນັກ ງານ - ລັດຖະກອນ ຊຶ່ງສ້າງຄວາມເສຍຫາຍໃຫ້ ແກ່ລັດ ແລະ ພົນລະເມືອງ;

6. ການກະທຳ ຂອງພະນັກງານ-ລັດຖະກອນ ກ່ຽວກັບການປັບໃໝ, ການເກັບພາສີ, ການເກັບອາກອນ, ຄ່າທຳນຽມ, ຄ່າບໍລິການ, ພັນທະອື່ນ, ຮັບຊັບສິ່ງຂອງ ແລະ ການນຳໃຊ້ຊັບສິ່ງຂອງ ຂອງຜູ້ອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ຂໍ້ຕົກລົງ ກ່ຽວກັບການແລກປ່ຽນ ຫຼື ການຊົດ ເຊີຍ ທີ່ບໍ່ຖືກຕ້ອງ.

8. ການກະທຳທີ່ບໍ່ຖືກຕ້ອງ ກ່ຽວກັບຄວາມຮັບຜິດຊອບ ລະຫວ່າງອົງການຈັດຕັ້ງລັດດ້ວຍກັນ;

9. ຄະດີອື່ນ ກ່ຽວກັບບັນຫາ ທາງປົກຄອງ ຫຼື ທາງບໍລິຫານ ຕາມການຕົກລົງຂອງສະພາຜູ້ພິພາກສາຂອງ ສານປະຊາຊົນສູງສຸດ.

ສຳລັບບັນຫາກ່ຽວກັບ ຄວາມລັບຂອງຊາດ, ຄວາມໝັ້ນຄົງ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ແລະ ການພົວພັນຕ່າງປະເທດ ບໍ່ໃຫ້ນຳມາພິຈາລະນາ.

ມາດຕາ 17 ວັກ 02 ກຳນົດວ່າ " **ໃນເວລາ ຍັງບໍ່ໄດ້ສ້າງຕັ້ງຄະນະສານປົກຄອງ ຢູ່ບ່ອນເຫດການ ຫຼື ຂໍ້ຂັດແຍ່ງເກີດຂຶ້ນນັ້ນ ໃຫ້ຄະນະສານປົກຄອງ ຢູ່ສານປະຊາຊົນ ນະຄອນຫຼວງວຽງຈັນ ຫຼື ແຂວງ ທີ່ໃກ້ຄຽງເປັນຜູ້ດຳເນີນ".**

**ມາດຕາ 20 ກຳນົດເວລາການດຳເນີນຄະດີປົກຄອງ**

**ວັກ1** ການດຳເນີນຄະດີປົກຄອງ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ດັ່ງນີ້:

1. ຢູ່ສານຂັ້ນຕົ້ນ ໃຫ້ສຳເລັດພາຍໃນ ເກົ້າເດືອນ ນັບແຕ່ວັນຜູ້ພິພາກສາໄດ້ຮັບສຳນວນຄະດີເປັນຕົ້ນໄປ,
2. ຢູ່ສານຂັ້ນອຸທອນ ໃຫ້ສຳເລັດພານໃນ ສີ່ເດືອນ ນັບແຕ່ວັນຜູ້ພິພາກສາໄດ້ຮັບສຳນວນຄະດີເປັນຕົ້ນໄປ,
3. ຢູ່ສານຂັ້ນລົບລ້າງ ໃຫ້ສຳເລັດພາຍໃນ ສາມເດືອນ ສຳລັບຄະດີ ຂັ້ນຮື້ຟື້ນ ຕ້ອງໃຫ້ສຳເລັດພາຍໃນເວລາສອງເດືອນ ນັບແຕ່ວັນຜູ້ພິພາກສາໄດ້ຮັບສຳນວນຄະດີເປັນຕົ້ນໄປ,

**ວັກ2** ໃນກໍລະນີບໍ່ສາມາດພິຈາລະນາຕັດສິນ ໃຫ້ສຳເລັດພານໃນກຳນົດເວລານັ້ນ ຜູ້ພິພາກສາຮັບຜິດຊອບຄະດີດັ່ງກ່າວ ຕ້ອງສະເໜີຕໍ່ສານປະຊາຊົນບ່ອນທີ່ກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງຕໍ່ກຳນົດເວລາ ແຕ່ການຕໍ່ກຳນົດເວລານັ້ນ ແຕ່ລະຄັ້ງບໍ່ໃຫ້ເກີນ ສາມເດືອນ ແຕ່ສູງສຸດບໍ່ໃຫ້ເກີນ ໜຶ່ງປີ.

**ມາດຕາ 28 ການຍື່ນຄຳຮ້ອງຟ້ອງ**

ວັກ1 ຜູ້ຮ້ອງຟ້ອງ ຕ້ອງຍື່ນຄຳຮ້ອງຟ້ອງ ຕໍ່ສານທີ່ມີສິດອຳນາດ ຫຼື ອາດຈະສົ່ງໄປສະນີທີ່ລົງທະບຽນກໍໄດ້ ຫຼື ສົ່ງຜ່ານທາງເອເລັກໂຕນິກ ທີ່ສານໄດ້ກຳນົດຂຶ້ນຢ່າງເປັນທາງການ ຫຼື ສົ່ງດ້ວຍວິທີອື່ນ ໃຫ້ຖືເອົາທີ່ພາກສ່ວນກ່ຽວຂ້ອງຮັບຄຳຮ້ອງຟ້ອງ ເປັນວັນຍື່ນຄຳຮ້ອງຟ້ອງຕໍ່ຄະນະສານປົກຄອງ,

ວັກ2 ຄຳຮ້ອງຟ້ອງ ຕ້ອງຂຽນຕາມແບບພິມຂອງສານ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ໂດຍເຮັດເປັນສອງສະບັບ ຄື ສະບັບຕົ້ນ ແລະ ສະບັບສຳເນົາ.

ຕາມພິທີຖະແຫຼງຂ່າວການດຳເນີນຄະດີປົກຄອງຢ່າງເປັນທາງການ ຄັ້ງວັນທີ 22 ທັນວາ 2021 ຢູ່ທີ່ນະຄອນຫຼວງວຽງຈັນ ເຊິ່ງໄດ້ກ່າວວ່າ **"ຄະນະປະຈຳສະພາແຫ່ງຊາດ ໄດ້ອອກມະຕິ ສະບັບເລກທີ 15/ຄປຈ, ລົງວັນທີ 7 ກຸມພາ 2019 ຮັບຮອງການສ້າງຕັ້ງຄະນະສານປົກຄອງຢູ່ ສານປະຊາຊົນສູງສຸດ, ສານປະຊາຊົນພາກກາງ**

**ແລະ ສານປະຊາຊົນ ນະຄອນຫຼວງວຽງຈັນ. ການດຳເນີນຄະດີປົກຄອງປະກອບມີ 3 ຂັ້ນຄືກັບຄະດີອື່ນໆ ໂດຍເລີ່ມຈາກການດຳເນີນຄະດີຢູ່ສານຂັ້ນຕົ້ນ (ສານນະຄອນ ຫຼວງວຽງຈັນ).”**

(ຂໍ້ 4 ແຈ້ງການ ຂອງສານປະຊາຊົນສູງສຸດ ເລກທີ 466/ສປສສ, ລົງວັນທີ 26 ພະຈິກ 2021) ກຳນົດວ່າ: ໃນການຮັບເອົາຄະດີປົກຄອງ ທີ່ພົນລະເມືອງຢູ່ແຂວງ ທີ່ບໍ່ສາມາດຍື່ນຄຳຮ້ອງຟ້ອງ ຕໍ່ສານປະຊາຊົນນະຄອນຫຼວງວຽງຈັນໄດ້ນັ້ນ ໃຫ້ສານປະຊາຊົນແຂວງ ບ່ອນທີ່ຜູ້ກ່ຽວອາໄສຢູ່ ຮັບຄຳຮ້ອງຟ້ອງ, ຈົ່ງຂາເຂົ້າ ແລ້ວນຳສົ່ງຕໍ່ມາໃຫ້ສານປະຊາຊົນນະຄອນຫຼວງວຽງຈັນ ບ່ອນທີ່ມີສິດອຳນາດ ໃນການພິຈາລະນາຕັດສິນຕາມລະບຽບກົດໝາຍ; ການນັບເວລາ ໃນການຮັບເອົາຄຳຮ້ອງຟ້ອງ ແລະ ເອກະສານຕ່າງໆນັ້ນ ແມ່ນໃຫ້ຖືເອົາມື້ຈົ່ງຂາເຂົ້າ ຂອງສານປະຊາຊົນທີ່ກ່ຽວຂອງເປັນຕົ້ນໄປ.

**18.1. ດຳລັດ ວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ ສະບັບເລກທີ 77/ລບ, ລົງວັນທີ 28 ກຸມພາ 2018.**

**ມາດຕາ 2 ການຊ່ວຍເຫຼືອທາງດ້ານກົດໝາຍ**

ການຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນການໃຫ້ບໍລິການທາງດ້ານກົດໝາຍ ໂດຍບໍ່ຄິດຄ່າ ແກ່ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຄົນພິການ, ເດັກທີ່ຕ້ອງການການປົກປ້ອງພິເສດ, ຜູ້ກະທຳຜິດທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ, ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານອົງການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ.

**ມາດຕາ 5 ຫຼັກການການຊ່ວຍເຫຼືອທາງດ້ານກົດໝາຍ**

ການຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກປະຊາຊົນປະຕິວັດລາວ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ ສປປ ລາວ;
2. ສະເໝີພາບຕໍ່ໜ້າກົດໝາຍ;
3. ໃຫ້ການບໍລິການໂດຍບໍ່ຄິດຄ່າ;
4. ມີຄວາມຮັບຜິດຊອບສູງ, ໂປ່ງໃສ ແລະ ເປັນທຳ;
5. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ;
6. ຮັກສາຄວາມລັບ.

**ມາດຕາ 7 ປະເພດການຊ່ວຍເຫຼືອທາງດ້ານກົດໝາຍ**

ການຊ່ວຍເຫຼືອທາງດ້ານກົດໝາຍ ມີສີ່ ປະເພດ ດັ່ງນີ້:

1. ການສະໜອງຂໍ້ມູນຂ່າວສານ;
2. ການໃຫ້ຄຳປຶກສາທາງດ້ານກົດໝາຍ;
3. ການຊ່ວຍເຫຼືອໃນການຮ່າງເອກະສານ;
4. ການເປັນຜູ້ຕາງໜ້າໃນການດຳເນີນຄະຕີ.

**ມາດຕາ 12 ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ**

ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີດັ່ງນີ້:

1. ຜູ້ທຸກຍາກ;
2. ຜູ້ດ້ອຍໂອກາດ;

3. ເດັກທີ່ຕ້ອງການ ການປົກປ້ອງພິເສດ;

4. ຜູ້ກະທຳຜິດ ທີ່ກົດໝາຍກຳນົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫຼືອ;

5. ຄົນພິການ;

6. ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ;

7. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ມາດຕາ 13 ວິທີການຂໍການຊ່ວຍເຫຼືອທາງດ້ານກົດໝາຍ**

ການຂໍການຊ່ວຍເຫຼືອທາງດ້ານກົດໝາຍ ນຳອົງການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ສາມາດດຳເນີນດ້ວຍວິທີການໃດໜຶ່ງ ດັ່ງນີ້:

1. ຍື່ນຄຳຮ້ອງຂໍດ້ວຍ ຕົນເອງ, ຜູ້ຕາງໜ້າຄອບຄົວ ຫຼື ຍາດພີ່ນ້ອງ,

2. ການສະເໜີຂອງອົງການປົກຄອງບ້ານ, ໂຮງຮຽນ, ໂຮງໝໍ ແລະ ອົງການຈັດຕັ້ງອື່ນ;

3. ຕິດຕໍ່ພົວພັນທາງໂທລະສັບ ຫຼື ເຄື່ອງມືສື່ສານຕ່າງໆ;

4. ວິທີການອື່ນ.

ສຳລັບພົນລະເມືອງລາວຢູ່ຕ່າງປະເທດ ໃຫ້ຍື່ນຜ່ານສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສູນໃຫຍ ຂອງ ສປປ ລາວ ປະຈຳປະເທດທີ່ຕົນອາໄສຢູ່.

**ມາດຕາ 14 ສິດ ແລະ ພັນທະຂອງຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ**

**14.1 ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີສິດ ດັ່ງນີ້:**

1. ຖອນການຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍ;

2. ເລືອກ ຫຼື ປ່ຽນທະນາຍຄວາມ ໃນກໍລະນີເຫັນວ່າມີການລະເມີດຫຼັກການການຊ່ວຍເຫຼືອທາງດ້ານກົດ ໝາຍ;

3. ໄດ້ຮັບແຈ້ງກ່ຽວກັບການໃຫ້ການຊ່ວຍເຫຼືອ ໃນແຕ່ລະໄລຍະ;

4. ໄດ້ຮັບການຮັກສາຄວາມລັບ ທີ່ພົວພັນກັບການຊ່ວຍເຫຼືອທາງດ້ານກົດໝາຍ;

5. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງລັດ.

**14.2 ຜູ້ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ ມີພັນທະ ດັ່ງນີ້:**

1. ສະໜອງຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບການຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍ;

2. ໃຫ້ການຮ່ວມມືແກ່ອົງການຈັດຕັ້ງ ແລະ ພະນັກງານໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ;

3. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງລັດ.

**ມາດຕາ 15 ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ**

ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ປະກອບດ້ວຍ:

1. ກົມສົ່ງເສີມລະບົບບູຕິທຳ ຂອງກະຊວງຍຸຕິທຳ, ຂະແໜງສົ່ງເສີມວຽກງານຍຸຕິທຳຮາກຖານ ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ;

2. ໜ່ວຍງານສົ່ງເສີມວຽກງານບຸຕິທຳຮາກຖານ ຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ;

3. ຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍ ຂອງສະພາທະນາຍຄວາມ;

4. ການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ຂອງສະຫະພັນແມ່ຍິງ ແລະ ຂອງອົງການຈັດຕັ້ງອື່ນ.

**ມາດຕາ 16 ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ**

ບຸກຄົນໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນລັດຖະກອນ ຫຼື ທະນາຍຄວາມ ທີ່ຖືກແຕ່ງຕັ້ງໂດຍການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ.

## ເອກະສານຊ້ອນທ້າຍທີ 3: ການສ້າງແຜນດຳເນີນຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ

### I. ການສ້າງແຜນດຳເນີນຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ

#### 1. ພາບລວມຂອງການຝຶກອົບຮົມ

❖ **ກ່ຽວກັບຄູ່ມື**

ຜູ້ອຳນວຍຄວາມສະດວກສາມາດໃຊ້ເອກະສານ ການສ້າງແຜນດຳເນີນການຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ ສະບັບນີ້ ເພື່ອກະກຽມການຝຶກອົບຮົມກ່ອນມີການລົງປະຕິບັດວຽກງານຕົວຈິງ ແລະ ນຳໃຊ້ເຂົ້າໃນການດຳເນີນກິດຈະກຳສົນທະນາໃນລະຫວ່າງການຝຶກອົບຮົມ.

ກ່ຽວກັບບັນດາຂໍ້ມູນທີ່ຈະໃຊ້ເຂົ້າໃນການຝຶກອົບຮົມປະກອບມີ 6 ຫົວຂໍ້ຫຼັກຄື: 1) ການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີການໄກ່ເກ່ຍຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ; 2) ການສຳຫລວດທັດສະນະຄະຕິກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ແລະ ການເຂົ້າເຖິງຄວາມຍຸຕິທຳ (ສະພາບບັນຫາທີ່ພົບເຫັນຕົວຈິງ); 3) ສິດ ແລະ ພັນທະພື້ນຖານຂອງພົນລະເມືອງຕາມ ລັດຖະທຳມະນູນ ແຫ່ງ ສ ປປ ລາວ ແລະ ກົດໝາຍທີ່ດິນ, 4) ກົນໄກການເຂົ້າເຖິງລະບົບຍຸຕິທຳ ຫລືການຮ້ອງທຸກຂອງພົນລະເມືອງ; 5)ການໃຫ້ບໍລິການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ ລວມທັງບົດບາດຂອງອາສາສະໝັກດ້ານກົດໝາຍປະຈຳບ້ານ; ແລະ 6) ຊ່ອງທາງການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ ໂດຍບໍ່ເສຍຄ່າ.

ນອກຈາກນີ້ຍັງມີເອກະສານຊ້ອນທ້າຍ ປະກອບມີ ຄື: (1) 6 ກິດຈະກຳ ທີ່ເປັນວິທີການ ແລະ ຂະບວນການຝຶກອົບຮົມ, (2) ລັດຖະທຳມະນູນ, 16 ກົດໝາຍ, 4 ດຳລັດ ແລະ 1 ລັດຖະບັນຍັດ ທີ່ກ່ຽວຂ້ອງກັບສະພາບຂໍ້ຂັດແຍ່ງ ຫລື ບັນຫາທາງດ້ານກົດໝາຍ ທີ່ມັກເກີດຂຶ້ນຕົວຈິງຂອງປະຊາຊົນ ເພື່ອອ່ານເນື້ອໃນມາດຕາລະອຽດສຳລັບຜູ້ເຂົ້າຮ່ວມຝຶກອົບຮົມ, (3) ການສ້າງແຜນຝຶກອົບຮົມ ແລະ ແນະນຳສຳລັບການອຳນວຍຄວາມສະດວກ ສຳລັບຄູຝຶກ (ຄວນແນະນຳວິທີນຳໃຊ້ ແລະ ແຈກຢາຍໃນຕອນທ້າຍຂອງການຝຶກອົບຮົມ) ແລະ (4) ແບບຟອມ ຄຳຮ້ອງທຸກ (ຄຳຮ້ອງຟ້ອງ, ຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳ) ເຊິ່ງແຜນການດຳເນີນແມ່ນອີງຕາມວາລະຝຶກອົບຮົມ ລຸ່ມນີ້:

❖ **ວາລະຝຶກອົບຮົມ**

| ເວລາ | ເນື້ອໃນ | ຄວາມຮັບຜິດຊອບ |
|---|---|---|
| **ມື້ທີ 1** | | |
| 8:00-8:30 | ລົງທະບຽນ | |
| 8:30-8:40 | ກ່າວຈຸດປະສົງຂອງຝຶກອົບຮົມ<br>ປະກອບຄຳເຫັນ | |
| 8:40-8:50 | ຖ່າຍຮູບລວມ | |
| 8:50-9:15 | ປະເມີນຄວາມຮັບຮູ້ກ່ອນການຝຶກອົບຮົມ | |
| 9:15-9:30 | ແນະນຳຕົນເອງ | |
| 9:30-10:00 | 1. ສະຫຼຸບໂດຍສັງເຂບກ່ຽວກັບບົດຮຽນການເຂົ້າຮ່ວມໄກ່ | |

| | | |
|---|---|---|
| | ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ | |
| 10:00-10:30 | 2. ຂໍ້ຂັດແຍ່ງຕ່າງໆ ທີ່ມັກເກີດຂຶ້ນຢູ່ພາຍໃນບ້ານ | |
| 10:30-10:45 | **ພັກຜ່ອນ** | |
| 10:45-12:00 | 3. ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍທີ່ດິນ | |
| 12:00-13:30 | **ພັກທ່ຽງ** | |
| 13:30-14:45 | 4. ນຳສະເໜີປະຫວັດຄວາມເປັນມາຂອງໜ່ວຍໄກ່ເກ່ຍ, ຄວາມໝາຍ, ຄວາມສຳຄັນ, ຈຸດປະສົງ, ທີ່ຕັ້ງ ແລະ ພາ ລະບົດບາດ | |
| 14:45-15:00 | **ພັກຜ່ອນ** | |
| 15:00-16:00 | 5. ນຳສະເໜີ ສິດ ແລະ ໜ້າທີ່, ຈັນຍາບັນ ແລະ ການສິ້ນສຸດຂອງໜ່ວຍໄກ່ເກ່ຍ | |
| 16:00-16:30 | ສະຫຼຸບ ແລະ ກ່າວປິດການຝຶກອົບຮົມ ມື້ທີ 01 | |
| **ມື້ທີ 2** | | |
| 8:00-8:45 | ທວນຄືນບົດຮຽນເກົ່າ | |
| 8:45-10:20 | 6. ຂໍ້ຂັດແຍ່ງທີ່ນຳມາໄກ່ເກ່ຍ, ຫຼັກການຂອງການໄກ່ເກ່ຍແລະ ຂັ້ນຕອນຂອງການໄກ່ເກ່ຍ | |
| 10:20-10:35 | **ພັກຜ່ອນ** | |
| 10:35-12:00 | 7. ການດຳເນີນການໄກ່ເກ່ຍ ແລະ ການສິ້ນສຸດການໄກ່ເກ່ຍ, ການຈັດຕັ້ງປະຕິບັດຜົນຂອງການໄກ່ເກ່ຍ ແລະຄ່າໃຊ້ຈ່າຍ | |
| 12:00-13:30 | **ພັກທ່ຽງ** | |
| 13:30-15:00 | ສືບຕໍ່ ນຳສະເໜີການດຳເນີນການໄກ່ເກ່ຍ ແລະ ການສິ້ນສຸດການໄກ່ເກ່ຍ, ການຈັດຕັ້ງປະຕິບັດຜົນຂອງການໄກ່ເກ່ຍ ແລະຄ່າໃຊ້ຈ່າຍ | |
| 15:00-15-15 | **ພັກຜ່ອນ** | |
| 15:15-16:15 | - ແບ່ງກຸ່ມຜູ້ເຂົ້າຮ່ວມອອກເປັນສອງກຸ່ມໃຫຍ່<br>ເອົາກໍລະນີສຶກສາໃຫ້ແຕ່ລະກຸ່ມ ພ້ອມທັງແນະນຳ | |
| 16:15-16:30 | ສະຫຼຸບ ແລະ ກ່າວປິດການຝຶກອົບຮົມ ມື້ທີ 02 | |
| **ມື້ທີ 3** | | |
| 8:00-8:30 | ທວນຄືນບົດຮຽນເກົ່າ | |
| 8:30-10:00 | 8. ການດຳເນີນການທົດລອງໄກ່ເກ່ຍຂໍ້ຂັດແຍ່ງທີ່ດິນຕົວຈິງ ຕາມຕົວຢ່າງໃນຄູ່ມື ເພື່ອໃຫ້ຜູ້ເຂົ້າຮ່ວມພິຈາລະນາ ແລະ ມີຄຳເຫັນຕໍ່ແຕ່ລະກໍລະນີສຶກສາທີ່ໄດ້ຍົກຂຶ້ນໃນຄູ່ມື | |

| | | |
|---|---|---|
| 10:00-10:15 | **ພັກຜ່ອນ** | |
| 10:15-12:00 | ສືບຕໍ່ ປະກອບຄຳເຫັນຕໍ່ແຕ່ລະກໍລະນີສຶກສາທີ່ໄດ້ຍົກຂຶ້ນໃນຄູ່ມື | |
| 12:00-13:30 | **ພັກທ່ຽງ** | |
| 13:30–14:30 | 9. ກົນໄກການເຂົ້າເຖິງລະບົບຍຸຕິທຳ ຢູ່ ສ ປປ ລາວ | |
| **14:30–14:45** | **ພັກຜ່ອນ** | |
| 14:45–16:15 | 10. ການໃຫ້ບໍລິການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ | |
| 16:15–16:30 | ສະຫຼຸບ ແລະ ກ່າວປິດການຝຶກອົບຮົມ ມື້ທີ 03 | |
| **ມື້ທີ 4** | | |
| 8:00-8:45 | ທວນຄືນບົດຮຽນເກົ່າ | |
| 8:45-10:30 | 11. ການສ້າງຄວາມອາດສາມາດໃຫ້ຄະນະໄກ່ເກ່ຍຂໍ້ຂັດແຍ່ງທີ່ດິນຂັ້ນບ້ານ ລວມທັງອາສາສະໝັກປະຈຳບ້ານ, ທັກສະການສຳພາດ ແລະ ການເຮັດບົດສະຫຼຸບລາຍງານ | |
| 10:30– 10:45 | **ພັກຜ່ອນ** | |
| 10:45 – 12:00 | ທົດສອບຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມຝຶກອົບຮົມ ໂດຍໃຫ້ຄະນະວິຊາການຂັ້ນສູນກາງ ແລະ ຕາງໜ້າສະມາຄົມ ທີ່ເຂົ້າຮ່ວມຝຶກອົບຮົມ ເຮັດໜ້າທີ່ເປັນຄູຝຶກ (ທົດສອບຕົວຈິງ) ໃຫ້ເວລາທ່ານລະ 15 ນາທີ ພ້ອມທັງປະເມີນຄວາມຮັບຮູ້ແຕ່ລະທ່ານ ໂດຍທ່ານ ນາງ ດາວັນ, ທ່ານ ບຸນທັນ ແລະ ທ່ານ ມະໂນລົມ | |
| 12:00 – 13:30 | **ພັກກິນອາຫານທ່ຽງ** | |
| 13:30 – 15:30 | ສືບຕໍ່ ທົດສອບຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມຝຶກອົບຮົມ | |
| 15:30 – 16:00 | ມອບໃບຢັ້ງຢືນການເຂົ້າຝຶກອົບຮົມ | |
| 16:20-16:30 | ສະຫຼຸບ ແລະ ກ່າວປິດການຝຶກອົບຮົມ | |

❖ **ຈຸດປະສົງຂອງການຝຶກອົບຮົມ**

ແມ່ນເພື່ອເພີ່ມຄວາມຮູ້ ແລະ ທັກສະ ໃຫ້ໜ່ວຍໄກ່ເກ່ຍຂັ້ນບ້ານ ລວມທັງເຈົ້າກົກເຈົ້າເຫລົ່າ, ອາສາສະຫມັກກົດໝາຍປະຈຳບ້ານ ສາມາດໃຫ້ບໍລິການ ການແກ້ໄຂຂໍ້ຂັດແຍ່ງ ດ້ວຍວິທີການໄກ່ເກ່ຍ ແລະ ແນະນຳໃຫ້ຂໍ້ມູນ ທາງດ້ານກົດໝາຍ ເປັນຕົ້ນ ລັດຖະທຳມະນູນ ແລະ ກົດໝາຍ ທີ່ກ່ຽວຂ້ອງ ລວມກົນໄກການເຂົ້າເຖິງລະບົບຍຸຕິທຳ ຫລື ການຮ້ອງທຸກ ໂດຍຜ່ານການຊ່ວຍເຫລືອທາງດ້ານກົດໝາຍ ໃຫ້ແກ່ປະຊາຊົນພາຍໃນບ້ານ ເວລາພົບບັນຫາຂໍ້ຂັດແຍ່ງທີ່ດິນ, ສິ່ງແວດລ້ອມ, ການບຸກລຸກທີ່ດິນປ່າໄມ້ ແລະ ບັນຫາຂໍ້ຂັດແຍ່ງອື່ນໆ.

❖ **ຜູ້ເຂົ້າຮ່ວມ**

ຜູ້ເຂົ້າຮ່ວມ ແມ່ນບຸກຄົນ ຫລື ພາກສ່ວນທີ່ກ່ຽວຂ້ອງ ຫລື ອົງການຈັດຕັ້ງທາງສັງຄົມທີ່ໄດ້ຮັບທຶນຈາກໂຄງການ PIASVC ທີ່ຈະໄປຝຶກຕໍ່ໃຫ້ຊຸມຊົນທ້ອງຖິ່ນ ເຂດເປົ້າໝາຍຂອງໂຄງການ ລວມທັງອາສາສະໝັກດ້ານກົດໝາຍປະຈຳບ້ານ ໂດຍຜ່ານການປະສານສົມທົບ ແລະ ສະໜັບສະໜູນຈາກ ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

❖ **ການຈັດຝຶກອົບຮົມ**

ການຈັດຝຶກອົບຮົມຄັ້ງ ແມ່ນເປັນການຝຶກອົບຮົມແບບເຊິ່ງໜ້າ ແລະ ເປັນການຮຽນຮູ້ແບບມີສ່ວນຮ່ວມ, ມີການແລກປ່ຽນ, ສົນທະນາໃນກຸ່ມໃຫຍ່ ແລະ ກຸ່ມຍ່ອຍ.

**2. ແນະນຳກ່ຽວກັບຂະບວນການດຳເນີນກິດຈະກຳສຳລັບຜູ້ອຳນວຍຄວາມສະດວກ**

➷ **ຜູ້ອຳນວຍຄວາມສະດວກ**

ຜູ້ອຳນວຍຄວາມສະດວກ ແມ່ນຜູ້ນຳພາວາງແຜນແນະນຳ ແລະ ຈັດການກຸ່ມເພື່ອໃຫ້ບັນລຸຈຸດປະສົງ, ມີຄວາມຄິດທີ່ຈະແຈ້ງ, ມີສ່ວນຮ່ວມທີ່ດີຈາກຜູ້ເຂົ້າຮ່ວມ, ກະຕຸ້ນການມີສ່ວນຮ່ວມ ແລະ ບັນທຶກ, ສະຫຼຸບໃຫ້ໄດ້ເນື້ອໃນໃຈຄວາມ ໂດຍໄດ້ຜ່ານການເຂົ້າຮ່ວມຝຶກອົບຮົມ ຫລືນຳໃຊ້ຄູ່ມືຝຶກອົບຮົມສະບັບນີ້.

➷ **ຄຸນລັກສະນະທີ່ດີຂອງຜູ້ອຳນວຍຄວາມສະດວກ**

1) ໃຊ້ທັງພະລັງຄວາມຄິດ ແລະ ຈິດໃຈທີ່ມີຄວາມເປັນກາງ;
2) ອອກແບບ ແລະ ວາງແຜນ;
3) ແນະນຳ ແລະ ຄວບຄຸມ;
4) ຮັບປະກັນວ່າຜົນໄດ້ຮັບ, ແຜນການປະຕິບັດ ແລະ ຄຳຖາມ ແມ່ນໄດ້ຖືກຈົດບັນທຶກ, ປະຕິບັດ ແລະ ໝູນໃຊ້ຢ່າງເໝາະສົມໃນພາຍຫຼັງ.

➷ **ໜ້າທີ່ຂອງຜູ້ອຳນວຍຄວາມສະດວກ**

1) ສ້າງຂໍ້ຕົກລົງຮ່ວມກັນ;
2) ສ້າງບັນຍາກາດໃຫ້ດີໃຫ້ຂະບວນການເຄື່ອໄປໄດ້;
3) ຟັງ, ເອົາໃຈໃສ່ ແລະ ມີສ່ວນຮ່ວມ;
4) ຕິດຕາມຄວາມຄືບໜ້າ ແລະ ສະຫຼຸບ.

**<u>ຕົວຢ່າງ:</u>** ການທັກທາຍສະບາຍດີຊຸມຊົນ, ກ່າວຈຸດປະສົງ, ແນະນຳທີມງານ ແລະ ແນະນຳວາລະດຳເນີນການຝຶກອົບຮົມລວມທັງເວລາທີ່ຈະນຳໃຊ້ ຕະຫລອດກຳນົດເວລາ ຕາມວາລະຝຶກອົບຮົມ.

ທີ່ສຳຄັນຕ້ອງແຈ້ງຜູ້ເຂົ້າຮ່ວມວ່າ ວິທີການດຳເນີນກິດຈະກຳແມ່ນແບບມີສ່ວນຮ່ວມ, ແລກປ່ຽນ, ສົນທະນາໃນກຸ່ມໃຫຍ່ ແລະ ກຸ່ມຍ່ອຍ. ຖ້າຜູ້ໃດ ມີຄຳຖາມສາມາດຍົກມືຂຶ້ນ ແລະ ຖາມເທື່ອລະຄົນ. ແຈ້ງຜູ້ເຂົ້າຮ່ວມວ່າ ເຮົາມາຮຽນຮູ້ນຳກັນຫຼາຍຄົນ ສະນັ້ນ ເຮົາຈະເຮັດແນວໃດເພື່ອ ຮັບປະກັນວ່າ ທຸກຄົນ ສາມາດປະກອບສ່ວນໄດ້ເຕັມທີ່ ແລະ ໄດ້ຮັບຂໍ້ມູນພຽງພໍ.

**<u>ຕົວຢ່າງ:</u> ສຳຫຼວດກ່ຽວກັບປະສົບການຜ່ານມາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ**

**ຈຸດປະສົງ:** ເພື່ອໃຫ້ຜູ້ເຂົ້າຮ່ວມ ແລກປ່ຽນທັດສະນະ ແລະ ປະສົບການຜ່ານມາໃນການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ.

❖ **ອະທິບາຍຈຸດປະສົງຂອງກິດຈະກຳ**

**ຜູ້ອຳນວຍຄວາມສະດວກ ໃຊ້ຈຸດປະສົງຂ້າງເທິງອະທິບາຍ ແລະ ແຈ້ງຂະບວນການໃນການເຮັດກິດຈະກຳ, ລວມທັງເວລາ.**

❖ **ການສົນທະນາຂອງຜູ້ເຂົ້າຮ່ວມ**

ຜູ້ອຳນວຍຄວາມສະດວກ ໃຊ້ຄຳຖາມແນະນຳລຸ່ມນີ້ສົນທະນາ - ແລກປ່ຽນທັດສະນະ ແລະ ປະສົບການ.

**ຄຳຖາມ:**

1. ໃນການແກ້ໄຂຂໍ້ຂັດແຍ່ງຜ່ານມາທ່ານຄິດວ່າບັນຫາ ຫຼື ຂໍ້ຂັດແຍ່ງໃດທີ່ເປັນຈິ່ງທ້າທາຍ ຫຼື ມີຂໍ້ຫຍຸ້ງຍາກທີ່ສຸດ? ແລະ ມີວິທີການແກ້ໄຂແນວໃດ?

❖ **ສະຫຼຸບລາຍງານຜົນການຄົ້ນຄວ້າ**

- ຫຼັງຈາກຄົ້ນຄວ້າຄຳຖາມສຳເລັດແລ້ວໃຫ້ຕາງໜ້າແຕ່ລະພາກສ່ວນນຳສະເໜີຜົນຂອງການຄົ້ນຄວ້າຄຳຖາມຂ້າງເທິງ.
- ຫຼັງຈາກຜູ້ເຂົ້າຮ່ວມນຳສະເໜີຜົນຂອງການຕອບຄຳຖາມແລ້ວ ໃຫ້ສັງລວມໂດຍຫຍໍ້ກ່ຽວກັບຜົນໄດ້ຮັບຂອງການສົນທະນາຄົ້ນຄວ້າຄຳຖາມ ຫຼື ຜົນໄດ້ຮັບຂອງກິດຈະກຳນີ້.

**<u>ຕົວຢ່າງ:</u> ກິດຈະກຳຈັດລຽງ ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນ**

**ຈຸດປະສົງ:** ເພື່ອເພີ່ມຄວາມເຂົ້າໃຈ, ສາມາດປົກປ້ອງສິດ ແລະ ນຳໃຊ້ເຂົ້າຊີວິດຕົວຈິງ ກ່ອນການເຂົ້າເຖິງຄວາມຍຸຕິທຳ.

❖ **ອະທິບາຍຈຸດປະສົງຂອງກິດຈະກຳ**

ຜູ້ອຳນວຍຄວາມສະດວກ ຕ້ອງອະທິບາຍຈຸດປະສົງຂ້າງເທິງ ແລະ ສະເໜີຂະບວນການໃນການເຮັດກິດຈະກຳໂດຍຫຍໍ້ ເຊັ່ນ ຈະເຮັດວຽກເປັນຄູ່ ຫຼື ເປັນກຸ່ມຄົ້ນຄວ້າແລ້ວຈັດລຽງ ສິດ ແລະ ພັນທະ ຂອງແຕ່ລະກົດໝາຍໃຫ້ຖືກຕ້ອງ.

❖ **ແບ່ງຜູ້ເຂົ້າຮ່ວມອອກເປັນ ຄູ່ ຫລື ກຸ່ມ ເຮັດກິດຈະກຳ (ອີງຕາມຈຳນວນຜູ້ເຂົ້າຮ່ວມ)**

- ຫຼັງຈາກແບ່ງຜູ້ເຂົ້າຮ່ວມອອກເປັນຄູ່ ຫຼື ກຸ່ມແລ້ວ ໃຫ້ຢາຍເຈັ້ຍ ສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນ ທີ່ໄດ້ຕັດແຕ່ລະ ສິດ ແລະ ພັນທະ ສະຫຼັບເຂົ້າກັນ ໃຫ້ຜູ້ເຂົ້າຮ່ວມຄົ້ນຄວ້າ ແລະ ຈັດລຽງໃຫ້ຖືກຕ້ອງ.
- ຜູ້ອຳນວຍຄວາມສະດວກ ນຳເອົາຫົວຂໍ້ຂອງ ລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນ ໄປຕິດໄວ້ ເພື່ອໃຫ້ຜູ້ເຂົ້າຮ່ວມນຳເອົາ ສິດ ແລະ ພັນທະ ຂອງແຕ່ລະ ນິຕິກຳ ໄປຕິດໃສ່.

❖ **ສະຫຼຸບຜົນຂອງການຈັດລຽງ**

- ພາຍຫຼັງຜູ້ເຂົ້າແຕ່ລະຄູ່ ຫຼື ກຸ່ມ ຈັດລຽງສິດ ແລະ ພັນທະ ຕາມລັດຖະທຳມະນູນ ແລະ ກົດໝາຍ ທີ່ດິນແລ້ວ ຜູ້ອຳນວຍຄວາມສະດວກ ແຈ້ງຕໍ່ຜູ້ເຂົ້າຮ່ວມວ່າພວກເຮົາຈະມາກວດເບິ່ງນຳກັນວ່າ ຄູ່ ຫຼື ກຸ່ມ ຈະຈັດລຽງຖືກ ຫຼາຍທີ່ສຸດ (ຜູ້ອຳນວຍຄວາມສະດວກ ອາດຈະພາກວດດ້ວຍ ນຳສະເໜີ ພາເວີພ້ອຍ ຫຼື ຮູບແບບອື່ນຕາມຄວາມເໝາະສົມ).
- ຜູ້ອຳນວຍຄວາມສະດວກສັງລວມໂດຍຫຍໍ້ກ່ຽວກັບຜົນໄດ້ຮັບຂອງກິດຈະກິດ.

**3. ສິ່ງທີ່ຜູ້ອານວຍຄວາມສະດວກຄວນເອົາໃຈໃສ່ໃນເວລາດາເນີນການຝຶກອົບຮົມແບບມີສ່ວນຮ່ວມ.**

1) ກຽມໃຫ້ດີ ແລະ ພ້ອມຈະດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງ.
2) ຄຳນຶງເຖິງການເຮັດວຽກເປັນຄູ່ ຫລື ກຸ່ມ (ທີມ).

3) ຄຳນຶງເຖິງການເຮັດວຽກແບບມີສ່ວນຮ່ວມ.
4) ຄຳນຶງເຖິງຂໍ້ດີ, ຂໍ້ເສຍ ເພື່ອຮູ້ໝູນໃຊ້ ແລະ ດັດແກ້.
5) ພະຍາຍາມຊຸກຍູ້ໃຫ້ຜູ້ເຂົ້າຮ່ວມເປັນເຈົ້າການດ້ວຍຕົນເອງຢ່າເອື້ອຍອີງຜູ້ອື່ນໃນການເຝິກອົບຮົມ.
6) ຄູຝຶກຕ້ອງຄຳນຶງເຖິງໝາກຜົນທີ່ຜູ້ເຂົ້າຮ່ວມຝຶກອົບຮົມຕ້ອງການ ແລະ ຊ່ວຍໃຫ້ບັນລຸໝາກຜົນດັ່ງກ່າວນັ້ນໄດ້.
7) ບໍ່ສະແດງຕົນເປັນຜູ້ຮູ້ໝົດທຸກຢ່າງ.
8) ບໍ່ຕັດສິນຄວາມຄິດ, ຄວາມເຫັນຂອງຜູ້ເຂົ້າຮ່ວມ, ບໍ່ສະແດງຕົນເປັນຜູ້ສິດສອນ ຜູ້ເຂົ້າຮ່ວມ, ບໍ່ສະແດງຕົນເປັນຜູ້ສັ່ງສອນ ແລະ ບໍ່ມີລັກສະນະໃນຕົວ.
9) ຄວບຄຸມອາລົມຕົນເອງຢ່າງມີວຸທິພາວະໃນການດຳເນີນການຝຶກອົບຮົມ.

❖ **ການກະກຽມອຸປະກອນ ແລະ ສະພາບແວດລ້ອມ**

- ກະກຽມປື້ມໃຫ້ຜູ້ເຂົ້າຮ່ວມເພື່ອໃຊ້ໃນການຝຶກອົບ
- ໂປູເຈັກເຕີ
- Power Point ບົດຮຽນ
- ກະກຽມເອກະສານກິດຈະກຳຂອງທັງ 08 ຫົວຂໍ້
- ເຈັ້ຍ Ao ແລະ ບິກເຟີດສີ
- ຮູບພາບ ຫລື ໂພສເຕີ ຫລື ຄລິບວີດີໂອ ຫລື ເຄື່ອງມືສື່ສານຕ່າງໆ
- ການຈັດທີ່ນັ່ງໃຫ້ສະດວກແກ່ການເຮັດກິດຈະກຳກຸ່ມ

## II. ການເຮັດປະເມີນ ກ່ອນ ແລະ ຫຼັງຝຶກອົບຮົມ

### ແບບຟອມປະເມີນຝຶກອົບຮົມ

**☐ກ່ອນ - ☐ຫຼັງ ຝຶກອົບຮົມ ການໃຫ້ບໍລິການໃຫ້ຄຳປຶກສາທາງດ້ານກົດໝາຍ ແກ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.**

ຊື່ ແລະ ນາມສະກຸນ:.........................................................................................................
ພາກສ່ວນ: .......................................................................................................................

- **ກະລຸນນາຂີດອ້ອມວົງມົນເອົາຄຳຕອບ ຂໍ້ທີ່ທ່ານຄິດວ່າຖືກຕ້ອງທີ່ສຸດ 1 ຂໍ້ ລຸ່ມນີ້:**

**ຄຳຖາມ**

**1. ການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານແມ່ນຫຍັງ?**

ກ. ແມ່ນ ຄວາມສາມາດຂອງປະຊາຊົນ ໃນການຊອກຫາ ແລະ ໄດ້ຮັບຍຸຕິທຳຂອງພວກເຂົາເຈົ້າ ໂດຍຜ່ານສະຖາບັນຍຸຕິທຳທີ່ເປັນທາງການ ແລະ ບໍ່ເປັນທາງການ ໂດຍສອດຄ່ອງກັບມາດຖານທາງດ້ານສິດທິມະນຸດ.

ຂ. ແມ່ນ ຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງ ເຊິ່ງດຳເນີນໂດຍໜ່ວຍ ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ດ້ວຍການສຶກສາອົບຮົມ, ຊ່ວຍເຫຼືອ, ແນະນຳ ຄູ່ກໍລະນີ ໃຫ້ມີຄວາມຕື່ນຕົວປະນີ ປະນອມ ແລະ ຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນ.

ຄ. ແມ່ນ ການຊຸກຍູ້ການຂະຫຍາຍຕົວທາງດ້ານເສດຖະກິດໃນຂັ້ນຮາກຖານ ແລະ ເສີມຂະຫຍາຍຄວາມສາມັກຄີຮັກແພງ ແລະ ສະ ຖຽນລະພາບໃນສັງຄົມ.

ງ. ຖືກໝົດທຸກຂໍ້.

**2. ຂໍ້ຂັດແຍ່ງແມ່ນຫຍັງ?**

ກ. ຄວາມບໍ່ຖືກຕ້ອງປອງດອງກັນ, ຄວາມບໍ່ເຂົ້າໃຈກັນ, ບໍ່ສາມາດ ຕົກລົງ ຫຼື ບໍ່ ລົງລອຍກັນ ທີ່ເກີດຂຶ້ນລະຫວ່າງ ບຸກຄົນ ກັບ ບຸກຄົນ, ບຸກຄົນ ກັບ ການຈັດຕັ້ງ ກ່ຽວກັບສາຍພົວພັນ ທາງ ແພ່ງ, ການຄ້າ, ຄອບຄົວ, ແຮງງານ, ສິ່ງແວດລ້ອມ,

ຂ. ການຍອມຮັບ, ຄວາມເຊື່ອໝັ້ນ, ການສື່ສານ ຫລື ຄວາມເຂົ້າໃຈ ທີ່ແຕກຫັກ;

ຄ. ການເຂົ້າເຖິງອຳນາດ, ຊັບພະຍາກອນ ແລະ ອຳນາດການປົກຄອງ, ຊົນຄົນໃນສັງຄົມ, ປະເພນີ, ກົດໝາຍ ແລະ ສະຖາບັນໃນສັງຄົມ;

ງ. ຜິດໝົດທຸກຂໍ້.

**3. ຂໍ້ຂັດແຍ່ງ ທີ່ນໍາມາໄກ່ເກ່ຍຢູ່ຂັ້ນບ້ານ ມີຈັກປະເພດ?**

ກ. 5 ປະເພດ;

ຂ. 6 ປະເພດ;

ຄ. 7 ປະເພດ;

**4. ສິດ ແລະ ໜ້າທີ່ ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີຈັກສິດ ແລະ ໜ້າທີ່?**

**ກ.** 10 ສິດ

**ຂ.** 11 ສິດ

**ຄ.** 12 ສິດ

**5. ການສຶກສາອົບຮົມ ແມ່ນຫຍັງ?**

ກ. ການໃຫ້ຄວາມຮູ້ທາງດ້ານ ກົດໝາຍ, ຮີດຄອງປະເພນີອັນດີງາມຂອງ ຊາດ, ການຕັກເຕືອນ ຄູ່ກໍລະນີ;
ຂ. ການຜ່ອນສັ້ນຜ່ອນຍາວ, ການໂຍະຍານ, ການໃຫ້ອະໄພ ຊຶ່ງກັນ ແລະ ກັນ;

ຄ. ແມ່ນມີເປົ້າໝາຍເພື່ອປະໂຫຍດແຫ່ງຄວາມຍຸຕິທໍາທາງສັງຄົມ ແລະ ປະໂຫຍດທາງສາທາລະນະ.

**6. ການໃຫ້ຄໍາປຶກສາທາງດ້ານກົດໝາຍ ແມ່ນຫຍັງ?**

ກ. ການຜ່ອນສັ້ນຜ່ອນຍາວ, ການໂຍະຍານ, ການໃຫ້ອະໄພ ຊຶ່ງກັນ ແລະ ກັນ;

ຂ. ແມ່ນ ການເຂົ້າເຖິງອໍານາດ, ຊັບພະຍາກອນ ແລະ ອໍານາດການປົກຄອງ, ຊຸມຊົນໃນສັງຄົມ, ປະເພນີ, ກົດໝາຍ ແລະ ສະຖາບັນໃນສັງຄົມ;

ຄ. ການແນະນໍາ, ອະທິບາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ກ່ຽວກັບກົດໝາຍ ທີ່ກ່ຽວຂ້ອງກັບການຮ້ອງຂໍ

**7. ການຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນຫຍັງ?**

**ກ.** ແມ່ນການໃຫ້ບໍລິການທາງດ້ານກົດໝາຍ ໂດຍບໍ່ຄິດຄ່າ ແກ່ຜູ້ທຸກຍາກ, ຜູ້ ດ້ອຍໂອກາດ, ຄົນພິການ, ເດັກທີ່ຕ້ອງການການປົກປ້ອງພິເສດ,

**ຂ.** ຜູ້ກະທໍາຜິດທີ່ກົດໝາຍກໍານົດໃຫ້ມີທະນາຍຄວາມ ເຂົ້າໄປຊ່ວຍເຫຼືອ, ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ,

**ຄ.** ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍຜ່ານອົງການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ.

**ງ.** ຖືກໝົດທຸກຂໍ້.

**8. ການຊ່ວຍເຫລືອທາງດ້ານກົດໝາຍແບບສະໝັກໃຈ ຫລືຈິດອາສາທາງດ້ານກົດໝາຍ (Pro bono) ແມ່ນຫຍັງ?**

ກ. ແມ່ນຄວາມສະໝັກໃຈ ຫລື ຈິດອາສາ ຂອງທະນາຍຄວາມ, ຜູ້ຊ່ວຍທະນາຍຄວາມ ຫລື ນັກກົດໝາຍ, ອົງການຈັດຕັ້ງຂອງທະນາຍຄວາມ (ສະພາທະນາຍຄວາມ, ວິສາຫະກິດກົດໝາຍ).

ຂ. ແມ່ນອົງການຈັດຕັ້ງທີ່ບໍ່ສະແຫວງ ຫາຜົນກໍາໄລ ຫລືສະຖາບັນການສຶກສາກົດໝາຍ ທີ່ບໍ່ມີຂໍ້ຈໍາກັດທາງດ້ານເງື່ອນໄຂ ຫຼື ກຸ່ມຄົນ ນໍາໃຊ້ຊັບພະຍາກອນຂອງຕົນເອງ.

ຄ. ແມ່ນມີເປົ້າໝາຍເພື່ອປະໂຫຍດແຫ່ງຄວາມຍຸຕິທໍາທາງສັງຄົມ ແລະ ປະໂຫຍດທາງສາທາລະນະ.

ງ. ຖືກໝົດທຸກຂໍ້.

**9. ການຊ່ວຍເຫລືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ(Legal aid) ແມ່ນຫຍັງ?**

ກ. ແມ່ນການໃຫ້ບໍລິການທາງດ້ານກົດໝາຍແກ່ຜູ້ທຸກຍາກ, ເດັກທີ່ຕ້ອງການປົກປ້ອງພິເສດ, ຄົນພິການ, ຜູ້ດ້ອຍໂອກາດ, ແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ຫລື ຜູ້ເຄາະຮ້າຍຈາກການຄ້າມະນຸດ,

ຂ. ຜູ້ກະທໍາຜິດທີ່ກົດໝາຍກໍານົດໃຫ້ມີທະນາຍຄວາມເຂົ້າໄປຊ່ວຍເຫລືອ;

ຄ. ແມ່ນການແຕ່ງຕັ້ງໃຫ້ການຊ່ວຍເຫລືອທາງດ້ານກົດໝາຍ ປະຈໍາຫ້ອງການສະພາທະນາຍຄວາມແຂວງ, ນະຄອນຫລວງ ຫລື ສະພາທະນາຍຄວາມປະຈໍາເມືອງ, ເທດສະບານ, ນະຄອນ.

ງ. ຖືກໝົດທຸກຂໍ້.

**10. ອາສາສະໝັກກົດໝາຍປະຈໍາບ້ານ ແມ່ນໃຜ?**

ກ. ແມ່ນປະຊາຊົນ, ກຸ່ມຄົນ, ບຸກຄົນ, ຄະນະປົກຄອງບ້ານທີ່ຢູ່ໃນຂອບເຂດບ້ານຂອງຕົນ ຫຼື ຂອບເຂດ ບ້ານໃກ້ຄຽງ ທີ່ຖືກຮັບຮູ້ຈາກອາສາສະຫມັກດ້ານກົດຫມາຍປະຈໍາບ້ານນັ້ນ.
ຂ. ແມ່ນບຸກຄົນຫນຶ່ງທີ່ປະຈໍາຢູ່ບ້ານ ທີ່ມີຄວາມສະຫມັກໃຈໃນ ການຮັບໃຊ້ ແລະ ຊ່ວຍເຫຼືອປະຊາຊົນທາງດ້ານກົດຫມາຍ.
ຄ. ແມ່ນປະຊາຊົນຜູ້ທີ່ມີບັນຫາດ້ານກົດຫມາຍ, ຂໍ້ຂັດແຍ່ງ ຫຼື ຄະດີຄວາມຕ່າງໆທີ່ພວກເຂົາບໍ່ມີຄວາມຮູ້ດ້ານກົດຫມາຍ ຫຼື ມີຄວາມຮູ້ແຕ່ຍັງບໍ່ເຂົ້າໃຈຖືກຕ້ອງ ຫຼື ບໍ່ມີຄວາມສາມາດຈະເຂົ້າເຖິງຂະບວນການຍຸຕິທໍາຕາມລະບຽບກົດຫມາຍໄດ້.

**11. ອາສາສະໝັກດ້ານກົດໝາຍປະຈໍາບ້ານ ມີບົດບາດຫຍັງແດ່?**

ກ. ສໍາພາດ ແລະ ບັນທຶກເກັບກໍາຂໍ້ມູນຈາກຜູ້ທີ່ເຂົ້າມາ ຂໍຄໍາປຶກສາ ພ້ອມທັງສະຫຼຸບລາຍງານ ແລະ ຂໍຄໍາແນະນໍາຈາກສູນໃຫ້ຄໍາປຶກສາດ້ານກົດໝາຍ ເພື່ອດໍາເນີນ ການຊ່ວຍເຫຼືອຕາມຂັ້ນຕອນ.
ຂ. ດໍາເນີນການຕິດຕາມ ແລະ ໃຫ້ການຊ່ວຍເຫຼືອທາງ ດ້ານກົດໝາຍຕາມການຊີ້ນໍາຂອງສູນໃຫ້ຄໍາປຶກສາ ແລະ ຮັກສາຄວາມລັບຂອງຜູ້ທີ່ເຂົ້າມາຂໍຄໍາປຶກສາ.
ຄ. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມຄໍາແນະນໍາຂອງສູນໃຫ້ຄໍາປຶກສາດ້ານກົດໝາຍ ແລະ ເຜີຍແຜ່ກົດໝາຍ ແລະ ຂໍ້ມູນດ້ານກົດໝາຍໃຫ້ແກ່ຊຸມຊົນ.
ງ. ຖືກໝົດທຸກຂໍ້

**12. ສິດ ແລະ ພັນທະ ພື້ນຖານຂອງພົນລະເມືອງຕາມລັດຖະທໍາມະນູນ ມີຈັກສິດ ແລະ ພັນທະ?**

ກ. ມີ 12 ສິດ ແລະ 3 ພັນທະ;

ຂ. ມີ 10 ສິດ ແລະ 3 ພັນທະ;

ຄ. ມີ 7 ສິດ ແລະ 2 ພັນທະ.

**13. ພົນລະເມືອງລາວ ຈະໄດ້ຮັບສິດນໍາໃຊ້ທີ່ດິນບົນພື້ນຖານໃດໜຶ່ງນັ້ນ ມີພື້ນຖານຫຍັງແດ່?**

ກ. ມີ 5 ຄື: ການມອບຂອງລັດ; ການໂອນ; ການສືບທອດມູນມໍຣະດົກ; ການໄດ້ສິດນໍາໃຊ້ທີ່ດິນຕາມປະເພນີ; ການຊື້ສິດນໍາໃຊ້ທີ່ດິນຈັດສັນຂອງລັດແບບມີກໍານົດ ຕາມກົດໝາຍ
ຂ. ມີ 4 ຄື: ການມອບຂອງລັດ; ການໂອນ; ການສືບທອດມູນມໍຣະດົກ; ການໄດ້ສິດນໍາໃຊ້ທີ່ດິນຕາມປະເພນີ

ຄ. ມີ 3 ຄື: ການມອບຂອງລັດ; ການໂອນ; ການສືບທອດມູນມໍຣະດົກ

**14. ສິດ ແລະ ພັນທະ ຂອງຜູ້ໄດ້ຮັບສິດນໍາໃຊ້ທີ່ດິນ ຕາມກົດໝາຍທີ່ດິນ ມີຈັກສິດ ແລະ ພັນທະ?**

ກ. ມີ 7 ສິດ ແລະ 3 ພັນທະ
ຂ. ມີ 10 ສິດ ແລະ 3 ພັນທະ

ຄ. ມີ 5 ສິດ ແລະ 6 ພັນທະ

## III. ແບບຟອມຄຳຮ້ອງທຸກ (ຄຳຮ້ອງຟ້ອງ, ຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ)

### 1) ຮ່າງ ຄຳຮ້ອງຟ້ອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນຫຼວງວຽງຈັນ

ສານປະຊາຊົນ

**ຄຳຮ້ອງຟ້ອງ**

**ຮຽນ:** ທ່ານ ປະທານ ສານປະຊາຊົນ ແຂວງ/ນະຄອນຫລວງວຽງຈັນ

**ເລື່ອງ:**.................................................................................................................................

1./ຂ້າພະເຈົ້າທ້າວ/ນາງ............................ອາຍຸ............ປີ, ສັນຊາດ...................ອາຊີບ.........................

ປັດຈຸບັນຢູ່ເຮືອນເລກທີ...................ໜ່ວຍ............ບ້ານ........................ເມືອງ...................................

ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້.............................................ໂຈດ.

2./ຂ້າພະເຈົ້າທ້າວ/ນາງ..............................ອາຍຸ............ປີ, ສັນຊາດ..............ອາຊີບ..........................

ປັດຈຸບັນຢູ່ເຮືອນເລກທີ..............ໜ່ວຍ.............ບ້ານ........................ເມືອງ.......................................

ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້.............................................ໂຈດ.

3./ ຂ້າພະເຈົ້າທ້າວ/ນາງ..............................ອາຍຸ............ປີ, ສັນຊາດ..............ອາຊີບ.........................

ປັດຈຸບັນຢູ່ເຮືອນເລກທີ..............ໜ່ວຍ.............ບ້ານ........................ເມືອງ.......................................

ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້.............................................ໂຈດ.

**ມີຈຸດປະສົງຮ້ອງຟ້ອງ, ບຸກຄົນ, ອົງການຈັດຕັ້ງ, ວິສະຫະກິດດັ່ງລຸ່ມນີ້:**

1./ ທ້າວ/ນາງ.................................ອາຍຸ...........ປີ, ສັນຊາດ...................ອາຊີບ...............................

ປັດຈຸບັນຢູ່ເຮືອນເລກທີ...................ໜ່ວຍ............ບ້ານ........................ເມືອງ...................................

ແຂວງ/ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້................................ຈຳເລີຍ.

2./ທ້າວ/ນາງ.................................ອາຍຸ...........ປີ, ສັນຊາດ...................ອາຊີບ...............................

ປັດຈຸບັນຢູ່ເຮືອນເລກທີ...................ໜ່ວຍ............ບ້ານ........................ເມືອງ...................................

ແຂວງ/ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້.................................ຈຳເລີຍ.

3./ທ້າວ/ນາງ.................................ອາຍຸ...........ປີ, ສັນຊາດ...................ອາຊີບ...............................

ປັດຈຸບັນຢູ່ເຮືອນເລກທີ....................ໜ່ວຍ............ບ້ານ........................ເມືອງ...................................

ແຂວງ/ນະຄອນຫຼວງວຽງຈັນ. ໂທລະສັບ............................ຕາງໜ້າໃຫ້.................................ຈຳເລີຍ.

**ກ່ຽວເລື່ອງ:** .............................................................................................................

**ມູນຄ່າຂອງການຮ້ອງຟ້ອງ:**

ຈຳນວນເງິນ..............................................ທີ່ດິນ...................ຕອນ................................................

ເນື້ອທີ່.......................................................ມູນຄ່າ.........................................................................

ອື່ນໆ.........................................................................................................................................

(ບອກລາຍລະອຽດຈຳນວນສິ່ງຂອງທີ່ຮ້ອງຟ້ອງ ແລະ ຕີລາຄາເປັນເງິນ)

**I. ເນື້ອໃນການຮ້ອງຟ້ອງ.**

ກ. ໃຫ້ແລ່ໍາປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

...............................................................................................................................................

**ຂ. ເອກະສານອ້າງອີງ, ພະຍານຫຼັກຖານຕ່າງໆ:**

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

**II. ຂໍ້ສະເໜີເພື່ອໃຫ້ສານພິຈາລະນາ.**

1./...............................................................................................................................

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

2./...............................................................................................................................

..................................................................................................................................

..................................................................................................................................

..................................................................................................................................

ຂ້າພະເຈົ້າຂໍຮັບປະກັນວ່າ: ສິ່ງທີ່ຂ້າພະເຈົ້າເລົ່າມາຂ້າງເທິງນີ້ມີມູນຄວາມຈິງ.

- ຈະໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກຮອບດ້ານຕໍ່ການດໍາເນີນຄະດີຢູ່ສານ.
- ຖ້າຫາກບໍ່ມີມູນຄວາມຈິງຂໍໃຫ້ສານຂັດມ້ຽນສໍານວນຄະດີ, ເສັຍສິດໃນການຮ້ອງຟ້ອງ ແລະຮັບຜິດຊອບຕາມກົດໝາຍໂດຍບໍ່ມີການຮ້ອງຂໍຕໍ່ວ່າໃດໆ.

ດັ່ງນັ້ນ ຂ້າພະເຈົ້າຈຶ່ງຍື່ນຄໍາຮ້ອງຟ້ອງສະບັບນີ້ມາຍັງທ່ານເພື່ອພິຈາລະນາຕັດສິນຕາມກົດໝາຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ທີ່......................ວັນທີ......................

ຄໍາເຫັນ ແລະ ຢັ້ງຢືນຈາກບ້ານ ຜູ້ຮ້ອງຟ້ອງ

(ລາຍເຊັນ ແລະ ແປະໄດ້ມືຄວາພ້ອມທັງຊື່ແຈ້ງ)

2) ຮ່າງ **ຄຳສະເໜີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****ooo*****

ທີ່......................., ວັນທີ........ເດືອນ..........ປີ.........

**ຄຳສະເໜີ**

**ຮຽນ:** .........................................................................................................

**ເລື່ອງ:** .......................................................................................................

- **ອີງຕາມ** .............................................................................................................
- **ອີງຕາມ** .............................................................................................................

ຂ້າພະເຈົ້າ ທ້າວ/ນາງ...............................................................................................

.................................................................................................................................

**ຈຸດປະສົງ:** ສະເໜີມາຍັງທ່ານ ເພື່ອຂໍໃຫ້.........................................................................

.................................................................................................................................

.................................................................................................................................

## I. ຄວາມເປັນມາ

.............................................................................................................................

.............................................................................................................................

.............................................................................................................................

.............................................................................................................................

.............................................................................................................................

.............................................................................................................................

.............................................................................................................................

..............................................................................................................................

..............................................................................................................................

## II. ສະພາບການແກ້ໄຂທີ່ຜ່ານມາ

..............................................................................................................................
.......................................................................................................................................
.......................................................................................................................................
.......................................................................................................................................

## III. ສະພາບປັດຈຸບັນ

..............................................................................................................................
.......................................................................................................................................
.......................................................................................................................................
.......................................................................................................................................

## IV. ເຫດຜົນທາງດ້ານກົດໝາຍ

..............................................................................................................................
.......................................................................................................................................
.......................................................................................................................................
.......................................................................................................................................

## V. ພາກສະເໜີ

..............................................................................................................................
.......................................................................................................................................
.......................................................................................................................................
.......................................................................................................................................

ດັ່ງນັ້ນ, ຈຶ່ງສະເໜີຮຽນມາຍັງ ທ່ານ ເພື່ອພິຈາລະນາ ແລະ ການແກ້ໄຂ ຄຳສະເໜີຂອງ ຂ້າພະເຈົ້າ ຕາມລະບຽບກົດໝາຍດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖື ຢ່າງສູງ,

**ເຊັນຜູ້ຍື່ນຄຳສະເໜີ**

**3) ຮ່າງ ຄຳຮ້ອງຂໍຄວາມເປັນທຳ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
*****000*****

ທີ່......................, ວັນທີ........ເດືອນ..........ປີ.........

**ຄຳຮ້ອງຂໍຄວາມເປັນທຳ**

**ຮຽນ:** ..........................................................................................
**ເລື່ອງ:** ..........................................................................................

- **ອີງຕາມ** ..........................................................................................
- **ອີງຕາມ** ..........................................................................................

ຂ້າພະເຈົ້າ ທ້າວ/ນາງ..........................................................................................
..........................................................................................

**ຈຸດປະສົງ:** ຮ້ອງທຸກມາຍັງທ່ານ ເພື່ອຂໍໃຫ້..........................................................................
..........................................................................................
..........................................................................................

## VI. ຄວາມເປັນມາ

..........................................................................................
..........................................................................................
..........................................................................................
..........................................................................................
..........................................................................................
..........................................................................................
..........................................................................................
..........................................................................................
..........................................................................................

## VII. ສະພາບການແກ້ໄຂທີ່ຜ່ານມາ

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

## VIII. ສະພາບປັດຈຸບັນ

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

## IX. ເຫດຜົນທາງດ້ານກົດໝາຍ

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

## X. ພາກສະເໜີ

........................................................................................................................................
........................................................................................................................................
........................................................................................................................................
........................................................................................................................................

ດັ່ງນັ້ນ, ຈຶ່ງສະເໜີຮຽນມາຍັງ ທ່ານ ເພື່ອພິຈາລະນາ ແລະ ຕິດຕາມກວດກາ ໃຫ້ຄວາມເປັນທໍາ ແກ່ ຂ້າພະເຈົ້າ ຕາມລະບຽບກົດໝາຍດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖື ຢ່າງສູງ,

**ເຊັນຜູ້ຮ້ອງຂໍຄວາມເປັນທໍາ**